HELVETAS LAOS

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

# ໂຄງການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງຄວາມຮັບຮູ້ໃຫ້ແກ່ ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ

## ຄູ່ມືແນະນໍາສໍາລັບຄູຝຶກ

ການລົງທຶນທາງດ້ານກະສິກໍາດ້ວຍຄວາມຮັບຜິດຊອບ

# The Public Information and Awareness Services for Vulnerable Communities in Lao PDR Project

## Training of Trainer Manual

#4: Responsible Agricultural Investment (RAI)


ໃຫ້ການສະໜັບສະໜູນຄະນະວິຊາການຈາກພາກລັດໂດຍ:

ສາມາດດາວຄູ່ມືໂຫຼດ ຜ່ານ QR Code ນີ້

ໃຫ້ທຶນສະໜັບສະໜູນໂດຍ/Funded by:

Government of Japan

JSDF Japan Social Development Fund

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

THE WORLD BANK
IBRD • IDA | WORLD BANK GROUP

# ໂຄງການ

## ການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງຄວາມຮັບຮູ້ ໃຫ້ແກ່ຊຸມຊົນ ທີ່ມີຄວາມບອບບາງ ໃນ ສປປ ລາວ

# ຄູ່ມືແນະນຳສຳລັບຄູຝຶກ

## "ການລົງທຶນທາງດ້ານກະສິກຳດ້ວຍຄວາມຮັບຜິດຊອບ" ສຳລັບຊາວກະສິກອນ

| | |
|---|---|
| **ອອກແບບໂດຍ:** | ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ (LIFE). |
| **ທົບທວນ ແລະ ຮຽບຮຽງໂດຍ:** | ທ່ານ ສຸກກະເສມ ຫຼົ່ມາດມະນີວົງ ທີ່ປຶກສາ ດ້ານວຽກງານທີ່ດິນ ຂອງໂຄງການ PIASVC. |
| | ທ່ານ ມະໂນລິນ ເທບຄໍາວົງ ທີ່ປຶກສາດ້ານກົດໝາຍ ຂອງໂຄງການ PIASVC |
| | ທ່ານ ເລໂນນ ບຸນເພັງ ຄູຝຶກ ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ (LIFE). |
| **ຊີ້ນໍາລວມໂດຍ:** | Jeanne Battello, ຫົວໜ້າໂຄງການການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງຄວາມຮັບຮູ້ໃຫ້ແກ່ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ.<br>ທ່ານ ວໍລະສອນ ແດງກາຍະພິຈິດ, ຜູ້ປະສານງານກຸ່ມແລກປ່ຽນຂໍ້ມູນທີ່ດິນ |

**ຂອບເຂດຄວາມຮັບຜິດຊອບ:**

ສື່ສິ່ງພິມນີ້ແມ່ນເປັນການຮວບຮວມເອກະສານການຝຶກອົບຮົມ ແລະ ເຄື່ອງມືທີ່ພັດທະນາໂດຍ ໂຄງການສ້າງຄວາມສາມາດທີ່ມີເອກະລັກສະເພາະ ແນໃສ່ປັບປຸງຈິດສໍານຶກ, ຄວາມຮູ້ດ້ານກົດໝາຍ ແລະ ຄວາມສາມາດ ເພື່ອເພີ່ມທະວີສິດທິການຄອບຄອງທີ່ດິນ (LIFE). ເອກະສານສະບັບນີ້ ຖືກຮວບຮວມໂດຍ ອົງການ ເຮວວິຕັດ ເພື່ອການຮ່ວມມືສາກົນ ປະຈໍາ ສປປ ລາວ ແລະ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ພາຍໃຕ້ໂຄງການ PIASVC ໃນເດືອນ ມັງກອນ 2023.

ເຄື່ອງມືການຝຶກອົບຮົມນີ້ຍັງຄົງຢູ່ພາຍໃຕ້ກໍາມະສິດຂອງ ໂຄງການ LIFE ແລະ ອົງການຈັດຕັ້ງອື່ນໆທີ່ມີສ່ວນຮ່ວມໃນການພັດທະນາຂອງຕົນ.

ເພື່ອການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ເອກະສານນີ້ສາມາດຖືກນໍາໃຊ້ໂດຍບໍ່ມີຄ່າໃຊ້ຈ່າຍໃດໆ ໂດຍຜູ້ທີ່ສົນໃຈສໍາລັບການນໍາໃຊ້ທີ່ບໍ່ແມ່ນ ຈຸດປະສົງທາງດ້ານການຄ້າເທົ່ານັ້ນ, ການນໍາໃຊ້ວິທີການສື່ສານ ແລະ ການແປ ທີ່ແຕກຕ່າງກັນ (ທັງ ສໍາເນົາເອກະສານ, ສົ່ງຂໍ້ມູນໃນເວັບໄຊທ໌, ສຽງ ແລະ ຮູບພາບອື່ນໆ) ໂດຍໄດ້ລະບຸກໍາມະສິດດັ້ງເດີມ ແລະ ຮັບຮູ້ຢ່າງຈະແຈ້ງດ້ວຍໂລໂກ້ ແລະ/ຫຼື ຊື່ອົງການທີ່ກ່ຽວຂ້ອງທີ່ປະກົດໃນເອກະສານສະບັບນີ້.

**Disclaimer:**

This publication is a compilation of training materials and tools developed by Land learning Initiative for Food security Enhancement Project - LIFE (VFI). It has been compiled by Helvetas Laos and LIWG under the PIASVC project in January 2023.

Ownership of this training materials and tools however remains with LIFE Project and any other organisations originally involved in its development.

In the spirit of promoting access to information, this document will be freely available to interested parties for non-commercial use only, using different means of communication and translation (printed hard copies, link on a website, audio-visual etc.) provided original ownership is clearly acknowledged with the respective logos and/or organization name.

ລິເລີ່ມພັດທະນາຕົ້ນສະບັບໂດຍ/originally developed by

ປັບແກ້ ແລະ ປັບປຸງໂດຍ/ Revised and updated by:

ໃຫ້ທຶນສະໜັບສະໜູນໂດຍ/ Funded by:

**ຄະນະວິຊາການກວດກາຄູ່ມື:**

| | | |
|---|---|---|
| 1. | ທ່ານ ປອ. ລີວາເມັງ ລີບົວປາວ ຮອງຫົວໜ້າກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) | ຫົວໜ້າ |
| 2. | ທ່ານ ຄຳພັນ ປະວົງວຽງຄຳ ຫົວໜ້າພະແນກຄຸ້ມຄອງທະບຽນ ແລະ ປະເມີນລາຄາທີ່ດິນ, ກົມທີ່ດິນ, ກຊສ | ຮອງຫົວໜ້າ |
| 3. | ທ່ານ ນາງ ຈິດຕະສອນ ບຸນຄົງ ຫົວໜ້າພະແນກກົດໝາຍແພ່ງ, ກົມກົດໝາຍ ກະຊວງຍຸຕິທຳ | ຄະນະ |
| 4. | ທ່ານ ປາວທ່າວ ຈາເພຍ ຫົວໜ້າພະແນກ ຂົນຂວາຍ, ກົມ ຊົນເຜົ່າ, ສູນກາງແນວລາວສ້າງຊາດ | ຄະນະ |
| 5. | ທ່ານ ພູຂົງ ວັນນະຣາຊ ຮອງຫົວໜ້າພະແນກຄຸ້ມຄອງທະບຽນ ແລະ ປະເມີນລາຄາທີ່ດິນ, ກົມທີ່ດິນ, ກຊສ | ຄະນະ |
| 6. | ທ່ານ ວິລະພັນ ຈັນທະວິສຸກ ຮອງຫົວໜ້າພະແນກບໍລິຫານ, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | ຄະນະ |
| 7. | ທ່ານ ນາງ ດວງໃຈ ຄູນໄຊດີດາ ຮອງຫົວໜ້າພະແນກກໍ່ສ້າງພັກ ແລະ ກົງຈັກການຈັດຕັ້ງ,  ກົມຈັດຕັ້ງ-ພະນັກງານ, ສູນກາງ ສະຫະພັນແມ່ຍິງລາວ | ຄະນະ |
| 8. | ທ່ານ ພູສິດ ສີວິໄລ ວິຊາການ ກົມທີ່ດິນ, ກຊສ | ຄະນະ |
| 9. | ທ່ານ ແກ້ວອຸດອນ ທິບວົງໄຊ ວິຊາການ ກົມທີ່ດິນ, ກຊສ | ຄະນະ |
| 10. | ທ່ານ ນາງ ສຸລິພອນ ບົວພັນ ວິຊາການ ກົມທີ່ດິນ, ກຊສ | ຄະນະ |
| 11. | ທ່ານ ນາງ ລັດດາວັນ ວຽງຄຳສອນ ວິຊາການ ກົມທີ່ດິນ, ກຊສ (ຜູ້ປະສານງານໂຄງການທະນາຄານໂລກ) | ຄະນະ |
| 12. | ທ່ານ ນາງ ອານຸສອນ ສີຫາລາດ ວິຊາການ ກົມທີ່ດິນ, ກຊສ (ຜູ້ ປະສານງານໂຄງການ Helvetas) | ຄະນະ |
| 13. | ທ່ານ ອານຸສອນ ອິນທາ ວິຊາການ ກົມກົດໝາຍ, ກະຊວງ ຍຸຕິທຳ | ຄະນະ |
| 14. | ທ່ານ ພຸດທະກອນ ຫຼວງລິດ ວິຊາການ ກົມຈັດຕັ້ງ-ພະນັກງານ, ສູນກາງສະຫະພັນແມ່ຍິງລາວ | ຄະນະ |
| 15. | ທ່ານ ສີວອນ ສອນທິປັນຍາ ວິຊາການ ກົມປ່າໄມ້, ກະຊວງ ກະສິກຳ ແລະ ປ່າໄມ້ | ຄະນະ |
| 16. | ທ່ານ ນາງ ວຽງຊຳ ຈັນທະວິໄຊ ວິຊາການ ກົມຊົນເຜົ່າ, ສູນກາງ ແນວລາວສ້າງຊາດ | ຄະນະ |

## ຄຳນຳ

ຄູ່ມືຝຶກອົບຮົມສະບັບນີ້ ໄດ້ສັງລວມເອົາ ບັນດາເນື້ອໃນທາງດ້ານນິຕິກຳ ແລະ ເອກະສານທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອເປັນຄູ່ມືຝຶກອົບຮົມໃຫ້ແກ່ພະນັກງານພາກລັດ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ທີ່ເຮັດໜ້າທີ່ໂຄສະນາເຜີຍແຜ່ ແລະ ໃຫ້ຂໍ້ມູນກ່ຽວກັບການລົງທຶນທາງດ້ານກະສິກຳດ້ວຍຄວາມຮັບຜິດຊອບ ໃຫ້ແກ່ປະຊາຊົນຢູ່ບັນດາບ້ານເປົ້າໝາຍຂອງໂຄງການ ໃຫ້ມີຄວາມຮັບຮູ້, ເຂົ້າໃຈ ກ່ຽວກັບການລົງທຶນທີ່ມີຄວາມຮັບຜິດຊອບ ຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ ແນໃສ່ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາວກະສິກອນ ຊຶ່ງການຝຶກອົບຮົມຈະໃຊ້ເວລາ 4 ວັນເຕັມ ລວມທັງການຝຶກອົບຮົມຕົວຈິງ ຢູ່ຂັ້ນບ້ານ ເປັນເວລາ 1 ວັນເຕັມ.

**ຄະນະຮັບຜິດຊອບ**

## ສາລະບານ


**1. ພາກສະເໜີ** 1

1.1. ແນະນຳຫຼັກສູດການຝຶກອົບຮົມ 1

1.2. ການລົງທຶນທາງດ້ານກະສິກຳດ້ວຍຄວາມຮັບຜິດຊອບ 3

1.3. ການປະເມີນຕົນເອງກ່ອນການຝຶກອົບຮົມ 4

**2. ພາກເນື້ອໃນ** 6

2.1. ການສົນທະນາສະພາບລວມການຜະລິດກະສິກຳ 6

2.2. ຝາກຄຳຖາມໄວ້ໃນເຈ້ຍແຜ່ນໃຫຍ່ 7

2.3. ເກມ: ເຮືອນ ພະຍຸ ຊາວບ້ານ 8

2.4. ການເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ ແລະພຽງພໍ 11

2.5. ສິດຂອງຊາວກະສິກອນໃນການເຮັດກະສິກຳແບບມີສັນຍາ 14

2.6. ການວິເຄາະດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈຂອງກະສິກຳແບບມີສັນຍາ 17

2.7. ເກມ 4 ຕົວເລກສ້າງສັນ 19

2.8. ການເຈລະຈາຕໍ່ລອງ 21

2.9. ເກມ: ຖົງທ່ອນເຈ້ຍ 23

2.10. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນທາງດ້ານກະສິກຳ 25

2.10.1. ການກະກຽມຕົວໃນເວລາພົບບັນຫາກ່ຽວກັບການລົງທຶນ 25

2.10.2. ຊ່ອງທາງໃນການແກ້ໄຂຂໍ້ຂັດແຍ່ງ 26

2.10.3. ທາງເລືອກອື່ນໆໃນການເຂົ້າເຖິງຂະບວນການຍຸຕິທຳ 28

**3. ພາກສະຫຼຸບ ແລະ ກະກຽມລົງບ້ານ** 31

3.1. ທວນຄືນບົດຮຽນການຝຶກອົບຮົມ 31

3.2. ການສາທິດ ແລະ ການກະກຽມລົງບ້ານ 33

3.3. ການປະເມີນຕົນເອງຫຼັງການຝຶກອົບຮົມ 34

# 1. ພາກສະເໜີ

## ຈຸດປະສົງ

- ເພື່ອນໍາໃຊ້ໃນການຝຶກອົບຮົມ, ເປັນບ່ອນອີງ ແລະ ສະໜອງຂໍ້ມູນທາງດ້ານການລົງທຶນດ້ານກະສິກໍາດ້ວຍຄວາມຮັບຜິດຊອບ, ທີ່ມີຄວາມຍືນຍົງ, ໜ້າເຊື່ອຖື ແລະ ເປັນທີ່ຍອມຮັບ;
- ເພື່ອເສີມສ້າງຄວາມສາມາດໃຫ້ແກ່ກຸ່ມຊາວກະສິກອນໃນທ້ອງຖິ່ນໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບສິດຂອງຕົນເອງ ໂດຍສະເພາະແມ່ນການສ້າງຄວາມເຫັນດີເຫັນພ້ອມ, ຄວາມສະໝັກໃຈ ແລະ ຄວາມສາມາດໃນການເຈລະຈາຕໍ່ລອງ ແລະ ການຕັດສິນໃຈໃນການລົງທຶນດ້ານກະສິກໍາ.
- ສ້າງຂີດຄວາມສາມາດໃຫ້ແກ່ຊາວກະສິກອນໃນຂະບວນການລົງທຶນ ແລະ ເປັນບ່ອນອີງໃນການຕັດສິນໃຈຢ່າງຮອບຄອບເພື່ອຄວາມຍືນຍົງທາງດ້ານການລົງທຶນທັງໃນໄລຍະກາງ ແລະ ໄລຍະຍາວ

## ຜູ້ເຂົ້າຮ່ວມ

ພະນັກງານວິຊາການຈາກຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ, ຕາງໜ້າຈາກບັນດາອົງການຈັດຕັ້ງທາງສັງຄົມ ທີ່ເຮັດວຽກສົ່ງເສີມໃນຂະແໜງການຜະລິດກະສິກໍາເປັນສິນຄ້າ.

## 1.1. ແນະນໍາຫຼັກສູດການຝຶກອົບຮົມ

### ເວລາ 5 ນາທີ



## ຈຸດປະສົງ

ເພື່ອໃຫ້ຜູ້ເຂົ້າຮ່ວມເຂົ້າໃຈ ວາລະການຝຶກອົບຮົມ, ຈຸດປະສົງ, ວິທີການຝຶກອົບຮົມ ແລະສາມາດເຂົ້າຮ່ວມການຝຶກອົບຮົມຢ່າງມີຄວາມໝັ້ນໃຈ ແລະ ກະກຽມຄວາມພ້ອມໃນການເຂົ້າຮ່ວມໃນແຕ່ລະຫົວຂໍ້ດ້ວຍຄວາມກະຕືລືລົ້ນ.

## ວິທີການ

- ແນະນຳວາລະຝຶກອົບຮົມ ຫົວຂໍ້: "ການລົງທຶນທາງດ້ານກະສິກຳດ້ວຍຄວາມຮັບຜິດຊອບ ສຳລັບຊາວກະສິກອນ" ເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ໄດ້ສົນທະນາ ເພື່ອໃຫ້ໝັ້ນໃຈວ່າ ພວກເຂົາເຂົ້າໃຈວ່າຫຼັກສູດນີ້ຖືກວາງຕາຕະລາງມາແນວໃດ ແລະ ມີເປົ້າໝາຍເພື່ອບັນລຸຫຍັງ.

## ຂັ້ນຕອນ:

1. ແຈກຢາຍວາລະຝຶກອົບຮົມໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນເພື່ອໃຫ້ເຂົາເຈົ້າສາມາດຕິດຕາມການຝຶກອົບຮົມແຕ່ລະຊົ່ວໂມງ ແລະ ນຳເອົາວາລະໄປສຶກສາຫົວຂໍ້ທີ່ຈະນຳສະເໜີໃນມື້ຕໍ່ໄປ;
2. ແນະນຳໃຫ້ຜູ້ເຂົ້າຮ່ວມເບິ່ງວາລະຝຶກອົບຮົມ ທີ່ຄູຝຶກໄດ້ແຈກຢາຍໃຫ້;
3. ແນະນຳຫຼັກສູດຝຶກອົບຮົມ ຫົວຂໍ້: ການລົງທຶນດ້ານກະສິກຳດ້ວຍຄວາມຮັບຜິດຊອບໂດຍການອະທິບາຍລຽງຕາມລຳດັບເນື້ອໃນຫົວຂໍ້ທີ່ຖືກກຳນົດໃນແຕ່ລະວາລະ ນັບແຕ່ມື້ທຳອິດຈົນຮອດວາລະສຸດທ້າຍ. ການຝຶກອົບຮົມໃຊ້ເວລາຈັກມື້ ແລະ ການຝຶກອົບຮົມຄັ້ງນີ້ມີຄູຝຶກຮ່ວມກັນຈັກຄົນທີ່ຜັດປ່ຽນກັນຮັບຜິດຊອບແຕ່ລະວາລະຕາມລາຍຊື່ທີ່ກຳນົດໄວ້;
4. ສະຫຼຸບສັງລວມໃຫ້ຜູ້ເຂົ້າຮ່ວມຮັບຮູ້ວ່າ ຕະຫຼອດໄລຍະຂອງການຝຶກອົບຮົມພວກເຮົາໄດ້ເນັ້ນໃສ່ການມີສ່ວນຮ່ວມຈາກທຸກຄົນ ໂດຍການນຳໃຊ້ເຄື່ອງມື (ວິເຄາະບົດຮຽນ, ປະເມີນຜູ້ເຂົ້າຮ່ວມກ່ອນ ແລະ ຫຼັງການຝຶກອົບຮົມ, ການນຳໃຊ້ເຄື່ອງມືສິບແກ່ນພືດ, ການສະຫຼຸບບົດຮຽນດ້ວຍຮູບແບບສາຍນ້ຳ), ການຫຼິ້ນກິດຈະກຳ ແລະ ເກມ ທີ່ມີເນື້ອໃນເຂົ້າກັບແຕ່ລະບົດຮຽນ, ເກມທີ່ຊ່ວຍໃຫ້ ຜູ້ເຂົ້າຮ່ວມຮູ້ສຶກຜ່ອນຄາຍ ແລະ ມ່ວນຊື່ນ, ການສົນທະນາເປັນກຸ່ມ, ການເບິ່ງລະຄອນ (ວິດີໂອ) ກ່ຽວກັບບົດຮຽນ, ການສະແດງ ບົດບາດສົມມຸດ, ການຝຶກການຂຽນແຜນລົງບ້ານ, ການຝຶກຊ້ອມ ແລະ ສາທິດ;
5. ສຸດທ້າຍແຈ້ງໃຫ້ຜູ້ເຂົ້າຮ່ວມຮັບຊາບວ່າ ປຶ້ມຄູ່ມືປະກອບການຝຶກອົບຮົມຈະຖືກແຈກຢາຍພາຍຫຼັງສຳເລັດທຸກຫົວຂໍ້ຝຶກອົບຮົມ (ຄູ່ມືຝຶກອົບຮົມກ່ຽວກັບການລົງທຶນດ້ານກະສິກຳດ້ວຍຄວາມຮັບຜິດຊອບ ສຳລັບຊາວກະສິກອນ ແມ່ນຈະຢາຍໃຫ້ກ່ອນວາລະການກະກຽມການຝຶກຊ້ອມ ແລະ ສາທິດ ໃນຕອນທ້າຍຂອງມື້ຝຶກອົບຮົມ).

### ຄຳແນະນຳສຳລັບຄູຝຶກ

1. ການແຈກຢາຍອາລະໃຫ້ກັບຜູ້ເຂົ້າຮ່ວມ ແມ່ນເພື່ອໃຫ້ເຂົາເຈົ້າໄດ້ນຳເອົາໄປຄົ້ນຄວ້າຫົວຂໍ້ທີ່ຈະນຳສະເໜີໃນມື້ຕໍ່ໄປ ຫຼື ຄູຝຶກສາມາດຝາກຫົວຂໍ້ທີ່ຈະນຳສະເໜີມື້ຕໍ່ໄປໃຫ້ ເພື່ອນຳໄປຄົ້ນຄວ້າກ່ອນ ຖ້າຫາກວ່າຜູ້ເຂົ້າຮ່ວມປະຕິບັດໄດ້ກໍຈະເຮັດໃຫ້ມື້ຕໍ່ໄປງ່າຍຂຶ້ນ ແລະ ຜູ້ເຂົ້າຮ່ວມກໍຈະເຂົ້າໃຈໃນຫົວຂໍ້ນັ້ນໄດ້ໄວຂຶ້ນ ແລະ ສາມາດສົນທະນາກັນໄດ້ດີ;
2. ຂຽນຕາຕະລາງຝຶກອົບຮົມໃສ່ເຈ້ຍແຜ່ນໃຫຍ່ ຫຼື ເຮັດເປັນສາຍນ້ຳຂອງຫຼັກສູດຝຶກອົບຮົມ ແລ້ວຕິດໄວ້ຂ້າງຝາໃນຫ້ອງຝຶກ ເພື່ອໃຫ້ທຸກຄົນສາມາດຕິດຕາມວ່າ ການຝຶກອົບຮົມດຳເນີນໄປຮອດໃສແລ້ວ ແລະ ຂັ້ນຕອນຕໍ່ໄປແມ່ນຫຍັງ;
3. ຂຽນ "ບ່ອນຝາກຄຳຖາມ" ແລ້ວຕິດໄວ້ຂ້າງຝາໃນຫ້ອງຝຶກອົບຮົມ ພ້ອມທັງແນະນຳໃຫ້ຜູ້ເຂົ້າຮ່ວມຮັບຮູ້ວ່າ ກໍລະນີຜູ້ເຂົ້າຮ່ວມມີຄຳຖາມກ່ຽວກັບບົດຮຽນ ແມ່ນ ສາມາດຂຽນໃສ່ເຈ້ຍບັດຄຳແລ້ວເອົາມາຕິດໄວ້ໃນບ່ອນຝາກຄຳຖາມ ຫຼັງຈາກນັ້ນ, ຄູຝຶກຈະນຳເອົາຄຳຖາມມາຕອບໃຫ້ ໃນເວລາທີ່ເໝາະສົມ.

## 1.2. ການລົງທຶນທາງດ້ານກະສິກຳດ້ວຍຄວາມຮັບຜິດຊອບ

ການພັດທະນາການລົງທຶນທາງດ້ານກະສິກຳດ້ວຍຄວາມຮັບຜິດຊອບ ແມ່ນອີງໃສ່ການຮ່ວມມືຂອງບັນດາພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ພາກລັດທີ່ກ່ຽວຂ້ອງ, ຊຸມຊົນ ຫຼື ຊາວກະສິກອນ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງທາງສັງຄົມ ໂດຍສະເພາະແມ່ນອົງການການປົກຄອງຂັ້ນທ້ອງຖິ່ນ, ນັກວິຊາການ ແລະ ອົງການຈັດຕັ້ງທາງສັງຄົມ ເຊິ່ງມີບົດບາດສະໜັບສະໜູນທີ່ສຳຄັນ.

ເຖິງແມ່ນວ່າ ການລົງທຶນດ້ານກະສິກຳຈະນຳໄປສູ່ການເປັນຄູ່ຮ່ວມງານ ທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ເຊິ່ງເປັນເລື່ອງທີ່ໜ້າຍິນດີ. ແຕ່ຜົນກະທົບທີ່ອາດຈະເກີດຂຶ້ນ ກ່ຽວກັບການນຳໃຊ້ທີ່ດິນ ແລະ ຊາວກະສິກອນທີ່ດຳເນີນທຸລະກິດກະສິກຳຂະໜາດນ້ອຍ ເຮັດໃຫ້ມີຄວາມຈຳເປັນທີ່ຈະຕ້ອງກຳນົດຫຼັກການຊີ້ນຳເພື່ອຊຸກຍູ້ ໃຫ້ນັກລົງທຶນມີຄວາມຮັບຜິດຊອບໃນຂອບເຂດທົ່ວປະເທດ ເຊິ່ງບັນດາຫຼັກການລົງທຶນແບບມີຄວາມຮັບຜິດຊອບປະກອບມີ:

- ຮັບປະກັນການເຮັດສັນຍາຕາມກົດໝາຍ ໂດຍມີການຢັ້ງຢືນເນື້ອໃນຂອງສັນຍາ ຈາກອົງການທະບຽນສານ;
- ຮັບປະກັນການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນການມີສ່ວນຮ່ວມຂອງຊາວກະສິກອນ;
- ຮັບປະກັນການເຮັດສັນຍາເຊົ່າທີ່ດິນຂອງບຸກຄົນ ກັບນັກລົງທຶນພາຍໃນ ຫຼື ຕ່າງປະເທດ ໂດຍສອດຄ່ອງກັບ ມາດຕາ 117 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງປີ 2019;

- ຮັບປະກັນການສ້າງແຜນດຳເນີນທຸລະກິດທີ່ເໝາະສົມ ແລະ ສ້າງຄວາມໝັ້ນໃຈວ່າມີການແບ່ງປັນຜົນປະໂຫຍດທີ່ເປັນທຳຂອງແຕ່ລະຝ່າຍ:
- ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ໃຫ້ມີຜົນກະທົບໜ້ອຍທີ່ສຸດ;
- ຮັບປະກັນໃຫ້ມີກົນໄກການຮ້ອງທຸກ.

## 1.3. ການປະເມີນຕົນເອງກ່ອນການຝຶກອົບຮົມ

### ເວລາ 15 ນາທີ

### ຈຸດປະສົງ




- ເພື່ອເປັນການວັດລະດັບຄວາມຮູ້ ແລະ ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນດ້ານກະສິກຳຂອງຜູ້ເຂົ້າຮ່ວມວ່າ ມີຄວາມຮູ້, ຄວາມສາມາດ ແລະ ທັກສະໃນຫົວຂໍ້ດັ່ງກ່າວໃນລະດັບໃດຄິດໄລ່ເປັນເປີເຊັນ (%);
- ເພື່ອໃຫ້ມີການສົນທະນາແລກປ່ຽນຄວາມຮູ້ລະຫວ່າງຜູ້ເຂົ້າຮ່ວມທີ່ມີລະດັບຄວາມຮູ້ ແລະ ປະສົບການທີ່ແຕກຕ່າງກັນ.

### ວິທີການ

1. ຢືນວັດລະດັບຄວາມຮູ້ຕາມເລກເປີເຊັນ;
2. ສົນທະນາລະຫວ່າງຜູ້ມີປະສົບການໜ້ອຍ ແລະ ຜູ້ມີປະສົບການຫຼາຍ ກ່ຽວກັບຫົວຂໍ້ຝຶກອົບຮົມ.

## ຂັ້ນຕອນ

1. ຄູຝຶກຂຽນຕົວເລກເປີເຊັນ (%) ນັບແຕ່ 10%, 20%, 30%, 40%, 50%, 60%, 70%, 80%, 90% ແລະ 100% ຕິດໄວ້ຢູ່ຂ້າງຝາໃນຫ້ອງຝຶກອົບຮົມ;
2. ອະທິບາຍກ່ຽວກັບການວັດລະດັບຄວາມຮູ້ຕົນເອງ ດ້ວຍການໃຫ້ຜູ້ເຂົ້າຮ່ວມຢືນລຽນເປັນແຖວໜ້າກະດານລຽງຕາມລຳດັບ ເລີ່ມຈາກຜູ້ທີ່ມີປະສົບການ ແລະ ຄວາມສາມາດ-ໃນດ້ານກະສິກຳໜ້ອຍຫາຫຼາຍ;
3. ຄູຝຶກຕັ້ງຄຳຖາມ: ໃຜມີປະສົບການໃນການລົງທຶນດ້ານກະສິກຳ? ຄູຝຶກຖາມຍໍ້າຄືນວ່າຜູ້ເຂົ້າຮ່ວມໝັ້ນໃຈແລ້ວບໍ່ ທີ່ໄປຢືນຢູ່ແຕ່ລະຕົວເລກເປີເຊັນ;
4. ເມື່ອສັງເກດເຫັນວ່າ ທຸກຄົນຢືນປະຈຳຢູ່ຕົວເລກເປີເຊັນຂອງໃຜລາວແລ້ວ ໃຫ້ຜູ້ທີ່ມີປະສົບການ ແລະ ຄວາມສາມາດໃນການລົງທຶນດ້ານກະສິກຳໜ້ອຍທີ່ສຸດ ຍ່າງໄປຢືນຢູ່ຕໍ່ໜ້າຜູ້ທີ່ມີປະສົບການ ແລະ ຄວາມສາມາດຫຼາຍທີ່ສຸດ (ຢືນເປັນສອງແຖວ ປິ່ນໜ້າເຂົ້າຫາກັນ);
5. ຄູຝຶກສະເໜີໃຫ້ແຕ່ລະຄູ່ສົນທະນາເລົ່າໃຫ້ຟັງເຖິງປະສົບການທີ່ທັງສອງຄົນໄດ້ລົມກັນ (ໃຫ້ຕາງໜ້າຂອງແຕ່ລະຄູ່ ເປັນຄົນເລົ່າ);
6. ຄູຝຶກສະຫຼຸບລວມຜົນທີ່ໄດ້ຈາກການສົນທະນາຂອງແຕ່ລະຄູ່ວ່າ ມີຄວາມສຳຄັນຕໍ່ກັບການຝຶກອົບຮົມຄັ້ງນີ້ແນວໃດ ແລະ ອະທິບາຍວ່າ ສອງຄົນທີ່ຢືນຢູ່ຕໍ່ໜ້າກັນຈະເປັນຄູ່ຮ່ວມຮຽນ ແລະ ເຮັດກິດຈະກຳນຳກັນ ແຕ່ມື້ນີ້ຈົນຮອດມື້ສຸດທ້າຍຂອງການຝຶກອົບຮົມ ຫຼື ຈົນກວ່າຈະມີການແນະນຳກິດຈະກຳອື່ນໆ.

## ຄຳແນະນຳສຳລັບຄູຝຶກ

ຄູຝຶກຕ້ອງຖ່າຍຮູບໄວ້ ເວລາແຕ່ລະຄົນຢືນລຽນແຖວຈັບເຈ້ຍເປີເຊັນອອກໜ້າ, ຖ່າຍໃຫ້ເຫັນຈຳນວນຄົນທີ່ຢືນປະຈຳຢູ່ແຕ່ລະຕົວເລກເປີເຊັນ ເພື່ອເອົາໄວ້ໃຫ້ຜູ້ເຂົ້າຮ່ວມເບິ່ງໃນມື້ສຸດທ້າຍ ພ້ອມກັບປຽບທຽບກ່ອນ ແລະ ຫຼັງການຝຶກອົບຮົມວ່າ ຄວາມຮູ້ ແລະ ຄວາມ ສາມາດຂອງຜູ້ເຂົ້າຮ່ວມມີການປ່ຽນແປງຫຼາຍໜ້ອຍຊ່ຳໃດ.

# 2. ພາກເນື້ອໃນ

## 2.1. ການສົນທະນາສະພາບລວມການຜະລິດກະສິກຳ

**ເວລາ: 20 ນາທີ**




### ຈຸດປະສົງ:

- ເພື່ອຮັບຮູ້ກ່ຽວກັບສະພາບການຜະລິດກະສິກຳ;
- ເພື່ອຈຳແນກໃຫ້ເຫັນຮູບແບບຂອງການລົງທຶນວ່າມີການລົງທຶນປະເພດໃດແດ່, ຄວາມແຕກຕ່າງ, ຄວາມສ່ຽງຂອງການລົງທຶນຜະລິດປະເພດຕ່າງໆ ກ່ອນຈະເຂົ້າສູ່ເນື້ອໃນປຶດຮຽນ.

### ອຸປະກອນ ແລະ ເຄື່ອງມື:

- ສົນທະນາ ແລະ ຕັ້ງຄຳຖາມກັບຜູ້ເຂົ້າຮ່ວມ;
- ເຈ້ຍແຜ່ນໃຫຍ່;
- ບິກເຟີດ.

### ວິທີການ:

- ແບ່ງຜູ້ເຂົ້າຮ່ວມອອກເປັນ ສອງ ກຸ່ມ ແລະ ໃຫ້ທັງສອງກຸ່ມຄົ້ນຄວ້າ ສອງ ຄຳຖາມລຸ່ມນີ້ ແລ້ວໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນນຳສະເໜີ:

- ມີການຜະລິດແບບໃດ?
- ມີນັກລົງທຶນມາລົງທຶນບໍ່?

- ຖ້າວ່າຊາວບ້ານ ລົງທຶນເອງ ແມ່ນຖາມວ່າໄດ້ຄວາມຄິດນີ້ມາແຕ່ໃສ? ໃຜເປັນຜູ້ນຳພາລິເລີ່ມ?, ຖ້າວ່າມີ ແມ່ນໃຫ້ຜູ້ເຂົ້າຮ່ວມທີ່ຮັບບົດເປັນຊາວບ້ານ ອະທິບາຍລາຍລະອຽດໃຫ້ຟັງ;
- ຖ້າຊາວບ້ານ ບອກວ່າ ເຂົາເຈົ້າຮັບຜິດຊອບແຕ່ແຮງງານ ແລະ ທີ່ດິນ ໃຫ້ຖາມຕໍ່ສ່ວນທີ່ເຫຼືອເຊັ່ນ: ເຕັກໂນໂລຊີ, ຕະຫຼາດແມ່ນໃຜຮັບຜິດຊອບ?
- ຄູຝຶກສະຫຼຸບ ແລະ ເຊື່ອມໂຍງໃສ່ຫົວຂໍ້ຕໍ່ໄປ.

### ຄຳແນະນຳສຳລັບຄູຝຶກ

- ຄູຝຶກຕ້ອງໄດ້ໃຊ້ວິທີການສົນທະນາແບບເປັນກັນເອງ ເຮັດໃຫ້ຜູ້ເຂົ້າຮ່ວມ ມີຄວາມຜ່ອນຄາຍ ແລະ ໃຫ້ເວລາພວກເຂົາໃນການສົນທະນາແບ່ງປັນປະສົບການ;
- ຄູຝຶກຕ້ອງເປັນຜູ້ຟັງທີ່ດີ, ຫຼີກລ່ຽງການໃຊ້ຄຳເວົ້າໃດທີ່ມີລັກສະນະໃຫ້ຄວາມຫວັງ ເຊັ່ນ: ຈະຊ່ວຍແກ້ໄຂບັນຫາທີ່ເກີດຂຶ້ນ, ຊ່ວຍຫາທາງຫາຄູ່ກໍລະນີທີ່ຫຼົບໜີ ຈົ່ງໃຊ້ຄຳເວົ້າທີ່ມີລັກສະນະໃຫ້ກຳລັງໃຈ ສະໜັບສະໜູນຢ່າງມີຫຼັກການ.

## 2.2. ຝາກຄຳຖາມໄວ້ໃນເຈ້ຍແຜ່ນໃຫຍ່

### ເວລາ 5 ນາທີ

ບ່ອນຝາກຄຳຖາມ

ຕົວຢ່າງ:

1. ..........................................................................
2. ..........................................................................
3. ..........................................................................

### ຈຸດປະສົງ

ເພື່ອໃຫ້ຜູ້ເຂົ້າຮ່ວມທີ່ບໍ່ກ້າ ຫຼື ບໍ່ຢາກຕັ້ງຄຳຖາມໃນກຸ່ມໃຫຍ່ ສາມາດຂຽນຄຳຖາມຝາກໄວ້ໃນບ່ອນທີ່ຄູຝຶກຈັດໃຫ້ ເຊິ່ງເປັນການຮັບປະກັນວ່າ ທຸກສຽງ ທຸກຄຳເຫັນແມ່ນມີຄຸນຄ່າຕໍ່ການຝຶກອົບຮົມ ແລະ ຄູຝຶກກໍຈະໄດ້ມີໂອກາດປະກອບຄຳຄິດເຫັນໃນການຕອບຄຳຖາມຂໍ້ຂ້ອງໃຈຂອງຜູ້ເຂົ້າຮ່ວມໄດ້ຢ່າງມີປະສິດທິພາບ.

### ວິທີການ

- ຄູຝຶກຕິດເຈ້ຍຂາວແຜ່ນໃຫຍ່ໄວ້ຂ້າງຝາໃນຫ້ອງຝຶກອົບຮົມ;
- ຜູ້ເຂົ້າຮ່ວມສາມາດຂຽນຄໍາເຫັນ, ຄໍາສະເໜີ, ຄໍາຖາມ ຫຼື ຂໍ້ຂ້ອງໃຈ ໃສ່ເຈ້ຍບັດຄໍາ ແລ້ວເອົາໄປຕິດໄວ້ບ່ອນ ທີ່ຄູຝຶກກໍານົດໄວ້.

### ຂັ້ນຕອນ

- ຄູຝຶກຂຽນຫົວຂໍ້ໃສ່ເຈ້ຍແຜ່ນໃຫຍ່ວ່າ "ບ່ອນຝາກຄໍາຖາມ ແລ້ວຕິດໄວ້ຢູ່ຝາໃນຫ້ອງຝຶກອົບຮົມ ບ່ອນທີ່ຜູ້ເຂົ້າຮ່ວມສາມາດເຫັນ ແລະ ຂຽນໄດ້ສະດວກ;
- ຄູຝຶກແນະນໍາວິທີການນໍາໃຊ້ພື້ນທີ່ບ່ອນຝາກຄໍາຖາມຄື: ແຕ່ລະມື້ເວລາພັກຜ່ອນ ຫຼື ຫຼັງເລີກເມືອ ຄູຝຶກຈະກວດເບິ່ງບ່ອນຝາກຄໍາຖາມ ຖ້າຫາກມີຄໍາຖາມຝາກໄວ້ ຄູຝຶກຈະນໍາເອົາມາຕອບ ຫຼື ໄຂ ຂໍ້ຂ້ອງໃຈໃນເວລາເໝາະສົມເຊັ່ນ: ກໍລະນີທີໜຶ່ງ ເມື່ອມີຊົ່ວໂມງຫົວຂໍ້ທີ່ກ່ຽວຂ້ອງກັບຄໍາຖາມ ຄູຝຶກກໍຈະຍົກຄໍາຖາມນັ້ນຂຶ້ນມາສົນທະນາ ຫຼື ສອດແຊກເປັນຄໍາຕອບໃນບົດຮຽນ, ກໍລະນີທີສອງ ແມ່ນນໍາເອົາຄໍາຖາມທີ່ມີ ໄວ້ຕອບໃນເວລາທົບທວນຄືນບົດຮຽນ ຕອນເຊົ້າຂອງແຕ່ລະມື້.

## 2.3. ເກມ: ເຮືອນ ພະຍຸ ຊາວບ້ານ

**ເວລາ: 15 ນາທີ**



## ຈຸດປະສົງ

- ເພື່ອເປັນການເຊື່ອມໂຍງເຂົ້າກັບບົດຮຽນໃນຫົວຂໍ້: ການສ້າງຄວາມເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈ ໂດຍຮັບຮູ້ຂໍ້ມູນລ່ວງໜ້າ;
- ການຫຼິ້ນເກມ ມີເນື້ອໃນສື່ເຖິງຄວາມສ່ຽງ ແລະ ບັນຫາທີ່ອາດເກີດຂຶ້ນໄດ້ທຸກເມື່ອໂດຍທີ່ເຮົາບໍ່ສາມາດກໍານົດໄດ້, ແຕ່ວ່າຖ້າຫາກເຮົາມີການກະກຽມທີ່ດີ, ມີສະຕິ ກໍສາມາດຮັບມື ຫຼື ຫຼຸດຜ່ອນຄວາມສ່ຽງລົງໄດ້.

## ວິທີການ

- ນໍາພາຫຼິ້ນເກມເຮືອນ ພະຍຸ ຊາວບ້ານ ກ່ອນເຂົ້າສູ່ບົດຮຽນ, ອະທິບາຍໃຫ້ ຜູ້ເຂົ້າຮ່ວມຮັບຮູ້ກ່ຽວກັບການກະກຽມຕົວເອງເພື່ອແກ້ໄຂບັນຫາ, ສິ່ງທີ່ຄວນຮູ້ກ່ອນການຕັດສິນໃຈໃນການລົງທຶນຜະລິດກະສິກໍາ;
- ຄູຝຶກຈະໄດ້ນໍາສະເໜີ ແລະ ອະທິບາຍກ່ຽວກັບວິທີການ ແລະ ຂັ້ນຕອນຕ່າງໆ ພ້ອມດຽວກັນນັ້ນ , ໃນແຕ່ລະຂັ້ນຕອນຂອງການຫຼິ້ນເກມດັ່ງກ່າວ ຍັງຈະມີການສົນທະນາຖາມ - ຕອບ, ແລກປ່ຽນຄໍາຄິດເຫັນນໍາຜູ້ເຂົ້າຮ່ວມທີ່ຮັບບົດເປັນຊາວບ້ານອີກດ້ວຍ;
- ວິທີການຫຼິ້ນເກມ ເຮືອນ ພະຍຸ ຊາວບ້ານ ຜູ້ເຂົ້າຮ່ວມຢືນເປັນວົງມົນໃຫ່ຍ ໂດຍການຈັບມືກັນແລ້ວຍຶດອອກຈົນສຸດແຂນ ຈັບກຸ່ມ 3 ຄົນຕໍ່ 1 ກຸ່ມ ສອງຄົນເຮັດເປັນເຮືອນ ແລ້ວໃຫ້ຄົນ 1 ເປັນຊາວບ້ານຢືນຢູ່ໃນເຮືອນ. ຄູຝຶກອະທິບາຍກະຕິກາການຫຼິ້ນເກມ, ຖ້າໄດ້ຍິນຄໍາວ່າ: “ຊາວບ້ານ” ໃຫ້ຄົນທີ່ເປັນຊາວບ້ານ ແລ່ນອອກຈາກເຮືອນຫຼັງເກົ່າເພື່ອໄປຊອກຢູ່ເຮືອນຫຼັງໃໝ່, ຖ້າໄດ້ຍິນຄໍາວ່າ: “ເຮືອນ” ໃຫ້ສອງຄົນທີ່ເປັນເຮືອນ ແລ່ນອອກຈາກກັນເພື່ອໄປສ້າງເຮືອນຫຼັງໃໝ່, ຜູ້ທີ່ເປັນເຮືອນ (ສ້າງນໍາໃຜກໍໄດ້ ແຕ່ບໍ່ແມ່ນນໍາຜູ້ເກົ່າ) ຖ້າໄດ້ຍິນຄໍາວ່າ “ພະຍຸ” ໃຫ້ໝົດທຸກຄົນ ທັງເຮືອນທັງຊາວບ້ານ ແຍກກັນ (ແລ່ນແຕກຊະນະໂມ) ຜູ້ທີ່ເຄີຍເປັນເຮືອນໃຫ້ເປັນຊາວບ້ານ ຫຼື ໄປເປັນເຮືອນນໍາຜູ້ໃໝ່ທີ່ບໍ່ເຄີຍຈັບຄູ່ກັນມາກ່ອນ, ຜູ້ທີ່ເຄີຍເປັນຊາວບ້ານໃຫ້ໄປເປັນເຮືອນ ກໍານົດໃຫ້ຜູ້ໜຶ່ງຢືນຢູ່ເຄິ່ງກາງລໍຖ້າຈັງຫວະ ເພື່ອລັກເອົາເຮືອນ, ຫຼື ປອມໂຕເປັນຊາວບ້ານ.
- ໃຫ້ຜູ້ເຂົ້າຮ່ວມໝົດທຸກຄົນມານັ່ງເປັນວົງມົນໃຫ່ຍ ເພື່ອສົນທະນາກ່ຽວກັບຄໍາຖາມລຸ່ມນີ້:

  1. ເປັນຫຍັງທ່ານຈຶ່ງແລ່ນອອກຈາກເຮືອນຂອງທ່ານ ໄປຢູ່ບ່ອນໃໝ່?
  2. ເມື່ອທ່ານຖືກສັ່ງໃຫ້ອອກຈາກເຮືອນທ່ານຮູ້ສຶກແນວໃດ?
  3. ເວລາທີ່ທ່ານແລ່ນຊອກເຮືອນໃໝ່ ແຕ່ບໍ່ມີເຮືອນໃຫ້ທ່ານຢູ່ ທ່ານຮູ້ສຶກແນວໃດ?
  4. ຜ່ານການຫຼິ້ນເກມນີ້ ທ່ານຄິດວ່າເກມໄດ້ສະທ້ອນໃຫ້ເຫັນບັນຫາຫຍັງແດ່ ໃນຊຸມຊົນ ຫຼື ໝູ່ບ້ານຂອງພວກທ່ານ?

5. ຖ້າໃຫ້ທ່ານຕີຄວາມໝາຍຂອງເກມນີ້ ໂດຍປຽບທຽບກັບເລື່ອງທີ່ດິນ ທີ່ເກີດຂຶ້ນຢູ່ບ້ານຂອງທ່ານຈະໃຫ້ຄວາມໝາຍແນວໃດ?
6. ເວລາທີ່ເຮືອນຂອງທ່ານຖືກຍຶດເອົາໂດຍຄົນແປກໜ້າ ແລະ ຕົວທ່ານເອງກາຍເປັນຄົນບໍ່ມີເຮືອນຢູ່ ແລະ ຕ້ອງຊອກລັກເອົາເຮືອນຂອງຄົນອື່ນ ທ່ານຮູ້ສຶກແນວໃດ?
7. ຖ້າຫາກທ່ານມີໂອກາດ ແລະ ມີອຳນາດໃນການລົງມືແກ້ໄຂບັນຫາດັ່ງກ່າວນັ້ນ ທ່ານຈະໃຊ້ວິທີໃດ ຫຼື ເຮັດແນວໃດ? ໃຫ້ບອກແຕ່ລະຂັ້ນຕອນ?

## ຄຳແນະນຳສຳລັບຄູຝຶກ

- ຄູຝຶກຕ້ອງສັງເກດເບິ່ງໃຫ້ດີກ ບໍ່ໃຫ້ຜູ້ທີ່ເປັນຊາວບ້ານຢືນຢູ່ເຮືອນຫຼັງເກົ່າ, ບໍ່ໃຫ້ຜູ້ທີ່ເປັນເຮືອນຢູ່ນຳກັນ ຖ້າມີໃຜໃຜເຮັດແບບນັ້ນຈະຕ້ອງມີການໃຫ້ລາງວັນເຊັ່ນ: ຮ້ອງເພັງ, ທວາຍຄຳສັບ... ເປັນຕົ້ນ;
- ຄູຝຶກສາມາດປັບແປງເກມ ໃຫ້ໜ້າສົນໃຈ ແລະ ດຶງດູດອາລົມຄວາມຜູກພັນຂອງຄົນກັບເຮືອນຫຼັງຈາກນັ້ນ ໂດຍການເລີ່ມເກມເຊັ່ນ: ໃຫ້ຊາວບ້ານຫຼັບຕາ ແລະ ຈິນຕະນາການວ່ານີ້ແມ່ນເຮືອນຂອງລາວແທ້ ຕື່ນເຊົ້າມາລາວເຮັດຫຍັງ, ອ້ອມແອ້ມເຮືອນຂອງລາວມີຫຍັງ ແລະ ລາວເຮັດຫຍັງກັບມັນໃນແຕ່ລະມື້, ສິ່ງທີ່ລາວຜູກພັນທີ່ສຸດໃນເຮືອນຫຼັງນີ້ແມ່ນຫຍັງ? ແລ້ວໃຫ້ລາວຈິນຕະນາການເຮັດແບບນັ້ນໃນເຮືອນຫຼັງນັ້ນ ໃຫ້ເວລາລາວໄດ້ເຮັດໃນສິ່ງທີ່ລາວຄວນເຮັດ ແລ້ວຄູຝຶກຈຶ່ງຄ່ອຍອະທິບາຍເພີ່ມເຕີມ;
- ຄູຝຶກຈະຖາມຄຳຖາມງ່າຍໆກ່ອນ ແລ້ວຈຶ່ງຖາມຄຳຖາມຫຼັກທີ່ສາມາດເຊື່ອມໂຍງເຂົ້າໃນປະເດັນທີ່ດິນ ຫຼື ປະເດັນອື່ນໆ ໂດຍອີງໃສ່ຫົວຂໍ້ຝຶກອົບຮົມຂອງພວກເຮົາ;
- ທຸກໆເກມຈະເປັນເກມທີ່ມີຄວາມໝາຍເຊື່ອງຊ້ອນ ແລະ ສຳຄັນ ຖ້າຫາກວ່າຄູຝຶກນຳພາຫຼິ້ນ ຫຼື ບັນຊາເກມນັ້ນໃຫ້ໄປຕາມຈຸດປະສົງ ແລະ ເປົ້າໝາຍທີ່ຊັດເຈນ;
- ເພື່ອໃຫ້ຜູ້ເຂົ້າຮ່ວມເຂົ້າໃຈຢ່າງທ່ອງແທ້, ເຂົ້າໃຈເລິກເຊິ່ງ ແລະ ສາມາດເຊື່ອມໂຍງເກມນີ້ເຂົ້າໃນຫົວຂໍ້ທີ່ກ່ຽວຂ້ອງ ເຮົາຕ້ອງຫຼິ້ນເກມຄືນອີກຫຼັງຈາກຖາມຄຳຖາມໄປແລ້ວ (ໂດຍໃຊ້ເວລາຫຼິ້ນປະມານ 2 ນາທີເທົ່ານັ້ນ);
- ທຸກຄຳຖາມຄູຝຶກ ຈະຕ້ອງມີຄຳຖາມເຈາະຈີ້ມເພື່ອໃຫ້ໄດ້ເນື້ອໃນທີ່ເຊື່ອມໂຍງເຂົ້າໃນຫົວຂໍ້ທີ່ເຮົາກຳລັງເຮັດຢູ່ເຊັ່ນວ່າ: ການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ ໂດຍຮັບຮູ້ຂໍ້ມູນລ່ວງໜ້າ.

## 2.4. ການເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ ແລະ ພຽງພໍ
**ເວລາ 30 ນາທີ**




**ຈຸດປະສົງ:**

- ເພື່ອເປັນການສ້າງຄວາມເຂົ້າໃຈໃຫ້ກັບຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບການກຽມຕົວແກ້ໄຂບັນຫາ, ສິ່ງທີ່ຄວນຮູ້ ກ່ອນການຕັດສິນໃຈໃນການລົງທຶນຜະລິດກະສິກຳ;
- ເພື່ອໃຫ້ຜູ້ເຂົ້າຮ່ວມຮັບຮູ້ຂໍ້ມູນພື້ນຖານ ກ່ຽວກັບການປຶກສາຫາລືກັບຊຸມຊົນ ໃນເຂດທີ່ມີການລົງທຶນ ແລະ ນຳມາເປັນບ່ອນອີງໃນການທົບທວນ ແລະ ຕັດສິນໃຈໂດຍສະເພາະແມ່ນເລື່ອງ:
  - ແຮງງານ;
  - ການມີສ່ວນຮ່ວມຂອງແມ່ຍິງ;
  - ການທົດແທນຄ່າເສຍຫາຍ;
  - ບັນຫາຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ.
- ເພື່ອຈັດກິດຈະກຳສົນທະນາ ກໍລະນີທີ່ຊາວບ້ານ ຫຼື ຊາວກະສິກອນຫາກມີ 2 ກຸ່ມຄື: ກຸ່ມທີ່ເຂົ້າຮ່ວມໂຄງການ ແລະ ກຸ່ມທີ່ບໍ່ໄດ້ເຂົ້າຮ່ວມໂຄງການ.

## ອຸປະກອນ ແລະ ເຄື່ອງມື

- ວິດີໂອ "ການປຶກສາຫາລືກັບຊຸມຊົນ (FPIC)" ແລະ ວິດີໂອ"ການເຈລະຈາດ້ວຍຄວາມໄວ້ເນື້ອເຊື່ອໃຈ (Good Faith Negotiation)"
- ເຈ້ຍແຜ່ນໃຫຍ່;
- ບິກເຟີສ໌ສີ: ແດງ, ດຳ, ຟ້າ;
- ສະກ໋ອດຕິດເຈ້ຍ.

## ວິທີການ

- ການມີສ່ວນຮ່ວມຂອງແມ່ຍິງ ແມ່ນຈະໄດ້ໃຊ້ວິທີການໂຕ້ວາທີ: **ຂ້ອຍແມ່ນ (ແມ່ຍິງ/ຜູ້ຊາຍ)... ຂ້ອຍບໍ່ເຫັນດີ....** ໂດຍການສ້າງຫົວຂໍ້ໃດໜຶ່ງທີ່ກ່ຽວຂ້ອງກັບບົດຮຽນ ແລ້ວຄັດເລືອກເອົາຜູ້ຕາງໜ້າຂອງຊາວບ້ານຂຶ້ນມາສາທິດຕົວຈິງ ໃນນີ້ເພື່ອເປັນການຜ່ອນຄາຍ ແລະ ສ້າງຄວາມເປັນກັນເອງ ຄູຝຶກອາດຈະມີການສາທິດໃຫ້ຜູ້ເຂົ້າຮ່ວມໄດ້ເບິ່ງກ່ອນ;
- ແບ່ງກຸ່ມຄົ້ນຄວ້າເປັນສາມກຸ່ມ ແລ້ວໃຫ້ຄຳຖາມຄົ້ນຄວ້າ 3 ຫົວຂໍ້ ເຊັ່ນ:
  - ການທົດແທນຄ່າເສຍຫາຍຕັ້ງຄຳຖາມວ່າ: ຖ້າມີການລົງທຶນພາຍໃນບ້ານຊາວບ້ານສາມາດຮ້ອງຂໍຄ່າຊົດເຊີຍໄດ້ບໍ? ຖ້າໄດ້ ແມ່ນໄດ້ໃນກໍລະນີໃດ? ໃຫ້ຍົກຕົວຢ່າງ.
  - ຄວາມຮັບຜິດຊອບທາງດ້ານສິ່ງແວດລ້ອມ ເຊັ່ນ: ການໃຊ້ສານເຄມີ ແລະ ຢາປາບສັດຕູພືດຢ່າງປອດໄພຕໍ່ຊີວິດ ແລະ ສິ່ງ ແວດລ້ອມ. ຕັ້ງຄຳຖາມວ່າ: ທ່ານຄິດວ່າການລົງທຶນ ໃນດ້ານກະສິກຳຈະສ້າງຜົນກະທົບຕໍ່ສະພາບແວດລ້ອມ ຫຼື ບໍ່? ຖ້າສິ່ງຜົນກະທົບ ຈະມີວິທີແກ້ໄຂແນວໃດ?
  - ນະໂຍບາຍດ້ານແຮງງານ, ຕັ້ງຄຳຖາມວ່າ: ຊາວບ້ານໄດ້ຮັບຜົນປະໂຫຍດ ແລະ ການພັດທະນາທາງດ້ານ ສີມືແຮງງານຈາກການລົງທຶນຄືແນວໃດ?
  - ຫຼັງຈາກນັ້ນ, ໃຫ້ແຕ່ລະກຸ່ມຂຶ້ນນຳສະເໜີ.
- ຄູຝຶກແນະນຳ 10 ຫຼັກການ ຂອງບົດແນະນຳຂອງ ອາຊຽນສຳລັບ ການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້
  782512_25308b52ce5346008fb633c711de3821.pdf (aseanraiguidelines.org)
- ນຳສະເໜີວິດີໂອການປຶກສາຫາລືກັບຊຸມຊົນ (FPIC) ເຊິ່ງໃນວິດີໂອແມ່ນຈະເວົ້າລະອຽດກ່ຽວກັບບົດບາດ ແລະ ຄວາມຮັບຜິດ ຊອບຂອງບໍລິສັດຕໍ່ກັບການລົງທຶນ; ແລະ ວິດີໂອການເຈລະຈາດ້ວຍຄວາມໄວ້ເນື້ອເຊື່ອໃຈ (Good Faith Negotiation)

- ສຸດທ້າຍ ຄູຝຶກສະຫຼຸບ ແລະ ສັງລວມກ່ຽວກັບຄຳຖາມສົນທະນາ ແລະ ນຳສະເໜີຄຳຕອບໃນແຕ່ລະຫົວຂໍ້ເຊັ່ນ:

1. ການທົດແທນຄ່າເສຍຫາຍ ອີງຕາມຄຳນິຍາມໃນມາດຕາ 3 ຂອງກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ໝາຍເຖິງ ການທົດແທນ ຫຼື ຊົດເຊີຍ ເປັນ ທີ່ດິນ, ວັດຖຸ ຫຼື ເປັນເງິນ ສຳລັບ ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການຈັດສັນພູມລຳເນົາ ແລະ ອາຊີບ ດ້ວຍມູນຄ່າປ່ຽນແທນ ທີ່ກຳນົດໄວ້ແຕ່ລະໄລຍະ. ສ່ວນການທົດແທນຄ່າເສຍຫາຍສິດນຳໃຊ້ທີ່ດິນ ແມ່ນ ອີງໃສ່ມາດຕາທີ່ກ່ຽວຂ້ອງ ໃນໝວດທີ IX, ກົດໝາຍວ່າດ້ວຍທີ່ດິນ ມາດຕາ 148-154
2. ບັນຫາສິ່ງແວດລ້ອມ ແລະ ແຮງງານແມ່ນນຳໃຊ້ໂປດສະເຕີກ່ຽວກັບ ຄວາມຮັບຜິດຊອບຂອງຜູ້ລົງທຶນຈາກອຸປະຕິເຫດແຮງງານ ແລະ ບັນຫາຈາກມົນລະພິດ. https://laolandinfo.org/wp-content/uploads/2022/12/final-wall-calendar-compressed.pdf

## ຄຳແນະນຳສຳລັບຄູຝຶກ

- ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮັບຄຳຕອບທີ່ຊັດເຈນຈາກການແບ່ງກຸ່ມຄົ້ນຄວ້າ ຄູຝຶກຈະຕ້ອງເນັ້ນສ່ວນສຸດທ້າຍຂອງວິດີໂອທີ່ເປັນຄຳເວົ້າ ແລະ ໂຕໜັງສືທີ່ແນະນຳໃຫ້ຮູ້ກ່ຽວກັບແຫຼ່ງຂໍ້ມູນເພີ່ມເຕີມກ່ຽວກັບປະເດັນຕ່າງໆທີ່ຍົກຂຶ້ນມາສົນທະນາໃນເວລາຈັດຕັ້ງກຸ່ມສົນທະນາ;
- ຄູຝຶກຕ້ອງສຶກສາ ກົດໝາຍວ່າດ້ວຍ ແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013, ມາດຕາ 122, 128;
- ຄູຝຶກຕ້ອງສຶກສາ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ຄູຝຶກຕ້ອງສຶກສາ ກົດໝາຍວ່າດ້ວຍ ທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ມາດຕາ 148 - 154;
- ຄູຝຶກຕ້ອງສຶກສາ 10 ຫຼັກການ ຂອງບົດແນະນຳຂອງ ອາຊຽນສຳລັບ ການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (ເບິ່ງໃນສັງລວມເອກະສານ)
- ຄູຝຶກຕ້ອງອະທິບາຍລະອຽດກ່ຽວກັບວິທີການຫຼິ້ນກິດຈະກຳ: **ຂ້ອຍແມ່ນ (ຜູ້ຍິງ/ຜູ້ຊາຍ)...ຂ້ອຍບໍ່ເຫັນດີ....** ດັ່ງນີ້:
  1. ຢືນເປັນວົງມົນ;
  2. ໃຫ້ແຕ່ລະຄົນຈັບຄູ່;
  3. ຄູຝຶກອະທິບາຍກະຕິກາ ພ້ອມຍົກຕົວຢ່າງວິທີການຫຼິ້ນກິດຈະກຳໃຫ້ເບິ່ງເຊັ່ນ: ກ) ຂ້ອຍແມ່ນແມ່ຍິງ ຂ້ອຍບໍ່ເຫັນດີຕໍ່ຄຳເວົ້າທີ່ວ່າ “ຜູ້ຍິງຄວນເຮັດວຽກເຮືອນວຽກຊານ ແລະ ເອົາລູກກໍ່ພຽງພໍແລ້ວ, ຂ) ຂ້ອຍແມ່ນຜູ້ຊາຍ ຂ້ອຍບໍ່ເຫັນດີຕໍ່ ຄຳເວົ້າທີ່ວ່າ “ຜູ້ຊາຍບໍ່ເຮັດຫຍັງ ມີແຕ່ເລາະເລງກິນເຫຼົ້າ ເມົານາລີ ບໍ່ສົນລູກ - ບໍ່ສົນເມຍ......, ກ) ຂ້ອຍແມ່ນແມ່ຍິງ “ຂ້ອຍບໍ່ເຫັນ

ດີ ເວລາທີ່ຂ້ອຍບໍ່ໄດ້ຮັບໂອກາດໃນການຕັດສິນໃຈກ່ຽວກັບບັນຫາພາຍໃນຄອບຄົວ" ຂ) ຂ້ອຍແມ່ນຜູ້ຊາຍ "ຂ້ອຍບໍ່ມັກແມ່ຍິງທີ່ມັກຖາມຈູ້ຈີ້ຈຸກຈິກ"

4. ແຕ່ລະຄູ່ຢືນປິ່ນໜ້າເຂົ້າຫາກັນ ແລ້ວເລືອກວ່າໃຜຈະເປັນຄົນເວົ້າກ່ອນ. ໃຫ້ເວົ້າຫຼາຍເທົ່າທີ່ຈະເວົ້າໄດ້ ເວົ້າໃນສິ່ງທີ່ຕົນບໍ່ເຫັນດີ, ສິ່ງທີ່ຕົນບໍ່ມັກເວລາມີຄົນເວົ້າໃຫ້ເຮົາ ຫຼື ເວລາທີ່ເຮົາໄດ້ຍິນຄົນເວົ້າໃສ່ຜູ້ອື່ນ (ໃຫ້ເວລາ 5 ນາທີ);
5. ຄູຝຶກນຳສະເໜີຂັ້ນຕອນຕໍ່ໄປ: ແບ່ງເປັນສອງກຸ່ມ, ກຸ່ມຍິງ ແລະ ກຸ່ມຊາຍ. ແຕ່ລະກຸ່ມໃຫ້ຢືນເປັນແຖວຂວາງ ຫັນໜ້າເຂົ້າຫາກັນແລ້ວໂຕ້ວາທີກັນ;
6. ແຕ່ລະກຸ່ມໃຫ້ສົ່ງຕົວແທນມາໂຕ້ວາທີກັນ ໂດຍການກ້າວຂາອອກຈາກແຖວຂອງຕົນໜຶ່ງກ້າວເພື່ອໂຕ້ເວທີ ກັບຄູ່ໂຕ້ວາທີຈາກອີກຝ່າຍ ຫຼັງຈາກຜູ້ຕາງໜ້າ ຄູ່ທີໜຶ່ງເວົ້າສຸດ, ໃຫ້ສົ່ງຕົວແທນຄູ່ທີສອງ, ສາມ, ສີ່... ມາໂຕ້ວາທີ ເຮັດແບບນີ້ໄປຈົນຝ່າຍໃດຝ່າຍໜຶ່ງຍອມ ແລະ ບໍ່ມີຄຳເວົ້າທີ່ຈະເອົາມາຖົກຖຽງກັນ.

## 2.5. ສິດຂອງຊາວກະສິກອນໃນການເຮັດກະສິກຳແບບມີສັນຍາ

**ເວລາ 20 ນາທີ**



## ຈຸດປະສົງ

ເພື່ອໃຫ້ຜູ້ເຂົ້າຮ່ວມຮູ້ຄວາມໝາຍ, ສິດຂອງຕົນເອງພາຍຫຼັງທີ່ໄດ້ຕັດສິນໃຈຈະເຮັດສັນຍາຮ່ວມກັບນັກລົງທຶນ ພ້ອມດຽວກັນນັ້ນ ຍັງເປັນການຊອກຫາບ່ອນອີງທາງດ້ານກົດໝາຍໂດຍສະເພາະແມ່ນເງື່ອນໄຂ ແລະ ອົງປະກອບຂອງການເຮັດສັນຍາ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຄູ່ສັນຍາທັງສອງຝ່າຍ.

## ອຸປະກອນ ແລະ ເຄື່ອງມື

- ໂປດສະເຕີ "ຄິດໃຫ້ດີແລ້ວຈິ່ງເຊັນສັນຍາ" ແລະ "ຄວາມຮູ້ພື້ນຖານກ່ຽວກັບການເຮັດສັນຍາ";
- ວິດີໂອ "ສິດຂອງຊາວກະສິກອນໃນການເຮັດສັນຍາ" ແລະ "ອົງປະກອບຂອງການເຮັດສັນຍາ";
- ຮ່າງຟອມສັນຍາ.

## ວິທີການ

- ເປີດເວທີສົນທະນາໃນກຸ່ມໃຫຍ່ແລກປ່ຽນຄວາມຄິດເຫັນໃສ່ໂປດສະເຕີທີ່ຄູຝຶກກຽມມາ;
- ແນະນຳຜູ້ເຂົ້າຮ່ວມໃຫ້ສຶກສາເບິ່ງບັນດາໂປດສະເຕີ ແລະ ຮ່າງຕົວຢ່າງສັນຍາທີ່ທີມງານແຈກຢາຍໃຫ້ ແລະ ຕິດໄວ້ໃນຫ້ອງຝຶກອົບຮົມ.

## ຂັ້ນຕອນ

- ນຳພາຜູ້ເຂົ້າຮ່ວມທົບທວນຄືນວ່າ ປະສົບການຂອງພວກເຂົາກ່ຽວກັບກະສິກຳແບບມີສັນຍາມີຫຍັງແດ່ ແລະ ໃຫ້ບອກເຖິງວ່າ ສິດທີ່ ຊາວກະສິກອນຄວນໄດ້ຮັບແມ່ນຫຍັງ (ດັ່ງທີ່ກຳນົດຢູ່ໃນສັນຍາ) ແລະ ແມ່ນໃຜສາມາດໃຫ້ຄວາມຊ່ວຍເຫຼືອແກ່ຊາວກະສິກອນ ຖ້າຫາກບໍ່ມີການປະຕິບັດຕາມສັນຍາ;
- ຫຼັງຈາກນັ້ນ, ຕັ້ງຄຳຖາມສຳລັບການສົນທະນາວ່າ:
  - ສັນຍາແມ່ນຫຍັງ? (ຄຳຕອບແມ່ນມາດຕາກົດໝາຍຢູ່ໃນເອກະສານອ້າງອີງ);
  - ກະສິກຳແບບມີສັນຍາແມ່ນຫຍັງ? (ຄຳຕອບແມ່ນມາດຕາກົດໝາຍຢູ່ໃນເອກະສານອ້າງອີງ)
  - ການເຮັດສັນຍາຕ້ອງອີງໃສ່ເງື່ອນໄຂ ແລະ ອົງປະກອບຫຍັງແດ່?
  - ຜູ້ອຳນວຍຄວາມສະດວກຕັ້ງຄຳຖາມກ່ຽວຂ້ອງກັບເງື່ອນໄຂ ແລະ ຂໍ້ມູນທີ່ຈຳເປັນທີ່ຈະຂຽນລົງໃນສັນຍາ ແລະ ໃຫ້ເວລາແກ່ຜູ້ເຂົ້າຮ່ວມໃນການສຶກສາເບິ່ງຂໍ້ມູນໃນໂປດສະເຕີທີ່ຕິດຢູ່ຫ້ອງຝຶກອົບຮົມເພື່ອນຳມາແລກປ່ຽນໃນກຸ່ມໃຫຍ່;
  - ເປີດວິດີໂອ "ສິດຂອງຊາວກະສິກອນ ແລະ ອົງປະກອບຂອງການເຮັດສັນຍາ" ໃນເວລາທີ່ສາຍວິດີໂອ ຄູຝຶກຕ້ອງຢຸດວິດີໂອເປັນບາງຄັ້ງຄາວ ເພື່ອສົນທະນາກັບຜູ້ເຂົ້າຮ່ວມວ່າ ໃນວິດີໂອ ນັ້ນໄດ້ເວົ້າເຖິງສິດ ແລະ ອົງປະກອບໃດແດ່, ພ້ອມທັງໃຫ້ຜູ້ ເຂົ້າຮ່ວມຂຽນໃສ່ປຶ້ມບັນທຶກສ່ວນຕົວຂອງເຂົາເຈົ້າ;

- ຄູຝຶກນຳສະເໜີນິຍາມຂອງສັນຍາ (ເບິ່ງບົດນຳສະເໜີ) ອີງໃສ່ກົດໝາຍວ່າດ້ວຍກະສິກຳ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998, ມາດຕາ 8 ແລະ ມາດຕາ 46 ແລະ ປະມວນກົດໝາຍແພ່ງ ໃນ ໝວດທີ 2: ການເຮັດສັນຍາ ມາດຕາ 364-369;
- ສະຫຼຸບສັ້ນໆ ສະເພາະເຈາະຈົງໃຫ້ເຂົ້າໃຈເຖິງນິຍາມ ແລະ ຄວາມສຳຄັນຂອງຂໍ້ຜູກພັນໃນສັນຍາ (ມາດຕາ 362), ເງື່ອນໄຂ ແລະ ອົງປະກອບຂອງການເຮັດສັນຍາ ມີຫຍັງແດ່, ເນື່ອງຈາກ ສັນຍາເປັນເອກະສານສຳຄັນທີ່ມີຄຸນຄ່າທາງດ້ານກົດໝາຍ, ທີ່ພາໃຫ້ສິດ ແລະ ພັນທະເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ ຊຶ່ງຄູ່ສັນຍາທັງສອງຝ່າຍຕ້ອງໄດ້ປະຕິບັດຕາມ, ຖ້າບໍ່ມີສັນຍາມັນຈະມີຜົນກະທົບແນວໃດ. ຈາກນັ້ນແມ່ນໃຫ້ແນະນຳເຄື່ອງມືວິເຄາະດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈຂອງສັນຍາ, ກ່ອນເຊື່ອມໂຍງໄປຫາຫົວຂໍ້ບົດຮຽນຕໍ່ໄປ.

## ຄຳແນະນຳສຳລັບຄູຝຶກ

- ຄູຝຶກຕ້ອງສຶກສາມາດຕາທີ່ກ່ຽວພັນກັບການເຮັດສັນຍາໃນໝວດທີ 2 ຂອງປະມວນກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98 ສພຊ ລົງວັນທີ 10 ຕຸລາ ປີ 1998, ມາດຕາ 8 ແລະ ມາດຕາ 46. ຄູຝຶກຕ້ອງກະກຽມຮ່າງຟອມສັນຍາ, ໂປດສະເຕີ "ຄິດໃຫ້ດີແລ້ວຈຶ່ງເຊັນສັນຍາ" ແລະ "ຄວາມຮູ້ພື້ນຖານກ່ຽວກັບການເຮັດສັນຍາ";
- ຄູຝຶກຕ້ອງກະກຽມວິດີໂອສິດຂອງຊາວກະສິກອນໃນການເຮັດສັນຍາ" ແລະ "ອົງປະກອບຂອງການເຮັດສັນຍາ" ພ້ອມທັງອຸປະກອນສຳລັບເປີດວິດີໂອ;

**ໝາຍເຫດ:** ຖ້າວ່າການຝຶກອົບຮົມຄັ້ງນີ້ ເປັນການຝຶກຕໍ່ເນື່ອງຈາກຫົວຂໍ້: ກະສິກຳແບບມີສັນຍາ ແມ່ນສາມາດຂ້າມຫົວຂໍ້ສິດຂອງຊາວກະສິກອນໄດ້ເລີຍ ເພາະຫົວຂໍ້ນີ້ ແມ່ນໄດ້ບັນຈຸໄວ້ໃນການຝຶກອົບຮົມໃນຫົວຂໍ້ກະສິກຳແບບມີສັນຍາແລ້ວ.

## 2.6. ການວິເຄາະດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈຂອງກະສິກຳແບບມີສັນຍາ

**ເວລາ 20 ນາທີ**

| ດ້ານບວກ (P) | ດ້ານລົບ(M) | ສິ່ງທີ່ໜ້າສົນໃຈ (I) |
|---|---|---|
| | | |

### ຈຸດປະສົງ

ເພື່ອເປັນການວິເຄາະໃຫ້ເຫັນເຖິງດ້ານດີ, ດ້ານອ່ອນ ແລະ ສິ່ງທີ່ຄວນເອົາໃຈໃສ່ຂອງກະສິກຳແບບມີສັນຍາ.

### ອຸປະກອນ ແລະ ເຄື່ອງມື

- ເຈ້ຍແຜ່ນໃຫຍ່ ບິກເຟີດສີດຳ, ແດງ, ຟ້າ;
- ສະກອດຕິດເຈ້ຍ;
- ຄອມພິວເຕີ ແລະ ໂປຣເຈັກເຕີ.

### ວິທີການ

- ນຳໃຊ້ເຄື່ອງມື ດ້ານບວກ, ດ້ານລົບ ແລະ ສິ່ງທີ່ຄວນເອົາໃຈໃສ່ ເພື່ອຊ່ວຍວິເຄາະດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈຂອງກະສິກຳແບບມີສັນຍາ;
- ແບ່ງກຸ່ມສົນທະນາ ແລະ ໃຫ້ຕາງໜ້າກຸ່ມນຳສະເໜີຜົນການວິເຄາະ.

### ຂັ້ນຕອນ

1. ແບ່ງກຸ່ມຜູ້ເຂົ້າຮ່ວມອອກເປັນ ສາມ ກຸ່ມ;

2. ຄູຝຶກອະທິບາຍໃຫ້ຜູ້ເຂົ້າຮ່ວມຮູ້ ແລະ ເຂົ້າໃຈວ່າ ດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈແມ່ນຫຍັງ ແລະ ອະທິບາຍວິທີການຂັ້ນຕອນຂອງການວິເຄາະ ໂດຍນໍາໃຊ້ເຄື່ອງມື ດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈ;
3. ໃຫ້ເວລາແຕ່ລະກຸ່ມໄດ້ວິເຄາະກ່ຽວກັບ ດ້ານດີ, ດ້ານອ່ອນ ແລະ ສິ່ງທີ່ໜ້າສົນໃຈຂອງຂໍ້ກະສິກໍາແບບມີສັນຍາ;
4. ແຕ່ລະກຸ່ມເລືອກເອົາຜູ້ຕາງໜ້າກຸ່ມ ຂຶ້ນນໍາສະເໜີຜົນການວິເຄາະຂອງກຸ່ມຕົນເອງ;
5. ຄູຝຶກບັນທຶກຈຸດສໍາຄັນຂອງແຕ່ລະກຸ່ມທີ່ໄດ້ນໍາສະເໜີ;
6. ສຸດທ້າຍ ຄູຝຶກສະຫຼຸບບົດຮຽນ ໂດຍອີງໃສ່ຫຼັກການ ດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈ ແລະ ເຊື່ອມໂຍງໃຫ້ເຂົ້າກັບບົດຮຽນຫົວຂໍ້ ກະສິກໍາແບບມີສັນຍາ. ການສະຫຼຸບບົດຮຽນ ແມ່ນສະເໜີຜ່ານພາວເວີພ້ອຍ ຫຼື ເຈ້ຍແຜ່ນໃຫຍ່.

## ຄໍາແນະນໍາສໍາລັບຄູຝຶກ

- ໃນເວລາແຕ່ລະກຸ່ມຂຶ້ນນໍາສະເໜີຜົນການວິເຄາະຂອງແຕ່ລະກຸ່ມ ຄູຝຶກຕ້ອງຈົດບັນທຶກເນື້ອໃນສໍາຄັນໄວ້ ເພື່ອນໍາເອົາມາສັງລວມ ແລະ ອະທິບາຍໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ເຖິງຈຸດດີ ແລະ ຈຸດອ່ອນ ຫຼື ຂໍ້ຄົງຄ້າງຂອງການເຮັດກະສິກໍາແບບມີສັນຍາຂອງພວກເຂົາໃນໄລຍະຜ່ານມາ ພ້ອມທັງແນະນໍາເຖິງບັນຫາ ທີ່ຊາວບ້ານຈະຕ້ອງເອົາໃຈໃສ່ເພີ່ມໃນການເຮັດກະສິກໍາແບບມີສັນຍາຄັ້ງໃໝ່ ຫຼື ຄັ້ງຕໍ່ໆໄປ;
- ຄູຝຶກຕ້ອງສຶກສາ ແລະ ທໍາຄວາມເຂົ້າໃຈໃຫ້ລະອຽດກ່ຽວກັບເຄື່ອງມື ດ້ານບວກ, ດ້ານລົບ ແລະ ສິ່ງທີ່ໜ້າສົນໃຈ, ສາມາດຈໍາແນກໃຫ້ເຫັນເຖິງດ້ານບວກ ແລະ ດ້ານລົບຂອງກະສິກໍາແບບມີສັນຍາ ເຊິ່ງມັນຈະເປັນປັດໃຈທີ່ສໍາຄັນສະໜັບສະໜູນການຕັດສິນໃຈຂອງຊາວກະສິກອນວ່າຈະເຮັດສັນຍາ ຫຼື ບໍ່?
- ຖ້າຄູຝຶກເຫັນວ່າ ມີດ້ານລົບອອກມາຈາກການວິເຄາະ ຄູຝຶກຕ້ອງນໍາພາຜູ້ເຂົ້າຮ່ວມແກ້ໄຂດ້ານລົບ ເຊິ່ງຈຸດອ່ອນນັ້ນອາດຈະເຊື່ອມໂຍງກັບດ້ານກົດໝາຍ, ຂໍ້ມູນຂ່າວສານດ້ານການລົງທຶນ ແລະ ອື່ນໆ. ຖ້າຫາກກ່ຽວຂ້ອງກັບກົດໝາຍຈະຄົ້ນຫາກົດໝາຍນັ້ນຢູ່ໃສ ຫຼື ຖ້າກ່ຽວຂ້ອງກັບຂໍ້ມູນຈະເຂົ້າຫາຂໍ້ມູນນັ້ນໄດ້ແນວໃດ?

## 2.7. ເກມ 4 ຕົວເລກສ້າງສັນ

### ເວລາ 5 ນາທີ



### ຈຸດປະສົງ

ເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມລຶ້ງເຄີຍກັນ, ເປັນການບໍລິຫານຮ່າງກາຍ, ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມສົດຊື່ນ.

### ວິທີການ

- ຢືນລຽນເປັນ 2 ແຖວ ແລະ ປິ່ນໜ້າເຂົ້າຫາກັນ;
- ປະຕິບັດຕາມຄຳສັ່ງຂອງຄູຝຶກ;
- ໝົດທຸກຄົນຫຼິ້ນພ້ອມກັນ.

## ຂັ້ນຕອນ

1. ບອກຜູ້ເຂົ້າຮ່ວມຢືນລຽງກັນເປັນ ສອງ ແຖວຍາວ (ສະຫຼັບຍິງຊາຍ);
2. ໃຫ້ທັງສອງແຖວປິ່ນໜ້າເຂົ້າຫາກັນ ແລ້ວໃຫ້ແຕ່ລະຄູ່ທີ່ຢືນເຊິ່ງໜ້າກັນເປັນຄູ່ກັນ;
3. ຄູຝຶກອະທິບາຍກ່ຽວກັບ ກະຕິກາ ຂັ້ນຕອນຂອງການຫຼິ້ນເກມ:

   – ເມື່ອໄດ້ຍິນຄູຝຶກເວົ້າ ເລກ 1 ໃຫ້ແຕ່ລະຄູ່ຕົບມືທັງສອງເບື້ອງໃສ່ກັນ;
   – ເມື່ອໄດ້ຍິນຄູຝຶກເວົ້າ ເລກ 2 ໃຫ້ແຕ່ລະຄູ່ຍໍ້ເຂົ່າລົງ ແລ້ວ ຢືດໂຕຂຶ້ນຊື່ (ເຮັດໄວໆ);
   – ເມື່ອໄດ້ຍິນຄູຝຶກເວົ້າ ເລກ 3 ໃຫ້ແຕ່ລະຄູ່ໝູນອ້ອມຕົນເອງຢູ່ກັບທີ່;
   – ເມື່ອໄດ້ຍິນຄູຝຶກເວົ້າ ເລກ 4 ໃຫ້ແຕ່ລະຄູ່ກະໂດດຢູ່ກັບທີ່.

4. ຫຼັງຈາກຫຼິ້ນເກມໄດ້ປະມານ 4 ນາທີ ຄູຝຶກອະທິບາຍວິທີການຫຼິ້ນໃນຮູບແບບທີ່ແຕກຕ່າງເຊັ່ນ: ບາດນີ້ ເວລາຄູຝຶກເວົ້າວ່າ ໂດດ ຫຼື ປິ່ນອ້ອມໂຕ ຫຼື ຕົບມື ຫຼື ຍໍ້ເຂົ່າລົງ ແມ່ນໃຫ້ແຕ່ລະຄູ່ຢືນຢູ່ຄືເກົ່າ ບໍ່ເໜັງຕີງ (ຖ້າເປັນຕົວເລກຈຶ່ງປະຕິບັດຕາມກະຕິກາທີ່ກຳນົດໄວ້);
5. ເມື່ອຫຼິ້ນເກມແລ້ວ ຄູຝຶກຖາມຄວາມຮູ້ສຶກຂອງຜູ້ເຂົ້າຮ່ວມວ່າເປັນແນວໃດ, ໄດ້ຮຽນຮູ້ຫຍັງແດ່ຈາກເກມດັ່ງກ່າວ, ສຸດທ້າຍ ຄູຝຶກ ສະຫຼຸບຄວາມໝາຍຂອງເກມໃຫ້ຜູ້ເຂົ້າຮ່ວມຮັບຟັງ ແລະ ເຂົ້າໃຈ.

## ຄຳແນະນຳສຳລັບຄູຝຶກ

- ໃນເວລາອະທິບາຍກ່ຽວກັບວິທີການຫຼິ້ນເກມ ຄູຝຶກຕ້ອງຍົກຕົວຢ່າງ ຫຼື ສາທິດໃຫ້ເບິ່ງ ເພື່ອໃຫ້ແຕ່ລະຂັ້ນຕອນຈະແຈ້ງ ແລະ ບໍ່ອະທິບາຍຊໍ້າໄປຊໍ້າມາ ເພາະຈະເຮັດໃຫ້ຜູ້ເຂົ້າຮ່ວມສັບສົນ;
- **<u>ຂໍ້ຄວນລະວັງ</u>:** ຄົນທີ່ມີອາການວິນຫົວ, ເຈັບຕີນ, ແມ່ຍິງທີ່ຖືພາ ຫຼື ແມ່ຍິງໃສ່ເກີບສົ້ນສູງ ແມ່ນບໍ່ຄວນໃຫ້ຫຼິ້ນເກມນີ້ ເພາະມີຄວາມສ່ຽງທີ່ຈະລົ້ມລົງພື້ນ. ສ່ວນຜູ້ອື່ນໆທີ່ໄດ້ຫຼິ້ນເກມນີ້ ເວລາກະໂດດແມ່ນບໍ່ໃຫ້ໂດດສູງຫຼາຍ ແລະ ໃຫ້ລະວັງຜູ້ຢູ່ອ້ອມຂ້າງ ເພື່ອບໍ່ໃຫ້ແຂນສອກໄປຕຳເອົາຜູ້ອື່ນ.

## 2.8. ການເຈລະຈາຕໍ່ລອງ

**ເວລາ: 60 ນາທີ**



### ຈຸດປະສົງ:

ເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມຮູ້ ແລະ ໝັ້ນໃຈ ທີ່ຈະນຳໃຊ້ທັກສະຕ່າງໆ ເຂົ້າໃນການເຈລະຈາຕໍ່ລອງ ກັບ ຄູ່ຮ່ວມສັນຍາ, ບຸກຄົນໃດໜຶ່ງ ຫຼື ບໍລິສັດໃດໜຶ່ງ.

### ວິທີການ

- ບົດບາດສົມມຸດ (ນັກລົງທຶນ, ຊາວບ້ານ, ຜູ້ສັງເກດການ)
- ຕັ້ງຄຳຖາມ ແລະ ສົນທະນາໃນກຸ່ມໃຫຍ່;
- ຄູຝຶກອະທິບາຍລາຍລະອຽດ ກ່ຽວກັບການຫຼິ້ນບົດບາດສົມມຸດ ແບບມີສ່ວນຮ່ວມ;
- ແນະນຳໃຫ້ທັງສອງຝ່າຍສຶກສາຂໍ້ມູນ ຫຼື ເງື່ອນໄຂຂອງຝ່າຍກົງກັນຂ້າມໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້;
- ນຳໃຊ້ຂໍ້ມູນອົງປະກອບຂອງສັນຍາມາເປັນປັດໃຈຫຼັກໃນການເຈລະຈາຕໍ່ລອງ;
- ການຜ່ອນສັ້ນຜ່ອນຍາວ ເມື່ອເຫັນວ່າຄູ່ສັນຍາຂອງເຮົາມີທາງເລືອກທີ່ດີກວ່າ.

### ຂັ້ນຕອນ

- ຕັ້ງຄຳຖາມສົນທະນາກັບຜູ້ເຂົ້າຮ່ວມໃນກຸ່ມໃຫຍ່ວ່າ: ແມ່ນໃຜມີປະສົບການກ່ຽວກັບການເຈລະຈາຕໍ່ລອງ, ສຳພາດຜູ້ເຂົ້າຮ່ວມ ເພື່ອຄັດເອົາປະສົບການຂອງພວກເຂົາ (ເລີ່ມຈາກເລື່ອງທີ່ຕະຫຼົກ, ເຊັ່ນວ່າ ເຂົາເຈົ້າເຈລະຈາກັບໝູ່ຄູ່ ຫຼື ຄົນໃນຄອບຄົວຂອງເຂົາເຈົ້າໃນບັນຫາ ຫຼື ປະເດັນໃດໜຶ່ງໃນຊີວິດ

ປະຈຳວັນເປັນຄືແນວໃດ ຫຼື ປະສົບການໃນການໄປຊື້ເຄື່ອງນຳແມ່ຄ້າຢູ່ຕະຫຼາດ ໂດຍສະເພາະ ເລື່ອງການຕໍ່ລອງຂໍຫຼຸດລາຄາເຄື່ອງ):

– ແມ່ນໃຜມີປະສົບການກ່ຽວກັບການເຈລະຈາຕໍ່ລອງມາກ່ອນ?
– ພວກເຮົາຄວນມີການກະກຽມໂຕແນວໃດແດ່?
– ພວກເຮົາຄວນຈະກຽມຫຍັງແດ່ກ່ອນການເຈລະຈາ?

- ຫຼັງຈາກນັ້ນຖາມຄືນວ່າເຂົາເຈົ້າເຄີຍເຈລະຈາກັບຄູ່ຮ່ວມສັນຍາກ່ຽວກັບກະສິກຳແນວໃດ?
- ຄູຝຶກສະເໜີນິຍາມ ການເຈລະຈາຕໍ່ລອງ ຕາມທິດສະດີ ບັດນາ (BATNA) ມີຄວາມໝາຍເຕັມວ່າ: Best Alternative to a Negotiated Agreement ຫຼື ເປັນພາສາລາວເອີ້ນວ່າ ທາງເລືອກທີ່ດີທີ່ສຸດ ໃນການເຈລະຈາ.

## ຄຳແນະນຳສຳລັບຄູຝຶກ

ເລີ່ມຕົ້ນການສົນທະນາ ດ້ວຍການຍົກເອົາການເຈລະຈາທີ່ເປັນເລື່ອງຕະຫຼົກ ແລະ ມ່ວນ ເຊັ່ນວ່າ ການຕົກລົງກັນກິນເຝີ ກັບໝູ່ (ເມື່ອໃດ, ຢູ່ໃສ, ແມ່ນໃຜເປັນຄົນຈ່າຍຮອບທຳອິດ, ແມ່ນໃຜເປັນຄົນຊື້ຮອບຕໍ່ໄປ, ພວກເຂົາຮູ້ສຶກແນວໃດ? ຖ້າຜູ້ໃດຜູ້ໜຶ່ງ ບໍ່ເຄີຍແບ່ງປັນ ແລະ ມີແຕ່ເປັນຝ່າຍຮັບ).

ໃນການສະແດງບົດບາດສົມມຸດໃນຫົວຂໍ້ຝຶກອົບຮົມນີ້, ຖ້າຫາກເປັນການຝຶກອົບຮົມແບບຕໍ່ເນື່ອງຈາກຫົວຂໍ້: ກະສິກຳແບບມີສັນຍາ, ຄູຝຶກຄວນແນະນຳວ່າ ການສະແດງ ບົດບາດສົມມຸດໃນການເຈລະຈາຕໍ່ລອງ ແມ່ນໃຫ້ອີງໃສ່ເຫດການ ຫຼື ປະເດັນທີ່ເກີດຂຶ້ນພາຍຫຼັງທີ່ເຊັນສັນຍາແລ້ວເຊັ່ນ: ການສະເໜີໃຫ້ມີການປັບປຸງ ຫຼື ປ່ຽນເນື້ອໃນຂອງສັນຍາໂດຍຄູ່ສັນຍາຝ່າຍໃດຝ່າຍໜຶ່ງ, ການທີ່ຄູ່ສັນຍາຝ່າຍໃດຝ່າຍໜຶ່ງບໍ່ມີຄວາມຈິງໃຈໃນການປະຕິບັດສັນຍາ ຫຼື ບໍ່ສາມາດປະຕິບັດສັນຍາໄດ້, ການບໍ່ລົງລອຍກັນເລື່ອງຂໍ້ຂັດແຍ່ງພາຍຫຼັງທີ່ມີການເຊັນສັນຍາແລ້ວ ຫຼື ບໍ່ໄດ້ລະບຸກ່ຽວກັບວິທີການແກ້ໄຂຂໍ້ຂັດແຍ່ງໄວ້ໃນສັນຍາ. ເພື່ອບໍ່ໃຫ້ຊ້ຳກັບບົດບາດສົມມຸດໃນຫົວຂໍ້ຝຶກອົບຮົມ: ຂໍ້ຜູກພັນສັນຍາການຜະລິດກະສິກຳ..

ຄູຝຶກຕ້ອງສັງລວມຄືນອີກຄັ້ງໜຶ່ງກ່ຽວກັບຂໍ້ຄວນລະວັງ ແລະ ສິ່ງທີ່ຄວນເອົາໃຈໃສ່ ບໍ່ໃຫ້ຕົກທ່າຮັບໃນການເຈລະຈາຕໍ່ລອງວ່າ ຄວນຄຳນຶງເຖິງຫຍັງແດ່ໂດຍສະເພາະແມ່ນ:

- ຕ້ອງໝັ້ນໃຈວ່າຕົນໄດ້ໃຊ້ສິດຂອງຕົນເອງຢ່າງຄົບຖ້ວນໃນການຮ່າງສັນຍານັ້ນ;
- ສັນຍາທີ່ຈະເຊັນກັນນັ້ນ ຕ້ອງໄປຈົດທະບຽນສານ ນຳອົງການທະບຽນສານ (ສາມາດຈົດທະບຽນສານ ຢູ່ກົມທະບຽນສານ ກະຊວງຍຸຕິທຳ ຫຼື ຂະແໜງທະບຽນສານ ພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ ຫຼື ໜ່ວຍງານທະບຽນສານ ຫ້ອງການຍຸຕິທຳຂັ້ນເມືອງ) ທຸກໆສັນຍາ ເພື່ອຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ;

- ເພື່ອຮັບປະກັນບໍ່ໃຫ້ເກີດມີຂໍ້ຫຍຸ້ງຍາກໃນຂະບວນການແກ້ໄຂຂໍ້ຂັດແຍ່ງຕ້ອງລະບຸກ່ຽວກັບວິທີການ ແລະ ຂະບວນການແກ້ໄຂໄວ້ໃນສັນຍາ ເມື່ອເກີດມີຂໍ້ຂັດແຍ່ງແມ່ນອີງໃສ່ຂໍ້ກຳນົດໃນສັນຍາຫຼັກ
- ສັນຍາທີ່ເຊັນກັນແລ້ວນັ້ນຕ້ອງສຳເນົາໄວ້ສຳລັບຄູ່ສັນຍາທັງສອງຝ່າຍ ແລະ ອີກໜຶ່ງສະບັບແມ່ນເກັບໄວ້ນຳເຈົ້າໜ້າທີ່ທະບຽນສານບ່ອນທີ່ໄປຈົດທະບຽນສັນຍານັ້ນ.
- ເອກະສານສັນຍານັ້ນຕ້ອງເກັບຮັກສາໄວ້ໃຫ້ດີຮັບປະກັນບໍ່ໃຫ້ສູນຫາຍ.

## 2.9. ເກມ: ດຶງທ່ອນເຈ້ຍ

**ເວລາ 15 ນາທີ**



### ຈຸດປະສົງ

- ເພື່ອເປັນການສ້າງບັນຍາກາດ ແລະ ຜ່ອນຄາຍ, ພ້ອມດຽວກັນນັ້ນ ຍັງເປັນການສອດແຊກບົດຮຽນໄປຄວບຄູ່ກັບການຫຼິ້ນເກມ;
- ໃນເກມຈະສະແດງໃຫ້ເຫັນເຖິງຫຼາກຫຼາຍມູມມອງເຊັ່ນ: ການເອົາປຽບ, ການແຂ່ງຂັນ, ການກົດດັນຜູ້ທີ່ດ້ອຍກວ່າ, ການປະນີປະນອມ, ການເສີມສ້າງມິດຕະພາບ ແລະ ການເປັນຄູ່ຮ່ວມງານທີ່ດີ.

### ວິທີການ

- ໃຊ້ເຈ້ຍຂາວແຜ່ນໃຫຍ່ (A0) ເພື່ອໃຫ້ຜູ້ເຂົ້າຮ່ວມກໍ້າເປັນທ່ອນເຈ້ຍ;
- ຜູ້ເຂົ້າຮ່ວມທັງໝົດສາມາດຫຼິ້ນພ້ອມກັນ.

## ຂັ້ນຕອນ

1) ໃຫ້ຜູ້ເຂົ້າຮ່ວມຈັບເປັນຄູ່ (ມີເວລາ 5 ນາທີສໍາລັບຫຼິ້ນເກມ).
2) ຄູຝຶກແນະນໍາໃຫ້ແຕ່ລະຄູ່ ເອົາເຈ້ຍ ໜຶ່ງໃບມາກໍ້າເປັນທ່ອນ (ແຕ່ລະຄູ່ຈະໄດ້ທ່ອນເຈ້ຍ 1 ທ່ອນ). ເພື່ອຫຼິ້ນເກມນີ້ ແຕ່ລະຄູ່ຈະຕ້ອງປະສານງານກັນ, ມີຄວາມເຂົ້າໃຈ ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ. ຈຸດປະສົງຂອງການຫຼິ້ນເກມນີ້ ແມ່ນເພື່ອເຊື່ອມໂຍງ ແລະ ອະທິບາຍໃຫ້ເຂົ້າໃຈເຖິງສາຍສໍາພັນລະຫວ່າງ ຊາວບ້ານ (ຊາວກະສິກອນ) ແລະ ຄູ່ຮ່ວມສັນຍາ.
3) ເລີ່ມຫຼິ້ນເກມ ໂດຍແມ່ນຄູຝຶກເປັນຜູ້ອອກຄໍາສັ່ງແຕ່ລະຂັ້ນຕອນຄື:
   - ຂັ້ນຕອນທີ 1: ໃຫ້ຜູ້ໜຶ່ງເປັນຜູ້ນໍາພາ;
   - ຂັ້ນຕອນທີ 2: ໃຫ້ຜູ້ຕາມເປັນຜູ້ນໍາພາ;
   - ຂັ້ນຕອນທີ 3: ໃຫ້ທັງສອງເປັນຜູ້ນໍາ ແລະ ຜູ້ຕາມໃນເວລາດຽວກັນ.
4) ເມື່ອຫຼິ້ນເກມແລ້ວໆ, ຄູຝຶກຕັ້ງຄໍາຖາມລຸ່ມນີ້ ເພື່ອເປັນການທວນຄືນຜົນໄດ້ຮັບຈາກການຫຼິ້ນເກມ:
   - ເວລາທີ່ທ່ານເປັນຜູ້ນໍາພາ ທ່ານຮູ້ສຶກແນວໃດ?
   - ທ່ານນໍາພາແນວໃດ ເພື່ອໃຫ້ ຜູ້ຕາມເຂົ້າໃຈງ່າຍ ແລະ ສາມາດເຮັດວຽກກັບທ່ານໄດ້?
   - ເວລາທ່ານເປັນຜູ້ຕາມ ທ່ານຮູ້ສຶກແນວໃດ?
   - ເວລາທີ່ມີການປ່ຽນຜູ້ນໍາຜູ້ຕາມຫຼາຍໆຄັ້ງ ທ່ານຮູ້ສຶກແນວໃດ?
   - ທ່ານມີການຕອບສະໜອງຕໍ່ການປ່ຽນແປງດັ່ງກ່າວແນວໃດ?
   - ມັນໄດ້ສະທ້ອນໃຫ້ທ່ານເຫັນບໍ່ວ່າ ພວກທ່ານຄວນຈະເຮັດວຽກນໍາກັນແນວໃດ ໃນເມື່ອທັງສອງເປັນຜູ້ນໍາ ແລະ ຜູ້ຕາມໃນເວລາດຽວກັນ?
   - ເກມນີ້ຈະເປັນໄປໃນຮູບແບບໃດ ຖ້າພວກເຮົາບໍ່ຟັງ ຫຼື ບໍ່ພະຍາຍາມເຂົ້າໃຈອີກຝ່າຍ?
   - ແມ່ນຫຍັງເປັນບົດຮຽນຈາກເກມນີ້ ກ່ຽວກັບການເຈລະຈາ?
   - ການຮັກສາສາຍພົວພັນເມື່ອເຮັດວຽກນໍາກັນຄວນເຮັດແນວໃດ?

## 2.10. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນທາງດ້ານກະສິກຳ

### 2.10.1. ການກະກຽມຕົວໃນເວລາພົບບັນຫາກ່ຽວກັບການລົງທຶນ

#### ອຸປະກອນ ແລະ ເຄື່ອງມື

- ໂປດສະເຕີ ແລະ ວີດີໂອ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ
- ຕົວຢ່າງ ຮ່າງສັນຍາ

#### ເວລາ 20 ນາທີ





#### ຈຸດປະສົງ

- ເພື່ອໃຫ້ຜູ້ເຂົ້າຮ່ວມຮັບຮູ້ເຖິງສິ່ງທີ່ຕົນເອງຈະຕ້ອງກະກຽມເມື່ອເກີດມີບັນຫາ ແລະ ຊອກຫາຜູ້ທີ່ຈະສາມາດຊ່ວຍເຫຼືອ;
- ເພື່ອເປັນການເລີ່ມຕົ້ນເຂົ້າສູ່ຫົວຂໍ້ການແກ້ໄຂຂໍ້ຂັດແຍ່ງ ແລະ ໃຫ້ຜູ້ເຂົ້າຮ່ວມໄດ້ມີເວລາຄິດກ່ຽວກັບການກຽມຄວາມພ້ອມ.

#### ການກະກຽມ

- ສົນທະນາກັບຜູ້ເຂົ້າຮ່ວມກ່ຽວກັບສິ່ງທີ່ຊາວບ້ານຄວນຕ້ອງກຽມພ້ອມທີ່ຂາດບໍ່ໄດ້ມີຫຍັງແດ່?
- ຕ້ອງເບິ່ງວ່າຊາວບ້ານມີເອກະສານສັນຍາທີ່ເຊັນຮ່ວມກັບນັກລົງທຶນ ຫຼື ບໍ່? ຖ້າມີໃບສັນຍານັ້ນຢູ່ໃສ?
- ໃນເວລາເຊັນສັນຍາແມ່ນມີພາກສ່ວນໃດແດ່ເຂົ້າຮ່ວມ?

## ຄຳແນະນຳສຳລັບຄູຝຶກ

- ຄູຝຶກຕ້ອງໄດ້ສຶກສາກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ມາດຕາ 94, 95 ແລະ 97.
- ຄູຝຶກຕ້ອງສຶກສາກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເລກທີ 51/ສພຊລົງວັນທີ 22 ມິຖຸນາ 2018, ມາດຕາ 2, 17, 18, 19, 20 ແລະ ມາດຕາ 21;
- ຄູຝຶກຕ້ອງສຶກສາ ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018 ມາດຕາ 393;
- ຄູຝຶກຕ້ອງໝັ້ນໃຈວ່າໄດ້ກຽມຕົວຢ່າງຮ່າງສັນຍາ, ໂປດສະເຕີ, ວີດີໂອທີ່ກ່ຽວຂ້ອງ ເພື່ອມາປະກອບໃນການອະທິບາຍຫົວຂໍ້ດັ່ງກ່າວ.

## 2.10.2. ຊ່ອງທາງໃນການແກ້ໄຂຂໍ້ຂັດແຍ່ງ

### ເວລາ: 30 ນາທີ




## ຈຸດປະສົງ:

- ເພື່ອໃຫ້ຜູ້ເຂົ້າຮ່ວມຮັບຮູ້ ແລະ ເຂົ້າໃຈວິທີການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນທາງດ້ານກະສິກຳ; ເຂົ້າໃຈຂັ້ນຕອນການແກ້ໄຂທີ່ລະບຸໄວ້ໃນກົດໝາຍ;
- ແນະນຳທາງເລືອກໃນການແກ້ໄຂຂໍ້ຂັດແຍ່ງໃຫ້ກັບຊາວກະສິກອນໄດ້ຮັບຮູ້ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້ ໂດຍອີງຕາມຊ່ອງທາງ ແລະ ຂະບວນການທາງກົດໝາຍໄດ້ຫຼາຍວິທີ.

## ອຸປະກອນ ແລະ ເຄື່ອງມື

- ວີດີໂອ ການແກ້ໄຂຂໍ້ຂັດແຍ່ງ;
- ໂປດສະເຕີການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ;

## ວິທີການ

- ໃຊ້ເຕັກນິກການສົນທະນາແບບເປັນກຸ່ມ
- ວິດີໂອ, ໂປດສະເຕີ ແລະ ບົດນຳສະເໜີ
- ຮ່າງຕົວຢ່າງສັນຍາ

## ຂັ້ນຕອນ

- ສົນທະນາໃນກຸ່ມໃຫຍ່ ເພື່ອເປັນການເລີ່ມຕົ້ນເຂົ້າສູ່ຫົວຂໍ້ການແກ້ໄຂຂໍ້ຂັດແຍ່ງ ແລະ ໃຫ້ຜູ້ເຂົ້າຮ່ວມໄດ້ມີເວລາຄິດກ່ຽວກັບບັນຫາຂໍ້ຂັດແຍ່ງ ດ້ວຍການຕັ້ງຄຳຖາມສົນທະນາກັບຜູ້ເຂົ້າຮ່ວມທີ່ຮັບບົດເປັນຊາວບ້ານວ່າ:
  - ຜ່ານມາທ່ານເຄີຍພົບບັນຫາກ່ຽວກັບການລົງທຶນທາງດ້ານກະສິກຳຫຼືບໍ່?
  - ລາຍລະອຽດຂອງບັນຫານັ້ນມີຄືແນວໃດ?
  - ພວກທ່ານແກ້ໄຂບັນຫາແນວໃດ? ໃຜເຂົ້າມາຊ່ວຍໃນການແກ້ໄຂບັນຫາ?
- ຄູຝຶກນຳສະເໜີການສົນທະນາແບບສະພາກາເຟກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງ ແລະ ອະທິບາຍໃຫ້ກັບກຸ່ມຜູ້ເຂົ້າຮ່ວມໄດ້ເຂົ້າໃຈເປັນເອກະພາບວ່າ ເຕັກນິກການສົນທະນາແບບສະພາກາເຟແມ່ນຄ້າຍຄືກັນການຫຼິ້ນບົດບາດສົມມຸດ;
- ຄູຝຶກແນະນຳວິທີການສົນທະນາ ກ່ອນທີ່ຈະມີການສາທິດຕົວຈິງ ວິທີການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍ, ດ້ວຍວິທີການທາງດ້ານບໍລິຫານ, ໂດຍອີງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ດ້ວຍການຮ້ອງຟ້ອງຕໍ່ສານ ຊຶ່ງຄູຝຶກຈະຕ້ອງໄດ້ອະທິບາຍລະອຽດກ່ຽວກັບທີ່ໄປທີ່ມາ ແລະ ຄວາມກ່ຽວພັນກັບບົດບາດໜ້າທີ່ໃນການແກ້ໄຂຂໍ້ຂັດແຍ່ງຂອງແຕ່ລະວິທີການແກ້ໄຂ ໃຫ້ມີຄວາມກະຈ່າງແຈ້ງ ພ້ອມທັງແນະນຳໃຫ້ຜູ້ເຂົ້າຮ່ວມບັນທຶກກ່ຽວກັບບັນດາພາກສ່ວນທີ່ກ່ຽວຂ້ອງໃນການແກ້ໄຂຂໍ້ຂັດແຍ່ງວ່າ ມີພາກສ່ວນໃດແດ່?
- ນຳສະເໜີ ວິດີໂອການແກ້ໄຂຂໍ້ຂັດແຍ່ງກ່ຽວກັບກະສິກຳແບບມີສັນຍາ (5 ນາທີ) ເພື່ອເປັນການທວນຄືນຄວາມຈື່ຈຳ ແລະ ຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມ. ຄູຝຶກແນະນຳຜູ້ເຂົ້າຮ່ວມວ່າ: ໃນຂະນະທີ່ຜູ້ເຂົ້າຮ່ວມກຳລັງເບິ່ງວິດີໂອ ໃຫ້ເຂົາເຈົ້າຕິດຕາມເບິ່ງວ່າໄດ້ມີການກ່າວເຖິງບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການແກ້ໄຂຂໍ້ຂັດແຍ່ງທີ່ເຂົາເຈົ້າຈົດບັນທຶກໄວ້ນັ້ນໃນວິດີໂອ ຫຼື ບໍ່?;
- ນຳສະເໜີມາດຕາຕ່າງໆຂອງກົດໝາຍທີ່ກ່ຽວຂ້ອງເປັນຕົ້ນແມ່ນ ປະມວນກົດໝາຍແພ່ງ, ກົດໝາຍວ່າດ້ວຍທີ່ດິນ ແລະ ດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງ. ແນະນຳໃຫ້ຜູ້ເຂົ້າຮ່ວມໃຊ້ເວລາຍ່າງສຶກສາເບິ່ງໂປດສະເຕີ ການແກ້ໄຂຂໍ້ຂັດແຍ່ງທີ່ຕິດໄວ້ໃນຫ້ອງຝຶກອົບຮົມ;
- ຄູຝຶກແນະນຳໃຫ້ຜູ້ເຂົ້າຮ່ວມນັ່ງປະຈຳທີ່ ແລະ ນຳພາສົນທະນາກ່ຽວກັບທາງເລືອກອື່ນໆ ໃນການເຂົ້າເຖິງຂະບວນການຍຸຕິທຳໂດຍການຕັ້ງຄຳຖາມສົນທະນາຂຶ້ນມາວ່າ: ນອກຈາກຂະບວນການທີ່ກ່າວ

ມາ ຂ້າງເທິງແລ້ວ ທ່ານຄິດວ່າຍັງມີຊ່ອງທາງອື່ນອີກບໍ່ ໃນການເຂົ້າເຖິງ ຂະບວນການຍຸຕິທຳ ຫຼື ວ່າໝົດພຽງເທົ່ານັ້ນ. ໃຊ້ເວລາໃນການສົນທະນາຫົວຂໍ້ດັ່ງກ່າວປະມານ 10 ນາທີ ກ່ອນທີ່ຈະນຳສະເໜີຊ່ອງທາງອື່ນຜ່ານບົດນຳສະເໜີ.

## ຄຳແນະນຳສຳລັບຄູຝຶກ

- ໃນເວລາຕັ້ງຄຳຖາມສົນທະນາໃນກຸ່ມໃຫ່ຍຖ້າຄູຝຶກສັງເກດເຫັນວ່າຜູ້ເຂົ້າຮ່ວມບໍ່ສາມາດຍົກປະເດັນຂຶ້ນມາສົນທະນາໄດ້ ຄູຝຶກຈະຕ້ອງໄດ້ໃຊ້ຄຳຖາມອື່ນທີ່ມີລັກສະນະເປີດ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຄົ້ນຄິດເຖິງບັນຫາທີ່ກ່ຽວຂ້ອງກັບຄຳຖາມນັ້ນ;
- ໃນເວລາສົນທະນາກ່ຽວກັບການແກ້ໄຂບັນຫາ ຫຼື ຂໍ້ຂັດແຍ່ງ ຄູຝຶກຕ້ອງບັນທຶກຄຳຕອບຂອງຜູ້ເຂົ້າຮ່ວມໄວ້ໃນເຈ້ຍແຜ່ນໃຫ່ຍ ເພື່ອປຽບທຽບໃຫ້ຜູ້ເຂົ້າຮ່ວມໄດ້ເຫັນໃນເວລາທີ່ນຳສະເໜີຄຳຕອບທີ່ເປັນບ່ອນອີງທາງດ້ານກົດໝາຍ;
- ຄູຝຶກສະເໜີ ກ່ຽວກັບຊ່ອງທາງການເຂົ້າເຖິງຂະບວນການຍຸຕິທຳ ດ້ວຍການສະເໜີ, ການຮ້ອງຟ້ອງ ແລະ ການຮ້ອງຂໍຄວາມເປັນທຳ ແລະ ອະທິບາຍລະອຽດວ່າ ແຕ່ລະຊ່ອງທາງມີຄວາມໝາຍ ແລະ ຄວາມຕໍ່ເນື່ອງກັນແບບໃດໃນການແກ້ໄຂຂໍ້ຂັດແຍ່ງ? ຈະຕ້ອງໄດ້ແກ້ໄຂຕາມຂັ້ນຕອນເຫຼົ່ານີ້ ບໍ່? ສຳຄັນທີ່ສຸດແມ່ນໃຫ້ອະທິບາຍຕາມກົດໝາຍທີ່ກ່ຽວຂ້ອງເປັນຕົ້ນແມ່ນ ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ.

## 2.10.3. ທາງເລືອກອື່ນໆໃນການເຂົ້າເຖິງຂະບວນການຍຸຕິທຳ

**ເວລາ 15 ນາທີ**

## ຈຸດປະສົງ

ເພື່ອສະໜອງຂໍ້ມູນທີ່ຫຼາກຫຼາຍກ່ຽວກັບຊ່ອງທາງໃນການເຂົ້າເຖິງຂະບວນການຍຸຕິທຳໃຫ້ຜູ້ເຂົ້າຮ່ວມ ຮູ້ວິທີການເຂົ້າເຖິງບັນດາຊ່ອງທາງເຫຼົ່ານັ້ນ.

## ອຸປະກອນ ແລະ ເຄື່ອງມື

ໂປດສະເຕີ, ເບີໂທລະສັບສາຍດ່ວນ.

## ວິທີການ

ສົນທະນາເປັນກຸ່ມ

## ຂັ້ນຕອນ

- ພາຍຫຼັງສິ້ນສຸດຫົວຂໍ້ການແກ້ໄຂຂໍ້ຂັດແຍ່ງໃຫ້ຜູ້ເຂົ້າຮ່ວມນັ່ງເປັນວົງມົນໃຫ່ຍ ແລະ ນຳພາສົນທະນາ ໂດຍຕັ້ງຄຳຖາມດັ່ງນີ້:
  - ພວກທ່ານຄິດວ່າ ນອກຈາກການແກ້ໄຂຂໍ້ຂັດແຍ່ງຕາມວິທີການຕ່າງໆທີ່ກ່າວມາຂ້າງເທິງນັ້ນ ພວກທ່ານຄິດວ່າຍັງມີຊ່ອງທາງອື່ນອີກ ບໍ່? ຖ້າມີ, ມີຊ່ອງທາງໃດແດ່?
  - ໃນກໍລະນີທີ່ທ່ານບໍ່ຮູ້ກົດໝາຍ ຫຼື ບໍ່ຮູ້ຈັກຂັ້ນຕອນໃນການເຂົ້າເຖິງຂະບວນການຍຸຕິທຳ ທ່ານຄິດວ່າມີໜ່ວຍງານໃດແດ່ທີ່ໃຫ້ການຊ່ວຍເຫຼືອ?
  - ທ່ານຄິດວ່າມີໜ່ວຍງານ ທີ່ໃຫ້ບໍລິການໂດຍບໍ່ເສຍຄ່າບໍ່?
- ໃນເວລາທີ່ມີການສົນທະນາກຸ່ມໃຫ່ຍ ຄູຝຶກຕ້ອງຕິດຕາມຢ່າງລະອຽດ ແລະ ຈົດບັນທຶກທຸກຄຳຕອບຂອງຜູ້ເຂົ້າຮ່ວມໃສ່ເຈ້ຍແຜ່ນໃຫ່ຍ;
- ສຸດທ້າຍຄູຝຶກນຳສະເໜີບັນດາໜ່ວຍງານ, ອົງການທີ່ເປັນຊ່ອງທາງ ອື່ນໆ ໃນການເຂົ້າເຖິງຂະບວນການຍຸຕິທຳ ຊຶ່ງ ປະຊາຊົນ ຫຼື ຊາວກະສິກອນສາມາດ ຮ້ອງຂໍຄວາມຊ່ວຍເຫຼືອໄດ້ທຸກເວລາ ໃນກໍລະນີທີ່ມີບັນຫາ ຫຼື ບໍ່ຮູ້ຊ່ອງທາງໃນການແກ້ໄຂບັນຫາ;
- ໃນເວລາຄູຝຶກນຳສະເໜີບັນດາໜ່ວຍງານ ແລະ ການຈັດຕັ້ງ ທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ຄູຝຶກຕ້ອງອະທິບາຍລະອຽດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ວ່າ ມີໜ່ວຍງານ ແລະ ການຈັດຕັ້ງເຫຼົ່ານັ້ນ ທີ່ໃຫ້ການຊ່ວຍເຫຼືອ ພ້ອມທັງຍົກເອົາບ່ອນອີງທາງດ້ານກົດໝາຍມານຳສະເໜີ ເພື່ອສ້າງຄວາມໝັ້ນໃຈ ແລະ ຄວາມໜ້າເຊື່ອຖືໃຫ້ກັບຜູ້ເຂົ້າຮ່ວມ.

## ຄຳແນະນຳສຳລັບຄູຝຶກ

1. ຄູຝຶກຕ້ອງໄດ້ສຶກສາ ກົດໝາຍວ່າດ້ວຍ ທະນາຍຄວາມ ສະບັບເລກທີ 64/ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 2, 4, 22,31
2. ຄູຝຶກຕ້ອງໄດ້ສຶກສາ ກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ສະບັບເລກທີ 08/ ສພຊ, ລົງວັນທີ 22 ຕຸລາ 2004, ມາດຕາ 18, 19.
3. ຄູຝຶກຕ້ອງໄດ້ສຶກສາ ກົດໝາຍວ່າດ້ວຍ ກຳມະບານລາວ ສະບັບເລກທີ 39/ສພຊ, ລົງວັນທີ 15 ພະຈິກ 2017, ມາດຕາ 1, 2, 12 ຂໍ້ 4 ແລະ ມາດຕາ 44.
4. ຄູຝຶກຕ້ອງໄດ້ສຶກສາ ກົດໝາຍວ່າດ້ວຍ ແນວລາວສ້າງຊາດ ເລກທີ 01/ສພຊ, ລົງວັນທີ 8 ກໍລະກົດ 2018, ມາດຕາ 9;
5. ສຳລັບສາຍດ່ວນຂອງລັດຖະບານ ແລະ ສະພາແຫ່ງຊາດ ຄູຝຶກຕ້ອງແນະນຳຜູ້ເຂົ້າຮ່ວມຮູ້ວ່າສາຍດ່ວນຂອງສະພາແຫ່ງຊາດ ສາມາດໂທເຂົ້າໄດ້ກໍ່ຕໍ່ເມື່ອມີກອງປະຊຸມຂອງສະພາແຫ່ງຊາດເທົ່ານັ້ນ, ສ່ວນສາຍດ່ວນຂອງລັດຖະບານ ແລະ ສາຍດ່ວນປົກປ້ອງຜູ້ຊົມໃຊ້ແມ່ນໂທໄດ້ຕະຫຼອດໃນໂມງລັດຖະການ ໂດຍບໍ່ເສຍຄ່າໂທ.

## ຊ່ອງທາງອື່ນໆໃນການເຂົ້າເຖິງຂະບວນການຍຸຕິທຳ

- ຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ;
- ທະນາຍຄວາມອາສາສະໝັກໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ
- ບັນດາອົງການຈັດຕັ້ງມະຫາຊົນ:

  - ຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ

  - ສະຫະພັນກຳມະບານລາວ

  - ສະຫະພັນແມ່ຍິງລາວ.
- ສາຍດ່ວນຂອງໜ່ວຍງານຕ່າງໆເຊັ່ນ:

– 156 ສາຍດ່ວນຂອງສະພາແຫ່ງຊາດ;

– 1516 ສາຍດ່ວນຂອງລັດຖະບານ;

– 1510 ສາຍດ່ວນປົກປ້ອງຜູ້ຊົມໃຊ້.

– 1504 ສາຍດ່ວນສູນກາງແນວລາວສ້າງຊາດ

– 1362 ສາຍດ່ວນ ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ

# 3. ພາກສະຫຼຸບ ແລະ ກະກຽມລົງບ້ານ

## 3.1. ທວນຄືນບົດຮຽນການຝຶກອົບຮົມ

### ອຸປະກອນ ແລະ ເຄື່ອງມື

ສາຍນ້ຳຂອງຫຼັກສູດ

### ເວລາ 60 ນາທີ




### ຈຸດປະສົງ

ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ທົບທວນບົດຮຽນ ແລະ ຄວາມເຂົ້າໃຈໃນການຮຽນຮູ້ກ່ຽວກັບການລົງທຶນທາງດ້ານກະສິກຳດ້ວຍຄວາມຮັບຜິດຊອບແຕ່ຕົ້ນຈົນຈົບຫຼັກສູດ.

### ວິທີການ

- ນຳໃຊ້ເຄື່ອງມື ສາຍນ້ຳຂອງຫຼັກສູດ;
- ອະທິບາຍວິທີການທົບທວນການຝຶກອົບຮົມໂດຍໃຊ້ສາຍນ້ຳຂອງຫຼັກສູດ;
- ອະທິບາຍພາບລວມຂອງເນື້ອໃນຄູ່ມື ແລະ ເນັ້ນຈຸດສຳຄັນທີ່ຕ້ອງການໃຫ້ຜູ້ເຂົ້າຮ່ວມເຂົ້າໃຈເປັນພິເສດ;
- ແຈກຢາຍປື້ມຄູ່ມືປະກອບການຝຶກອົບຮົມ.

## ຂັ້ນຕອນ

1) ຄູຝຶກຕັ້ງຄຳຖາມເຊັ່ນວ່າ: ພວກເຮົາໄດ້ຮຽນຫຍັງແດ່, ເຄື່ອງມື ແລະ ວິທີການໃດທີ່ທ່ານຈະນຳເອົາໄປໃຊ້ໄດ້ງ່າຍ ແລະ ອັນໃດຈະນຳເອົາໄປໃຊ້ໄດ້ຍາກ, ຍ້ອນຫຍັງ?;
2) ຄູຝຶກນຳສະເໜີຮູບຕົວຢ່າງສາຍນ້ຳຂອງຫຼັກສູດ (40 ນາທີ).
3) ອະທິບາຍອົງປະກອບສຳຄັນ ທີ່ ສາມາດຂຽນລົງໃສ່ສາຍນ້ຳຂອງຫຼັງສູດ;
4) ແບ່ງຜູ້ເຂົ້າຮ່ວມເປັນ 2 ຫຼື 3 ກຸ່ມ (ອີງໃສ່ຫົວຂໍ້) ໃຫ້ແຕ່ລະຄົນສົນທະນາທົບທວນບົດຮຽນທີ່ໄດ້ຮຽນຜ່ານມາຮ່ວມກັນວ່າມີຫຍັງແດ່, ເຄື່ອງມືໃດ, ຫົວຂໍ້ໃດ ແລະ ຂໍ້ມູນຕ່າງໆທີ່ໄດ້ຮຽນມາໃນ ສາມ ວັນນີ້;

5) ໃຫ້ແຕ່ລະກຸ່ມແຕ້ມຮູບສາຍນ້ຳຂອງຫຼັກສູດການຝຶກອົບຮົມ 3 ມື້; ສາຍນ້ຳຄວນຈະກວ້າງ ແລະ ປອດໂປ່ງ ຢູ່ບ່ອນທີ່ຈະນຳເອົາບົດຮຽນໄປໃຊ້ໄດ້ງ່າຍ ແລະ ສາຍນ້ຳຄວນຈະແຄບ ຢູ່ບ່ອນທີ່ມີອຸປະສັກໃນການຈະນຳເອົາບົດຮຽນໄປໃຊ້. ຜູ້ເຂົ້າຮ່ວມ ສາມາດແຕ້ມຮູບແຂ້ ຫຼື ກ້ອນຫີນ ຫຼື ສິ່ງກີດຂວາງອື່ນ ເພື່ອສະແດງເຖິງອຸປະສັກທີ່ມີໃນບົດຮຽນ, ຂຽນລາຍການ, ວິທີການນຳໃຊ້ຫຼັກສູດທີ່ທ່ານເຫັນ ຢູ່ໃນສາຍນ້ຳ ໃສ່ເຈ້ຍແຜ່ນໃຫຍ່.
6) ໃຫ້ແຕ່ລະກຸ່ມຢ່າງສັງເກດເບິ່ງສາຍນ້ຳ ແລະ ສົນທະນາວ່າ ອຸປະສັກທີ່ໃຫຍ່ທີ່ສຸດໃນການຈະນຳເອົາບົດຮຽນໄປໃຊ້ແມ່ນຫຍັງ ແລະ ອັນໃດທີ່ສາມາດເປັນໄປໄດ້ດີທີ່ສຸດ ຫຼື ອັນໃດຄື ວິທີການນຳໃຊ້ທີ່ດີທີ່ສຸດທີ່ທ່ານເຫັນໄດ້ຢູ່ໃນຫຼັກສູດນີ້.
7) ການຂຽນບັນທຶກ (ເວລາ 10 ນາທີ)
8) ທົບທວນບົດຮຽນຄືນທັງໝົດ ແລະ ສົນທະນາຖາມ - ຕອບຂໍ້ຂ້ອງໃຈ (ເວລາ 15 ນາທີ).

## ຄຳແນະນຳສຳລັບຄູຝຶກ

- ຄູຝຶກຈະຕ້ອງໄດ້ເນັ້ນໜັກຄືນປະເດັນທີ່ສຳຄັນ ທີ່ຜູ້ເຂົ້າຮ່ວມຄວນຈົດຈຳ ແລະ ເອົາໄປນຳໃຊ້ໃນວຽກງານຕົວຈິງ.
- ຄູຝຶກຄວນຖ່າຍຮູບເອົາສາຍນ້ຳຂອງຫຼັກສູດທີ່ສ້າງແລ້ວໄວ້ເປັນຂໍ້ສະເໜີແນະ ສຳລັບການຕິດຕາມກວດກາຫຼັກສູດການຝຶກອົບຮົມ;
- ຄູຝຶກຈະຕ້ອງໃຫ້ຜູ້ເຂົ້າຮ່ວມ ທົບທວນເບິ່ງລາຍການດັ່ງກ່າວ ແລະ ພິຈາລະນາວ່າ ມັນຍັງມີວິທີການນຳໃຊ້ທີ່ສຳຄັນ ແລະ ໃຊ້ໄດ້ດີກວ່ານີ້ອີກບໍທີ່ພວກເຮົາສາມາດເພີ່ມໃສ່ໃນລາຍການ;

## 3.2. ການສາທິດ ແລະ ການກະກຽມລົງບ້ານ

### ອຸປະກອນ ແລະ ເຄື່ອງມື

ເອກະສານ ແລະ ຊຸດເຄື່ອງມືທັງໝົດ

### ເວລາ 1 ຊົ່ວໂມງ 55 ນາທີ

**ການວາງແຜນແບບSMART**

| | |
|---|---|
| S | Specific ຫຼື ສະເພາະເຈາະຈົງ |
| M | Measurable ຫຼື ວັດແທກໄດ້ |
| A | Achievable ຫຼື ສາມາດເຮັດໄດ້ |
| R | Resources needed or Relevant ຫຼື ຊັບພະຍາກອນທີ່ຕ້ອງການ, ຄວາມສອດຄ່ອງ, |
| T | Timebound ຫຼື ມີກຳນົດເວລາ |

### ຈຸດປະສົງ

ເພື່ອກຽມຄວາມພ້ອມ, ບົດຮຽນ ແລະ ສ້າງຄວາມໝັ້ນໃຈໃຫ້ກັບທີມງານຜູ້ເຂົ້າຮ່ວມຝຶກອົບຮົມ ໃນການເຮັດໜ້າທີ່ເປັນຄູຝຶກ ຫຼື ການເປັນຜູ້ອຳນວຍຄວາມສະດວກ.

### ວິທີການ

ການເຮັດວຽກເປັນກຸ່ມ

### ຂັ້ນຕອນການກະກຽມ

- ຄູຝຶກແຈກຢາຍເອກະສານ ແລະ ຊຸດເຄື່ອງປະກອບການຝຶກອົບຮົມທັງໝົດໃຫ້ຜູ້ເຂົ້າຮ່ວມໄດ້ສຶກສາ ເບິ່ງລາຍລະອຽດເວລາ 5 ນາທີ;
- ໃຫ້ເວລາຜູ້ເຂົ້າຮ່ວມໃນການສົນທະນາແລກປ່ຽນ, ຖາມ - ຕອບຂໍ້ຂ້ອງໃຈ ກ່ຽວກັບເອກະສານ ແລະ ຊຸດເຄື່ອງມື 15 ນາທີ;

- ອະທິບາຍກ່ຽວກັບການວາງແຜນໂດຍໃຊ້ SMART ເວລາ 15 ນາທີ.
  - **S:** Specific- ຈະຕັ້ງຫົວຂໍ້ແນວໃດໃຫ້ສະເພາະເຈາະຈົງ ແລະ ເຂົ້າໃຈງ່າຍ;
  - **M:** Measurable- ແມ່ນຫຍັງຄືຕົວຊີ້ບອກວ່າກິດຈະກຳດຳເນີນໄປຕາມແຜນທີ່ວາງໄວ້;
  - **A:** Achievable- ແມ່ນຫຍັງທີ່ຈະເປັນຕົວຊີ້ບອກວ່າກິດຈະກຳເຮົາບັນລຸຕາມເປົ້າໝາຍ;
  - **R:** Resources needed ຈະໃຊ້ບຸກຄະລາກອນຈັກຄົນ, ຈະໃຊ້ງົບປະມານເທົ່າໃດ ແລະ ອຸປະກອນຫຍັງແດ່?
  - **T:** Timebound- ຈະໃຊ້ເວລາຫຼາຍປານໃດ?
- ແບ່ງກຸ່ມຜູ້ເຂົ້າຮ່ວມອອກເປັນ 3 ກຸ່ມ ແລ້ວໃຫ້ແຕ່ລະກຸ່ມວາງແຜນໃນການລົງຈັດຕັ້ງປະຕິບັດຢູ່ຂັ້ນບ້ານ ໂດຍນຳໃຊ້ແຜນ ແບບ SMART ຂຽນໃສ່ເຈ້ຍແຜ່ນໃຫຍ່ ແລະ ແບ່ງໜ້າທີ່ຮັບຜິດຊອບເພື່ອຝຶກຊ້ອມແລ້ວຂຶ້ນນຳສະເໜີ 30 ນາທີ;
- ໃຫ້ແຕ່ລະກຸ່ມຝຶກຊ້ອມ ແລະ ສາທິດຕົວຈິງ ຄູຝຶກເປັນຜູ້ຕິດຕາມ ແລະ ບັນທຶກກ່ຽວກັບຈຸດດີ ແລະ ຈຸດທີ່ຄວນປັບປຸງຂອງແຕ່ລະຄົນ 25 ນາທີ.

## 3.3. ການປະເມີນຕົນເອງຫຼັງການຝຶກອົບຮົມ

### ເວລາ 15 ນາທີ




### ຈຸດປະສົງ

ເພື່ອວັດລະດັບຄວາມຮູ້ຫຼັງຈາກການຝຶກອົບຮົມໃນຫົວຂໍ້ ການລົງທຶນທາງດ້ານກະສິກຳດ້ວຍຄວາມຮັບຜິດຊອບ ສໍາລັບຊາວກະສິກອນ ຜູ້ເຂົ້າຮ່ວມເຂົ້າໃຈກ່ຽວກັບເນື້ອໃນ, ເຄື່ອງມື ແລະ ວິທີການໃນການນຳສະເໜີຫົວຂໍ້ດັ່ງກ່າວມີການປ່ຽນແປງໜ້ອຍ-ຫຼາຍປານໃດ.

## ວິທີການ

ປະເມີນພັດທະນາການດ້ານຄວາມຮັບຮູ້ຫຼັງການຝຶກອົບຮົມ ແບບຄິດເປັນ ເປີເຊັນ

## ຂັ້ນຕອນ

1. ໃຫ້ຜູ້ເຂົ້າຮ່ວມຢືນລຽນແຖວວັດລະດັບຄວາມຮູ້ຕາມຕົວເລກເປີເຊັນ;
2. ຄູຝຶກຕັ້ງຄໍາຖາມເຖິງການປ່ຽນແປງ;
3. ຖ່າຍຮູບແລ້ວເອົາສົມທຽບກັບຮູບຖ່າຍມື້ທີ 1 (ປະເມີນກ່ອນການຝຶກອົບຮົມ);
   - ໃຫ້ຜູ້ເຂົ້າຮ່ວມໄປຢືນຢູ່ບ່ອນທີ່ຄູຝຶກໄດ້ກະກຽມປະເມີນຕົນເອງຕາມຄວາມເປັນຈິງ;
   - ຄູຝຶກຖາມວ່າຍ້ອນຫຍັງຜູ້ເຂົ້າຮ່ວມຈຶ່ງຢືນຢູ່ຕ່າງຈາກບ່ອນມື້ທີ 1?
   - ຄູຝຶກຖ່າຍຮູບເອົາໄວ້ເພື່ອປຽບທຽບກັບຮູບຂອງມື້ທີ 1;
   - ຄູຝຶກເອົາຮູບທີ່ໄດ້ຖ່າຍໄວ້ໃຫ້ຜູ້ເຂົ້າຮ່ວມເບິ່ງເພື່ອປຽບທຽບຄວາມປ່ຽນແປງ ຫຼັງຈາກການຝຶກອົບຮົມ 4 ມື້.

## ຄໍາແນະນໍາສໍາລັບຄູຝຶກ

- ສິ່ງສໍາຄັນເວລາຜູ້ເຂົ້າຮ່ວມຢືນລຽນກັນແລ້ວໃຫ້ຖ່າຍຮູບ ແລະ ບັນທຶກໄວ້ໃນຄອມພິວເຕີ ເພື່ອເອົາມາປຽບທຽບກັບຮູບປະເມີນໃນມື້ທີໜຶ່ງ ທັງນີ້ເພື່ອໃຫ້ຜູ້ເຂົ້າຮ່ວມເຫັນເຖິງການປ່ຽນແປງຂອງເຂົາເຈົ້າໂດຍຜ່ານການປະເມີນເປັນເປີເຊັນ;
- ໃນເວລາທີ່ຄູຝຶກຫຼັກຕັ້ງຄໍາຖາມ ຖາມຜູ້ເຂົ້າຮ່ວມກ່ຽວກັບການປ່ຽນແປງ ຕ້ອງມີຄູຝຶກຜູ້ຊ່ວຍເປັນຜູ້ບັນທຶກຕົວເລກເປີເຊັນ ແລະ ຄໍາຕອບທີ່ຜູ້ເຂົ້າຮ່ວມອະທິບາຍເຖິງເຫດຜົນຕ່າງໆຂອງການປ່ຽນແປງຫຼັງຈາກການຝຶກອົບຮົມ.

# ເອກະສານສັງລວມມາດຕາກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ
# ສຳລັບການນຳໃຊ້ປຶ້ມຄູ່ມືຝຶກອົບຮົມ
# ການລົງທຶນດ້ານກະສິກຳດ້ວຍຄວາມຮັບຜິດຊອບ ສຳລັບຊາວກະສິກອນ

## I. ຈຸດປະສົງຂອງເອກະສານ

ເອກະສານອ້າງອີງນີ້ ໄດ້ສັງລວມເອົາບັນດາມາດຕາກົດໝາຍ ແລະ ເນື້ອໃນກ່ຽວກັບນະໂຍບາຍຕ່າງໆ ທີ່ໄດ້ອ້າງອີງ ໃນຄູ່ມືຝຶກອົບຮົມການລົງທຶນດ້ານກະສິກຳດ້ວຍຄວາມຮັບຜິດຊອບ ສຳລັບຊາວກະສິກອນ ເພື່ອໃຫ້ຜູ້ທີ່ນຳໃຊ້ໄດ້ນຳໃຊ້ໃນການສຶກສາ ແລະ ທຳຄວາມເຂົ້າໃຈໃນຫົວຂໍ້ການລົງທຶນດ້ານກະສິກຳດ້ວຍຄວາມຮັບຜິດຊອບ ພ້ອມທັງເປັນບ່ອນອີງທາງດ້ານເນື້ອໃນກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບຫົວຂໍ້ດັ່ງກ່າວ.

## II. ນະໂຍບາຍທີ່ກ່ຽວຂ້ອງ

**ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຕາມທີ່ໄດ້ກຳນົດໄວ້ ໃນພາກທີ II, ໂຮແມງ II ຂໍ້ທີ 3. ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນໃຫ້ມີຄູນນະພາບ ແລະ ປະສິດທິຜົນສູງ (ໜ້າ 55) ລາຍລະອຽດມີເນື້ອໃນດັ່ງນີ້:**

ການລົງທຶນລວມ ໃນໄລຍະ 5 ປີຕໍ່ໜ້າ ຕ້ອງມີຈຸດສຸມ ແລະ ຄວາມສອດຄ່ອງກັບບັນດາເປົ້າໝາຍ ແລະ ວຽກ ງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ຄື: (1) ລົງທຶນໃສ່ຂະແໜງການຜະລິດ ແລະ ການບໍລິການ ທີ່ສາມາດຂັບເຄື່ອນການເຕີບໂຕ ຂອງເສດຖະກິດຕາມທິດສີຂຽວ ແລະ ຍືນຍົງ, ການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກໃຫ້ຫຼາຍຂຶ້ນ, ການ ສ້າງວຽກເຮັດງານທຳໃຫ້ຫຼາກຫຼາຍ ແລະ ເພີ່ມຂຶ້ນ. (2) ລົງທຶນໃສ່ພັດທະນາຊັບພະຍາກອນມະນຸດ ໂດຍສະເພາະ ປັບປຸງ ຄຸນນະພາບການສຶກສາ, ສາທາລະນະສຸກ ແລະ ພັດທະນາສີມືແຮງງານ ເພື່ອເປັນປັດໄຈຮອງຮັບເຕັກນິກ-ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່. (3) ລົງທຶນໃສ່ໃນການຄົ້ນຄວ້າ ແລະ ພັດທະນາ ເພື່ອຍົກສູງປະສິດທິຜົນຂອງການ ຜະລິດ-ການບໍລິການ, ສ້າງມູນຄ່າເພີ່ມ ແລະ ຄວາມຫຼາກຫຼາຍຂອງສິນຄ້າ, ສະໜອງອຸປະກອນການສຶກສາ, ອຸປະກອນ ການແພດ, ຍົກສະມັດຕະພາບການຜະລິດກະສິກຳ ເພື່ອກ້າວໄປສູ່ອຸດສາຫະກຳທີ່ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝ. (4) ລົງທຶນໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບການຜະລິດເປັນສິນຄ້າ, ປັບປຸງ-ກໍ່ສ້າງໂຄງລ່າງຊົນນະບົດ ແລະ ໂຄງລ່າງເສດຖະກິດ. (5) ລົງທຶນໃສ່ການປັບປຸງການຄຸ້ມຄອງ-ບໍລິຫານລັດ ໃຫ້ມີຄວາມທັນສະໄໝ, ໂປ່ງໃສ ແລະ ວ່ອງໄວຂຶ້ນ, ສ້າງເງື່ອນໄຂ ແລະ ປັດໄຈເພື່ອຮອງຮັບໃຫ້ແກ່ວຽກງານປ້ອງກັນຊາດ- ປ້ອງກັນຄວາມສະຫງົບ ແລະ (6) ລົງທຶນໃສ່ໂຄງລ່າງພື້ນຖານລະດັບຊາດເພື່ອເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ.

ເພື່ອຮັບປະກັນການລົງທຶນໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ຕ້ອງຮັບປະກັນປະສິດທິພາບຂອງການລົງທຶນຂອງ ລັດ (ລວມທັງ ODA) ໃຫ້ໄປຕາມບູລິມະສິດ ແລະ ຈຸດສຸມຂອງການລົງທຶນທີ່ໄດ້ກໍານົດໄວ້. ສ້າງນະໂຍບາຍໄລຍະຍາວ ທີ່ມີຄວາມກົມກຽວລະຫວ່າງແຜນການ ແລະ ແຜນງົບປະມານຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນໃຫ້ສອດຄ່ອງ ກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025). ພ້ອມກັນນັ້ນ, ກໍຕ້ອງສ້າງລະບົບການ ຕິດຕາມ ແລະ ຄຸ້ມຄອງການລົງທຶນຢ່າງມີປະສິດທິພາບ ໃນສະພາບທີ່ທຶນການຊ່ວຍເຫຼືອທາງການພັດທະນາ ມີທ່າອ່ຽງ ຫຼຸດລົງ. ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຄາດວ່າຈະບໍ່ມີຜົນກະທົບຫຼາຍຕໍ່ກັບການຊ່ວຍ ເຫຼືອຈາກບັນດາຄູ່ຮ່ວມພັດທະນາ ແຕ່ຕ້ອງໄດ້ມີການຕິດຕາມຢ່າງໃກ້ຊິດ ແລະ ປຶກສາຫາລືຮ່ວມກັບຄູ່ຮ່ວມພັດທະນາ ຢ່າງເປັນປົກກະຕິ.

**3.2. ວຽກຈຸດສຸມ**

**(1). ການລົງທຶນຂອງລັດ**: ບັນດາຂະແໜງການ ແລະ ທ້ອງຖິ່ນຕ້ອງຄົ້ນຄວ້າ ແລະ ສ້າງແຜນການລົງທຶນຂອງ ລັດ ໃນໄລຍະ 5 ປີ ຂອງຕົນ ໃຫ້ສອດຄ່ອງກັບຄວາມອາດສາມາດດ້ານງົບປະມານ ແລະ ສະໜັບສະໜູນໂດຍກົງກັບທິດທາງ, ເປົ້າໝາຍ, ຄາດໝາຍ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂອງຂະແໜງການ ແລະ ທ້ອງຖິ່ນ, ພ້ອມທັງຮັບປະກັນປະສິດທິຜົນສູງສຸດຂອງທຸກໂຄງການລົງທຶນ.

**ການສ້າງແຜນການລົງທຶນຂອງລັດ 5 ປີ ໃຫ້ສຸມໃສ່ດັ່ງລຸ່ມນີ້:**

+ໂຄງສ້າງການລົງທຶນຂອງລັດ: ໃຫ້ລົງທຶນໃສ່ໂຄງການໂຄງລ່າງພື້ນຖານທີ່ໄດ້ຈັດຕັ້ງປະຕິບັດຜ່ານມາໃນແຜນ ການ 5 ປີ ຄັ້ງທີ VIII (2016-2020) ໃຫ້ສໍາເລັດ, ບູລະນະ ແລະ ສ້ອມແປງໂຄງລ່າງພື້ນຖານທີ່ມີຢູ່ ໃຫ້ສາມາດຕໍ່ຍອດ ເກີດປະໂຫຍດ, ສາມາດນໍາໃຊ້ເຕັມສະມັດຕະພາບ, ການບໍລິການການເຂົ້າເຖິງຕະຫຼາດ, ເຂດການຜະລິດ ແລະ ການ ສັນຈອນໃຫ້ເປັນປົກກະຕິ, ສໍາລັບໂຄງການໃໝ່ ແມ່ນໃຫ້ສຸມໃສ່ບັນດາໂຄງລ່າງພື້ນຖານໃນເຂດຊົນນະບົດ, ການພັດ ທະນາຊັບພະຍາກອນມະນຸດ, ການພັດທະນາການຄຸ້ມຄອງ ແລະ ບໍລິຫານລັດເປັນທັນສະໄໝ, ການຄົ້ນຄວ້າເຕັກນິກ- ວິທະຍາສາດ ແລະ ການສະໜອງອຸປະກອນຮັບໃຊ້ດ້ານວິຊາການ, ສ່ວນໂຄງການລະດັບຊາດ ເປັນຕົ້ນ ທາງດ່ວນ, ທາງ ລົດໄຟ, ສາຍສົ່ງໄຟຟ້າ ແມ່ນນໍາໃຊ້ແຫຼ່ງທຶນອື່ນທີ່ບໍ່ແມ່ນງົບປະມານຂອງລັດ. ການລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ, ການຄົ້ນຄວ້າ, ການສະໜອງອຸປະກອນຕ້ອງມີຄວາມສົມຄູ່ກັບການກໍ່ສ້າງພື້ນຖານໂຄງລ່າງ. ການລົງທຶນ ຂອງລັດ ຕ້ອງພິຈາລະນາຄວາມສ່ຽງດ້ານຕ່າງໆ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດແບບຍືນຍົງ.

ຮັບປະກັນໃຫ້ແຜນງານ ແລະ ໂຄງການລົງທຶນຂອງລັດ ສ້າງຂຶ້ນບົນພື້ນຖານທິດທາງ, ຄາດໝາຍຂອງແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອ

ຮັບປະກັນການບັນລຸເປົ້າໝາຍຂອງແຜນດັ່ງກ່າວ ໂດຍຄໍານຶງເຖິງການເຊື່ອມໂຍງກັນ ລະຫວ່າງແຕ່ລະເປົ້າໝາຍ, ແຜນງານ ແລະ ໂຄງການລົງທຶນ ຂອງລັດຢ່າງຈະແຈ້ງ ແລະ ສິ່ງສໍາຄັນແມ່ນຕ້ອງດຸນດ່ຽງກັບຄວາມສາມາດຕົວຈິງໃນການສະໜອງທຶນຮອນ.

+ ເພື່ອເຮັດໃຫ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງ ຖິ່ນ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ມີຜົນສໍາເລັດ ແລະ ມີປະສິດທິຜົນຍິ່ງຂຶ້ນ ໃຫ້ຄັດເລືອກເອົາແຜນງານ ແລະ ໂຄງການ ຢ່າງມີຈຸດສຸມພາຍໃຕ້ຂອບຄາດຄະເນງົບປະມານທີ່ໄດ້ຈັດສັນ.

+ ໃຫ້ຂະແໜງການ ແລະ ທ້ອງຖິ່ນສົມທົບກັນໃຫ້ລະອຽດ ໃນການຄັດເລືອກເອົາແຜນງານ ແລະ ໂຄງການ ໂດຍແບ່ງຄວາມຮັບຜິດຊອບ ຫຼື ຕາມການແບ່ງຂັ້ນຄຸ້ມຄອງຢ່າງລະອຽດ ຕາມທິດ 3 ສ້າງ ແລະ ສາຍຕັ້ງ-ສາຍຂວາງ ຂອງ ຂະແໜງການໂດຍຕ້ອງລວມສູນດ້ານວິຊາການຕາມສາຍຕັ້ງຂອງຂະແໜງການຕົນຮັບຮູ້, ຮັບພິຈາລະນາ ແລະ ຮັບຜິດ ຊອບ ເພື່ອບໍ່ໃຫ້ມີການຂຶ້ນແຜນຊໍ້າຊ້ອນກັນ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນດີຂຶ້ນກວ່າເກົ່າ.

+ ແຜນການລົງທຶນຂອງລັດ 5 ປີ ຈະສ້າງຂຶ້ນ ແລະ ຮັບໃຊ້ການສ້າງຂອບງົບປະມານການລົງທຶນຂອງລັດໄລຍະ ກາງ ສໍາລັບ 3 ປີ ເພື່ອໃຫ້ຂະແໜງການ ແລະ ທ້ອງຖິ່ນສາມາດຮູ້ໄດ້ຄວາມສາມາດສະໜອງງົບປະມານປະຈໍາປີຂອງ ໂຄງການ, ບັນດາຂະແໜງການ ແລະ ທ້ອງຖິ່ນເປັນເຈົ້າການ ຄັດເລືອກບັນດາແຜນງານ ແລະ ໂຄງການບູລິມະສິດທີ່ສະ ໜັບສະໜູນການບັນລຸເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຂອງຂະແໜງການ ແລະ ທ້ອງຖິ່ນ ຕົນຢ່າງມີປະສິດທິພາບ ແລະ ມີຈຸດສຸມ.

+ ຊຸກຍູ້ໃຫ້ຄູ່ຮ່ວມພັດທະນາ ສ້າງແຜນສະໜັບສະໜູນໃຫ້ສອດຄ່ອງກັບບູລິມະສິດຂອງແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ.

+ ສ້າງຍຸດທະສາດການນໍາພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC) ແບບຍືນ ຍົງ ລວມທັງການວິເຄາະ ແລະ ການປຶກສາຫາລືຢ່າງຮອບຄອບ ກ່ຽວກັບຜົນກະທົບທີ່ອາດຈະເກີດຂຶ້ນ ຈາກການຫຼຸດລົງ ຂອງແຫຼ່ງທຶນໃນເງື່ອນໄຂຜ່ອນຜັນ. ຍຸດທະສາດດັ່ງກ່າວ ຈະກໍານົດມາດຕະການເພື່ອຮັບປະກັນການແກ້ໄຂຄວາມສ່ຽງ ທີ່ເກີດຈາກການຫຼຸດພົ້ນອອກຈາກ LDC ຢ່າງເໝາະສົມ.(ໜ້າ 56 )

**(2). ການລົງທຶນຂອງພາກເອກະຊົນ**

ການລົງທຶນໂດຍກົງຈາກຕ່າງປະເທດ ແມ່ນມີຄວາມສໍາຄັນ ແລະ ຈະສືບຕໍ່ເປັນແຫຼ່ງທຶນຕົ້ນຕໍ ໃນການພັດທະ ນາ ໂດຍສະເພາະການສົ່ງເສີມການລົງທຶນທີ່ມີຄຸນນະພາບໃນເຂດເສດຖະກິດພິເສດ ເພື່ອສ້າງວຽກເຮັດງານທໍາ, ການ ຊົມໃຊ້ພະລັງງານສະອາດ, ຈັດຕັ້ງປະຕິບັດລະບຽບການຂອງພາກລັດ, ສົ່ງເສີມການຖ່າຍທອດເຕັກໂນໂລຊີ ແລະ ການ ເສີມສ້າງຂີດຄວາມສາມາດ. ເຖິງແນວໃດກໍ່ຕາມ, ແຜນການ 5 ປີ ຄັ້ງທີ IX ນີ້ຕ້ອງມີມາດຕະການດຶງດູດການລົງທຶນຈາກ ພາກເອກະຊົນຫຼາຍຂຶ້ນ ແລະ ສອດຄ່ອງກັບບູລິມະສິດຂອງແຜນ. ການລົງທຶນພາກເອກະຊົນ ໂດຍສະເພາະການລົງທຶນ FDI ອາດບໍ່ຂະຫຍາຍຕົວສູງເທົ່າທີ່ຄວນຍ້ອນບັນດາປະເທດຜູ້ລົງທຶນໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ ໂຄວິດ-19 ແລະ ການລົງທຶນ

ໂດຍກົງຈາກຕ່າງປະເທດ (FDI) ໃນທົ່ວໂລກອາດຫຼຸດລົງເຖິງ 40% ໃນປີ 2020. ດ້ວຍ ເຫດນັ້ນ, ເຮັດໃຫ້ຫຼາຍປະເທດສຸມໃສ່ການລົງທຶນພາຍໃນຫຼາຍຂຶ້ນ ລວມທັງ ສປປ ລາວ.

ເລັ່ງໃສ່ຂະແໜງການບູລິມະສິດຕາມທີ່ກໍານົດໄວ້ໃນກົດໝາຍການສົ່ງເສີມການລົງທຶນ (ສະບັບປັບປຸງ 2016), ລັກສະນະຂອງໂຄງການຕ້ອງເປັນຫົວຈັກແກ່ດຶງໃຫ້ແກ່ການພັດທະນາເສດຖະກິດຂອງປະເທດ, ເປັນການລົງທຶນທີ່ມີຄຸນ ນະພາບ, ເປັນການລົງທຶນທີ່ຖ່າຍທອດເຕັກໂນໂລຊີ, ນະວັດຕະກໍາໃໝ່ ທີ່ຕິດພັນກັບການຫັນເປັນອຸດສາຫະກໍາ ແລະ ທັນ ສະໄໝ, ອຸດສາຫະກໍາ 4.0 (ຕາມຂະແໜງການທີ່ມີເງື່ອນໄຂ) ແລະ ການປັບຕົວໃນຍຸກແຫ່ງປັນຍາປະດິດ ແລະ ການສ້າງ ຕ່ອງໂສ້ມູນຄ່າເພີ່ມການຜະລິດສິນຄ້າ ໃຫ້ມີຄຸນນະພາບ ແລະ ມີຄວາມຫຼາກຫຼາຍ ທັງກ້າວໄປສູ່ມາດຖານສາກົນ ແລະ ການປັບຕົວໃນຍຸກແຫ່ງປັນຍາປະດິດ, ເປັນການລົງທຶນເພື່ອຜະລິດເປັນສິນຄ້າຈໍາເປັນຕໍ່ການບໍລິໂພກເພື່ອຫຼຸດ ຜ່ອນການ ເອື້ອຍອີງການນໍາເຂົ້າ ແລະ ສາມາດສ້າງວຽກເຮັດງານທໍາໃຫ້ກັບປະຊາຊົນເປັນຈໍານວນຫຼາຍເປັນຕົ້ນ ກະສິກໍາສະອາດ ແລະ ປອດສານພິດ, ອຸດສາຫະກໍາປຸງແຕ່ງອາຫານ, ອຸດສາຫະກໍາຜະລິດເຄື່ອງອຸປະໂພກ-ບໍລິໂພກ, ການພັດທະນາອຸດສາຫະກໍາການທ່ອງທ່ຽວທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງ, ການສຶກ ສາ, ການສ້າງໂຮງໝໍທັນສະໄໝ ແລະ ການຜະລິດຢາ, ການພັດທະນາໂຄງລ່າງພື້ນຖານເສັ້ນທາງ, ການບໍລິການຂົນສົ່ງ ສິນຄ້າ, ທາງຜ່ານ ແລະ ການເຊື່ອມໂຍງ ແລະ ເຊື່ອມຈອດລະຫວ່າງປະເທດ. ນອກຈາກນັ້ນ, ກໍໃຫ້ເອົາໃຈໃສ່ດຶງດູດການ ລົງທຶນເຂົ້າໃນການລົງທຶນໃນເຂດເສດຖະກິດພິເສດ, ເຂດ ແລະ ນິຄົມອຸດສາຫະກໍາ, ໂຄງການຂະໜາດນ້ອຍ ແລະ ກາງ, ບັນດາໂຄງການທີ່ນໍາໃຊ້ເຕັກນິກວິທະຍາສາດທີ່ທັນສະໄໝທີ່ຈໍາເປັນ ແລະ ສອດຄ່ອງກັບເງື່ອນໄຂຕົວຈິງຂອງຕົນ.

ສົ່ງເສີມການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ (PPP) ໃນໂຄງການຂະໜາດໃຫຍ່ທີ່ໃຊ້ທຶນຮອນ, ເຕັກໂນໂລຊີ ແລະ ນະວັດຕະກໍາສູງ ເພື່ອຫຼຸດພາລະແບກຫາບດ້ານການເງິນ ແລະ ຄວາມສ່ຽງໃນການລົງທຶນ, ເພີ່ມ ປະສິດທິພາບ ແລະ ປະສິດທິຜົນ ແລະ ຄວາມໂປ່ງໃສໃນການຄຸ້ມຄອງບໍລິຫານໂຄງການ ແລະ ມີຄວາມຍືນຍົງ ໃນ ໂຄງການກໍ່ສ້າງໂຄງລ່າງພື້ນຖານ ເຊັ່ນ: ຂົວ, ທາງ, ທ່າເຮືອ, ທ່າບົກ, ໂຄງການພະລັງງານຕ່າງໆ, ສຶກສາ, ສາທາ (ໂຮງໝໍ ທັນສະໄໝ) ແລະ ອື່ນໆ.

**ເພື່ອຊຸກຍູ້ໃຫ້ການລົງທຶນຂອງພາກເອກະຊົນ ບັນລຸຄາດໝາຍ, ຕ້ອງສຸມໃສ່ວຽກງານຕົ້ນຕໍດັ່ງນີ້:**

- ສຸມໃສ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກການປະສານງານການດໍາເນີນທຸລະກິດຢູ່ ສປປ ລາວ, ສະບັບເລກທີ 02/ ນຍ, ລົງວັນທີ 01 ກຸມພາ 2018. ເພື່ອສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃນການສ້າງ ແລະ ດໍາເນີນທຸລະກິດ ໃຫ້ມີ ຄວາມໂປ່ງໃສ ແລະ ວ່ອງໄວ ໂດຍການສືບຕໍ່ປັບປຸງຂັ້ນຕອນ ແລະ ລະບຽບການໃນການສ້າງ ແລະ ດໍາເນີນທຸລະກິດ ຕາມ 10 ຕົວຊີ້ບອກ ໃຫ້ດີຂຶ້ນຢ່າງເປັນຮູບປະທໍາຈະແຈ້ງ ດ້ວຍການປັບປຸງກົດໝາຍວ່າດ້ວຍວິສາຫະກິດໃຫ້ມີຄວາມ ສອດຄ່ອງ, ສ້າງລະບົບການຂຶ້ນທະບຽນວິສາຫະກິດແບບອອນລາຍ, ຫັນເລກປະຈໍາຕົວຜູ້ເສຍອາກອນ, ລະຫັດວິສາຫະ ກິດ ແລະ ເລກປະກັນສັງຄົມ ເປັນຕົວເລກລະຫັດດຽວກັນ ໂດຍການປັບປຸງໂປແກຼມທະບຽນ (ERS) ແລະ ອາກອນ

(TaxRis), ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ເພື່ອແກ້ໄຂຄວາມຫຍຸ້ງຍາກທີ່ຕິດພັນກັບຕົວຊີ້ບອກການກໍ່ ຕັ້ງທຸລະກິດ, ປັບປຸງຄວາມອາດສາມາດໃນການແຂ່ງຂັນໃຫ້ພາກທຸລະກິດ ເພື່ອສົ່ງເສີມພາກທຸລະກິດໃນລະດັບຫົວໜ່ ວຍວິສາຫະກິດ ແລະ ອື່ນໆ ຕາມຄວາມເໝາະສົມ ແລະ ເງື່ອນໄຂຕົວຈິງ.

- ສຸມໃສ່ການຜັນຂະຫຍາຍການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງວຽກງານ ການບໍລິການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ໃນຂອບເຂດທົ່ວປະເທດສະບັບ ເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020 ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບໃນການສົ່ງເສີມ, ຄຸ້ມຄອງການລົງທຶນ ແລະ ການອຳນວຍຄວາມສະດວກໃນການດຳເນີນທຸລະກິດຂອງເອກະຊົນພາຍໃນ ແລະ ຕ່າງປະ ເທດ. ໂດຍຖືເອົາຂະແໜງແຜນການ ແລະ ການລົງທຶນເປັນຈຸດໃຈກາງປະສານງານກັບບັນດາໜ່ວຍງານປະສານງານບໍລິ ການການລົງທຶນປະຕູດຽວ ຢູ່ແຕ່ລະຂະແໜງການທີ່ກ່ຽວຂ້ອງ.

- ສຸມໃສ່ສືບຕໍ່ຜັນຂະຫຍາຍເຜີຍແຜ່ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນ ທີ 17 ພະຈິກ 2016 ແລະ ບັນດານິຕິກຳຕ່າງໆທີ່ຕິດພັນວຽກງານການລົງທຶນໃຫ້ສຳເລັດໃນທົ່ວປະເທດ;

- ສຸມໃສ່ສືບຕໍ່ຈັດຕັ້ງປະຕິບັດກົນໄກປະສານງານການບໍລິການການລົງທຶນປະຕູດຽວໃຫ້ສຳເລັດ, ປັບປຸງຮຽບຮຽງ ຂໍ້ມູນຂ່າວສານໃຫ້ຜູ້ລົງທຶນຢ່າງວອງໄວ ໂດຍຜ່ານການອອກປຶ້ມຄູ່ມືການບໍລິການ ການລົງທຶນປະຕູດຽວ ແລະ ສົ່ງຂໍ້ມູນ ທາງເວບໄຊ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງ;

- ສຸມໃສ່ສືບຕໍ່ຄົ້ນຄວ້າ, ດັດແກ້ ແລະ ປັບປຸງນິຕິກຳທີ່ມີ ລວມທັງນະໂຍບາຍສົ່ງເສີມການລົງທຶນໃຫ້ສອດຄ່ອງ ກັບສະພາບປັດຈຸບັນໃນ ສປປ ລາວ;

- ສຸມໃສ່ພັດທະນາ ແລະ ນຳໃຊ້ ICT ເຂົ້າໃນວຽກງານບໍລິຫານ ແລະ ບໍລິການລັດ ໃນແຕ່ລະຂະແໜງການ.

- ສຸມໃສ່ສືບຕໍ່ສ້າງຮ່າງນະໂຍບາຍດ້ານພາສີອາກອນ ຂອງຂະແໜງການສົ່ງເສີມການລົງທຶນໃຫ້ສຳເລັດ;

ວຽກງານທີ່ຕ້ອງເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ແມ່ນເພື່ອກະກຽມຄວາມພ້ອມ ເຂົ້າໃນວຽກງານດຶງດູດ ແລະ ສົ່ງເສີມການລົງທຶນພາກເອກະຊົນ ໃຫ້ສາມາດດຶງດູດການລົງທຶນເຂົ້າມາລົງທຶນ ໃນ ສປປ ລາວ ໄດ້ຫຼາຍທີ່ສຸດ. ຈາກການຍາດແຍ່ງແຂ່ງຂັນຂອງການດຶງດູດ ແລະ ນະໂຍບາຍສົ່ງເສີມການລົງທຶນຕ່າງໆ ຂອງບັນດາ ປະເທດເພື່ອນບ້ານ ຫຼື ນາງປະເທດ. ໂດຍສະເພາະພາຍຫຼັງສະພາບການຍຸຕິການແຜ່ລະບາດພະຍາດໂຄວິດ-19 ເຊິ່ງ ທຸກໆປະເທດກໍ່ມີຄວາມຈຳເປັນຕ້ອງການແຫຼ່ງທຶນເຂົ້າມາຊ່ວຍຟື້ນຟູເສດຖະກິດແຫ່ງຊາດຂອງຕົນ ໃຫ້ມີສະຖຽນລະ ພາບທີ່ດີຂຶ້ນ.

ຄຽງຄູ່ກັບການສ້າງແຜນ ແລະ ນະໂຍບາຍການດຶງດູດ ແລະ ສົ່ງເສີມການລົງທຶນພາກເອກະຊົນຕ່າງໆນັ້ນ, ວຽກ ງານການຄຸ້ມຄອງຕິດຕາມການຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການທີ່ໄດ້ເຊັນສັນຍາໄປແລ້ວ ກໍ່ຕ້ອງໄດ້ເອົາໃຈ ໃສ່ຄຸ້ມຄອງຕິດຕາມຄືດັ່ງລຸ່ມນີ້:

- ເອົາໃຈໃສ່ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງເປັນໄລຍະ ເພື່ອຄຸ້ມຄອງກວດກາການປະຕິບັດ ພັນທະຕ່າງໆ ຂອງບັນດາໂຄງການທີ່ໄດ້ລະບຸໄວ້ໃນສັນຍາ ແລະ ສອດຄ່ອງກັບກົດໝາຍສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016;
- ເອົາໃຈໃສ່ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອລົງກວດກາສະພາບການ ຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການທີ່ໄດ້ເຊັນສັນຍາໄປແລ້ວ, ໂດຍສະເພາະແມ່ນໂຄງການທີ່ມີບັນ ຫາເກີດຂຶ້ນເພື່ອຊຸກຍູ້ ແລະ ຊ່ວຍເຫຼືອໃຫ້ບັນດາໂຄງການດັ່ງກ່າວສາມາດປະຕິບັດວຽກງານໄດ້ສຳເລັດຕາມ ຄາດໝາຍ;
- ເອົາໃຈໃສ່ຕິດຕາມກວດກາບົດລາຍງານຂອງບັນດາໂຄງການຕາມແຕ່ລະໄຕມາດ ແລະ ສະຫຼຸບການຈັດຕັ້ງ ປະຕິບັດວຽກງານຂອງບັນດາໂຄງການ ເພື່ອລາຍງານໃຫ້ຂັ້ນເທິງຮັບຊາບ;
- ເອົາໃຈໃສ່ຈັດຕັ້ງໜ່ວຍງານສະເພາະກິດປະຈຳປີ ຫຼື ພາຍໃນສອງປີ ທີ່ມີບັນດາຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນ ລົງກວດກາ ແລະ ທົບທວນປະເມີນການປະຕິບັດວຽກງານຕົວຈິງຂອງບັນດາໂຄງການ ເພື່ອລາຍງານ ໃຫ້ຂັ້ນເທິງຮັບຊາບ, ຖ້າຫາກໂຄງການໃດທີ່ປະຕິບັດໄດ້ດີ ກໍ່ສືບຕໍ່ຊຸກຍູ້ສົ່ງເສີມຊ່ວຍເຫຼືອແກ້ໄຂບັນຫາຕ່າງໆ ໃຫ້ສຳເລັດຕາມຄາດໝາຍ. ແຕ່ຖ້າຫາກໂຄງການໃດ ທີ່ມີລັກສະນະເຊັນສັນຍາເພື່ອຈັບຈອງໂຄງການ ໂດຍບໍ່ມີ ຄວາມຄືບໜ້າໃນການປະຕິບັດວຽກງານໃດໆ ກໍ່ສະເໜີລາຍງານຂັ້ນເທິງເພື່ອຍົກເລີກໂຄງການ. ທັງນີ້ກໍ່ເພື່ອບໍ່ ໃຫ້ເປັນການຈັບຈອງເພື່ອແກ່ຍາວການສ້າງແຫຼ່ງທຶນເຂົ້າມາຊ່ວຍພັດທະນາເສດຖະກິດແຫ່ງຊາດ;
- ກ່ຽວກັບວຽກງານຄຸ້ມຄອງ ແລະ ຕິດຕາມດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ກໍ່ແມ່ນເພື່ອຮັບປະກັນການຈັດຕັ້ງປະຕິ ບັດວຽກງານຕົວຈິງຂອງບັນດາໂຄງການໃຫ້ສຳເລັດຕາມຄາດໝາຍ ແລະ ເພື່ອຮັບປະກັນໃຫ້ລັດຖະບານໄດ້ ຮັບຜົນປະໂຫຍດສູງສຸດຕໍ່ການອະນຸມັດບັນດາໂຄງການຕ່າງໆ, ເຊິ່ງຜົນປະໂຫຍດດັ່ງກ່າວ ສາມາດປະກອບ ສ່ວນສະໜອງແຫຼ່ງທຶນເຂົ້າມາຊ່ວຍພັດທະນາເສດຖະກິດແຫ່ງຊາດ.(ໜ້າ 57-59)

## III. ພາລະບົດບາດຂອງພາກສ່ວນທີ່ກ່ຽວຂ້ອງ

### 1. ພາກລັດ

ກ່ຽວກັບວຽກງານສົ່ງເສີມການລົງທຶນ ລັດສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍການວາງນະໂຍບາຍດ້ວຍການສ້າງສະພາບແວດລ້ອມ, ເງື່ອນໄຂອໍານວຍຄວາມສະດວກຕ່າງໆ ເປັນຕົ້ນ ການສ້າງພື້ນຖານໂຄ່ງລ່າງ, ການສະໜອງຂໍ້ມູນຂ່າວສານທີ່ຈໍາເປັນ, ການໃຫ້ນະໂຍບາຍທາງດ້ານພາສີ, ສ່ວຍສາອາກອນ, ດ້ານແຮງງານ, ການໃຫ້ສິດນໍາໃຊ້ທີ່ດິນ, ການເຂົ້າເຖິງແຫຼ່ງທຶນ, ການປະຕິບັດຄວາມສະເໝີພາບ ລວມທັງການຮັບຮູ້, ການປົກປ້ອງກໍາມະສິດ. **(ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ,ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ມາດຕາ 4, ວັກ 1).**

### 2. ຜູ້ລົງທຶນ

ນັກລົງທຶນທີ່ສົນໃຈເຂົ້າມາລົງທຶນໃນ ສປປ ລາວ ບໍ່ວ່າຈະເປັນໂຄງການທີ່ນ້ອຍ ຫຼື ໃຫ່ຍ ແມ່ນຈະຕ້ອງໄດ້ປະຕິບັດພັນທະຕາມກົດໝາຍຂອງ ສປປ ລາວ ບໍ່ວ່າຈະເປັນການຖືບັນຊີໂຄງການ, ການເສຍພາສີອາກອນ ແລະ ຄ່າທໍານຽມຕ່າງໆ ໃຫ້ຄວາມຮ່ວມມື ແລະ ປະສານງານ ກ່ຽວກັບການເຄື່ອນໄຫວວຽກງານທຸລະກິດກັບອໍານາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ສົ່ງເສີມ ແລະ ຍົກລະດັບວິຊາສະເພາະໃຫ້ແກ່ແຮງງານລາວ, ສະໜອງລະບອບປະກັນສັງຄົມ, ເຄົາລົບນັບຖືຮີດຄອງປະເພນີ, ປະຕິບັດການທົດແທນຄ່າເສຍຫາຍແກ່ຜູ້ໄດ້ຮັບຜົນກະທົບຈາກການລົງທຶນຢ່າງໂປ່ງໃສ, ມີມາດຕະການປົກປັກຮັກສາສິ່ງແວດລ້ອມຕາມກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາສາກົນ. **(ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ,ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ມາດຕາ 72, 73, 74).**

### 3. ຊາວກະສິກອນ

ຊາວກະສິກອນ ສາມາດເຂົ້າຮ່ວມ ຫຼື ມີຄໍາເຫັນ ໃນຂະບວນການສຶກສາຄວາມເປັນໄປໄດ້ຂອງໂຄງການ ກັບຜູ້ລົງທຶນ ແລະ ອໍານາດການປົກຄອງທ້ອງຖິ່ນ; ໄດ້ຮັບຂໍ້ມູນເປັນສໍາເນົາເອກະສານ ທີ່ກ່ຽວຂ້ອງກັບຕົນ ຈາກເຈົ້າຂອງໂຄງການ ໃນການດໍາເນີນງານຂອງບໍລິສັດລົງທຶນ ລວມທັງຜົນໄດ້ຜົນເສຍ ຢ່າງຄົບຖ້ວນ; ສົນທະນາພາຍໃນຊຸມຊົນ ລວມທັງບົດບາດຍິງ-ຊາຍ ໂດຍມີຂໍ້ມູນ, ແຜນທີ່, ແຜ່ນພັບ, ໂພດສເຕີ ຫຼື ວິດີໂອ ເພື່ອໃຫ້ເຂົ້າໃຈ ເຖິງຄວາມເປັນໄປໄດ້ ແລະ ຜົນກະທົບ; ເຈລະຈາກັບຜູ້ລົງທຶນ ເພື່ອຮັບປະກັນຜົນປະໂຫຍດຊຸມຊົນ ບົນພື້ນຖານຄວາມສະໝັກໃຈ; ຊອກຫາຄໍາແນະນໍາຈາກພາຍນອກ ກ່ຽວກັບດ້ານກົດໝາຍ ແລະ ດ້ານວິຊາການ ເພື່ອຊ່ວຍໃນການຕັດສິນໃຈ ແລະ ການຕໍ່ລອງຕ່າງໆ; ມີການຕັດສິນໃຈ ແລະ ມີຄວາມເອກະພາບຂອງຊຸມຊົນທັງໝົດ ໂດຍອີງໃສ່ສຽງສ່ວນຫຼາຍ ແລະ ບັນທຶກເປັນລາຍລັກອັກສອນ ແລະ ຖືກຕ້ອງທາງດ້ານກົດໝາຍ; ສື່ສານ ກັບຜູ້

ລົງທຶນຢ່າງຕໍ່ເນື່ອງ ໃນແຕ່ລະໄລຍະຂອງໂຄງການ, ຕິດຕາມ ແລະ ລາຍງານສະພາບການດໍາເນີນທຸລະກິດໃຫ້ອໍານາດການປົກຄອງຂອງຕົນຊາບ.**(ຄໍາແນະນໍາ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສໍາປະທານ ສໍາລັບການປູກພືດກະສິກໍາ ເລກທີ 0457/ ກຜທ, ລົງວັນທີ 27 ກຸມພາ 2019, ຂໍ້ທີ X).**

# IV. ນິຍາມຕ່າງໆ

**1. ການລົງທຶນ. (ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016)**

ການລົງທຶນໝາຍເຖິງ ການນຳເອົາເງິນທຶນ, ຊັບສິນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເພື່ອດຳເນີນທຸລະກິດຢູ່ ສປປ ລາວ.

**2. ຜູ້ລົງທຶນ, (ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016).**

ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດທີ່ລົງທຶນຢູ່ພາຍໃນ ສປປ ລາວ ຫຼື ຢູ່ຕ່າງປະເທດຢ່າງຖືກຕ້ອງຕາມກົດໝາຍ.

**3. ການປຶກສາຫາລືກັບຊຸມຊົນ (FPIC)**

ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນໃນລາວ, ບ້ານ ແມ່ນຫົວໜ່ວຍນ້ອຍສຸດຂອງການປົກຄອງ ໃນ "ລະດັບຮາກຖານ" (ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ເລກທີ 68/ສພຊ, ລົງວັນທີ 14ທັນວາ 2015, ມາດຕາ178). ບ້ານ (ບາງຄັ້ງອາດເອີ້ນວ່າ "ຊຸມຊົນ") ແມ່ນປະກອບດ້ວຍຫຼາຍຄອບຄົວ. ໃນສາກົນ ໄດ້ມີວິທີປະຕິບັດທີ່ດີ ສຳລັບການປຶກສາຫາລືກັບຊຸມຊົນກ່ອນການດຳເນີນການລົງທຶນ ຄື "FPIC" ເຊິ່ງຫຍໍ້ມາຈາກ ຄຳວ່າ **Free Prior and Informed Consent ຫຼື ການຍິນຍອມ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ.** ການປຶກສາຫາລືກັບຊຸມຊົນ ເປັນສິດຂອງປະຊາຊົນໃນການຕັດສິນໃຈ ໂດຍທີ່ປະຊາຊົນໄດ້ຮັບຂໍ້ມູນຢ່າງເຕັມສ່ວນ ແລະ ພວກເຂົາເຈົ້າບໍ່ໄດ້ຖືກບັງຄັບ ຫລື ກົດດັນ (ກໍ່ຄື 'ດ້ວຍຄວາມສະມັກໃຈ') ແລະພວກເຂົາສາມາດໃຫ້ການຍິນຍອມ, ຖອນການຍິນຍອມ ຫຼື ປະຕິເສດການຍິນຍອມ ຕໍ່ກັບໂຄງການໃດໜຶ່ງ ທີ່ອາດສົ່ງຜົນກະທົບຕົວເຂົາເຈົ້າເອງ ແລະ ທີ່ດິນຂອງເຂົາເຈົ້າ. ຖ້າອີງຕາມເຄື່ອງມືຂອງສາກົນ, ສິດດັ່ງກ່າວນີ້ແມ່ນສຳລັບຊາວພື້ນເມືອງ ແຕ່ໃນມຸມມອງຂອງຫຼາຍພາກ ສ່ວນທີ່ກ່ຽວຂ້ອງ ເຫັນວ່າໝົດທຸກຄົນ ຄວນໄດ້ຮັບສິດ ທີ່ລະບຸໃນ ການປຶກສາຫາລືກັບຊຸມຊົນ. ກົດໝາຍຂອງລາວ ຍັງລະບຸວ່າຜູ້ໄດ້ຮັບຜົນກະທົບຈາກໂຄງການທຸກຄົນ ຄວນໄດ້ຮັບການປຶກສາຫາລື ແລະ ໄດ້ຮັບຂໍ້ມູນຢ່າງເຕັມສ່ວນ. ຫຼັກການການປຶກສາຫາລືກັບຊຸມຊົນ ລະບຸວ່າ ຊຸມຊົນມີສິດເຂົ້າເຖິງຂໍ້ມູນກ່ຽວກັບບັນດາໂຄງການທີ່ຈະເກີດຂຶ້ນ ໄດ້ຢ່າງເປີດເຜີຍ ແລະ ກ່ອນການດຳເນີນໂຄງການ, ຜູ້ລົງທຶນຕ້ອງໄດ້ໃຫ້ເວລາທີ່ພຽງພໍແກ່ຊຸມຊົນ ໃນການປຶກສາຫາລື ແລະ ຕັດສິນໃຈພາຍໃນເຂົາເຈົ້າເອງ ວ່າຈະຍິນຍອມ (ຫຼືປະຕິເສດ) ໂຄງການ. ຫຼັກການປຶກສາຫາລືກັບຊຸມຊົນ ຍັງຖືເປັນແນວທາງໃນການຈັດຕັ້ງປະຕິບັດຂະບວນການປຶກສາຫາລື ແລະ ການມີສ່ວນຮ່ວມຂອງຊຸມຊົນ. ປະໂຫຍດທີ່ຈະໄດ້ຈາກປະຕິບັດຕາມຫຼັກການປຶກສາຫາລືກັບຊຸມຊົນກໍ່ຄື ການຫຼຸດຜ່ອນຄວາມສ່ຽງທາງດ້ານ ສັງຄົມ, ເສດຖະກິດ ແລະການເມືອງໃນທຸກໆດ້ານ. ທ້າຍສຸດ, ຂະບວນການປຶກສາຫາລືກັບຊຸມຊົນ ຍັງສາມາດຊ່ວຍໃຫ້ຜູ້

ລົງທຶນໄດ້ຮັບ 'ການອະນຸຍາດໃຫ້ປະກອບກິດຈະການຈາກສັງຄົມ' (Social License to Operate) ກໍ່ຄື ການໄດ້ຮັບ ການອະນຸຍາດ ຫຼື ການຍອມຮັບໂດຍລວມ ຕໍ່ກັບໂຄງການລົງທຶນ ຈາກຊຸມຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ພາກສ່ວນທີ່ກ່ຽວຂ້ອງ. **(ຄູ່ມືພາກສະໜາມ ສໍາລັບ ການລົງທຶນທາງດ້ານກະສິກໍາ ແບບມີຄວາມຮັບຜິດຊອບ ທາງດ້ານສັງຄົມ ໃນ ສປປ ລາວ, ໜ້າທີ 7, ຂໍ້ 1, ຂອງອົງການບ້ານຈຸດສຸມສາກົນ)**

**4. ສັນຍາ (ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018, ມາດຕາ 364)**

ສັນຍາ ແມ່ນການຕົກລົງ ລະຫວ່າງ ຄູ່ສັນຍາ ຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.

ສັນຍາອາດຈະເຮັດຂຶ້ນລະຫວ່າງ:

1. ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ດ້ວຍກັນ;
2. ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ກັບ ນິຕິບຸກຄົນອື່ນ ຫຼື ບຸກຄົນ;
3. ນິຕິບຸກຄົນ ຫຼື ບຸກຄົນດ້ວຍກັນ;
4. ນິຕິບຸກຄົນ ກັບ ບຸກຄົນ.

**5. ກະສິກໍາ (ກົດໝາຍວ່າດ້ວຍກະສິກໍາ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998, ມາດຕາ 2. ກະສິກໍາ).**

ກະສິກໍາແມ່ນການປູກຝັງ, ການລ້ຽງສັດ ແລະ ການປະມົງ ເພື່ອຕອບສະໜອງທາງດ້ານທັນຍາຫານ ແລະ ອາຫານໃຫ້ແກ່ສັງຄົມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກໍາປຸງແຕ່ງ ລວມທັງເປັນສິນຄ້າຮັບໃຊ້ພາຍໃນ ແລະ ເພື່ອສົ່ງອອກ.

**6. ການຈັດແບ່ງຮູບແບບຂອງການຜະລິດ ກະສິກໍາ ເປັນສິນຄ້າແບບມີສັນຍາຕາມຮູບແບບຂອງການຮ່ວມທຶນ ແລະ ການແບ່ງຄວາມສ່ຽງ**

ໃນລາວ ການຜະລິດກະສິກໍາເປັນສິນຄ້າແບບມີສັນຍາ; ການລົງທຶນ ໃນຮູບແບບ "2+3" (ຊາວກະສິກອນ ແລະ ນັກລົງທຶນ) ໄດ້ຮັບການສະໜັບສະໜູນ ແລະ ຈັດຕັ້ງປະຕິບັດ ຢ່າງກວ້າງຂວາງ. ພາຍໃຕ້ຮູບແບບນີ້ , ຊາວກະສິກອນ ແມ່ນ ຮັບຜິດຊອບສໍາລັບ 2 ຢ່າງຄື: ທີ່ດິນ ແລະ ແຮງງານ ໃນຂະນະດຽວກັນນັກລົງທຶນແມ່ນຮັບຜິດຊອບ 3 ຢ່າງຄື: ຕະຫຼາດ, ທຶນ ແລະ ເຕັກໂນໂລຊີ. ແນວໃດກໍ່ຕາມ, ຮູບແບບຂອງການ ລົງທຶນມັກຈະມີການປ່ຽນແປງໄປມາ ລະຫວ່າງ 2+3, 3+2, 4+1 ແລະ 1+4. ຊຶ່ງມັນຂຶ້ນກັບຄວາມອາດສາມາດ ຂອງຊາວກະສິກອນ ແລະ ການຕົກລົງລະຫວ່າງງ ຊາວກະສິກອນ ກັບຜູ້ລົງທຶນ. (ບົດແນະນໍາສໍາລັບ ການອໍານວຍຄວາມສະດວກການຜະລິດກະສິກໍາ ເປັນສິນຄ້າແບບມີສັນຍາ, ປີ 2012, ພາກທີ 2, ຂໍ້ 2.2, ຂໍ້ ຂ, ຂອງກອງສົ່ງເສີມກະສິກໍາ ແລະ ປ່າໄມ້ແຫ່ງຊາດ ຮ່ວມກັບໂຄງການສົ່ງເສີມກະສິກໍາ)

## 7. ຫຼັກການສໍາລັບການລົງທຶນທີ່ມີຄວາມຮັບຜິດຊອບໃນ ສປປ ລາວ (ຄູ່ມືແນະນໍາການລົງທຶນດ້ານກະສິກໍາ ແລະ ປ່າໄມ້ແບບມີຄວາມຮັບຜິດຊອບຢູ່ ສປປ ລາວ, ພາກທີ II ຫຼັກການສໍາລັບການລົງທຶນທີ່ມີຄວາມຮັບຜິດຊອບໃນ ສປປ ລາວ)

ບັນດາຫຼັກການຕໍ່ໄປນີ້ ໄດ້ຖືກກໍານົດຂຶ້ນໂດຍອີງໃສ່ ບົດແນະນໍາການລົງທຶນ ຂອງ ສປ ຈີນ ແລະ ຍັງສອດຄ່ອງກັບບັນດາຫຼັກການສາກົນໂດຍເລັ່ງໃສ່ ເພື່ອເປັນຫຼັກການຊີ້ນໍາສໍາລັບການລົງທຶນທາງດ້ານກະສິກໍາ ແລະ ປ່າໄມ້ທີ່ມີຄວາມຮັບຜິດຊອບຊຶ່ງກ້າວໄປສູ່ຄວາມຍືນຍົງໃນອະນາຄົດໂດຍປະກອບມີຫຼັກການດັ່ງລຸ່ມນີ້:

1. ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ
2. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ
3. ການເຄົາລົບສິດທິຂອງປະຊາຊົນໃນການນໍາໃຊ້ທີ່ດິນ
4. ການປະກອບສ່ວນເຂົ້າໃນການພັດທະນາສັງຄົມ
5. ການນໍາໃຊ້ແຮງງານທ້ອງຖິ່ນ ແລະ ຄວາມປອດໄພຂອງແຮງງານ
6. ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ
7. ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.

## V. ກົດໝາຍທີ່ກ່ຽວຂ້ອງ

### 1. ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018

#### ມາດຕາ 17 ເງື່ອນໄຂຂອງນິຕິກຳ

ນິຕິກຳ ທີ່ເຮັດຂຶ້ນ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ວັດຖຸປະສົງ;
2. ຄວາມສະໝັກໃຈ;
3. ຄວາມສາມາດທາງດ້ານການປະພຶດ;
4. ຮູບການ.

#### ມາດຕາ 18 ວັດຖຸປະສົງ

ວັດຖຸປະສົງຂອງນິຕິກຳ ແມ່ນ ເປົ້າໝາຍທີ່ຜູ້ເຮັດນິຕິກຳ ຕ້ອງການໃຫ້ມີຂຶ້ນ.

ເປົ້າໝາຍນິຕິກຳ ຕ້ອງໃຫ້ຊັດເຈນ, ມີຈິງ, ຖືກຕ້ອງຕາມໝາຍ ຫຼື ບໍ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສາມາດປະຕິບັດໄດ້.

#### ມາດຕາ 19 ຄວາມສະໝັກໃຈ

ຄວາມສະໝັກໃຈຂອງຜູ້ເຮັດນິຕິກຳ ແມ່ນຄວາມພໍໃຈໃນການເຮັດນິຕິກຳ ໂດຍປາສະຈາກ ການຫຼົງຜິດ, ການຕົວະຍົວະຫຼອກລວງ, ການບັງຄັບນາບຂູ່ ຫຼື ການໃຊ້ຄວາມຮຸນແຮງ ຫຼື ຄວາມອັບປະໂຫຍດຂອງຝ່າຍໃດໜຶ່ງ.

ການຫຼົງຜິດ ແມ່ນການເຮັດນິຕິກຳ ໂດຍບໍ່ສອດຄ່ອງກັບເຈດຈຳນົງທີ່ແທ້ຈິງ ຂອງຜູ້ເຮັດນິຕິກຳ.

ການຕົວະຍົວະຫຼອກລວງ ແມ່ນການທີ່ບຸກຄົນໜຶ່ງ ໃຊ້ກົນອຸບາຍໃດໜຶ່ງ ຫຼື ວິທີການອື່ນ ພາໃຫ້ອີກບຸກຄົນໜຶ່ງ ຫຼົງເຊື່ອເຮັດນິຕິກຳ.

ການບັງຄັບນາບຂູ່ ຫຼື ການໃຊ້ຄວາມຮຸນແຮງ ແມ່ນການທີ່ບຸກຄົນໜຶ່ງ ໃຊ້ກຳລັງ, ຂົ່ມຂູ່ ຫຼື ກະທຳໃດໜຶ່ງ ຊຶ່ງເຮັດໃຫ້ຢ້ານກົວຕໍ່ອັນຕະລາຍ ທີ່ຈະເກີດຂຶ້ນແກ່ ຊີວິດ, ສຸຂະພາບ, ຊັບສິນ, ອິດສະລະພາບ, ຊື່ສຽງ, ກຽດສັກສີຂອງຕົນ, ຄອບຄົວ, ຍາດພີ່ນ້ອງ ເພື່ອໃຫ້ຍອມເຮັດນິຕິກຳ.

ຄວາມອັບປະໂຫຍດຂອງຝ່າຍໃດໜຶ່ງ ແມ່ນຜົນປະໂຫຍດທີ່ເກີດຈາກນິຕິກຳນັ້ນ ບໍ່ເປັນທຳ.

## ມາດຕາ 20 ຄວາມສາມາດທາງດ້ານການປະພຶດ

ຄວາມສາມາດທາງດ້ານການປະພຶດຂອງຜູ້ເຮັດນິຕິກຳ ແມ່ນຄວາມສາມາດໃນການກະທຳດ້ວຍຕົນເອງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພາໃຫ້ເກີດສິດ ແລະ ພັນທະແກ່ຕົນ.

## ມາດຕາ 364 ສັນຍາ

ສັນຍາ ແມ່ນການຕົກລົງ ລະຫວ່າງ ຄູ່ສັນຍາ ຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.

ສັນຍາອາດຈະເຮັດຂຶ້ນລະຫວ່າງ:

5. ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ດ້ວຍກັນ;
6. ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ກັບ ນິຕິບຸກຄົນອື່ນ ຫຼື ບຸກຄົນ;
7. ນິຕິບຸກຄົນ ຫຼື ບຸກຄົນດ້ວຍກັນ;
8. ນິຕິບຸກຄົນ ກັບ ບຸກຄົນ.

## ມາດຕາ 365 ລັກສະນະຂອງສັນຍາ

ສັນຍາ ອາດຈະມີລັກສະນະ ຝ່າຍດຽວ ຫຼື ສອງຝ່າຍ.

ສັນຍາຝ່າຍດຽວ ແມ່ນການຕົກລົງ ທີ່ຝ່າຍດຽວມີພັນທະ ຊຶ່ງຕ້ອງປະຕິບັດຕໍ່ອີກຝ່າຍໜຶ່ງ ໂດຍບໍ່ມີການຕອບແທນ.

ສັນຍາສອງຝ່າຍ ແມ່ນການຕົກລົງ ຊຶ່ງໃນນັ້ນແຕ່ລະຝ່າຍ ມີພັນທະຕໍ່ກັນ.

## ມາດຕາ 366 ເງື່ອນໄຂຂອງສັນຍາ

ເງື່ອນໄຂຂອງສັນຍາ ໃຫ້ປະຕິບັດຕາມເງື່ອນໄຂຂອງນິຕິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງປະມວນກົດໝາຍສະບັບນີ້.

ນອກຈາກນີ້ ສັນຍາຍັງຕ້ອງມີເຫດຜົນ ທີ່ຖືກຕ້ອງຕາມກົດໝາຍ.

## ມາດຕາ 367 ຄວາມສະໝັກໃຈຂອງຄູ່ສັນຍາ

ຄວາມສະໝັກໃຈຂອງຄູ່ສັນຍາ ແມ່ນຄວາມສະໝັກໃຈ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງປະມວນກົດໝາຍສະບັບນີ້.

## ມາດຕາ 368 ເຫດຜົນຂອງສັນຍາ

ເຫດຜົນຂອງສັນຍາ ແມ່ນສິ່ງຊຸກຍູ້ໃຫ້ເຮັດສັນຍາ ແລະ ໃຫ້ຄູ່ສັນຍານັ້ນ ໄດ້ປະຕິບັດສິດ ແລະ ພັນທະຂອງຕົນ.

ເຫດຜົນຂອງສັນຍາ ຕ້ອງໃຫ້ມີຈິງ ແລະ ຖືກຕ້ອງຕາມກົດໝາຍ.

## ມາດຕາ 369 ຮູບການຂອງສັນຍາ

ຮູບການຂອງສັນຍາ ໃຫ້ອີງຕາມຮູບການ ທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງປະມວນກົດໝາຍສະບັບນີ້.

ສັນຍາທີ່ເຮັດເປັນລາຍລັກອັກສອນອາດຈະຂຽນດ້ວຍ ມື, ພິມດີດ ຫຼື ພິມດ້ວຍເຄື່ອງເອເລັກໂຕຣນິກ ໂດຍຄູ່ສັນຍາເອງ ຫຼື ຜູ້ຕາງໜ້າ ແລະ ຕ້ອງລົງວັນທີ, ເດືອນ, ປີ, ມີລາຍເຊັນຂອງຄູ່ສັນຍາ ຫຼື ຜູ້ຕາງໜ້າຂອງຄູ່ສັນຍາ ຫຼື ຄູ່ສັນຍາ ອາດຈະແປະໂປ້ມືຂອງຕົນໃສ່ຕື່ມອີກກໍໄດ້.

ສັນຍາທີ່ເຮັດເປັນລາຍລັກອັກສອນ ອາດມີການເຂົ້າຮ່ວມຂອງພະຍານ ຫຼື ນາຍບ້ານ ເພື່ອຢັ້ງຢືນການເຮັດສັນຍານັ້ນກໍໄດ້.

ຄູ່ສັນຍາ ສາມາດນຳເອົາສັນຍາເປັນລາຍລັກອັກສອນໄປຢັ້ງຢືນຄວາມຖືກຕ້ອງ, ສອດຄ່ອງກັບຄວາມເປັນຈິງ ແລະ ກົດໝາຍ ນຳນາຍທະບຽນສານ.

## ມາດຕາ 391 ການບໍ່ປະຕິບັດສັນຍາ

ການບໍ່ປະຕິບັດສັນຍາ ແມ່ນການລະເມີດສັນຍາທັງໝົດ ຫຼື ບາງສ່ວນ ຫຼື ການປະຕິບັດສັນຍາໂດຍບໍ່ສົມເຫດສົມຜົນຂອງຄູ່ສັນຍາຝ່າຍໃດໜຶ່ງ ເຊັ່ນ: ການປະຕິບັດສັນຍາ ບໍ່ມີຄຸນນະພາບ, ບໍ່ທັນກັບເວລາ, ບໍ່ຖືກສະຖານທີ່.

## ມາດຕາ 392 ຜົນສະທ້ອນຂອງການບໍ່ປະຕິບັດສັນຍາ

ຖ້າສັນຍາຝ່າຍໃດໜຶ່ງ ຫາກບໍ່ປະຕິບັດສັນຍາ ຝ່າຍທີ່ຖືກລະເມີດມີສິດທວງໃຫ້ປະຕິບັດສັນຍາ, ໃຊ້ແທນຄວາມເສຍຫາຍ ຫຼື ຍົກເລີກສັນຍາ.

## ມາດຕາ 393 ການທວງໃຫ້ປະຕິບັດສັນຍາ

ສັນຍາທີ່ມີຜົນບັງຄັບຕໍ່ຄູ່ສັນຍາແລ້ວ ຕ້ອງນຳມາປະຕິບັດຕາມເນື້ອໃນທີ່ໄດ້ຕົກລົງຢ່າງເຂັ້ມງວດ. ຖ້າຄູ່ສັນຍາຝ່າຍໃດໜຶ່ງ ຫາກບໍ່ປະຕິບັດ, ອີກຝ່າຍໜຶ່ງ ກໍມີສິດທວງໃຫ້ຝ່າຍນັ້ນ ປະຕິບັດ ຫຼື ຮ້ອງຟ້ອງຕໍ່ສານ.

## 2. ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016

### ມາດຕາ 67 ສິດຂອງຜູ້ລົງທຶນ

ສິດຂອງຜູ້ລົງທຶນມີດັ່ງນີ້:

1. ລົງທຶນໃນທຸກຂະແໜງການ ແລະ ທຸກເຂດລົງທຶນທີ່ບໍ່ຫວງຫ້າມຕາມກົດໝາຍຂອງ ສປປ ລາວ;
2. ລົງທຶນຕາມປະເພດ, ຮູບການ ແລະ ຮູບແບບວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ ໃນກົດ ໝາຍ ແລະ ລະບຽບການ;
3. ຂໍສຳປະທານໂຄງການນຳລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຫຼວງ ຕາມແຕ່ລະກໍລະນີເພື່ອພັດທະນາໂຄງການໃດໜຶ່ງ;
4. ຂໍສຳປະທານສ້າງຕັ້ງເຂດເສດຖະກິດພິເສດນຳລັດຖະບານ;
5. ຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນຢູ່ ສປປ ລາວ;
6. ຂໍປ່ຽນວັດຖຸປະສົງ ຫຼື ກິດຈະການລົງທຶນ ໃນກໍລະນີທີ່ການດຳເນີນທຸລະກິດຂອງຕົນ ຫາກບໍ່ມີປະສິດທິຜົນ ເນື່ອງຈາກການປ່ຽນແປງດ້ານນະໂຍບາຍ, ກົດໝາຍ ແລະ ລະບຽບການ;
7. ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
8. ໄດ້ຮັບການອຳນວຍຄວາມສະດວກຈາກລັດໃນດ້ານຕ່າງໆ ໃນການລົງທຶນຂອງຕົນ;
9. ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
10. ສຳລັບຜູ້ເຊົ່າ ຫຼື ສຳປະທານທີ່ດິນ ມີສິດໃຊ້ທີ່ດິນຕາມອາຍຸເຊົ່າ ຫຼື ສຳປະທານ, ໃຫ້ສືບທອດສັນຍາເຊົ່າທີ່ດິນ ຕາມອາຍຸຂອງສັນຍາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
11. ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ ລວມທັງຕຶກ, ອາຄານ ຫຼື ສິ່ງປຸກສ້າງໃນທີ່ດິນປຸກສ້າງທີ່ໄດ້ຮັບສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;
12. ເປີດບັນຊີເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ;
13. ຍື່ນຄຳຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນ ຖືກອັບປະໂຫຍດໃນການລົງທຶນ;
14. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 68 ສິດໃນການຄຸ້ມຄອງ, ບໍລິຫານກິດຈະການການລົງທຶນຂອງຕົນ

ສິດໃນການຄຸ້ມຄອງ, ບໍລິຫານກິດຈະການການລົງທຶນຂອງຕົນ ມີດັ່ງນີ້:

1. ການວາງແຜນການລົງທຶນ;
2. ຈັດຫາ ແລະ ນຳໃຊ້ວັດຖຸອຸປະກອນ, ພາຫະນະ, ກົນຈັກ ແລະ ເຕັກໂນໂລຊີຕ່າງໆ ເຂົ້າໃນການລົງທຶນ;
3. ເຂົ້າເຖິງຕະຫຼາດພາຍໃນ ແລະ ຕ່າງປະເທດ;
4. ຄຸ້ມຄອງແຮງງານໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມປອດໄພ ແລະ ມີຄວາມສະດວກໃນການເຄື່ອນໄຫວທຸລະກິດ;
5. ດຳເນີນກອງປະຊຸມ ເພື່ອປຶກສາຫາລືກ່ຽວກັບການລົງທຶນ;
6. ມອບ ຫຼື ໂອນຮຸ້ນ ໃຫ້ຜູ້ລົງທຶນອື່ນ;
7. ຫຼຸດ ຫຼື ເພີ່ມທຶນ ຂອງກິດຈະການການລົງທຶນ;
8. ສະເໜີຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາກ່ຽວກັບການຄວບຄຸມ, ໂຈະ, ຍຸບເລີກ ຫຼື ປ່ຽນຮູບແບບວິສາຫະກິດຂອງຕົນ;
9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 69 ສິດໃນການວ່າຈ້າງແຮງງານ

ສິດໃນການວ່າຈ້າງແຮງງານ ມີດັ່ງນີ້:

1. ເຊັນສັນຍາວ່າຈ້າງແຮງງານກັບນັກວິຊາການ, ຜູ້ຊ່ຽວຊານ ເພື່ອເຂົ້າມາເຮັດວຽກໃນວິສາຫະກິດຂອງຕົນ. ໃນກໍລະນີ ກິດຈະການລົງທຶນຫາກມີຄວາມຈຳເປັນນຳເຂົ້າຜູ້ອອກແຮງງານດ້ານຮ່າງກາຍ ແລະ ມັນສະໝອງ ເກີນອັດຕາສ່ວນທີ່ໄດ້ກຳນົດໄວ້ ໃນກົດໝາຍແຮງງານ ຜູ້ລົງທຶນມີສິດສະເໜີຕໍ່ຫ້ອງການການລົງທຶນປະຕູດຽວ ເພື່ອຄົ້ນຄວ້າ ແລະ ນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕາມຄວາມເໝາະສົມ;
2. ສັບຊ້ອນ, ຈັດວາງຜູ້ອອກແຮງງານເຂົ້າໃນຕຳແໜ່ງງານຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຂອງວິສາຫະກິດຕົນ;
3. ປະຕິບັດນະໂຍບາຍ ຫຼື ມາດຕະການຕໍ່ຜູ້ອອກແຮງງານ ຢ່າງຖືກຕ້ອງຕາມກົດໝາຍ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

## ມາດຕາ 70 ສິດໃນການຢູ່ອາໄສສຳລັບຜູ້ລົງທຶນຕ່າງປະເທດ

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ ມີສິດອາໄສຢູ່ດິນແດນ ສປປ ລາວ ຕາມໄລຍະເວລາຂອງການລົງທຶນ. ນັກວິຊາການ, ຜູ້ຊ່ຽວຊານ ຕ່າງປະເທດ ມີສິດອາໄສຢູ່ດິນແດນຂອງ ສປປ ລາວ ຕາມສັນຍາວ່າຈ້າງແຮງງານ.

## ມາດຕາ 71 ສິດຂອງຜູ້ລົງທຶນຕ່າງປະເທດໃນການສົ່ງທຶນ, ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ

ຜູ້ລົງທຶນຕ່າງປະເທດ ມີສິດສົ່ງທຶນ, ຊັບສິນ ແລະ ລາຍຮັບຂອງຕົນ ເປັນຕົ້ນ ກຳໄລຈາກການລົງທຶນ, ເງິນ ແລະ ຊັບສິນຕ່າງໆ ທີ່ເປັນກຳມະສິດສ່ວນຕົວ ຫຼື ຂອງວິສາຫະກິດ ອອກໄປຕ່າງປະເທດ ໂດຍຜ່ານທະນາຄານທີ່ຕັ້ງຢູ່ ສປປ ລາວ ແລະ ການຈັດຕັ້ງລັດທີ່ກ່ຽວຂ້ອງ ພາຍຫຼັງທີ່ໄດ້ປະຕິບັດພັນທະດ້ານພາສີ, ອາກອນ ແລະ ຄ່າທຳນຽມ ໃຫ້ລັດຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

ການໂອນຊັບສິນທີ່ເປັນທຶນ ຫຼື ເງິນ ປະກອບດ້ວຍ:

1. ທຶນທີ່ຜ່ານການຢັ້ງຢືນ ຂອງທະນາຄານແຫ່ງ ສປປ ລາວ;
2. ກຳໄລ, ເງິນປັນຜົນ, ລາຍຮັບຈາກການໃຫ້ເຊົ່າລິຂະສິດ, ຊັບສິນທາງປັນຍາ, ລາຍຮັບຈາກການບໍລິການດ້ານເຕັກນິກວິຊາການ, ດອກເບ້ຍ ແລະ ລາຍໄດ້ອື່ນ ຈາກການລົງທຶນ;
3. ເງິນທີ່ໄດ້ຈາກການຂາຍທຸລະກິດ, ຂາຍກິດຈະການ, ຍົກເລີກກິດຈະການທັງໝົດ ຫຼື ສ່ວນໃດໜຶ່ງ;
4. ເງິນທີ່ໄດ້ຮັບຈາກການຊຳລະພາຍໃຕ້ສັນຍາໃດໜຶ່ງ ຊຶ່ງລວມທັງສັນຍາເງິນກູ້, ເງິນທີ່ໄດ້ຈາກຜົນການຕັດສິນຈາກການໄກ່ເກ່ຍຂໍ້ຂັດແຍ່ງ ຫຼື ການຕັດສິນຈາກສານ ທີ່ອາດພົວພັນ ຫຼື ບໍ່ພົວພັນກັບກິດຈະການການລົງທຶນ;
5. ເງິນຊົດເຊີຍ ຫຼື ເງິນຊຳລະອື່ນ ທີ່ໄດ້ຮັບການຮິບຊັບ ຫຼື ການຫັນເປັນຊັບສິນຂອງລັດ;
6. ລາຍໄດ້ ແລະ ເງິນຕອບແທນຂອງພະນັກງານຕ່າງປະເທດ ທີ່ຖືກຈ້າງເຮັດວຽກຢ່າງຖືກຕ້ອງຕາມກົດໝາຍ.

## ມາດຕາ 72 ພັນທະຕໍ່ລັດ

ຜູ້ລົງທຶນມີພັນທະຕໍ່ລັດດັ່ງນີ້:

1. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຖືບັນຊີຕາມກົດໝາຍວ່າດ້ວຍ ການບັນຊີຂອງລາວ ໃນກໍລະນີທີ່ຈຳເປັນກໍສາມາດນຳໃຊ້ລະບົບບັນຊີອື່ນ ທີ່ສາກົນຮັບຮູ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນຂອງ ສປປ ລາວ;
3. ໃຫ້ຄວາມຮ່ວມມື ແລະ ປະສານງານ ເປັນຢ່າງດີກັບອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທຸລະກິດ;
4. ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານແມ່ຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ;

5. ປະກອບສ່ວນທາງດ້ານງົບປະມານໃນວຽກງານ ຕິດຕາມ, ກວດກາໂຄງການລົງທຶນ;
6. ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນປະຈຳສາມເດືອນ, ຫົກເດືອນ ແລະ ປະຈຳປີຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 73 ພັນທະດ້ານສັງຄົມ

ຜູ້ລົງທຶນ ມີພັນທະດ້ານສັງຄົມດັ່ງນີ້:

1. ປະຕິບັດລະບອບປະກັນສັງຄົມ ແລະ ປະກັນໄພຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນໃນວິສາຫະກິດຂອງຕົນ ໂດຍສະເພາະແມ່ນອົງການຈັດຕັ້ງກຳມະບານ;
3. ເຄົາລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນາທຳອັນດີງາມຂອງທ້ອງຖິ່ນ;
4. ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກການດຳເນີນທຸລະກິດຂອງຕົນ;
5. ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;
6. ປະກອບສ່ວນທາງດ້ານງົບປະມານ ໃນວຽກງານພັດທະນາສັງຄົມ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ;
8. ມາດຕາ 74 ພັນທະດ້ານສິ່ງແວດລ້ອມ
9. ຜູ້ລົງທຶນມີພັນທະດ້ານສິ່ງແວດລ້ອມດັ່ງນີ້:
10. ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືສຳຄັນການປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;
11. ໃນກໍລະນີ ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີ່ຈຳເປັນເພື່ອແກ້ໄຂສະພາບດັ່ງກ່າວຢ່າງທັນການ ຕາມກົດໝາຍ ແລະ ລະບຽບການ;
12. ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມສົນທິສັນຍາ ຫຼື ສັນຍາສາກົນທີ່ ສປປ ລາວເປັນພາຄີ;
13. ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ;
14. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 94 ການແກ້ໄຂຂໍ້ຂັດແຍ່ງດ້ວຍການປະນີປະນອມກັນ

ໃນກໍລະນີ ທີ່ມີຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີຕ້ອງດຳເນີນການແກ້ໄຂຂໍ້ຂັດແຍ່ງນຳກັນໂດຍສັນຕິວິທີ, ປະນີປະນອມກັນ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

## ມາດຕາ 95 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດຂໍ້ຂັກແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີ ຫຼື ຝ່າຍໃດຝ່າຍໜຶ່ງ ສາມາດສະເໜີຂໍ້ຂັດແຍ່ງ ຜ່ານຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອສະເໜີຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາແກ້ໄຂຕາມກົດໝາຍ.

## ມາດຕາ 97 ການຮ້ອງຟ້ອງຕໍ່ສານ

ໃນກໍລະນີ ເກີດມີຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນຕາມກົດໝາຍຂອງ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວເປັນພາຄີ. ເມື່ອມີຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ມີຜົນບັງຄັບປະຕິບັດຕໍ່ຄູ່ກໍລະນີ.

## 3. ກົດໝາຍວ່າດ້ວຍ ແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013

### ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານແຮງງານ

ວຽກງານແຮງງານ ໃຫ້ເຄື່ອນໄຫວບົນພື້ນຖານຫຼັກການ ດັ່ງນີ້:

1. ດຳເນີນບົນພື້ນຖານສັນຍາແຮງງານ ລະຫ່ວາງຜູ້ອອກແຮງງານ ແລະ ຜູ້ ໃຊ້ແຮງງານ, ຮັກປະການ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ໂດຍບໍ່ມີການຈຳແນກ;
2. ຮັບປະກັນເງື່ອນໄຂໃນການອອກແຮງງານທີ່ປອດໄພ, ຈ່າຍເງິນເດືອນ ຫຼື ຄ່າແຮງງານຢ່າງຍຸຕິທຳ ແລະ ປະຕິບັດຕາມລະບອກປະກັນສັງຄົມ ໃຫ້ຜູ້ອອກແຮງງານ;
3. ຮັບປະກັນນຳໃຊ້ແຮງງານລາວ ໄປຄຽງຄູ່ກັບການຮັບເອົາແຮງງານຕ່າງປະເທດຢ່າງສົມສ່ວນ;
4. ຮັບປະກັນສິດໃນການເປັນສະມາຊິກ ແລະ ສ້າງຕັ້ງອົງການຈັດຕັ້ງມະມາຊົນ ແລະ ອົງການຈັດຕັ້ງສັງຄົມ ທີ່ຖືກຕ້ອງຕາມກົດໝາຍຢູ່ຫົວໜ່ວຍງານ;
5. ນຳໃຊ້ແຮງງານໄປຄຽງຄູ່ກັບການສ້າງ ແລະ ກາພັດທະນາສີມືແຮງງານ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດສັງຄົມ ແຫ່ງຊາດ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ;
6. ຮັບປະການຫຼັກການດຸດ່ຽງແຮງງານ ຕາມໂຄງປະກອບເສດຖະກິດ;
7. ບໍ່ອະນຸຍາດໃຫ້ນຳໃຊ້ແຮງານດ້ວຍການບັງຄັບໃນທຸກຮູບແບບ;
8. ປະຕິບັດຫຼັກການສາມຝ່າຍ, ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 51 (ປັບປຸງ) ເວລາເຮັດວຽກ

ຜູ້ໃຊ້ແຮງງານ ຕ້ອງກຳນົດເວລາເຮັດວຽກ ແລະ ເວລາພັກຜ່ອນ ໃຫ້ຜູ້ອອກແຮງງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບສະຖານທີ່ຕັ້ງ ຂອງຫົວໜ່ວຍແຮງງານ ແລະ ເງື່ອນໄຂຕົວຈິງຂອງວຽກ.

ເວລາເຮັດວຽກປົກກະຕິຂອງຜູ້ອອກແຮງງານໃນທຸກຫົວໜ່ວຍແຮງງານ ບໍ່ໃຫ້ເກີນ ຫົກວັນຕໍ່ອາທິດ ແລະ ແປດຊົ່ວໂມງຕໍ່ວັນ ຫຼື ອາທິດໜຶ່ງບໍ່ໃຫ້ເກີນ ສີ່ສິບແປດຊົ່ວໂມງ ໂດຍບໍ່ຂຶ້ນກັບປະເພດການຮັບເງິນເດືອນ ຫຼື ຄ່າແຮງງານ.

ເວລາພັກຜ່ອນເພື່ອຮັບປະທານອາຫານທ່ຽງບໍ່ໃຫ້ຫຼຸດ ຫົກສິບນາທີ ຊຶ່ງບໍ່ໃຫ້ນັບເຂົ້າໃນເວລາເຮັດວຽກປະຈຳ.

ສຳລັບອາຊີບ ຫຼື ຂະແໜງການເສດຖະກິດໃດໜຶ່ງທີ່ມີຄວາມຈາເປັນ ຫົວໜ່ວຍແຮງງານກໍສາມາດກຳນົດເວລາເຮັດວຽກສະເພາະໄດ້ ໂດຍການເຫັນດີຈາກອົງການຄຸ້ມຄອງວຽກງານແຮງງານພາຍຫຼັງມີການປຶກສາຫາລື ແລະ ເປັນເອກະພາບກັບສາມຝ່າຍ.

ຜູ້ອອກແຮງງານທີ່ອະນຸຍາດໃຫ້ເຮັດວຽກບໍ່ເກີນ ຫົກຊົ່ວໂມງຕໍ່ວັນ ຫຼື ສາມສິບຫົກຊົ່ວໂມງຕໍ່ອາທິດ ແມ່ນວຽກກ່ຽວກັບ:

ກຳມັນຕະພາບລັງສີ ຫຼື ພະຍາດຕິດແປດ;

- ກິ່ນອາຍ, ຄວັນ ທີ່ເປັນອັນຕະລາຍຕໍ່ສຸຂະພາບ;
- ວັດຖຸ, ສານເຄມີທີ່ເປັນອັນຕະລາຍເປັນຕົ້ນ ວັດຖຸລະເບີດ;
- ຢູ່ຂຸມ ຫຼື ອຸໂມງໃຕ້ດິນ, ຢູ່ພື້ນນ້ຳ ຫຼື ຢູ່ບ່ອນສູງ;
- ສະຖານທີ່ຊຶ່ງມີຄວາມຮ້ອນ ຫຼື ຄວາມເຢັນ ຜິດປົກກະຕິ;
- ເຄື່ອງມື ສັ່ນສະເທືອນເປັນປະຈຳ.

ນອກຈາກນີ້ ຍັງມີວຽກອັນຕະລາຍອື່ນ ຊຶ່ງໄດ້ກຳນົດໄວ້ໃນສາລະບານສະເພາະ.

ເວລາເຮັດວຽກປົກກະຕິ ອາດຈະຫຼຸດລົງຕາມຄວາມເໝາະສົມ ໃນກໍລະນີທີ່ເຫັນວ່າ ຄວາມເປັນອັນຕະລລາຍ ຢູ່ໃນໜ້າວຽກບໍ່ສາມາດປ້ອງກັນ ຫຼື ຄວບຄຸມໄດ້.

## ມາດຕາ 55 (ປັບປຸງ) ວັນພັກທາງລັດຖະການ ແລະ ພັກບຸນປະເພນີ

ຜູ້ອອກແຮງງານມີສິດພັກວຽກ ໃນວັນພັກທາງລັດຖະການ ໂດຍໄດ້ຮັບເງິນເດືອນ ຫຼື ຄ່າແຮງງານປົກກະຕິດັ່ງນີ້:

1. ວັນຊາດ ວັນທີ 2 ທັນວາ ພັກ ໜຶ່ງວັນ;
2. ວັນບຸນປີໃໝ່ສາກົນ ວັນທີ 1 ມັງກອນ ພັກ ໜຶ່ງວັນ;
3. ວັນແມ່ຍິງສາກົນ ວັນທີ່ 8 ມີນາ ພັກ ໜຶ່ງວັນ ສຳລັບເພດຍິງ;
4. ວັນບຸນປີໃໝ່ລາວ ພັກ ສາມວັນ;
5. ວັນກຳມະກອນສາກົນ ວັນທີ 1 ພຶດສະພາ ພັກ ໜຶ່ງວັນ;
6. ວັນຄູແຫ່ງຊາດ ວັນທີ 7 ຕຸລາ ພັກ ໜຶ່ງວັນ ສຳລັບຄູ ແລະ ຜູ້ບໍລິຫານການສຶກສາ;
7. ຜູ້ອອກແຮງງານຕ່າງປະເທດ ໃຫ້ພັກ ໜຶ່ງວັນ ສຳລັບວັນຊາດຂອງຕົນ.

ໃນກໍລະນີ ວັນພັກທາງລັດຖະການ ຫາກກົງກັບວັນພັກປະຈຳອາທິດນັ້ນ ໃຫ້ມີການພັກທົດແທນຄືນ. ສຳລັບວັນພັກບຸນປະເພນີ ໃຫ້ອີງຕາມການຕົກລົງກັນ ລະຫ່ວາງ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ.

## ມາດຕາ 56 ການພັກວຽກເນື່ອງຈາກການເຈັບເປັນ

ຜູ້ອອກແຮງງານທີ່ເຮັດວຽກຕາມລະບອບເງິນເດືອນ ມີສິດພັກວຽກ ຍ້ອນການເຈັບເປັນ ໂດຍມີການຢັ້ງຢືນຈາກແພດ ທັງໝົດບໍ່ໃຫ້ເກີນ ສາມສິບວັນ ໃນໜຶ່ງປີ ໂດຍໄດ້ຮັບເງິນເດືອນ ຫຼື ຄ່າແຮງງານເຕັມຕາມປົກກະຕິ.

ສຳລັບຜູ້ອອກແຮງງານ ທີ່ໄດ້ຮັບຄ່າແຮງງານເປັນວັນ, ເປັນຊົ່ວໂມງ, ຕາມຜະລິດຕະພັນ ຫຼື ຕາມການມອບເໝົາ ທີ່ມີສັນຍາແຮງງານນຳກັນ ທີ່ເຮັດວຽກເກີນ ເກົ້າສິບວັນ ຈະໄດ້ຮັບເງິນຄ່າແຮງງານໃນເວລາພັກເນື່ອງຈາກການເຈັບເປັນ.

ບົດບັນຍັດ ຂອງມາດຕານີ້ ບໍ່ໃຫ້ນຳໃຊ້ສຳລັບການພັກວຽກຍ້ອນການເຈັບເປັນ ທີ່ເນື່ອງມາຈາກອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ.

## ມາດຕາ 57 (ປັບປຸງ) ການພັກວຽກປະຈຳປີ

ຜູ້ອອກແຮງງານ ທີ່ໄດ້ເຮັດວຽກຕິດຕໍ່ກັນຄົບ ໜຶ່ງປີ ມີສິດໄດ້ພັກປະຈາປີ ສິບຫ້າວັນ. ສາລັບຜູ້ອອກແຮງງານທີ່ເຮັດວຽກໃນຂະແໜງວຽກງານ ທີ່ເປັນອັນຕະລາຍຕໍ່ສຸຂະພາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51ຂອງກົດໝາຍສະບັບນີ້ ມີສິດພັກວຽກປະຈຳປີ ສິບແປດວັນ ໂດຍແມ່ນຜູ້ໃຊ້ແຮງງານ ເປັນຜູ້ກຳນົດວັນພັກດັ່ງກ່າວລ່ວງໜ້າ ໃຫ້ຜູ້ອອກແຮງງານ ຫຼື ຕາມການຕົກລົງເຫັນດີ ລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ.

ການພັກປະຈຳປີ ທັງສອງກໍລະນີຂ້າງເທິງນີ້ ຜູ້ອອກແຮງງານ ມີສິດໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ເຕັມຕາມປົກກະຕິ.

ວັນພັກປະຈຳອາທິດ, ວັນພັກທາງລັດຖະການ, ວັນພັກບຸນປະເພນີ ແລະ ວັນພັກກິດທຸລະສ່ວນຕົວ ບໍ່ໃຫ້ນັບເຂົ້າໃນວັນພັກວຽກປະຈຳປີ.

ຖ້າຜູ້ອອກແຮງງານ ຫາກບໍ່ໄດ້ພັກວຽກປະຈຳປີ ອັນເນື່ອງມາຈາກເຫດຜົນ ຂອງຜູ້ໃຊ້ແຮງງານນັ້ນ ຜູ້ໃຊ້ແຮງງານຕ້ອງໄດ້ຈ່າຍເງິນຄ່າແຮງງານເພີ່ມໃຫ້ຜູ້ອອກແຮງງານເທົ່າກັບ ຮ້ອຍສ່ວນຮ້ອຍ ຂອງຄ່າແຮງງານປົກກະຕິ ຕາມຈຳນວນວັນທີ່ບໍ່ໄດ້ພັກ.

## ມາດຕາ 71 (ປັບປຸງ) ການເຂົ້າປະກັນສັງຄົມ

ທຸກຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ ຕ້ອງເຂົ້າປະກັນຕົນ ແລະ ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ເພື່ອໄດ້ຮັບການອຸດໜູນປະກັນສັງຄົມ ປະເພດຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະກັນສັງຄົມ.

ໃນກໍລະນີຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ຍັງບໍ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ຫຼື ຈ່າຍແລ້ວ ແຕ່ຍັງບໍ່ທັນຄົບເງື່ອນໄຂທີ່ຈະໄດ້ຮັບການອຸດໜູນ ຜູ້ໃຊ້ແຮງງານຕ້ອງຮັບຜິດຊອບຕາມລະບຽບກົດໝາຍ.

## ມາດຕາ 75 ( ປັບປຸງ) ສັນຍາແຮງງານ

ສັນຍາແຮງງານແມ່ນ ການຕົກລົງລະຫ່ວາງ ຜູ້ອອກແຮງງານ ກັບ ຜູ້ ໃຊ້ແຮງງານ ຫຼື ລະຫ່ວາງ ຜູ້ຕາງໜ້າຜູ້ອອກແຮງງານ ກັບ ຜູ້ຕາງໜ້າຜູ້ໃຊ້ແຮງງານ ກ່ຽວກັບເງື່ອນໄຂການເຮັດວຽກ ເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ ແລະ ນະໂຍບາຍອື່ນ.

ສັນຍາແຮງງານ ຕ້ອງສ້າງຂຶ້ນບົນພື້ນຖານຫຼັກການສະເໝີພາບ ເຫັນດີເຫັນພ້ອມນຳກັນ ລະຫວ່າງ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ໂດຍສອດຄ່ອງກັບລະບຽບກົດໝາຍ.

## ມາດຕາ 80 (ປັບປຸງ) ການຍົກເລີກສັນຍາແຮງງານ

ຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ອາດຍົກເລີກສັນຍາແຮງງານ ທີ່ບໍ່ມີກຳນົດເວລາ ເມື່ອໃດກໍໄດ້ແຕ່ຕ້ອງແຈ້ງໃຫ້ຄູ່ສັນຍາອີກຝ່າຍໜຶ່ງຊາບກ່ອນ ຢ່າງໜ້ອຍ ສາມສິບວັນ ສຳລັບຜູ້ອອກແຮງງານທີ່ເຮັດວຽກທາງດ້ານຮ່າງກາຍເປັນຕົ້ນຕໍ ແລະ ສີ່ສິບຫ້າວັນ ສຳລັບຜູ້ອອກແຮງງານ ທີ່ເຮັດວຽກດ້ວຍມັນສະໝອງ.

ສຳລັບສັນຍາແຮງງານ ທີ່ມີກຳນົດເວລານັ້ນ ອາດຈະຖືກຍົກເລີກຕາມການເຫັນດີຂອງຄູ່ສັນຍາ ຫຼື ເມື່ອຄູ່ສັນຍາຝ່າຍໃດຝ່າຍໜຶ່ງຫາກລະເມີດສັນຍາ, ການຍົກເລີກໃນກໍລະນີ ທີ່ຝ່າຍໃດຝ່າຍໜຶ່ງຫາກລະເມີດ ຝ່າຍລະເມີດ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທັງໝົດທີ່ເກີດຂຶ້ນ, ໃນກໍລະນີຜູ້ໃຊ້ແຮງງານຫາກເປັນຜູ້ລະເມີດ ກໍຕ້ອງໄດ້ປະຕິບັດຜົນປະໂຫຍດຕ່າງໆ ຕາມສັນຍາ.

## ມາດຕາ 82 (ປັບປຸງ) ການຍົກເລີກສັນຍາແຮງງານໂດຍຜູ້ໃຊ້ແຮງງານ

ຜູ້ໃຊ້ແຮງງານ ສາມາດຍົກເລີກສັນຍາແຮງງານ ໂດຍຕ້ອງຈ່າຍເງິນຊົດເຊີຍໃຫ້ຜູ້ອອກແຮງ ງານໃນກໍລະນີ ດັ່ງນີ້:

1. ຜູ້ອອກແຮງງານຂາດຄວາມສາມາດທາງດ້ານວິຊາການ ຫຼື ມີສຸຂະພາບອ່ອນເພຍ ໂດຍມີການຢັ້ງຢືນຈາກສະພາການແພດ ແລະ ພາຍຫຼັງການສັບຊ້ອນ ໃຫ້ຜູ້ກ່ຽວໄປເຮັດວຽກອື່ນ ທີ່ເໝາະສົມກັບຄວາມສາມາດ ແລະ ສຸຂະພາບຂອງຜູ້ກ່ຽວແລ້ວ ແຕ່ກໍຍັງບໍ່ສາມາດປະຕິບັດວຽກໃໝ່ນັ້ນໄດ້.

2. ຜູ້ໃຊ້ແຮງງານ ມີຄວາມຈຳເປັນຕ້ອງໄດ້ຫຼຸດຜ່ອນຈຳນວນຜູ້ອອກແຮງງານ ເນື່ອງຈາກ ເຫດຜົນທາງດ້ານທຸລະກິດ ໂດຍຜ່ານການປຶກສາຫາລື ກັບໜ່ວຍກຳມະບານ ຫຼື ຜູ້ຕາງໜ້າ ຜູ້ອອກແຮງງານ ຫຼື ກັບຜູ້ອອກແຮງງານສ່ວນຫຼາຍ ແລະ ໄດ້ລາຍງານໃຫ້ອົງການຄຸ້ມຄອງວຽກງານແຮງງານແລ້ວ.

ຜູ້ໃຊ້ແຮງງານ ຕ້ອງແຈ້ງເປັນລາຍລັກອັກສອນ ແລະ ອະທິບາຍເຫດຜົນໃຫ້ຜູ້ຖືກຢຸດເຊົາວຽກ ຮູ້ລ່ວງໜ້າຕາມເວລາທີ່ໄດ້ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້.

## ມາດຕາ 83 (ປັບປຸງ) ການຍົກເລີກສັນຍາແຮງງານ ໂດຍຜູ້ອອກແຮງງານ

ຜູ້ອອກແຮງງານ ມີສິດສະເໜີຍົກເລີກສັນຍາແຮງງານ ໂດຍໃຫ້ຜູ້ໃຊ້ແຮງງານຈ່າຍຄ່າຊົດເຊີຍ ໃນກໍລະນີ ດັ່ງນີ້:

1. ມີສຸຂະພາບອ່ອນເພຍ ຫຼັງຈາກໄດ້ຮັບການປິ່ນປົວແລ້ວ ໂດຍມີການຢັ້ງຢືນຂອງສະພາການແພດ ແລະ ຜູ້ໃຊ້ແຮງງານ ກໍໄດ້ສັບຊ້ອນຕຳແໜ່ງງານໃໝ່ໃຫ້ເຮັດແລ້ວ ແຕ່ກໍຍັງບໍ່ສາມາດເຮັດໄດ້;
2. ມີການທັກທ້ວງຂອງຜູ້ອອກແຮງງານ ໃຫ້ຜູ້ໃຊ້ແຮງງານ ປະຕິບັດຕາມສັນຍາແຮງງານ ມາຫຼາຍເທື່ອແລ້ວ ແຕ່ກໍບໍ່ມີການປ່ຽນແປງ;

3. ມີການຍົກຍ້າຍສະຖານທີ່ເຮັດວຽກ ຊຶ່ງເປັນສາເຫດໃຫ້ຜູ້ອອກແຮງງານບໍ່ສາມາດໄປປະຕິບັດໜ້າທີ່ໄດ້ ໂດຍມີການຢັ້ງຢືນຂອງໜ່ວຍກຳມະບານ ຫຼື ຜູ້ຕາງໜ້າຜູ້ອອກແຮງງານ ແລະ ອົງການປົກຄອງບ້ານ ຢ່າງເປັນລາຍລັກອັກສອນ;
4. ມີການລົບກວນ, ລວນລາມ, ລ່ວງລະເມີດທາງເພດ ຈາກຜູ້ໃຊ້ແຮງງານ ຫຼື ຜູ້ໃຊ້ແຮງ ງານປ່ອຍປະໃຫ້ເກີດມີການກະທຳດັ່ງກ່າວ.

ໃນການຍົກເລີກສັນຍາແຮງງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ຜູ້ອອກແຮງງານ ຕ້ອງແຈ້ງເປັນລາຍລັກອັກສອນ ແລະ ອະທິບາຍເຫດຜົນໃຫ້ຜູ້ໃຊ້ແຮງງານຮູ້ລ່ວງໜ້າ ຕາມກຳນົດເວລາ ທີ່ໄດ້ບົ່ງໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້.

ສຳລັບສັນຍາແຮງງານທີ່ມີກຳນົດເວລານັ້ນ ການຍົກເລີກສັນຍາ ຕາມຂໍ້ 2 ແລະ 4 ຂອງ ມາດຕານີ້ ນອກຈາກການຈ່າຍເງິນຊົດເຊີຍແລ້ວ ຜູ້ໃຊ້ແຮງງານຍັງຕ້ອງໄດ້ຮັບຜິດຊອບ ໃນການໃຊ້ຈ່າຍເງິນເດືອນ ຫຼື ຄ່າແຮງງານ ແລະ ຜົນປະໂຫຍດອື່ນທີ່ຍັງເຫຼືອຕາມສັນຍາ.

## ມາດຕາ 87 ( ໃໝ່) ກໍລະນີບໍ່ອະນຸຍາດໃຫ້ຍົກເລີກສັນຍາແຮງງານ

ກໍລະນີ ບໍ່ອະນຸຍາດໃຫ້ຍົກເລີກສັນຍາແຮງງານມີດັ່ງນີ້:

5. ຜູ້ຍິງທີ່ກຳລັງຖືພາ ຫຼື ຍັງມີລູກນ້ອຍອາຍຸຕ່ຳກວ່າ ໜຶ່ງປີ;
6. ຜູ້ອອກແຮງງານທີ່ກຳລັງພັກປິ່ນປົວ ຫຼື ຟື້ນຟູສຸຂະພາບ ຕາມການຢັ້ງຢືນຂອງແພດ;
7. ຜູ້ອອກແຮງງານ ທີ່ເປັນຜູ້ຕາງໜ້າຜູ້ອອກແຮງງານ ຫຼື ເປັນຫົວໜ້າໜ່ວຍກຳມະບານຢູ່ໃນຫົວໜ່ວຍແຮງງານ;
8. ຜູ້ອອກແຮງງານທີ່ຢູ່ໃນໄລຍະການດຳເນີນຄະດີ ຫຼື ເປັນຜູ້ຖືກກັກຕົວ ຫຼື ກຳລັງລໍຖ້າການຕັດສິນຂອງສານ;
9. ຜູ້ອອກແຮງງານເຈັບເປັນ ແລະ ປິ່ນປົວ ໂດຍມີການຢັ້ງຢືນຂອງແພດ ຫຼື ພວມປະສົບກັບໄພພິບັດ;
10. ຜູ້ອອກແຮງງານທີ່ຢູ່ໃນໄລຍະພັກຜ່ອນປະຈຳປີ ຫຼື ພັກວຽກ ຕາມການເຫັນດີຂອງຜູ້ໃຊ້ແຮງງານ;
11. ຜູ້ອອກແຮງງານທີ່ພວມປະຕິບັດວຽກງານຢູ່ໃນສະຖານທີ່ອື່ນ ຕາມການມອບໝາຍຂອງຜູ້ໃຊ້ແຮງງານ;
12. ຜູ້ອອກແຮງງານທີ່ພວມຮ້ອງຂໍຕໍ່ວ່າ, ຮ້ອງຟ້ອງຕໍ່ຜູ້ໃຊ້ແຮງງານ ຫຼື ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ທີ່ພົວພັນເຖິງການປະຕິບັດລະບຽບກົດໝາຍ ກ່ຽວກັບແຮງງານ ແລະ ຂໍ້ຂັດແຍ່ງທາງດ້ານແຮງງານ ພາຍໃນຫົວໜ່ວຍແຮງງານຂອງຕົນ.

ຖ້າຫາກຜູ້ໃຊ້ແຮງງານ ມີຈຸດປະສົງຍົກເລີກສັນຍາແຮງງານ ຕາມກໍລະນີເທິງນີ້ ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານແຮງງານ. ສໍາລັບສັນຍາແຮງງານ ທີ່ມີກໍານົດເວລາ ກໍສາມາດຍົກເລີກໄດ້ ຖ້າຫາກເຖິງເວລາສິ້ນສຸດ ສັນຍາ.

## ມາດຕາ 122. ການປະເມີນຄວາມສ່ຽງ ແລະ ການສ້າງລະບຽບພາຍໃນ

ຜູ້ອອກແຮງງານ ຕ້ອງກວດກາ ແລະ ປະເມີນຄວາມສ່ຽງດ້ານຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນຫົວໜ່ວຍແຮງງານ ແລະ ສະຖານທີ່ເຮັດວຽກຂອງຕົນຢ່າງເປັນປະຈໍາ ແລ້ວສ້າງບົດລາຍງານຂອງການປະເມີນຄວາມສ່ຽງນັ້ນ ໃຫ້ອົງການກວດກາວຽກງານແຮງງານຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ. ການປະເມີນຄວາມສ່ຽງສາມາດດໍາເນີນໂດຍຜູ້ໃຊ້ແຮງງານ, ເຈົ້າໜ້າທີ່ກວດກາແຮງງານ ຫຼື ອົງການບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານດ້ານແຮງງານ.

ຜູ້ໃຊ້ແຮງງານ ຕ້ອງສ້າງກົດລະບຽບພາຍໃນ ໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງຜ່ານການປຶກສາຫາລືກັບ ໜ່ວຍກໍາມະບານ ຫຼື ຜູ້ຕ່າງໜ້າຂອງຜູ້ອອກແຮງງານ ຫຼື ຜູ້ອອກແຮງງານສ່ວນຫຼາຍ ໃນຫົວໜ່ວຍແຮງງານນັ້ນ.

## ມາດຕາ 128. ການປິ່ນປົວຜູ້ອອກແຮງງານ ຍ້ອນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ

ຖ້າຜູ້ອອກແຮງງານ ໄດ້ຮັບບາດເຈັບ ຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບນັ້ນ ຜູ້ໃຊ້ແຮງງານ ຫຼື ອົງການຄຸ້ມຄອງວຽກງານປະກັນສັງຄົມ ຕ້ອງຮັບຜິດຊອບໃຊ້ຈ່າຍໃນການປິ່ນປົວ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການປະກັນສັງຄົມ.

ໃນຕະຫຼອດໄລຍະຂອງການປິ່ນປົວ ແລະ ຟື້ນຟູສຸຂະພາບ ຜູ້ອອກແຮງງານມີສິດໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ຕາມປົກກະຕິຈາກຜູ້ໃຊ້ແຮງງານ ແຕ່ບໍ່ໃຫ້ເກີນຫົກເດືອນ, ຖ້າເກີນກໍານົດນີ້ແລ້ວ ຜູ້ໃຊ້ແຮງງານ ຫຼື ອົງການຄຸ້ມຄອງວຽກງານປະກັນສັງຄົມ ຈະເປັນຜູ້ຈ່າຍຕາມກົດໝາຍວ່າດ້ວຍ ການປະກັນສັງຄົມ.

ໃນກໍລະນີ ທີ່ຜູ້ອອກແຮງງານຫາກເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ນັ້ນຜູ້ໃຊ້ແຮງງານ ຫຼື ອົງການຄຸ້ມຄອງວຽກງານປະກັນສັງຄົມ ຕ້ອງຮັບຜິດຊອບໃຊ້ຈ່າຍ ສໍາລັບຊາປະນະກິດສົບ , ເງິນອຸດໜູນເສຍຊີວິດເທື່ອດຽວ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການປະກັນສັງຄົມ.

ສໍາລັບຜູ້ອອກແຮງງານ ທີ່ຖືກສົ່ງໄປເຮັດວຽກຢູ່ບ່ອນອື່ນ ແລະ ໄດ້ເສຍຊີວິດນັ້ນ ການເຄື່ອນຍ້າຍສົບ ຫຼື ອັດທິ ຂອງຜູ້ກ່ຽວໄປໃຫ້ຄອບຄົວ ໃຫ້ຜູ້ໃຊ້ແຮງງານເປັນຜູ້ຮັບຜິດຊອບ.

ໃນກໍລະນີ ທີ່ຜູ້ອອກແຮງງານຫາກເສຍອົງຄະ ຫຼື ສູນເສຍອະໄວຍະວະຂອງຮ່າງກາຍ ຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ຜູ້ໃຊ້ແຮງງານ ຫຼື ອົງການຄຸ້ມຄອງວຽກງງານປະກັນສັງຄົມຕ້ອງຮັບຜິດຊອບຈ່າຍເງິນອຸດໜູນ ຕາມທີ່ໄດ້ກໍານົໄວ້ໃນກົດໝາຍວ່າດ້ວຍ ການປະກັນສັງຄົມ.

## 4. ກົດໝາຍວ່າດ້ວຍ ກະສິກຳ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998

### ມາດຕາ 8. ກິດຈະການກະສິກຳ

ກິດຈະການກະສິກຳ ແມ່ນວຽກງານກ່ຽວກັບການປູກຝັງ, ການລ້ຽງສັດ ແລະ ການປະມົງ.

### ມາດຕາ 46. ການລົງທຶນໃສ່ກິດຈະການກະສິກຳ

ການລົງທຶນໃສ່ກິດຈະການການກະສິກຳ ແມ່ນການລົງທຶນໃສ່ການປູກຝັງ, ລ້ຽງສັດ ແລະ ການປະມົງ ເພື່ອທຳການຜະລິດ ຫຼື ດຳເນີນທຸລະກິດກ່ຽວກັບກະສິກຳ.

### ມາດຕາ 47. ຮູບການລົງທຶນໃສ່ການຜະລິດກະສິກຳ

ຮູບການລົງທຶນ ໃສ່ການຜະລິດກະສິກຳປະກອບມີ:

- ການລົງທຶນຂອງຫົວໜ່ວຍຄອບຄົວ;
- ການລົງທຶນແບບຮ່ວມມືຂອງປະຊາຊົນ;
- ການລົງທຶນ ຂອງເອກະຊົນ;
- ການລົງທຶນຂອງລັດແຕ່ຝ່າຍດຽວ ໃນກໍລະນີທີ່ບໍ່ມີພາກສ່ວນເສດຖະກິດອື່ນມາລົງທຶນ ແຕ່ການລົງທຶນດັ່ງກ່າວ ຜົດມີຄວາມສຳຄັນ ແລະ ຈຳເປັນສຳລັບຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ;
- ການລົງທຶນຂອງລັດ ກັບເອກະຊົນພາຍໃນປະເທດ ຫຼື ຕ່າງປະເທດ;
- ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ;
- ການລົງທຶນຂອງຕ່າງປະເທດແຕ່ຝ່າຍດຽວ.

**ການລົງທຶນ ໃສ່ການຜະລິດກະສິກຳ ແບ່ງອອກເປັນ ສາມ ຂະໜາດ:**

- ການຜະລິດ ແລະ ທຸລະກິດ ກະສິກຳ ຂະໜາດນ້ອຍ;
- ການຜະລິດ ແລະ ທຸລະກິດ ກະສິກຳຂະໜາດກາງ;
- ທຸລະກິດ ກະສິກຳຂະໜາດໃຫ່ຍ.

## 5. ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເລກທີ 51/ ສພຊ, ລົງວັນທີ 22 ມິຖຸນາ 2018

### ມາດຕາ 2 ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຂໍ້ຜິດພາດທາງດ້ານຜົນປະໂຫຍດລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ, ບຸກຄົນກັບບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດຳເນີນການຜະລິດ-ທຸລະກິດ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການແກ້ໄຂຂໍ້ຜິດພາດທາງດ້ານຜົນປະໂຫຍດດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນ ຊຶ່ງດຳເນີນໂດຍ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

### ມາດຕາ 17 ການຍື່ນຄຳຮ້ອງ

ບຸກຄົນ, ການຈັດຕັ້ງ ທີ່ມີຈຸດປະສົງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ຕ້ອງຍື່ນຄຳຮ້ອງ ແລະ ປະກອບ ເອກະສານຕ່າງໆທີ່ກ່ຽວຂ້ອງຕໍ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນທີ່ຄູ່ກໍລະນີ ເຫັນວ່າມີຄວາມສະດວກ ແລະ ເປັນເອກະພາບກັນ. ໃນກໍລະນີທີ່ບໍ່ຕົກລົງເຫັນດີນຳກັນແລ້ວ ກໍໃຫ້ໄປຍື່ນຕໍ່ບ່ອນຂໍ້ຂັດແຍ່ງເກີດຂຶ້ນ.

### ມາດຕາ 18 ເນື້ອໃນຄຳຮ້ອງ

ຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງ ມີເນື້ອໃນຕົ້ນຕໍດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ບ່ອນຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
2. ບັນຫາທີ່ເກີດຂໍ້ຂັດແຍ່ງ;
3. ມູນຄ່າຂອງຂໍ້ຂັດແຍ່ງ;
4. ຂໍ້ສະເໜີຂອງຄູ່ກໍລະນີ.

## ມາດຕາ 19 ການປະກອບເອກະສານ

ການປະກອບ ເອກະສານທີ່ຍື່ນຕໍ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີດັ່ງນີ້

- ຄໍາຮ້ອງ;
- ສັນຍາທີ່ກ່ຽວຂ້ອງ;
- ຄໍາຕົກລົງເປັນລາຍລັກອັກສອນຂອງຄູ່ກໍລະນີ ທີ່ໃຫ້ນໍາເອົາຂໍ້ຂັດແຍ່ງ ມາແກ້ໄຂຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຖ້າມີ;
- ຂໍ້ມູນ ຫຼື ເອກະສານອື່ນ ທີ່ເປັນຫຼັກຖານ.

## ມາດຕາ 20 ການພິຈາລະນາຄໍາຮ້ອງ

ຫຼັງຈາກໄດ້ຮັບຄໍາຮ້ອງແລ້ວ ພາຍໃນກໍານົດເຈັດວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງນັ້ນ ເປັນຕົ້ນໄປ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກວດກາເບິ່ງສໍານວນຄໍາຮ້ອງ ແລະ ອອກໝາຍເຊີນຄູ່ກໍລະນີ ເພື່ອເຂົ້າມາປຶກສາຫາລື ແລະ ຕົກລົງກ່ຽວກັບຮູບການແກ້ໄຂ. ຖ້າວ່າຄູ່ກໍລະນີຫາກບໍ່ມາຕາມໝາຍເຊີນ ໂດຍບໍ່ມີເຫດຜົນພຽງພໍ ຄໍາຮ້ອງດັ່ງກ່າວກໍຕົກໄປ ແລະ ສົ່ງສໍານວນຄໍາຮ້ອງຄືນໃຫ້ແກ່ຜູ້ຮ້ອງຂໍ.

## 6. ກົດໝາຍວ່າດ້ວຍ ທະນາຍຄວາມ ສະບັບເລກທີ 64/ສພຊ, ລົງວັນທີ 29 ທັນວາ 2022

### ມາດຕາ 2 (ປັບປຸງ) ທະນາຍຄວາມ

ທະນາຍຄວາມ ແມ່ນບຸກຄົນທີ່ໄດ້ຮັບອະນຸຍາດຈາກກະຊວງຍຸຕິທຳ ໃຫ້ເຄື່ອນໄຫວວິຊາຊີບທະນາຍ ຄວາມ ໃນການໃຫ້ບໍລິການທາງດ້ານກົດໝາຍ ແກ່ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລູກຄວາມ ທັງຮັບປະກັນຄວາມຍຸຕິທຳໃຫ້ແກ່ຄູ່ຄວາມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານທະນາຍຄວາມ

ລັດ ສົ່ງເສີມ ແລະ ຊຸກຍູ້ ໃຫ້ມີທະນາຍຄວາມ ແລະ ວິສາຫະກິດກົດໝາຍ ທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອສະໜອງການໃຫ້ບໍລິການທາງດ້ານກົດໝາຍ ແກ່ສັງຄົມຢ່າງທົ່ວເຖິງ.

ລັດ ຊຸກຍູ້ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ທະນາຍຄວາມ ໃນການໃຫ້ບໍລິການທາງ ດ້ານກົດໝາຍ ແລະ ການແຂ່ງຂັນກັນພັດທະນາຕົນເອງ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງລູກຄວາມ ແລະ ສາມາດເຄື່ອນໄຫວໄດ້ຢ່າງເຕັມສ່ວນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 22 ການໃຫ້ຄຳປຶກສາທາງດ້ານກົດໝາຍ

ການໃຫ້ຄຳປຶກສາທາງດ້ານກົດໝາຍ ແມ່ນ ການໃຫ້ຄາເຫັນ, ຄຳແນະນຳ, ຄຳອະທິບາຍທາງດ້ານ ກົດໝາຍ ທາງປາກເປົ່າ ຫຼື ເປັນລາຍລັກອັກສອນແກ່ລູກຄວາມ ຫຼື ຊ່ວຍລູກຄວາມໃນການຮ່າງສັນຍາ, ພິໄນກຳ ແລະ ເອກະສານອື່ນ.

### ມາດຕາ 31(ປັບປຸງ) ການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສັຍຄ່າ

ການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ ແມ່ນ ການໃຫ້ບໍລິການທາງດ້ານກົດໝາຍແກ່ຜູ້ທຸກ ຍາກ,ເດັກທີ່ຕ້ອງການການປົກປ້ອງພິເສດ, ຄົນພິການ, ຜູ້ດ້ອຍໂອກາດ, ແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍ ຈາກການໃຊ້ຄວາມຮຸນແຮງ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຜູ້ກະທຳຜິດທີ່ກົດໝາຍກຳນົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫຼືອ ຊຶ່ງບໍ່ຄິດຄ່າບໍລິການນຳລູກຄວາມ ໂດຍຜ່ານການຈັດຕັ້ງໃຫ້ການຊ່ວຍເຫຼືອ ທາງດ້ານກົດໝາຍ ປະຈຳຫ້ອງການສະພາທະນາຍຄວາມ ແຂວງ, ນະຄອນຫຼວງ ຫຼື ໜ່ວຍສະພາທະນາຍ ຄວາມປະຈຳ ເມືອງ, ເທດສະບານ, ນະຄອນ.

## 7. ກົດໝາຍວ່າດ້ວຍ ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ສະບັບເລກທີ 77/ ສພຊ, ລົງວັນທີ 28 ພະຈິກ 2019

### ມາດຕາ 19 ຄວາມສະເໝີພາບໃນການຮ້ອງທຸກ

ຍິງ ແລະ ຊາຍມີຄວາມສະເໝີພາບ ໃນການຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງຂອງລັດ ເພື່ອປົກປ້ອງ ສິດ ແລະ ຜົນປະໂຫຍດຂອງລັດ ຫຼື ລວມໝູ່, ຊີວິດ, ສຸຂະພາບ, ກຽດສັກສີ, ຊັບສິນ ແລະ ຜົນປະໂຫຍດ ອັນຊອບທຳຂອງຕົນ ທີ່ຖືກລະເມີດ ຫຼື ໂຕ້ແຍ່ງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

### ມາດຕາ 10 ຄວາມສະເໝີພາບທາງດ້ານເສດຖະກິດ

ຍິງ ແລະ ຊາຍ ມີຄວາມສະເໝີພາບທາງດ້ານເສດຖະກິດ ເປັນຕົ້ນ ການເຂົ້າເຖິງຊັບພະຍາກອນ ເສດຖະກິດ, ການດຳເນີນທຸລະກິດ ການຜະລິດ, ການຄ້າ, ການບໍລິການ, ແຫຼ່ງທຶນ, ຕະຫຼາດແຮງງານ, ການຈ້າງງານ, ໄດ້ຮັບການຝຶກອົບຮົມ, ຂໍ້ມູນ ຂ່າວສານ, ນະໂຍບາຍ ແລະ ຄ່າຕອບແທນເທົ່າທຽມກັນ ທີ່ ຖືກຕ້ອງຕາມກົດໝາຍ.

## 8. ກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ເລກທີ 08/ ສພຊ, ລົງວັນທີ 22 ຕຸລາ 2004

### ມາດຕາ 18 ສິດໃນການຮ້ອງຂໍ, ຮ້ອງຟ້ອງ

ໃນກໍລະນີທີ່ບຸກຄົນ ຫຼື ການຈັດຕັ້ງຫາກໄດ້ຈຳກັດ, ຂັດຂວາງ ຫຼື ລະເມີດສິດສະເໝີພາບທາງດ້ານ ການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ຫຼື ຄອບຄົວແລ້ວ ແມ່ຍິງມີສິດສະເໜີຄວາມເຫັນ, ຮ້ອງຂໍ, ຮ້ອງຟ້ອງຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

### ມາດຕາ 19. ສິດ ແລະ ຜົນປະໂຫຍດໃນຂົງເຂດແຮງງານ

ແມ່ຍິງໄດ້ຮັບສິດ ແລະ ຜົນປະໂຫຍດໃນຂົງເຂດແຮງ ເປັນຕົ້ນ: ການຮັບປະກັນເງື່ອນໄຂ ແລະ ສິ່ງແວດລ້ອມໃນການອອກແຮງງານທີ່ປອດໄພ, ສະຫວັດດີການ, ຄ່າຕອບແທນ ແລະ ນະໂຍບາຍຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## 9. ກົດໝາຍວ່າດ້ວຍ ກຳມະບານລາວ ສະບັບເລກທີ 39/ສພຊ, ລົງວັນທີ 15 ພະຈິກ 2017

### ມາດຕາ 2. ກຳມະບານລາວ

ກຳມະບານ ແມ່ນການຈັດຕັ້ງມະຊົນທີ່ກວ້າງຂວາງໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນໆ.

### ມາດຕາ 12. ສິດ ແລະ ໜ້າທີ່ຂອງສະຫະພັນກຳມະບານລາວ

**ຂໍ້ 4.** ສະເໜີສ້າງ ແລະ ປັບປຸງກົດໝາຍທີ່ກ່ຽວຂ້ອງ, ພິຈາລະນາຮັບຮອງເອົາ ແລະ ປະກາດໃຊ້ນິຕິກຳໃຕ້ກົດໝາຍ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; ປະກາດລຶບລ້າງ ຫຼື ໂຈະການປະຕິບັດມະຕິ, ຄຳແນະນຳ, ແຈ້ງການ, ລະບຽບການ ຂອງສະຫະພັນກຳມະບານຂັ້ນລຸ່ມທີ່ບໍ່ສອດຄ່ອງກັບກົດໝາຍ, ກົດລະບຽບ ຫຼື ມະຕິກອງປະຊຸມໃຫຍ່ ຜູ້ແທນກຳມະບານລາວທົ່ວປະເທດ.

### ມາດຕາ 44. ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ

ຫ້າມ**ບຸກຄົນ** ແລະ ການຈັດຕັ້ງອື່ນ ມີພຶດຕິກຳດັ່ງນີ້:

1. ຍົກຍ້າຍ, ຍົກເລີກສັນຍາແຮງງານຂອງປະທານ, ຮອງປະທານ, ປະທານກວດກາ ຫຼື ກຳມະການໃນຄະນະບໍລິຫານສະຫະພັນກຳມະບານ ອອກຈາກວຽກໂດຍບໍ່ມີເຫດຜົນ ແລະ ແຕ່ງຕັ້ງປ່ຽນແທນຕຳແໜ່ງນັ້ນ ໂດຍບໍ່ໄດ້ສົມທົບ ແລະ ບໍ່ໄດ້ຮັບຄວາມເຫັນດີເປັນລາຍລັກອັກສອນ ຈາກສະຫະພັນກຳມະບານຂັ້ນເທິງຖັດນັ້ນ;
2. ປອມແປງ, ຜະລິດ, ຈຳໜ່າຍ ຫຼື ນຳໃຊ້ເຄື່ອງໝາຍ, ເຄື່ອງແບບ,ຕາປະທັບ ຂອງສະຫະພັນກຳມະບານລາວ ໂດຍບໍ່ໄດ້ຮັບອະນຸຍາດ ຈາກສູນກາງສະຫະພັນກຳມະບານລາວ;
3. ລະເມີດສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ; ສວຍໃຊ້ໜ້າທີ່, ຕຳແໜ່ງຍັກຍອກ, ສໍ້ໂກງ ເອົາຊັບສິນ ຂອງສະຫະພັນກຳມະບານລາວ ໄປເປັນຂອງຕົນ;
4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

# 10. ກົດໝາຍວ່າດ້ວຍ ແນວລາວສ້າງຊາດ ສະບັບເລກທີ 49/ສພຊ, ລົງວັນທີ 20 ມິຖຸນາ 2018

**ມາດຕາ 9 (ປັບປຸງ) ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ ປະຊາຊົນລາວບັນດາເຜົ່າ ທັງຢູ່ພາຍໃນ ແລະ ຕ່າງປະເທດ;
2. ຜັນຂະຫຍາຍ ແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ສະເໜີ ສ້າງ ກົດໝາຍ ແລະ ນິຕິກຳອື່ນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ;
4. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນລາວບັນດາເຜົ່າ ໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
5. ຕິດຕາມ ກວດກາ ການເຄື່ອນໄຫວ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ, ອົງການບໍລິຫານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ພະນັກງານ-ລັດຖະກອນ ຕາມຄຳສະເໜີ ຂອງປະຊາຊົນລາວບັນດາເຜົ່າ, ຊົ້ນຄົນ, ສາສະໜາ, ເພດ, ໄວ ເພື່ອສະເໜີ ຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ;
6. ເຂົ້າຮ່ວມການປັບປຸງ, ບູລະນະອຳນາດລັດປະຊາທິປະໄຕປະຊາຊົນ;
7. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ພາຄີ, ປະຊາຊົນລາວບັນດາເຜົ່າ ແລະ ເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງ ຕາມພາລະບົດບາດຂອງຕົນ;
8. ປະກອບສ່ວນ ປົກປັກຮັກສາ, ເສີມຂະຫຍາຍມູນເຊື້ອຮັກຊາດ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ເຜົ່າ;
9. ຖ່າຍທອດຄວາມຮູ້, ບົດຮຽນ, ປະສົບການ ແລະ ມູນເຊື້ອອັນດີງາມ ຂອງແນວລາວອິດສະລະ, ແນວລາວຮັກຊາດ ໃຫ້ແກ່ຄົນຮຸ່ນຫຼັງ;
10. ສະເໜີບຸກຄະລາກອນຂອງຕົນ, ປະກອບຄຳເຫັນຕໍ່ບຸກຄະລາກອນ ຂອງພາກສ່ວນອື່ນ ທີ່ເປັນຕົວແທນ ຂອງປະຊາຊົນລາວບັນດາເຜົ່າ ອອກສະໝັກຮັບເລືອກຕັ້ງ ເຂົ້າໃນອົງການຈັດຕັ້ງການເມືອງ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນ ຕາມລະບຽບການ;
11. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານແນວໂຮມ;
12. ເສີມຂະຫຍາຍ ການທູດປະຊາຊົນ, ສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງປະຊາຊົນລາວບັນດາເຜົ່າ ກັບປະຊາຊົນບັນດາປະເທດໃນພາກພື້ນ ແລະ ສາກົນ;
13. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບແນວລາວສ້າງຊາດ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 11. ກົດໝາຍວ່າດ້ວຍ ທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019

### ມາດຕາ 117 (ປັບປຸງ) ການເຊົ່າທີ່ດິນຈາກພົນລະເມືອງລາວ

ການເຊົ່າທີ່ດິນ ລະຫວ່າງ ພົນລະເມືອງລາວດ້ວຍກັນ ລວມທັງນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນພົນລະເມືອງລາວ ແມ່ນຂຶ້ນກັບການຕົກລົງຂອງສອງຝ່າຍ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກ ຄອງບ້ານ, ອົງການທະບຽນສານ ແລະ ຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ຢູ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ບ່ອນທີ່ດິນຕັ້ງຢູ່.

ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດ ສາມາດເຊົ່າທີ່ດິນນຳພົນລະເມືອງລາວ ລວມທັງນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນພົນລະເມືອງລາວ ພາຍໃນເວລາບໍ່ເກີນ ສາມສິບປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີຕາມການຕົກລົງຂອງຄູ່ສັນຍາ ໂດຍໄດ້ຮັບການອະນຸຍາດຈາກອົງການປົກຄອງຂັ້ນແຂວງ ຕາມການສະເໜີຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ສັນຍາເຊົ່າທີ່ດິນດັ່ງກ່າວ ຕ້ອງໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ, ອົງການທະບຽນສານ ແລະ ຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ຢູ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ບ່ອນທີ່ດິນຕັ້ງຢູ່.

### ມາດຕາ 121 (ປັບປຸງ) ສິດຂອງຜູ້ເຊົ່າ ຫຼື ຜູ້ສຳປະທານ

ຜູ້ເຊົ່າ ຫຼື ຜູ້ສຳປະທານ ມີສິດ ດັ່ງນີ້:

1. ນຳໃຊ້ທີ່ດິນ, ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ ລວມທັງ ຕຶກ, ອາຄານ ຫຼື ສິ່ງປຸກສ້າງໃນທີ່ດິນ ທີ່ໄດ້ເຊົ້າ ຫຼື ສຳປະທານ, ໂອນກຳມະສິດດັ່ງກ່າວໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;

2. ນຳໃຊ້ຊັບສິນທີ່ຕິດພັນກັບສັນຍາເຊົ່າ ຫຼື ສຳປະທານທີ່ດິນ ເພື່ອໃຊ້ເປັນຫຼັກຊັບຄໍ້າປະກັນນຳທະນາຄານ ຫຼື ສະຖາບັນການເງິນທີ່ຢູ່ພາຍໃນ ຖ້າຫາກໄດ້ຮັບການເຫັນດີຈາກລັດຖະບານ ຫຼື ອົງການ ປົກຄອງຂັ້ນແຂວງຕາມຂອບເຂດສິດຂອງຕົນ ຕາມການສະເໜີຂອງຂະແໜງການການເງິນ, ຍົກເວັ້ນການເຊົ່າທີ່ດິນ ນຳພົນລະເມືອງລາວ;

3. ນຳໃຊ້ຊັບສິນທີ່ຕິດພັນກັບສັນຍາເຊົາ ຫຼື ສຳປະທານທີ່ດິນ ເພື່ອໃຊ້ເປັນຫຼັກຊັບຄໍ້າປະກັນນຳທະນາຄານ ຫຼື ສະຖາບັນການເງິນທີ່ຢູ່ຕ່າງປະເທດ ຖ້າຫາກໄດ້ຮັບການເຫັນດີຈາກລັດຖະບານ ຕາມການ ສະເໜີຂອງກະຊວງການເງິນ, ຍົກເວັ້ນການເຊົ່າທີ່ດິນຳພົນລະເມືອງລາວ;

4. ໃຫ້ເຊົ່າຕໍ່ສິດນຳໃຊ້ທີ່ດິນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຜູ້ໃຫ້ເຊົ່າ ແລະ ສັນຍາ ເຊົ່າຕໍ່ ໂດຍບໍ່ໃຫ້ເກີນສາຍນຳໃຊ້ທີ່ດິນ ທີ່ເຫຼືອຂອງສັນຍາແມ່;

5. ໂອນສິດນຳໃຊ້ທີ່ດິນ ທີ່ຕົນໄດ້ຮັບສິດເຊົ່າ ຫຼື ສາມປະທານ ໃນຂອບເຂດອາຍຸຂອງ ສັນຍາທີ່ຍັງເຫຼືອສ່ວນໃດສ່ວນໜຶ່ງ ຫຼື ທັງໝົດໃຫ້ບຸກຄົນອື່ນ ຕາມສັນຍາ ແລະ ກົດໝາຍ;

6. ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂອງ;

7. ໄດ້ຮັບການຍົກເວັ້ນຄ່າທຳນຽມການນຳໃຊ້ທີ່ດິນ;

8. ສືບທອດສັນຍາເຊົ່າ ຫຼື ສຳປະທານທີ່ດິນຕາມອາຍຸຂອງສັນຍາ ແລະ ຕາມກົດໝາຍ;

9. ໃຊ້ສັນຍາເຊົ່າ ຫຼື ສຳປະທານທີ່ດິນ ເພື່ອຮ່ວມທຶນກັບບຸກຄົນອື່ນ ແຕ່ຕ້ອງໄດ້ຮັບການເຫັນດີຈາກອົງການລັດທີ່ກ່ຽວຂ້ອງເສຍກ່ອນ;

10. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ມາດຕາ 149 ( ໃໝ່) ສາເຫດຂອງການທົດແທນຄ່າເສຍຫາຍ

ສາເຫດຂອງການທົດແທນຄ່າການສະຫາຍ ມີ ດັ່ງນີ້:

1. ການກໍ່ຄວາມເສຍຫາຍ ຍ້ອນການລະເມີດກົດໝາຍ;
2. ການກໍ່ຄວາມເສຍຫາຍ ຈາກທາດສະພາບ;
3. ການກໍ່ຄວາມເສຍຫາຍ ຈາກການໂອນສິດນຳໃຊ້ທີ່ດິນຄືນ.

## ມາດຕາ 150 ການທົດແທນຄ່າເສຍຫາຍຍ້ອນການລະເມີດກົດໝາຍ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ທີ່ດິນຂອງຕົນ ຫາກໄດ້ກໍ່ຄວາມເສຍຫາຍໃຫ້ ແກ່ຜູ້ອື່ນ ຫຼື ສາທາລະນະ ຕ້ອງໄດ້ທົດແດນຄ່າເສຍຫາຍທີ່ເກີດຈາກການກະທຳຂອງຕົນ.

## ມາດຕາ 151 (ປັບປຸງ) ການທົດແທນຄ່າເສຍຫາຍຈາກທາດສະພາບ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ໄດ້ຮັບປະໂຫຍດຈາກພະທາດສະພາບຂອງຜູ້ອື່ນ ຊຶ່ງໄດ້ຈົ່ງທາງທຽວ, ຮ່ອງນໍ້າໃຫ້ແກ່ຕົນ ພາໃຫ້ພືນລະປູກ, ສິ່ງປຸກສ້າງຂອງຜູ້ນັ້ນ ຫຼື ຂອງສາທາລະນະໄດ້ຮັບຄວາມເສຍຫາຍແລ້ວ ຕ້ອງໃຊ້ແທນຄ່າເສຍຫາຍດັ່ງກ່າວ.

## ມາດຕາ 152 (ປັບປຸງ) ການທົດແທນຄ່າເສຍຫາຍຈາກການໂອນເອົາສິດນຳໃຊ້ທີ່ດິນຄືນ

ການທົດແທນຄ່າເສຍຫາຍຈາກການໂອນເອົາສິດນຳໃຊ້ທີ່ດິນຄືນ ປະກອບດ້ວຍ:

1. ການທົດແທນຄ່າເສຍຫາຍຈາກກິດຈະການສາທາລະນະປະໂຫຍດ;
2. ການທົດແທນຄ່າເສຍຫາຍຈາກກິດຈະການ ການລົງທຶນ.

### ມາດຕາ 153 (ປັບປຸງ) ການທົດແທນຄ່າເສຍຫາຍຈາກກິດຈະການສາທາລະນະປະໂຫຍດ

ເມື່ອມີຄວາມຈຳເປັນ ຕ້ອງໄດ້ນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເຂົ້າໃນກິດຈະການສາທາລະນະໂຫຍດ ລັດຈະໂອນເອົາສິດນຳໃຊ້ທີ່ດິນນັ້ນຄືນ ໂດຍລັດຕ້ອງໃຊ້ແທນຄ່າເສຍ ໃຫ້ຜູ້ກ່ຽວ ເປັນຕົ້ນ ການກໍ່ສ້າງ, ຖະໜົນຫົນທາງ, ໂຮງຮຽນ, ໂຮງໝໍ, ສວນສາທາລະນະ, ສະໜາມບິນ, ແລວສາຍສົ່ງໄຟຟ້າ, ຮ່ອງລະບາຍນ້ຳ, ຊົນລະປະທານ, ນ້ຳປະປາ, ສະໜາມຂີ້ເຫຍື້ອ, ບ່ອນບຳບັດທີ່ເຫຍື້ອ.

ໃນການທົດແທນຄ່າເສຍຫາຍດັ່ງກ່າວ ຕ້ອງແຕ່ງຕັ້ງຄະນະກຳມະການປະເມີນຄວາມເສຍ ຫາຍຊັບສິນເທິງຫນ້າດິນ ແລະ ລາຄາທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 109 ຂອງກົດໝາຍສະບັບນີ້ ໂດຍການມີສ່ວນຮ່ວມຂອງເຈົ້າຂອງສິດນຳໃຊ້ທີ່ດິນ.

### ມາດຕາ 154 (ໃໝ່) ການທົດແທນຄ່າເສຍຫາຍຈາກກິດຈະການ ການລົງທຶນ

ເມື່ອມີຄວາມຈາເປັນ ຕ້ອງໄດ້ນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເຂົ້າໃນກິດຈະການລົງທຶນ, ການເຊົ່າ ຫຼື ສຳປະທານທີ່ດິນ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລັດ ຈະໂອນເອົາສິດນຳໃຊ້ທີ່ດິນນັ້ນຄືນ ໂດຍລັດຕ້ອງໃຊ້ແທນຄ່າເສຍຫາຍໃຫ້ຜູ້ກ່ຽວ ເປັນຕົ້ນ ໂຄງການ ກະສິກຳ, ປູກໄມ້, ການຂຸດຄົ້ນບໍ່ແຮ່, ການພັດທະນາແຫຼ່ງພະລັງງານໄຟຟ້າ, ຖະໜົນຫົນທາງ ເຂດອຸດສາຫະກຳ ຫຼື ນິຄົມອຸດສາຫະກຳ, ເຂດເສດຖະກິດພິເສດ.

ໃນການທົດແທນຄ່າເສຍຫາຍດັ່ງກ່າວ ຕ້ອງແຕ່ງຕັ້ງຄະນະກຳມະການປະເມີນຄວາມເສຍຫາຍ ຊັບສິນເທິງໜ້າດິນ ແລະ ລາຄາທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 109 ຂອງກົດໝາຍສະບັບນີ້ ຊຶ່ງປະກອບດ້ວຍ, ຂແໜງການທີ່ກ່ຽວຂ້ອງ, ຂະແໜງການທີ່ຮັບຜິດຊອບໂຄງການ, ເຈົ້າຂອງໂຄງການ, ເຈົ້າຂອງສິດນຳໃຊ້ ທີ່ດິນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

### ມາດຕາ 159 (ໃໝ່) ຂໍ້ຫ້າມສາລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບຸກລຸກ ຫຼື ຕັ້ງຖິ່ນຖານຢູ່ເຂດບໍລິເວນທີ່ດິນປ່າປ້ອງກັນ, ປ່າສະຫງວນ, ທີ່ດິນບໍລິເວນ ແຫຼ່ງນ້ຳ ທີ່ສະຫງວນໄວ້ ແລະ ເຂດສະຫງວນຂອງລັດ;
2. ປອມແປງ ໃບຕາດິນ, ຕາປະທັບ, ລາຍເຊັນ ຫຼື ເອກະສານອື່ນ ກ່ຽວກັບທີ່ດິນ;
3. ນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ກົດໝາຍ;
4. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກເຂດແດນທີ່ດິນ;
5. ຊື້ ຂາຍສິດນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ເອົາທີ່ດິນຂອງລັດ ລວມທັງທີ່ດິນລວມຫມູ່ຂອງບ້ານ ໃຫ້ເຊົ່າ, ແລກປ່ຽນ, ຂາຍ, ຄ້ຳປະກັນ ຫຼື ມອບໂດຍບໍ່ຖືກຕ້ອງຕາມກົດໝາຍ;
7. ຫັນປ່ຽນປະເພດທີ່ດິນ ແລະ ເປົ້າໝາຍການນຳໃຊ້ທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ;

8. ລະເມີດສັນຍາ ຊື້ ຂາຍສິດນຳໃຊ້ທີ່ດິນ, ເຊົ່າ ຫຼື ສຳປະທານທີ່ດິນ, ຫຼີກລ່ຽງການເສຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ, ຄ່າຊົດເຊີຍຊັບພະຍາກອນທຳມະຊາດ, ຄ່າທຳນຽມການນຳໃຊ້ທີ່ດິນ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ;

9. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ເຈົ້າໜ້າທີ່ ຫຼື ພະນັກງານ;

10. ປະຕິເສດການໃຫ້ການຮ່ວມມື ຫຼື ຂັດຂວາງ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ມາດຕາ 160 (ໃໝ່) ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ

ຫ້າມເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່ຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ໝູ່ຄະນະ , ພັກພວກ, ຈຸ້ມເຈື່ອ ແລະ ຍາດພີ່ນ້ອງ;
2. ທວງເອົາ, ຂໍເອົາ ຫຼື ຮັບເອົາ ສິນບົນ;
3. ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ຫຼື ນັກລົງທຶນທັງພາຍໃນ ຫຼື ຕ່າງປະເທດ;
4. ເມີນເສີຍ, ເລີ່ນເລີ້ຕໍ່ການປະຕິບັດໜ້າທີ່, ບິດເບືອນຂໍ້ມູນ, ກົດໜ່ວງ, ຖ່ວງດຶງ ການພິຈາລະນາເອກະສານກ່ຽວກັບທີ່ດິນ;
5. ອະນຸຍາດໃຫ້ເຄື່ອນໄຫວ ຫຼື ປ່ຽນແປງສິດນຳໃຊ້ທີ່ດິນ ບໍ່ວ່າໃນກໍລະນີໃດກໍຕາມ ທີ່ຍັງມີຂໍ້ຂັດແຍ່ງ;
6. ອອກໃບຕາດິນຊໍ້າຊ້ອນ, ອອກໜັງສືຢັ້ງຢືນກ່ຽວກັບການນຳໃຊ້ທີ່ດິນໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນ ທີ່ດິນບໍລິເວນນໍ້າ, ທີ່ດິນວັດທະນະທຳ, ທີ່ດິນປ່າປ້ອງກັນ, ທີ່ດິນປ່າສະຫງວນ, ທີ່ດິນປ່າຜະລິດ, ທີ່ດິນເຂດຫວງຫ້າມຂອງລັດ;
7. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ ຫຼື ລວມໝູ່;
8. ເປັນນາຍໜ້າ, ທີ່ປຶກສາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບວຽກງານທີ່ດິນ;
9. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;
10. ປອມແປງເອກະສານກ່ຽວກັບທີ່ດິນ, ລາຍເຊັນ ຫຼື ປະທັບຕາ;
11. ທຳລາຍຫຼັກຖານ, ເອກະສານກ່ຽວກັບທີ່ດິນ, ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກເຂດແດນທີ່ດິນ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ມາດຕາ 161 (ປັບປຸງ) ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ

ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ ແມ່ນ ການແກ້ໄຂບັນຫາກ່ຽວ ກັບການນຳໃຊ້ທີ່ດິນໂດຍບໍ່ໄດ້ຮັບອານຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍ, ບໍ່ນຳໃຊ້ທີ່ດິນຕາມກຳນົດເວລາພາຍຫຼັງ ທີ່ໄດ້ຮັບ

ມອບ, ບໍ່ເສຍອາກອນ, ຄ່າທຳນຽມການນຳໃຊ້ທີ່ດິນ, ເຂດແດນ ແລະ ບັນຫາທີ່ດິນອື່ນທີ່ມີລັກສະນະບໍລິຫານ ຕາມກົດໝາຍ.

ບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ ເກີດຂຶ້ນຢູ່ທ້ອງຖິ່ນໃດ ຫຼື ຂະແໜງການໃດ ແມ່ນໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ຮ່ວມກັບຂະແໜງການທີ່ຄຸ້ມ ການນຳໃຊ້ທີ່ດິນນັ້ນ ເປັນເຈົ້າການຄົ້ນຄວ້າ ແລະ ແກ້ໄຂກ່ອນ ໂດຍໃຫ້ເກັບຂໍ້ມູນຢ່າງລະອຽດ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງບ້ານບ່ອນທີ່ດິນນັ້ນຕັ້ງຢູ່ ແລ້ວສະເໜີໃຫ້ອົງການ ປົກຄອງຂັ້ນເມືອງ ເປັນຜູ້ຕົກລົງຕາມກົດໝາຍ.

ໃນກໍລະນີຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈຕໍ່ການຕົກລົງແກ້ໄຂບັນຫາທີ່ມີລັກສະນະບໍລິຫານ ກ່ຽວກັບທີ່ດິນດັ່ງກ່າວ ກໍມີສິດສະເໜີໃຫ້ອົງການປົກຄອງຂັ້ນແຂວງ ເປັນຜູ້ຄົ້ນຄວ້າ, ກວດກາ ແລະ ແກ້ໄຂບັນຫາດັ່ງກ່າວຕາມກົດໝາຍ ໂດຍໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ເປັນໃຈກາງ ສົມທົບກັບພະແນກ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ, ຖ້າຝ່າຍໃດຝ່າຍໜຶ່ງ ຫາກຍັງບໍ່ພໍໃຈຕໍ່ການຕົກລົງແກ້ໄຂນັ້ນ ອົງການປົກຄອງຂັ້ນແຂວງ ຕ້ອງແຈ້ງໃຫ້ຄູ່ກໍລະນີເປັນລາຍລັກອັກສອນນຳບັນຫາດັ່ງກ່າວໄປຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

### ມາດຕາ 162 (ໃໝ່) ຮູບການການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ສາມາດດຳເນີນດ້ວຍຮູບການ ໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ການຮ້ອງຟ້ອງຕໍ່ສານ;
4. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 163 (ໃໝ່) ການປະນີປະນອມ ຫຼື ການໄກ່ເກ່ຍ

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຄູ່ກໍລະນີ ສາມາດເຈລະຈາດ້ວຍການປະນີປະນອມ ຫຼື ໄກ່ເກ່ຍກັນບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

### ມາດຕາ 164 (ໃໝ່) ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບທີ່ດິນ ທີ່ພົວພັນກັບການດຳເນີນທຸລະກິດ, ຄູ່ກໍລະນີສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ.

### ມາດຕາ 165 (ປັບປຸງ) ການຮ້ອງຟ້ອງຕໍ່ສານ

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

### ມາດຕາ 166 (ໃໝ່) ການແກ້ໄຂທີ່ມີລັກສະນະສາກົນ

ການແກ້ໄຂທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## 12. ກົດໝາຍວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ ເລກທີ 45/ສພຊ, ລົງວັນທີ 15ມິຖຸນາ 2018

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິ ຜົນ, ຖືກຕ້ອງ, ສອດຄ່ອງກັບການພັດທະນາ ແລະ ຄວາມເປັນຈິງຂອງທ້ອງຖິ່ນ ຮັບປະກັນໃຫ້ປະຊາຊົນລາວບັນດາ ເຜົ່າ ທີ່ຢູ່ໃນເຂດການຈັດສັນ ພູມລຳເນົາ ແລະ ອາຊີບ ມີທີ່ຢູ່ອາໄສ, ບ່ອນທຳມາຫາກິນ ແລະ ອາຊີບໝັ້ນຄົງ ແນໃສ່ ແກ້ໄຂການເຄື່ອນຍ້າຍແບບບໍ່ຖືກຕ້ອງຕາມກົດໝາຍ, ລຶບລ້າງຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະ ຊາຊົນລາວບັນດາເຜົ່າ ທາງດ້ານວັດຖຸ ແລະ ຈິດໃຈໃຫ້ດີຂຶ້ນກວ່າເກົ່າ, ສ້າງຄວາມສະຫງົບ, ຄວາມເປັນລະບຽບຮຽບ ຮ້ອຍໃນສັງຄົມ, ສ້າງເປັນບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງຊາດ ແລະ ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.

### ມາດຕາ 2 ການຈັດສັນ ພູມລຳເນົາ ແລະ ອາຊີບ

ການຈັດສັນພູມລຳເນົາ ແມ່ນ ການກຳນົດຂອບເຂດທີ່ຢູ່ອາໄສ, ບ່ອນທຳມາຫາກິນ ໃຫ້ແກ່ປະຊາຊົນນັບທັງຕົວເມືອງ ແລະ ຊົນນະບົດທີ່ຖືກຫຍັບຍ້າຍ ຫຼື ຍົກຍ້າຍຈາກພູມລຳເນົາເດີມ ໄປຕັ້ງພູມລຳເນົາບ່ອນໃໝ່ ເພື່ອຮັບ ປະກັນຄວາມສົມດຸນ ແລະ ສອດຄ່ອງກັບການພັດທະນາ.

ການຈັດສັນອາຊີບ ແມ່ນ ການສ້າງເງື່ອນໄຂ ແລະ ຄວາມອາດສາມາດໃນການທຳມາຫາກິນໃຫ້ແກ່ປະຊາ ຊົນນັບທັງຕົວເມືອງ ແລະ ຊົນນະບົດ ທີ່ຖືກຫຍັບຍ້າຍ ຫຼື ຍົກຍ້າຍ ຈາກພູມລຳເນົາເດີມ ໄປຕັ້ງພູມລຳເນົາບ່ອນ ໃໝ່ ເພື່ອໃຫ້ມີແຫຼ່ງລາຍຮັບທີ່ແນ່ນອນ ມີຊີວິດການເປັນຢູ່ດີຂຶ້ນກວ່າເກົ່າ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ພູມລຳເນົາ ໝາຍເຖິງ ຂອບເຂດທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນຂອງປະຊາຊົນ;
2. ອາຊີບໝັ້ນຄົງ ໝາຍເຖິງ ກິດຈະກຳໃດໜຶ່ງທີ່ແນ່ນອນ ຊຶ່ງສາມາດລ້ຽງຊີບ ແລະ ສ້າງລາຍຮັບກຸ້ມຕົນເອງ ແລະ ຄອບຄົວໄດ້ຢ່າງຕໍ່ເນື່ອງ;

3. ການຫຍັບຍ້າຍ ໝາຍເຖິງ ການຈັດສັນຕົ້ນໃໝ່ເຂດທີ່ຢູ່ອາໄສໃຫ້ປະຊາຊົນ ໃນບ້ານ ຫຼື ເຂດພື້ນທີ່ ເດີມ ໃຫ້ເປັນລະບຽບ ແລະ ເໝາະສົມກວ່າເກົ່າ;
4. ການຍົກຍ້າຍ ໝາຍເຖິງ ການປ່ຽນແປງທີ່ຢູ່ອາໄສເດີມຂອງຄອບຄົວ ແລະ ບ້ານ ເພື່ອໄປຕັ້ງພູມລຳ ເນົາ ແລະ ດຳລົງຊີວິດຢູ່ບ່ອນໃໝ່;
5. ເຈົ້າຂອງໂຄງການ ໝາຍເຖິງ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທີ່ ກ່ຽວຂ້ອງ ທີ່ໄດ້ຮັບມອບໝາຍຈາກລັດຖະບານ ໃນການຈັດຕັ້ງປະຕິບັດໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ;
6. ໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ໝາຍເຖິງ ບັນດາກິດຈະການທີ່ກຳນົດ ປະເພດ, ເຂດ, ພື້ນ ທີ່ ຮອງຮັບ ແລະ ເງື່ອນໄຂການຈັດສັນ ພູມລຳເນົາ ແລະ ອາຊີບ ລວມທັງ ຂັ້ນຕອນ, ວິທີການ, ງົບປະມານ ແລະ ກຳນົດເວລາໃນການຈັດຕັ້ງປະຕິບັດ;
7. ຜູ້ພັດທະນາໂຄງການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ໃຫ້ລົງທຶນໃນໂຄງການພັດທະນາໃດໜຶ່ງ;
8. ໂຄງການພັດທະນາ ໝາຍເຖິງ ໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ດຳເນີນການຢູ່ພາຍໃນ ສປປ ລາວ ຊຶ່ງຕ້ອງໄດ້ຈັດສັນ ຫຍັບຍ້າຍ ຫຼື ຍົກຍ້າຍປະຊາຊົນ ແລະ ທົດແທນຄ່າເສຍຫາຍ;
9. ໂຄງລ່າງພື້ນຖານທີ່ຈຳເປັນ ໝາຍເຖິງ ລະບົບການບໍລິການສາທາລະນະປະໂຫຍດຂັ້ນພື້ນຖານ ເປັນຕົ້ນ ເສັ້ນທາງ, ໄຟຟ້າໃນລະບົບ, ສຸກສາລາ, ນ້ຳສະອາດ, ໂຮງຮຽນ;
10. ບ້ານເຈົ້າພາບ ໝາຍເຖິງ ບ້ານ ທີ່ມີປະຊາຊົນອາໄສຢູ່ກ່ອນແລ້ວ ຊຶ່ງມີຜູ້ໄດ້ຮັບຜົນກະທົບຈາກບ່ອນ ອື່ນ ຍົກຍ້າຍມາອາໄສຢູ່ນຳ;
11. ຜູ້ໄດ້ຮັບຜົນກະທົບ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກໂຄງ ການ ພັດທະນາ;
12. ນັກພັດທະນາ ໝາຍເຖິງ ບຸກຄົນທີ່ໄດ້ຮັບການຝຶກອົບຮົມເຕັກນິກວິຊາການໃດໜຶ່ງທີ່ແນ່ນອນ, ມີ ຄວາມຊຳນິຊຳນານ ແລະ ໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;
13. ລາຍຮັບໄລຍະເສຍໂອກາດ ໝາຍເຖິງ ຄ່າຕອບແທນຈາກການດຳເນີນກິດຈະການໃດໜຶ່ງ ທີ່ຜູ້ໄດ້ຮັບ ຜົນກະທົບຈາກການຈັດສັນພູມລຳເນົາ ຈະໄດ້ຮັບໄລຍະ ສາມ ປີ;
14. ເງື່ອນໄຂດຳລົງຊີວິດຂັ້ນພື້ນຖານ ໝາຍເຖິງ ປັດໄຈພື້ນຖານຂອງການດຳລົງຊີວິດປະຈຳວັນ ຄື ອາຫານ ການກິນ, ເຄື່ອງນຸ່ງຫົ່ມທີ່ຈຳເປັນ, ທີ່ຢູ່ອາໄສຖາວອນ, ຄວາມສາມາດ ໃຊ້ຈ່າຍເຂົ້າໃນການປິ່ນປົວໃນ ເວລາເຈັບເປັນ, ການສຶກສາຂັ້ນພື້ນຖານ ແລະ ຄວາມສາມາດ ເຂົ້າເຖິງຕາໜ່າງການບໍລິການສາທາລະນະ ຂັ້ນພື້ນຖານທີ່ຈຳເປັນ;
15. ໄລຍະຂ້າມຜ່ານ ໝາຍເຖິງ ໄລຍະຟື້ນຟູຊີວິດການເປັນຢູ່ ຂອງປະຊາຊົນພາບໃນເວລາ ສາມ ຫາ ຫ້າ ປີ ນັບແຕ່ເວລາທີ່ໄດ້ມີການຍົກຍ້າຍອອກຈາກທີ່ຢູ່ອາໄສເດີມ;

16. ການທົດແທນຄ່າເສຍຫາຍ ໝາຍເຖິງ ການທົດແທນ ຫຼື ຊົດເຊີຍ ເປັນ ທີ່ດິນ, ວັດຖຸ ຫຼື ເປັນເງິນ ສຳລັບ ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ດ້ວຍມູນຄ່າປ່ຽນແທນ ທີ່ກຳນົດໄວ້ແຕ່ລະໄລຍະ;
17. ມູນຄ່າປ່ຽນແທນ ໝາຍເຖິງ ມູນຄ່າທີ່ຄິດໄລ່ເປັນ ວັດຖຸ, ເງິນ ຫຼື ທີ່ດິນ ທີ່ຈຳເປັນຕ້ອງນຳໃຊ້ເພື່ອປ່ຽນ ແທນທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກການຈັດສັນ ພູມລຳເນົາ;
18. ສິດນຳໃຊ້ທີ່ດິນຕາມປະເພນີ ໝາຍເຖິງ ສິດນຳໃຊ້ທີ່ດິນຂອງ ບຸກຄົນ ຫຼື ລວມບ້ານ ດ້ວຍການບຸກເບີກ, ພັດທະນາ ທີ່ໄດ້ປົກປັກຮັກສາ ແລະ ນຳໃຊ້ທີ່ດິນເປັນປົກກະຕິ, ເປີດເຜີຍ ຕໍ່ເນື່ອງເປັນເວລາແຕ່ ຊາວ ປີ ຂຶ້ນໄປ ໂດຍ ບໍ່ມີເອກະສານໃດໆຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ ແລະ ທີ່ດິນບ່ອນດັ່ງກ່າວນັ້ນ ບໍ່ ຢູ່ໃນເຂດສະຫງວນຂອງລັດ.

### ມາດຕາ 5 ຫຼັກການກ່ຽວກັບການຈັດສັນ ພູມລຳເນົາ ແລະ ອາຊີບ

ການຈັດສັນ ພູມລຳເນົາ ແລະ ອາຊີບ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນ ພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ແລະ ຮັບປະກັນວຽກງານປ້ອງກັນຊາດ - ປ້ອງກັນຄວາມ ສະຫງົບ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ບົນພື້ນຖານຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ທັນເວລາ ແລະ ຍຸຕິທຳ;
4. ຮັບປະກັນມີພູມລຳເນົາ, ໂຄງລ່າງພື້ນຖານທີ່ຈຳເປັນ, ບ່ອນທຳມາຫາກິນ, ມີນໍ້າໃຊ້ ແລະ ອາຊີບທີ່ໝັ້ນຄົງ , ມີຊີວິດການເປັນຢູ່ທີ່ດີຂຶ້ນກວ່າເກົ່າ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ;
5. ຈັດສັນບໍລິເວນທ້ອງຖິ່ນເດີມ ໃຫ້ສຳເລັດກ່ອນ ແລ້ວຈຶ່ງຈັດສັນໄປທ້ອງຖິ່ນອື່ນ ໂດຍຮັບປະກັນຄວາມ ສົມດຸນລະຫວ່າງ ຈຳນວນຄົນກັບພື້ນທີ່ຕົວຈິງ;
6. ມີການປະສານສົມທົບ, ປຶກສາຫາລື ແລະ ເຂົ້າຮ່ວມຂອງປະຊາຊົນ, ການຈັດຕັ້ງຂອງລັດ ແລະ ພາກສ່ວນ ອື່ນທີ່ກ່ຽວຂ້ອງແຕ່ຫົວທີ.

### ມາດຕາ 12 ເຂດທີ່ຈະໄດ້ຮັບການຈັດສັນພູມລຳເນົາ

ເຂດທີ່ຈະໄດ້ຮັບການຈັດສັນພູມລຳເນົາມີດັ່ງນີ້:

1. ເຂດທຸລະກັນດານ ແລະ ບໍ່ມີເງື່ອນໄຂໃນການພັດທະນາ;
2. ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ;
3. ເຂດທີ່ມີລັກສະນະພິເສດ;
4. ເຂດທີ່ຖືກໂຄງການພັດທະນາ.

## ມາດຕາ 20 ຂັ້ນຕອນການຈັດສັນພູມລຳເນົາ

ການຈັດສັນພູມລຳເນົາ ໃຫ້ດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ການສຶກສາຄົ້ນຄວ້າໂຄງການ ແລະ ວາງແຜນການຈັດສັນພູມລຳເນົາ;
2. ການທົດແທນຄ່າເສຍຫາຍຈາກການຈັດສັນພູມລຳເນົາ;
3. ການກໍ່ສ້າງໂຄງລ່າງພື້ນຖານຮອງຮັບການຈັດສັນພູມລຳເນົາ;
4. ການດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍ ຈັດສັນພູມລຳເນົາ;
5. ການພັດທະນາເຂດຈັດສັນພູມລຳເນົາ;
6. ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນໄລຍະຂ້າມຜ່ານ;
7. ການມອບ - ຮັບໂຄງການຈັດສັນພູມລຳເນົາ;
8. ການສິ້ນສຸດໂຄງການຈັດສັນພູມລຳເນົາ.

## ມາດຕາ 22 ການທົດແທນຄ່າເສຍຫາຍຈາກການຈັດສັນພູມລຳເນົາ

ການຈັດສັນພູມລຳເນົາ ສຳລັບປະເພດການຈັດສັນທົ່ວໄປ ໃຫ້ປະຕິບັດຕາມແຜນການຈັດສັນຂອງຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ ທີ່ໄດ້ຜ່ານການຮັບຮອງຢ່າງເປັນທາງການ ໂດຍສອດຄ່ອງກັບກົດໝາຍ.

ການທົດແທນຄ່າເສຍຫາຍ ຈາກການຈັດສັນພູມລຳເນົາ ສຳລັບປະເພດການຈັດສັນສະເພາະ ໃຫ້ປະຕິບັດດັ່ງນີ້:

1. ຜູ້ໄດ້ຮັບຜົນກະທົບ ທີ່ມີເອກະສານກ່ຽວກັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍທີ່ດິນທັງໝົດ ຫຼື ບາງສ່ວນ ແລະ ທີ່ດິນທີ່ຍັງເຫຼືອ ກໍບໍ່ສາມາດນຳໃຊ້ໄດ້ນັ້ນ ຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດດ້ວຍການຈັດສັນທີ່ດິນບ່ອນໃໝ່ທົດແທນ ຕາມມູນຄ່າປ່ຽນແທນທີ່ກຳນົດໄວ້ແຕ່ລະໄລຍະ ແລະ ໄດ້ຮັບເອກະສານກ່ຽວກັບສິດນຳໃຊ້ທີ່ດິນຕອນນັ້ນ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ເພື່ອໃຫ້ໄດ້ຮັບເອກະສານດັ່ງກ່າວ. ໃນກໍລະນີ ບໍ່ສາມາດຈັດສັນທີ່ດິນທີ່ເໝາະສົມທົດແທນໃຫ້ ຫຼື ທີ່ດິນນັ້ນມີມູນຄ່າປ່ຽນແທນໜ້ອຍກວ່າມູນຄ່າທີ່ດິນ ທີ່ຜູ້ໄດ້ຮັບຜົນກະທົບສູນເສຍ ຕ້ອງໄດ້ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ກ່ຽວດ້ວຍຮູບການອື່ນ ຕາມມູນຄ່າປ່ຽນແທນ;
2. ໃນກໍລະນີ ມູນຄ່າທີ່ດິນ ແລະ ເຮືອນ ຂອງຜູ້ໄດ້ຮັບຜົນກະທົບນັ້ນ ຫາກຕໍ່າກວ່າມູນຄ່າທີ່ດິນ ແລະ ເຮືອນທີ່ຈະຈັດສັນໃຫ້ໃໝ່ ໃຫ້ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ພິຈາລະນາແກ້ໄຂ ຕາມຄວາມ ເໝາະສົມ;
3. ຜູ້ໄດ້ຮັບຜົນກະທົບ ທີ່ມີເອກະສານ ກ່ຽວກັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍທີ່ດິນພຽງສ່ວນໜຶ່ງ ແລະ ທີ່ດິນສ່ວນທີ່ຍັງເຫຼືອ ກໍຍັງສາມາດນຳໃຊ້ໄດ້ນັ້ນ ໃຫ້ທົດແທນຄ່າເສຍຫາຍໃນສ່ວນທີ່ ໄດ້ສູນເສຍນັ້ນ ດ້ວຍມູນຄ່າປ່ຽນແທນທີ່ຄິດໄລ່ໄວ້. ສ່ວນທີ່ດິນທີ່ຍັງເຫຼືອ ຕ້ອງໄດ້ຮັບເອກະສານຢັ້ງຢືນສິດນຳໃຊ້;

4. ຜູ້ໄດ້ຮັບຜົນກະທົບທີ່ໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ຫາກສູນເສຍສິດ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫຼື 2 ຂອງມາດຕານີ້;
5. ຜູ້ໄດ້ຮັບຜົນກະທົບທີ່ບໍ່ມີເອກະສານ ກ່ຽວກັບສິດນຳໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ຂອງມາດຕານີ້ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍຕໍ່ການສູນເສຍທີ່ດິນດັ່ງກ່າວ, ແຕ່ຈະໄດ້ຮັບການທົດແທນ ຄ່າເສຍຫາຍ ຕໍ່ການສູນເສຍສິ່ງປຸກສ້າງ, ຕົ້ນໄມ້ ແລະ ຜົນລະປູກ ຕາມມູນຄ່າປ່ຽນແທນທີ່ຕົດໄລ່ໄວ້;
6. ການສູນເສຍສິ່ງປຸກສ້າງທັງໝົດ ຫຼື ບາງສ່ວນ ຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍມູນຄ່າປ່ຽນແທນ ຂອງສິ່ງປຸກສ້າງດັ່ງກ່າວ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ທີ່ເປັນເຈົ້າກຳມະສິດຂອງສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫຼຸ້ຍຫ້ຽນ ຫຼື ບໍ່ມີການຫຼຸດຄ່າທົດແທນ ສຳລັບວັດຖຸກໍ່ສ້າງທີ່ຍັງເຫຼືອ;
7. ທີ່ດິນ ຫຼື ສິ່ງປຸກສ້າງ ທີ່ໄດ້ຢຸດການນຳໃຊ້ຊົ່ວຄາວ ຕ້ອງໄດ້ທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຕາມແຕ່ລະກໍລະນີ ພ້ອມທັງຮັບປະກັນ ໃນການສົ່ງຄືນທີ່ດິນ ຫຼື ສິ່ງປຸກສ້າງ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບໃນສະພາບເດີມ;
8. ການສູນເສຍຕົ້ນໄມ້, ຜົນລະປູກ, ສັດລ້ຽງ ຫຼື ລາຍຮັບໄລຍະເສຍໂອກາດ ຕ້ອງທົດແທນຄ່າເສຍຫາຍດ້ວຍມູນຄ່າປ່ຽນແທນ;
9. ການສູນເສຍໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆແກ່ຊຸມຊົນ ຕ້ອງໄດ້ປົວແປງຄືນ ໃຫ້ຢູ່ໃນສະພາບຄ້າຍຄືເກົ່າ ຫຼື ດີກວ່າເກົ່າ ແລະ ຕ້ອງເອົາໃຈໃສ່ເປັນພິເສດ ຖ້າຫາກເປັນການສູນເສຍໂຄງລ່າງພື້ນຖານທາງດ້ານວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ. ສຳລັບປ່າຊ້າ, ທາດອັດຖິ, ຂຸມຝັງສົບ ຫາກຖືກຜົນກະທົບ ແລະ ຕ້ອງໄດ້ຍ້າຍໄປບ່ອນໃໝ່ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຕາມຄວາມເປັນຈິງ ບົນພື້ນຖານການປຶກສາຫາລືກັບຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
10. ການປະຕິບັດການທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ບໍ່ວ່າໃນກໍລະນີໃດກໍຕາມ ຕ້ອງໄດ້ປະສານສົມທົບກັບຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແຕ່ລະຂັ້ນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ຕາມແຜນການທົດແທນຄ່າເສຍຫາຍ;
11. ຜູ້ໄດ້ຮັບຜົນກະທົບ ທີ່ພໍໃຈຍົກຍ້າຍໄປຢູ່ບ່ອນອື່ນ ທີ່ລັດບໍ່ໄດ້ຈັດສັນໃຫ້ ໂດຍໄດ້ຮັບການອະນຸຍາດຈະບໍ່ໄດ້ຮັບການຈັດສັນພູມລຳເນົາ ແຕ່ຈະໄດ້ຮັບການທົດແທນຄ່າເສຍຫາຍ;
12. ກິດຈະການ ທີ່ດຳເນີນພາຍຫຼັງວັນຂຶ້ນທະບຽນ ສິດຂອງຜູ້ໄດ້ຮັບຜົນກະທົບນັ້ນ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍ ຍົກເວັ້ນໃນກໍລະນີ ແຜນການທົດແທນຄ່າເສຍຫາຍ ຫາກບໍ່ໄດ້ຮັບການຈັດຕັ້ງປະຕິບັດຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນຂໍ້ 13 ຂອງມາດຕານີ້;

13. ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຕ້ອງມີການປະເມີນຄືນໃໝ່ມູນຄ່າທົດແທນຄ່າເສຍຫາຍ ໂດຍການມີສ່ວນຮ່ວມຂອງຜູ້ໄດ້ຮັບຜົນກະທົບ ຖ້າຫາກເຫັນວ່າແຜນການທົດແທນຄ່າເສຍຫາຍ ບໍ່ໄດ້ຮັບການຈັດຕັ້ງປະຕິບັດພາຍໃນ ສິບສອງ ເດືອນ;
14. ການປະຕິບັດແຜນການທົດແທນຄ່າເສຍຫາຍ ຕ້ອງສຳເລັດພາຍໃນ ຊາວສີ່ ເດືອນ ນັບແຕ່ວັນແຜນການດັ່ງກ່າວ ໄດ້ຖືກຮັບຮອງເອົາຢ່າງເປັນທາງການ. ຖ້າຫາກບໍ່ສຳເລັດການທົດແທນຄ່າເສຍຫາຍ ພາຍໃນໄລຍະເວລາທີ່ ກຳນົດໄວ້, ຜູ້ພັດທະນາໂຄງການ ຕ້ອງສະເໜີ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ພິຈາລະນາ ຕໍ່ເວລາ ເພີ່ມຕື່ມແຕ່ບໍ່ໃຫ້ເກີນ ສິບສອງ ເດືອນ.

## ມາດຕາ 24 ການດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍ ຈັດສັນພູມລຳເນົາ

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງປະສານສົມທົບກັບຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແຕ່ລະຂັ້ນທີ່ກ່ຽວຂ້ອງ ເພື່ອດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍ ຕົວຈິງ ແລະ ໃຫ້ປະຕິບັດດັ່ງນີ້:

1. ຮັບປະກັນໃຫ້ໄປຕາມພື້ນທີ່ ແລະ ກຳນົດເວລາທີ່ໄດ້ກຳນົດໄວ້ໃນແຜນການຈັດສັນ ຫຍັບຍ້າຍ ຫຼື ຍົກຍ້າຍ ທີ່ຖືກຮັບຮອງຢ່າງເປັນທາງການ;
2. ເຄົາລົບວັດທະນະທຳ, ສາສະໜາ, ຮີດຄອງປະເພນີອັນດີງາມ ແລະ ຄວາມເຊື່ອຖື ຂອງທ້ອງຖິ່ນ;
3. ຫຼຸດຜ່ອນຜົນກະທົບຕໍ່ບ້ານເຈົ້າພາບ ພ້ອມທັງຮັບປະກັນໃຫ້ປະຊາຊົນທີ່ຢູ່ມາກ່ອນ ສາມາດນຳໃຊ້ໂຄງລ່າງພື້ນຖານຂອງຊຸມຊົນທີ່ລັດ ຫຼື ຜູ້ພັດທະນາໂຄງການຈັດສັນໃຫ້.

ໃນກໍລະນີ ຜ່ານການປະເມີນຕີລາຄາ ຂອງຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ເຫັນວ່າບໍ່ປະຕິບັດຕາມແຜນທີ່ໄດ້ກຳນົດໄວ້ພາຍໃນ ສິບສອງ ເດືອນ ພາຍຫຼັງຂຶ້ນທະບຽນສັດຂອງຜູ້ໄດ້ຮັບຜົນກະທົບແລ້ວໃຫ້ປະຕິບັດ ດັ່ງນີ້:

1. ຜູ້ພັດທະນາໂຄງການດັ່ງກ່າວຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ;
2. ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຕ້ອງພິຈາລະນາຕົກລົງ ເອົາຜູ້ພັດທະນາໂຄງການໃໝ່ ;
3. ຖ້າຜູ້ພັດທະນາໂຄງການເກົ່າ ຫາກຕ້ອງການສືບຕໍ່ ໃຫ້ສະເໜີຕໍ່ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອພິຈາລະນາ;
4. ຜູ້ພັດທະນາໂຄງການ ທີ່ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ໄດ້ຕົກລົງເລືອກເອົາ ຕ້ອງປັບປຸງແຜນການຫຍັບຍ້າຍ ຫຼື ຍົກຍ້າຍຄືນໃໝ່ ແລ້ວນຳສະເໜີ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບພິຈາລະນາຮັບຮອງ.

## ມາດຕາ 46 ສິດຂອງຜູ້ໄດ້ຮັບການຈັດສັນພູມລໍາເນົາ

ຜູ້ໄດ້ຮັບການຈັດສັນພູມລໍາເນົາມີສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ ລວມທັງຄວາມຄືບໜ້າໃນການຈັດສັນ, ທົດແທນຄ່າເສຍຫາຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕະຫຼອດ ໄລຍະປະຕິບັດໂຄງການ;
2. ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ຟື້ນຟູຊີວິດການເປັນຢູ່ ຕາມແຜນການທີ່ ໄດ້ຮັບຮອງເປັນທາງການ;
3. ສະເໜີເປັນລາຍລັກອັກສອນຕໍ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ ແລະ ຄະນະກໍາມະການຈັດ ສັນ ພູມລໍາເນົາ ແລະ ອາຊີບ ເພື່ອພິຈາລະນາແກ້ໄຂບັນຫາທີ່ຕິດພັນກັບໂຄງການພັດທະນາ;
4. ເຂົ້າຮ່ວມກອງປະຊຸມປຶກສາຫາລື ປະກອບຄໍາຄິດຄໍາເຫັນ ຕໍ່ແຜນການຈັດສັນພູມລໍາເນົາ, ການທົດແທນ ຄ່າເສຍຫາຍ, ການຟື້ນຟູຊີວິດການເປັນຢູ່;
5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ມາດຕາ 47 ພັນທະຂອງຜູ້ໄດ້ຮັບການຈັດສັນພູມລໍາເນົາ

ຜູ້ໄດ້ຮັບການຈັດສັນພູມລໍາເນົາມີພັນທະ ດັ່ງນີ້:

1. ສະໜອງຂໍ້ມູນໃຫ້ຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວ ກັບຂໍ້ມູນຂອງຕົນ;
2. ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ແກ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ, ຄະ ນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດ ແຜນການຈັດ ສັນພູມລໍາເນົາ, ການທົດແທນຄ່າເສຍຫາຍ, ການຟື້ນຟູຊີວິດການເປັນຢູ່ ແລະ ການ ແກ້ໄຂຂໍ້ສະເໜີຂອງຕົນ;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ມາດຕາ 48 ສິດຂອງຜູ້ໄດ້ຮັບການຈັດສັນອາຊີບ

ຜູ້ໄດ້ຮັບການຈັດສັນອາຊີບມີສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບຜົນປະໂຫຍດ ແລະ ຜົນກະທົບຕໍ່ອາຊີບຂອງຕົນ;
2. ເລືອກອາຊີບທີ່ຕົນມີພື້ນຖານ ຫຼື ອາຊີບໃໝ່ ຕາມທ່າແຮງ;
3. ໄດ້ຮັບບູລິມະສິດໃນການເຂົ້າເຮັດວຽກນໍາໂຄງການ;
4. ໄດ້ຮັບການສົ່ງເສີມທາງດ້ານເຕັກນິກວິຊາການໃນການຍົກລະດັບອາຊີບຂອງຕົນ, ການເຂົ້າເຖິງແຫຼ່ງ ທຶນ ແລະ ສົ່ງເສີມການຕະຫຼາດ;
5. ສະເໜີເປັນລາຍລັກອັກສອນຕໍ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ ແລະ ຄະນະກໍາມະການຈັດ ສັນ ພູມລໍາເນົາ ແລະ ອາຊີບ ເພື່ອພິຈາລະນາ ແກ້ໄຂບັນຫາທີ່ຕິດພັນກັບອາຊີບຂອງຕົນ;

6. ເຂົ້າຮ່ວມກອງປະຊຸມປຶກສາຫາລື ປະກອບຄຳຄິດຄຳເຫັນ ຕໍ່ແຜນການຈັດສັນອາຊີບ;
7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 49 ພັນທະຂອງຜູ້ໄດ້ຮັບການຈັດສັນອາຊີບ

ຜູ້ໄດ້ຮັບການຈັດສັນອາຊີບມີພັນທະ ດັ່ງນີ້:

1. ສະໜອງຂໍ້ມູນກ່ຽວກັບອາຊີບຂອງຕົນ ໃຫ້ຊັດເຈນ ແລະ ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຮັບ ຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຂໍ້ມູນຂອງຕົນ;
2. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ, ຄະ ນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຈັດສັນອາຊີບ;
3. ເປັນເຈົ້າການ, ບຸກບືນຜ່ານຜ່າຄວາມຫຍຸ້ງຍາກ ແລະ ດຸໝັ່ນໃນການປະກອບອາຊີບ ເພື່ອເຮັດໃຫ້ຊີ ວິດການເປັນຢູ່ດີຂຶ້ນ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 50 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບພູມລຳເນົາ ແລະ ອາຊີບຂອງຕົນ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ;
2. ມີການປະພຶດ ທີ່ສະແດງອອກເຖິງແນວຄິດຄັບແຄບ, ເມີນເສີຍ, ແບ່ງແຍກລະຫວ່າງເຜົ່າ ແລະ ສາສະໜາ, ເຫັນແກ່ທ້ອງຖິ່ນ ແລະ ເຜົ່າຕົນເອງ;
3. ເຄື່ອນຍ້າຍ ຫຼື ຈັບຈອງພູມລຳເນົາ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ໂຄສະນາດ້ານແນວທາງນະໂຍບາຍ, ສ້າງຄວາມນັ້ນປ່ວນ, ຍຸແຍ່, ນາບຂູ່, ກົດໜ່ວງ ຖ່ວງດຶງ, ສ້າງອຸປະສັກ ຫຼື ຂັດຂວາງຕໍ່ການປະຕິບັດແຜນການຫຍັບຍ້າຍ ຫຼື ຍົກຍ້າຍຈັດສັນພູມລຳເນົາ ແລະ ການປະຕິບັດໜ້າທີ່ຂອງເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ;
5. ໃຫ້ ຫຼື ເປັນສື່ກາງ ໃນການໃຫ້ ຫຼື ຮັບສິນບົນ;
6. ດຳເນີນການຈັດສັນພູມລຳເນົາ ໂດຍບໍ່ໄດ້ຮັບອະນຸຍາດ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 51 ຂໍ້ຫ້າມສຳລັບພະນັກງານ, ເຈົ້າຂອງໂຄງການ ແລະ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ

ຫ້າມພະນັກງານ, ເຈົ້າຂອງໂຄງການ ແລະ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ຫຼື ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ ຖ່ວງດຶງ ຫຼື ຮຽກ ເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ ຫຼື ຜູ້ໄດ້ຮັບຜົນກະທົບ;
2. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ບິດເບືອນຂໍ້ມູນ, ປອມແປງເອກະສານ ຫຼື ອອກເອກະສານໂດຍບໍ່ຖືກຕ້ອງ;
4. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ບໍ່ມີຄວາມຍຸຕິທຳ ຫຼື ຂາດຄວາມຮັບຜິດ ຊອບ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດ ຂອງລັດ, ລວມໝູ່, ບຸກຄົນ ຫຼື ຜູ້ໄດ້ຮັບຜົນກະທົບ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ

## ມາດຕາ 52 ຂໍ້ຫ້າມສຳລັບຜູ້ພັດທະນາໂຄງການ

ຫ້າມຜູ້ພັດທະນາໂຄງການມີພຶດຕິກຳ ດັ່ງນີ້:

1. ດຳເນີນການສຳຫຼວດ ຫຼື ສຶກສາຄົ້ນຄວ້າໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຖ່ວງດຶງ ຫຼື ແກ່ຍາວເວລາ ການປະຕິບັດແຜນການຍົກຍ້າຍ, ການທົດແທນຄ່າເສຍຫາຍ ແລະ ການ ຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບ;
3. ນຳໃຊ້ ຫຼື ແຈ້ງຂໍ້ມູນກ່ຽວກັບການສຳຫຼວດ ແລະ ສຶກສາຄົ້ນຄວ້າໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ໂດຍບໍ່ໄດ້ຮັບອະນຸຍາດ;
4. ໃຫ້ສິນບົນພະນັກງານ, ເຈົ້າຂອງໂຄງການ, ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແລະ ປະຊາຊົນ;
5. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າຂອງໂຄງການ, ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແລະ ປະຊາຊົນ;
6. ລະເມີດສິດ ແລະ ໜ້າທີ່ ຂອງເຈົ້າຂອງໂຄງການ, ຄະນະກຳມະການຈັດຂຶ້ນ ພູມລຳເນົາ ແລະ ອາຊີບ;
7. ປະຕິບັດບໍ່ຖືກຕ້ອງ ຕາມແຜນການ ຫຍັບຍ້າຍ ຫຼື ຍົກຍ້າຍ, ການທົດແທນຄ່າເສຍຫາຍ ແລະ ການ ຟື້ນຟູຊີວິດການເປັນຢູ່ ຂອງຜູ້ໄດ້ຮັບຜົນກະທົບ ຕາມທີ່ໄດ້ຕົກລົງກັບເຈົ້າຂອງໂຄງການ, ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ

## ມາດຕາ 53 ຂໍ້ຫ້າມສຳລັບຜູ້ໄດ້ຮັບການຈັດສັນ ພູມລາເນົາ ແລະ ອາຊີບ

ຫ້າມຜູ້ໄດ້ຮັບການຈັດສັນ ພູມລຳເນົາ ແລະ ອາຊີບ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງການປະຕິບັດໜ້າທີ່ ຫຼື ບໍ່ໃຫ້ການຮ່ວມມື ແກ່ພະນັກງານທີ່ກ່ຽວຂ້ອງກັບການຈັດສັນ ພູມລຳເນົາ ແລະ ອາຊີບ;
2. ຍົກຍ້າຍ ກັບຄືນໄປບ່ອນຢູ່ເດີມ ຫຼື ຢູ່ບ່ອນໃໝ່ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສະໜອງຂໍ້ມູນ ກ່ຽວກັບພູມລຳເນົາ ແລະ ອາຊີບຂອງຕົນ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;

4. ປຸກລະດົມ, ສ້າງກຸ່ມກ້ອນ, ສ້າງຄວາມແຕກແຍກ ພາຍໃນກຸ່ມຜູ້ໄດ້ຮັບການຈັດສັນ ຫຼື ບ້ານເຈົ້າພາບ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 54 ຮູບການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ສາມາດແກ້ໄຂດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານປະຊາຊົນ.

### ມາດຕາ 56 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ, ຄູ່ກໍລະນີມີສິດສະເໜີຕໍ່ ອົງການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແກ້ໄຂຕາມກົດໝາຍ.

### ມາດຕາ 57 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການຈັດສັນພູມລຳເນົາ ແລະ ອາຊີບ, ຄູ່ກໍລະນີ ມີສິດສະເໜີໃຫ້ຍັງ ການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພິຈາລະນາແກ້ໄຂ ຕາມກົດໝາຍ.

### ມາດຕາ 58 ການຕັດສິນຂອງສານປະຊາຊົນ

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ, ຄູ່ກໍລະນີຝ່າຍໃດໜຶ່ງມີສິດ ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

## 13. ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ ສພຊ, ລົງວັນທີ 18 ທັນວາ 2012

### ມາດຕາ 3 (ປັບປຸງ) ການປົກປັກຮັກສາສິ່ງແວດລ້ອມ

ການປົກປັກຮັກສາສິ່ງແວດລ້ອມ ແມ່ນ ການນຳໃຊ້ວິທີການ ແລະ ມາດຕະການ ເພື່ອປ້ອງກັນ, ອະນຸລັກ ແລະ ບູລະນະ ຟື້ນຟູ ສິ່ງແວດລ້ອມ, ຄວບຄຸມມົນລະພິດ, ເຫດການສຸກເສີນທາງດ້ານ ສິ່ງແວດລ້ອມ ແລະ ໄພພິບັດທຳມະຊາດ ເຮັດໃຫ້ສິ່ງແວດລ້ອມ ຂຽວ ສະອາດ ງາມຕາ, ປາສະຈາກມົນລະພິດ, ບໍ່ສົ່ງຜົນ ສະທ້ອນອັນບໍ່ດີ ຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດ.

## ມາດຕາ 4 (ໃໝ່) ການອະທິບາຍຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິ່ງແວດລ້ອມສັງຄົມ ໝາຍເຖິງ** ທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມທີ່ ມະນຸດສ້າງຂຶ້ນ ຊຶ່ງມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນ ຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ການຂະຫຍາຍຕົວ ຂອງມະນຸດ ແລະ ທຳມະຊາດ;
2. **ສິ່ງແວດລ້ອມທຳມະຊາດ ໝາຍເຖິງ** ທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມ ທີ່ເກີດຂຶ້ນຕາມທຳມະຊາດ ຊຶ່ງມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ;
3. **ການຟື້ນຟູສິ່ງແວດລ້ອມ ໝາຍເຖິງ** ການເຮັດໃຫ້ສິ່ງແວດລ້ອມທີ່ຖືກທາລາຍ ຫຼື ເສື່ອມໂຊມແລ້ວນັ້ນ ມີການຟື້ນຕົວ ແລະ ໄດ້ຮັບການປັບປຸງໃຫ້ຢູ່ໃນສະພາບດີຂຶ້ນ ແລະ ມີລະບົບນິເວດສົມບູນຂຶ້ນ;
4. **ການປະເມີນສິ່ງແວດລ້ອມແບບຍຸດທະສາດ ໝາຍເຖິງ** ຂະບວນການຄາດຄະເນຜົນ ກະທົບທີ່ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ລວມທັງການປົກປັກຮັກສາສິ່ງແວດລ້ອມ ໃນການວາງນະໂຍບາຍ, ຍຸດທະສາດ ແລະ ແຜນການຂອງຂະແໜງການຕ່າງໆ;
5. **ແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ ໝາຍເຖິງ** ການຈັດສັນຂອບເຂດນາໃຊ້ ພື້ນທີ່ແນໃສ່ປົກປັກຮັກສາ, ປັບປຸງ ແລະ ບູລະນະ ຟື້ນຟູຄຸນນະພາບສິ່ງແວດລ້ອມ ໂດຍສະເພາະການກຳນົດເຂດທີ່ພັກອາໄສ, ເຂດກະສິກຳ, ເຂດອຸດສາຫະກຳໃນອະນາຄົດ ແລະ ສະຖານທີ່ຕັ້ງປະເພດ ໂຄງການລົງທຶນຂະໜາດໃຫຍ່;
6. **ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໝາຍເຖິງ** ຂະບວນການສຶກສາ, ສຳຫຼວດ, ວິໄຈຂໍ້ມູນ ແລະ ຄາດຄະເນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທັງດ້ານບວກ ແລະ ດ້ານລົບທີ່ຈະເກີດຂຶ້ນ ຈາກໂຄງການຕ່າງໆ ໃນໄລຍະສັ້ນ, ໄລຍະຍາວ ພ້ອມທັງກຳນົດວິທີການ ແລະ ມາດຕະການທີ່ເໝາະສົມ ເພື່ອປ້ອງກັນ, ຫຼີກເວັ້ນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ;
7. **ຊີວະນາໆພັນ ໝາຍເຖິງ** ຄວາມຫຼາກຫຼາຍຂອງຊະນິດ ພັນພືດ, ສັດ ແລະ ຈຸລິນຊີ ຢູ່ ໃນຂອບເຂດທຳມະຊາດໃດໜຶ່ງ;
8. **ການພັດທະນາແບບຍືນຍົງ ໝາຍເຖິງ** ການພັດທະນາເສດຖະກິດ-ສັງຄົມ ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ ທີ່ບໍ່ມີຜົນກະທົບຕໍ່ຄົນຮຸ່ນຕໍ່ໆໄປໃນອະນາຄົດ;
9. **ສິ່ງເສດເຫຼືອ ໝາຍເຖິງ** ວັດຖຸ, ສານເຄມີ ຫຼື ສິ່ງໃດໜຶ່ງທີ່ບຸກຄົນ ຫຼື ນິຕິບຸກຄົນ ບໍ່ຕ້ອງການ ຫຼື ບໍ່ສາມາດນຳມາໃຊ້ໄດ້ອີກ ເຊັ່ນ ນຳມັນປ່ຽນຖ່າຍ, ຂີ້ເຫຍື້ອ, ນ້ຳເປື້ອນ ແລະ ສິ່ງອື່ນໆ ທີ່ເປັນພິດ ຫຼື ບໍ່ເປັນພິດ;

10. **ການກວດກາສິ່ງແວດລ້ອມ ໝາຍເຖິງ** ການຕິດຕາມ, ກວດກາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນ ໂຄງການລົງທຶນ, ການຂຸດຄົ້ນ, ການນຳໃຊ້ຊັບພະຍາກອນທຳມະຊາດ ເພື່ອປ້ອງກັນ, ແກ້ໄຂບັນຫາ, ບູລະນະ ຟື້ນຟູ ສິ່ງແວດລ້ອມ ແລະ ຄວບຄຸມມົນລະພິດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແນໃສ່ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ມີຄວາມຍືນຍົງ ແລະ ສິ່ງແວດລ້ອມມີຄຸນນະພາບທີ່ດີ;
11. **ແຜນຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການລົງທຶນ ໝາຍເຖິງ** ແຜນການທີ່ໄດ້ສັງລວມເອົາບັນດາໜ້າວຽກຕົ້ນຕໍ ດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ກຳນົດວິທີການ ແລະ ມາດຕະການປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ທີ່ໄດ້ສຶກສາໄວ້ໃນບົດລາຍງານ ກ່ຽວກັບການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ພ້ອມທັງ ກຳນົດການຈັດຕັ້ງ, ຄວາມຮັບຜິດຊອບ, ຕາຕະລາງເວລາ ແລະ ງົບປະມານໃຫ້ພຽງພໍ ເພື່ອການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາ ດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
12. **ເຕັກໂນໂລຊີສະອາດ ໝາຍເຖິງ** ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ ທີ່ນຳໃຊ້ໃນຂະບວນການຜະລິດ ແລະ ການບໍລິການ ທີ່ບໍ່ສ້າງມົນລະພິດ ຫຼື ສິ່ງເສດເຫຼືອ ແລະ ນຳໃຊ້ພະລັງງານໜ້ອຍທີ່ສຸດ ເພື່ອບໍ່ໃຫ້ມີຜົນກະທົບ ແລະ ເປັນອັນຕະລາຍຕໍ່ສິ່ງແວດລ້ອມ;
13. **ສານເຄມີເປັນພິດ ໝາຍເຖິງ** ວັດຖຸ ຫຼື ທາດເບື່ອ ທີ່ເຈືອປົນໃນອາກາດ, ດິນ ຫຼື ນ້ຳ ຊຶ່ງສົ່ງຜົນສະທ້ອນອັນບໍ່ດີ ຕໍ່ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ;
14. **ທາດກຳມັນຕະພາບລັງສີ ໝາຍເຖິງ** ທາດທີ່ແຜ່ກະຈາຍອະນຸພາບຂອງລັງສີຢ່າງຕໍ່ ເນື່ອງ ຊຶ່ງເປັນອັນຕະລາຍຕໍ່ຮ່າງກາຍ ຫຼື ຈຸລັງຂອງສິ່ງທີ່ມີຊີວິດຕ່າງໆ;
15. **ລະບົບນິເວດ ໝາຍເຖິງ** ສາຍກ່ຽວພັນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ລະຫວ່າງສິ່ງທີ່ມີຊີວິດ ແລະ ສິ່ງບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ.

## ມາດຕາ 6 (ປັບປຸງ) ຫຼັກການ ກ່ຽວກັບການປົກປັກຮັກສາ ສິ່ງແວດລ້ອມ

ການປົກປັກຮັກສາສິ່ງແວດລ້ອມ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ແບບຍືນຍົງ;
2. ເອົາການປ້ອງກັນສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເປັນວຽກງານຕົ້ນຕໍ ແລະ ເອົາ ການບູລະນະ ຟື້ນຟູສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເປັນວຽກງານສຳຄັນ;
3. ມີການເຂົ້າຮ່ວມ ແລະ ປຶກສາຫາລືຢ່າງເປັນເຈົ້າການ ຂອງບຸກຄົນ ແລະ ການຈັດຕັ້ງ ໃນການປົກປັກຮັກສາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

4. ນຳໃຊ້ຊັບພະຍາກອນທຳມະຊາດ, ວັດຖຸດິບ ແລະ ພະລັງງານຢ່າງປະຢັດ, ສົມເຫດສົມຜົນ, ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຜົນກະທົບໜ້ອຍທີ່ສຸດ ຕໍ່ສິ່ງແວດລ້ອມ;
5. ຮັບຜິດຊອບ ຕໍ່ຄວາມເສັຍຫາຍ ດ້ານສິ່ງແວດລ້ອມ ສັງຄົມ ຫຼື ທຳມະຊາດ ທີ່ຕົນໄດ້ກໍ່ຂຶ້ນ. ການຊອກຫາຫຼັກຖານຢັ້ງຢືນ, ການປະຕິບັດມາດຕະຖານຄວບຄຸມມົນລະພິດ ແມ່ນ ພັນທະຂອງ ຜູ້ກໍ່ຄວາມເສຍຫາຍ.

## ມາດຕາ 7 (ປັບປຸງ) ພັນທະປົກປັກຮັກສາສິ່ງແວດລ້ອມ

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະປົກປັກຮັກສາສິ່ງແວດລ້ອມ ດ້ວຍການປ້ອງກັນ, ປັບປຸງ, ບູລະນະ ຟື້ນຟູ, ຄວບຄຸມ, ຕິດຕາມ ແລະ ກວດກາສິ່ງແວດລ້ອມ ຕາມລະບຽບກົດໝາຍ, ບໍ່ສ້າງຜົນກະທົບ, ບໍ່ເຮັດໃຫ້ສິ່ງແວດລ້ອມ ເສື່ອມໂຊມ, ບໍ່ສ້າງ ແລະ ປ່ອຍມົນລະພິດ ເກີນມາດຕະຖານຄວບຄຸມມົນລະພິດ ແລະ ມາດຕະຖານຄຸນນະພາບ ສິ່ງແວດລ້ອມແຫ່ງຊາດ ແນໃສ່ຮັບ ປະກັນໃຫ້ສິ່ງແວດລ້ອມມີຄຸນນະພາບດີ ແລະ ຮັບປະກັນ ການພັດທະນາແບບຍືນຍົງ.

## ມາດຕາ 8 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຊຶ່ງລວມມີ ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ ສປປ ລາວ.

## ມາດຕາ 10 (ໃໝ່) ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ

ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແມ່ນ ຜົນສະທ້ອນທາງລົບ ຕໍ່ຊີວິດ, ສຸຂະພາບ, ຊັບສິນ ແລະ ການດຳລົງຊີວິດປະຈຳວັນ ຂອງຄົນ ລວມທັງທີ່ຢູ່ອາໄສຂອງປະຊາຊົນ ແລະ ຕໍ່ມໍຣະດົກທາງດ້ານວັດທະນະທຳ ແລະ ປະຫວັດສາດ.

## ມາດຕາ 11 (ໃໝ່) ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ

ຜົນກະທົບຕໍ່ສິ່ງແວດລ້ອມທາມະຊາດ ແມ່ນ ຜົນສະທ້ອນທາງລົບ ຕໍ່ພື້ນຖານ ລະບົບນິເວດ ທາມະຊາດ, ຊັບພະຍາກອນທຳມະຊາດ, ຊີວະນາໆພັນ, ດິນປູກຝັງ, ແຫຼ່ງນ້ຳ ແລະ ການປ່ຽນແປງດິນ ຟ້າອາກາດ ລວມທັງ ມໍຣະດົກທາງດ້ານທຳມະຊາດ.

## ມາດຕາ 13 (ໃໝ່) ກິດຈະການປົກປັກຮັກສາສິ່ງແວດລ້ອມ

ການປົກປັກຮັກສາສິ່ງແວດລ້ອມ ມີ ກິດຈະການຕົ້ນຕໍ ດັ່ງນີ້:

1. ການປ້ອງກັນສິ່ງແວດລ້ອມ;
2. ການຄວບຄຸມມົນລະພິດ;
3. ການຄວບຄຸມສານເຄມີເປັນພິດ ແລະ ການກ ຈັດສິ່ງເສດເຫຼືອ;
4. ການຢັ້ງຢືນ ແລະ ອະນຸຍາດ ກ່ຽວກັບສິ່ງແວດລ້ອມ;

5. ການສົ່ງເສີມ ແລະ ການມີສ່ວນຮ່ວມຂອງມວນຊົນ.

## ມາດຕາ 32 (ໃໝ່) ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ

ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ແມ່ນ ການກໍານົດຄວາມເຂັ້ມຂຸ້ນຂອງມົນລະພິດທີ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປ່ອຍມົນລະພິດ ຈາກແຫຼ່ງໃດໜຶ່ງ ສູ່ອາກາດ, ດິນ ຫຼື ນໍ້າ.

ລັດຖະບານ ເປັນຜູ້ກໍານົດ ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ຕາມການສະເໜີຂອງກະຊວງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພາຍຫຼັງທີ່ໄດ້ປະສານສົມທົບກັບຂະແໜງ ການອື່ນທີ່ກ່ຽວຂ້ອງ.

## ມາດຕາ 34 (ປັບປຸງ) ພັນທະຂອງຜູ້ປະກອບການໃນການຄວບຄຸມມົນລະພິດ

ຜູ້ປະກອບການ ທີ່ດໍາເນີນການຜະລິດ, ທຸລະກິດ ແລະ ການບໍລິການ ເຊັ່ນ ອຸດສາຫະກໍາ, ກະສິກໍາ, ປ່າໄມ້, ພະລັງງານ, ບໍ່ແຮ່, ຫັດຖະກໍາ ມີພັນທະຄວບຄຸມມົນລະພິດ ໃຫ້ຖືກຕ້ອງຕາມມາດຕະຖານຄວບຄຸມມົນລະພິດ ແລະ ມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ ດ້ວຍການສ້າງ ແຜນຄຸ້ມຄອງ ແລະ ດໍາເນີນການຄວບຄຸມມົນລະພິດ, ສິ່ງລົບກວນ ແລະ ມີພັນທະເສຍອາກອນສິ່ງແວດລ້ອມ ຕາມລະບຽບກົດໝາຍ.

## ມາດຕາ 40 (ໃໝ່) ພັນທະຂອງຜູ້ປະກອບການ ຕໍ່ສານເຄມີເປັນພິດ ແລະ ສິ່ງເສດເຫຼືອ

ຜູ້ປະກອບການ ມີພັນທະກໍ່ສ້າງ, ຕິດຕັ້ງເຄື່ອງວັດແທກ, ເຄື່ອງຄວບຄຸມມົນລະພິດ ເພື່ອຕິດຕາມລວມທັງ ຕິດຕັ້ງລະບົບບໍາບັດ, ຖິ້ມ, ຈູດ, ເຜົາ, ຝັງ ຫຼື ທໍາລາຍ ຕາມວິທີການ, ເຕັກນິກ ແລະ ໃນເຂດທີ່ໄດ້ກໍານົດໄວ້ຕາມລະບຽບການ ແລະ ມີຄວາມຮັບຜິດຊອບ ໃນກໍລະນີສານເຄມີເປັນພິດ ຫຼື ສິ່ງເສດເຫຼືອ ຫາກສົ່ງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ ໂດຍສະເພາະຂອງແມ່ ແລະ ເດັກ, ພືດ, ສັດ, ສິ່ງທີ່ມີຊີວິດອື່ນ ແລະ ລະບົບນິເວດ.

ຜູ້ບໍລິໂພກ ມີຄວາມຮັບຜິດຊອບ ໃນການຄວບຄຸມສານເຄມີເປັນພິດ ແລະ ການກາຈັດສິ່ງເສດເຫຼືອທີ່ຕົນໄດ້ຄອບຄອງ ແລະ ນໍາໃຊ້ໃນຄອບຄົວ ຢ່າງເໝາະສົມ.

## ມາດຕາ 47 (ໃໝ່) ການບໍລິການຂໍ້ມູນຂ່າວສານ ກ່ຽວກັບສິ່ງແວດລ້ອມ

ຂະແໜງການ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຕ້ອງສ້າງລະບົບຄຸ້ມຄອງ ແລະ ບໍລິການຂໍ້ມູນຂ່າວສານ ກ່ຽວກັບສິ່ງແວດລ້ອມ ເພື່ອຮັບປະກັນການສະໜອງຂໍ້ມູນຂ່າວສານໃຫ້ ແກ່ມວນຊົນຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບວຽກງານສິ່ງແວດລ້ອມ.

### ມາດຕາ 48 (ໃໝ່) ການມີສ່ວນຮ່ວມຂອງມວນຊົນ

ການສ້າງແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ, ການປະເມີນສິ່ງແວດລ້ອມແບບຍຸດທະສາດ, ການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ການສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ການຄວບຄຸມມົນລະພິດ ແລະ ອື່ນໆ ຕ້ອງມີການເຂົ້າ ຮ່ວມຂອງການຈັດຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ທີ່ກ່ຽວຂ້ອງ ໂດຍສະເພາະຜູ້ທີ່ໄດ້ ຮັບຜົນກະທົບໂດຍກົງ ຫຼື ທາງອ້ອມ.

### ມາດຕາ 50 (ປັບປຸງ) ການອະນຸລັກຊັບພະຍາກອນທຳມະຊາດ

ລັດ ສົ່ງເສີມ ການອະນຸລັກ ແລະ ປົກປັກຮັກສາ ຊັບພະຍາກອນທຳມະຊາດ ດ້ວຍການວາງນະໂຍບາຍ, ລະບຽບກົດໝາຍ, ວິທີການ ແລະ ມາດຕະການ ເພື່ອສະກັດກັ້ນ ການບຸກລຸກ ແລະ ການທຳລາຍຂອງມະນຸດ ຫຼື ຈາກໄພທຳມະຊາດ ແນໃສ່ຮັກສາຄວາມສົມດູນຂອງລະບົບນິເວດ ແລະ ຄວາມອຸດົມສົມບູນຂອງຊັບພະຍາກອນທຳມະຊາດ ເປັນຕົ້ນ ດິນ, ນາໍ້ໍ, ແຮ່ທາດ, ປ່າໄມ້, ພັນ ພືດ, ພັນສັດ, ແມງໄມ້ ແລະ ຈຸລິນຊີ ລວມທັງການຮັກສາແນວພັນ, ພັນທຸກຳ ທີ່ເປັນຜົນປະໂຫຍດ ແລະ ຖິ່ນທີ່ຢູ່ອາໄສ ໃຫ້ມີຄວາມຫຼາກຫຼາຍ ແລະ ຍືນຍົງ.

ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງຈັດສັນເຂດອະນຸລັກ, ເຂດສະຫງວນ, ເຂດຫວງຫ້າມ, ເຂດອຸດທິຍານທ່ອງທ່ຽວທຳມະຊາດ ສີຂຽວ ຕາມຂັ້ນຄຸ້ມຄອງຂອງຕົນເພື່ອຟື້ນຟູ ແລະ ຂະຫຍາຍເນື້ອທີ່ປ່າໄມ້ໃຫ້ນັບມື້ນັບຫຼາຍ.

ມາດຕະການ ກ່ຽວກັບການອະນຸລັກຊັບພະຍາກອນທຳມະຊາດ ໄດ້ກຳນົດໄວ້ໃນລະບຽບ ການສະເພາະ.

### ມາດຕາ 54 (ປັບປຸງ) ການບູລະນະ ຟື້ນຟູສິ່ງແວດລ້ອມ

ການບູລະນະ ຟື້ນຟູສິ່ງແວດລ້ອມ ແມ່ນ ການເຮັດໃຫ້ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ຖືກທຳລາຍ ຫຼື ເສື່ອມໂຊມແລ້ວນັ້ນ ມີການຟື້ນຕົວ ແລະ ໄດ້ຮັບການປັບແປງໃຫ້ຢູ່ໃນສະພາບທີ່ດີ ແລະ ລະບົບນິເວດ ມີຄວາມສົມດູນ.

### ມາດຕາ 55 (ໃໝ່) ຄວາມຮັບຜິດຊອບໃນການບູລະນະ ຟື້ນຟູ ສິ່ງແວດລ້ອມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ກໍ່ ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມທັງຄົມ ແລະ ທຳມະຊາດ ຕ້ອງແກ້ໄຂ, ປັບປຸງ, ບູລະນະ ຟື້ນຟູ ລວມທັງທົດແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ ໃນເຂດທີ່ໄດ້ຮັບຜົນກະທົບນັ້ນ.

ໃນກໍລະນີທີ່ມີໄພພິບັດທຳມະຊາດ ເກີດຂຶ້ນ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງປະສານສົມທົບກັນ ເພື່ອມີວິທີການ ແລະ ມາດຕະການ ປັບປຸງ, ບູລະນະ ຟື້ນຟູຄືນ ເຂດດັ່ງກ່າວ.

### ມາດຕາ 56 (ປັບປຸງ) ພັນທະໃນການບູລະນະ ຟື້ນຟູສິ່ງແວດລ້ອມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະປະກອບສ່ວນ ທາງດ້ານທຶນຮອນ, ສະຕິປັນຍາ, ເຫື່ອແຮງ ແລະ ວັດຖຸປະກອນຕ່າງໆ ເພື່ອບູລະນະ ຟື້ນຟູສິ່ງແວດລ້ອມ ທີ່ຖືກທຳລາຍ ຫຼື ເສື່ອມໂຊມ.

### ມາດຕາ 57 (ປັບປຸງ) ການບູລະນະ ຟື້ນຟູ ເຂດທີ່ຖືກທຳລາຍ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການຜະລິດ, ທຸລະກິດ, ການບໍລິການ ຫຼື ກິດຈະການ ໃດໜຶ່ງ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕ້ອງຮັບຜິດຊອບແກ້ໄຂ, ບູລະນະ ຟື້ນຟູຄືນເຂດ, ສະຖານທີ່ທ່ອງທ່ຽວທຳມະຊາດ, ມໍລະດົກທາງດ້ານວັດທະນະທຳ, ສະຖານທີ່ປະຫວັດສາດ ແລະ ວັດຖຸບູຮານ ທີ່ຖືກທຳລາຍ ພາຍໃຕ້ການຕິດຕາມ ກວດກາ ຂອງອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການ ທີ່ກ່ຽວຂ້ອງ.

ໃນກໍລະນີທີ່ມີໄພພິບັດທຳມະຊາດເກີດຂຶ້ນ ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການ ທີ່ກ່ຽວຂ້ອງ ຕ້ອງປະສານສົມທົບກັນ ເພື່ອມີວິທີການ ແລະ ມາດຕະການ ແກ້ໄຂ ແລະ ບູລະນະ ຟື້ນຟູ ຄືນເຂດດັ່ງກ່າວ.

### ມາດຕາ 68 (ໃໝ່) ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີ ພຶດຕິກຳ ດັ່ງນີ້:

1. ຕັດໄມ້ ທຳລາຍປ່າ, ດຳເນີນກິດຈະການບໍ່ແຮ່ ແບບຊະຊາຍ ແລະ ນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;
2. ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈຳໜ່າຍ, ເກັບຮັກສາ, ນຳໃຊ້, ນຳໄປຜະລິດຄືນໃໝ່ ແລະ ທຳລາຍສານເຄມີເປັນພິດ, ສານເຄມີທຳລາຍຊັ້ນໂອໂຊນ, ວັດຖຸປະກອນ ທີ່ບັນຈຸສານເຄມີທຳລາຍຊັ້ນໂອໂຊນ, ກຳມັນຕະພາບລັງສີ, ສິ່ງເສດເຫຼືອອັນຕະລາຍ ແລະ ສານເຄມີອົງຄະທາດເປັນພິດຕົກຄ້າງ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ແລະ ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ເປັນຕົ້ນ ມົນລະພິດທາງນ້ຳອາກາດ ແລະ ດິນ, ກຳມັນຕະພາບລັງສີ, ສານເຄມີເປັນພິດ, ສິ່ງເສດເຫຼືອອັນຕະລາຍ, ຄວັນ, ຝຸ່ນລະອອງ, ສິ່ງລົບກວນ ເຊັ່ນ ສຽງ, ແສງ, ສີ, ກິ່ນ, ແຮງສັ່ນສະເທືອນ, ຄວາມຮ້ອນ ແລະ ສິ່ງລົບກວນອື່ນ;
4. ຈູດ, ຝັງ, ຖິ້ມ ແລະ ກຳຈັດສິ່ງເສດເຫຼືອ, ຖອກເທ ແລະ ລະບາຍນ້ຳເປື້ອນລົງໃສ່ຮ່ອງນ້ຳ, ແມ່ນ້ຳ, ແຫຼ່ງນ້ຳທຳມະຊາດ ຫຼື ສະຖານທີ່ອື່ນ ໂດຍບໍ່ມີການບຳບັດ ຕາມມາດຕະຖານເຕັກນິກ;
5. ຂົນສົ່ງ ຫີນ, ດິນ, ແຮ່, ຊາຍ ແລະ ຂີ້ເຫຍື້ອ ໂດຍບໍ່ຖືກຕ້ອງ ຕາມລະບຽບການ;
6. ປ່ອຍສານເຄມີເປັນພິດ, ຄວັນ, ຝຸ່ນລະອອງ, ອາຍ ແລະ ກິ່ນ ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ແລະ ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ;
7. ສ້າງຄວາມສັ່ນສະເທືອນ, ສິ່ງ ສຽງ ແລະ ແສງ ເກີນຂອບເຂດ ທີ່ໄດ້ກຳນົດໄວ້;

8. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານ ທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ ເພື່ອຜົນປະໂຫຍດ ຂອງຕົນ;
9. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ ແລະ ພະນັກງານຂອງລັດໂດຍບໍ່ມີມູນຄວາມຈິງ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ລະບຽບກົດໝາຍ.

## ມາດຕາ 69 (ໃໝ່) ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່ ກ່ຽວກັບສິ່ງແວດລ້ອມ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ທວງເອົາ, ຂໍເອົາ, ຮັບສິນບົນ ຈາກເຈົ້າຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ດ້ານສິ່ງແວດລ້ອມ;

3. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວກ່ຽວກັບວຽກງານສິ່ງແວດລ້ອມ;

4. ລະເຫຼີງ, ເມີນເສີຍຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງການພິຈາລະນາເອກະສານຕ່າງໆ ກ່ຽວກັບສິ່ງແວດລ້ອມ;

5. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ, ທຳລາຍເອກະສານ ກ່ຽວກັບວຽກງານສິ່ງແວດລ້ອມ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ມາດຕາ 70 (ໃໝ່) ຂໍ້ຫ້າມສຳລັບຜູ້ປະກອບການ

ຫ້າມຜູ້ປະກອບການມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດທີ່ສ້າງຜົນກະທົບທາງລົບເກີນມາດຕະຖານ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

2. ດຳເນີນທຸລະກິດໃດໜຶ່ງ ທີ່ສົ່ງກິ່ນເໝັນ, ສຽງດັງ, ປ່ອຍຄວັນ ເກີນມາດຕະຖານທີ່ໄດ້ກຳນົດໄວ້;

3. ດຳເນີນໂຄງການ, ກິດຈະການ ແລະ ໃຫ້ບໍລິການດ້ານວິຊາການ ກ່ຽວກັບສິ່ງແວດລ້ອມ ໂດຍບໍ່ສອດຄ່ອງ ກັບການອະນຸຍາດ ແລະ ການຢັ້ງຢືນ;

4. ຫຼົບຫຼີກການປະຕິບັດພັນທະ;

5. ປອມແປງເອກະສານ, ໃຫ້ຂໍ້ມູນຂ່າວສານບໍ່ຖືກກັບຄວາມເປັນຈິງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ລະບຽບກົດໝາຍ.

## ມາດຕາ 71 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບສິ່ງແວດລ້ອມ ດ ໍາເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ໂດຍຄູ່ກໍລະນີ;
2. ການໄກ່ເກັ່ຍ;
3. ການແກ້ໄຂທາງດ້ານບໍລິຫານ;
4. ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
5. ການຮ້ອງຟ້ອງຕໍ່ສານປະຊາຊົນ;
6. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

## ມາດຕາ 72 (ໃໝ່) ການປະນີປະນອມ ໂດຍຄູ່ກໍລະນີ

ໃນກໍລະນີ ມີຂໍ້ຂັດແຍ່ງ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທາມະຊາດ ບໍ່ຮ້າຍແຮງ ແລະ ມີມູນຄ່າເສັຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ສາມາດປຶກສາຫາລື ແລະ ປະນີປະນອມ ນາໍກັນ ເພື່ອແກ້ໄຂ ຂໍ້ຂັດແຍ່ງນັ້ນ.

## ມາດຕາ 73 ມາດຕາ 73 (ໃໝ່) ການໄກ່ເກັ່ຍ

ໃນກໍລະນີ ມີຂໍ້ຂັດແຍ່ງ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ ຊຶ່ງ ບໍ່ຮ້າຍແຮງ ແລະ ມີມູນຄ່າເສັຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ສາມາດແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກັ່ຍ.

## ມາດຕາ 75 (ໃໝ່) ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດໍເນີນກິດຈະການສິ່ງແວດລ້ອມ ຄູ່ກໍລະນີມີສິດຮ້ອງຂໍໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ ຕາມລະບຽບກົດໝາຍ.

## ມາດຕາ 76 (ໃໝ່) ການຮ້ອງຟ້ອງຕໍ່ສານປະຊາຊົນ

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງ ເນື່ອງຈາກການດໍາເນີນກິດຈະການສິ່ງແວດລ້ອມ ຄູ່ກໍລະນີ ມີ ສິດຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາແກ້ໄຂ ຕາມລະບຽບກົດໝາຍ.

## ມາດຕາ 77 (ໃໝ່) ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ

ເມື່ອມີຂໍ້ຂັດແຍ່ງ ກ່ຽວກັບສິ່ງແວດລ້ອມ ທີ່ມີລັກສະນະສາກົນ ເປັນຕົ້ນ ມົນລະພິດຂ້າມຊາຍແດນ, ການຂົນສິ່ງສານເຄມີເປັນພິດ, ສິ່ງເສດເຫຼືອອັນຕະລາຍ, ອາຍພິດເຮືອນແກ້ວ ແມ່ນ ໃຫ້ປະຕິບັດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## 14. ດຳລັດວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ ສະບັບເລກທີ 135/ ນຍ, ລົງວັນທີ 25 ພຶດສະພາ 2009.

### ມາດຕາ 2 ນິຍາມ

- ການເຊົ່າທີ່ດິນ ແມ່ນການອະນຸຍາດໃຫ້ການຈັດຕັ້ງ, ບຸກຄົນ ຫລື ນິຕິບຸກຄົນ ມີສິດ ໃຊ້ທີ່ດິນຂອງລັດ ຕາມເງື່ອນໄຂ ແລະ ກຳນົດເວລາໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງ ຕາມລະບຽບກົດໝາຍ.
- ການສຳປະທານທີ່ດິນ ແມ່ນການອະນຸຍາດໃຫ້ບຸກຄົນ ຫລື ນິຕິບຸກຄົນ ເພື່ອດຳເນີນ ກິດຈະການ ໂດຍການມີສິດໃຊ້ທີ່ດິນຂອງລັດເຂົ້າໃນກິດຈະການອັນໃດອັນໜຶ່ງໄດ້ ຕາມເງື່ອນໄຂ ແລະ ກຳນົດເວລາ ໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 4 ຜູ້ມີສິດເຊົ່າ ຫຼື ສຳປະທານທີ່ດິນຂອງລັດ

ຜູ້ມີສິດເຊົ່າທີ່ດິນຂອງລັດ ແມ່ນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ອົງການຈັດຕັ້ງ, ທຸກພາກສ່ວນເສດຖະກິດຂອງລັດ, ລວມໝູ່ ແລະ ບຸກຄົນ, ສະຖານທູດ ຫລື ອົງການຈັດຕັ້ງສາກົນ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ, ຜູ້ເຊົ່າຕ້ອງເສັຍຄ່າເຊົ່າທີ່ດິນ ຕາມອັດຕາທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ຜູ້ມີສິດສາປະທານທີ່ດິນຂອງລັດ ແມ່ນນິຕິບຸກຄົນເອກະຊົນທັງພາຍໃນ ແລະ ຕ່າງປະ ເທດ. ຜູ້ສາປະທານ ຕ້ອງເສັຍຄ່າສຳປະທານທີ່ດິນ, ຄ່າຊັບພະຍາກອນທຳມະຊາດ, ອາກອນ, ພາສີ ແລະ ຄ່າທຳນຽມຕາມທີ່ລະບຽບກົດໝາຍກຳນົດໄວ້.

### ມາດຕາ 32 ການກຳນົດໄລຍະເວລາການໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ

ການກຳນົດໄລຍະເວລາການໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດ

ການໃຫ້ເຊົ່າ ຫລື ສຳປະທານທີ່ດິນຂອງລັດມີ 3 ໄລຍະຄື:

1. ການໃຫ້ເຊົ່າໄລຍະສັ້ນ;
2. ການໃຫ້ເຊົ່າ ຫລື ສຳປະທານໄລຍະກາງ;
3. ການໃຫ້ເຊົ່າ ຫລື ສຳປະທານໄລຍະຍາວ.

### ມາດຕາ 33 ປະເພດທີ່ດິນຂອງລັດ ແລະ ກຳນົດເວລາໃຫ້ເຊົ່າໄລຍະສັ້ນ

ທີ່ດິນ ທີ່ໃຫ້ເຊົ່າໄລຍະສັ້ນ ແມ່ນປະເພດທີ່ດິນປຸກສ້າງສຳລັບທີ່ຢູ່ອາໄສ ແລະ ບໍລິການ ທີ່ລັດໄດ້ຈັດສັນໄວ້ແລ້ວ, ກຳນົດເວລາສູງສຸດບໍ່ເກີນ ຫ້າ ປີ ແລະ ສາມາດຕໍ່ໄດ້. ສຳລັບການອະນຸຍາດໃຫ້ເຊົ່າທີ່ດິນ ແມ່ນໃຫ້ປະຕິບັດຕາມວັກ 01 ຂໍ້ 01 ມາດຕາ 36 ຂອງດຳລັດສະບັບນີ້.

### ມາດຕາ 34 ປະເພດທີ່ດິນຂອງລັດ ແລະ ກຳນົດເວລາໃຫ້ເຊົ່າໄລຍະກາງ

ທີ່ດິນທີ່ໃຫ້ເຊົ່າໄລຍະກາງ ແມ່ນປະເພດທີ່ດິນປຸກສ້າງ ສາລັບກິດຈະການການບໍລິການ, ການທ່ອງທ່ຽວ ແລະ ການກິລາທີ່ລັດຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນໄວ້ແລ້ວກຳນົດເວລາ ເກີນກວ່າ ຫ້າ ປີຂຶ້ນໄປຫາ ສິບຫ້າ ປີ ແລະ ສາມາດຕໍ່ໄດ້. ສຳລັບການອະນຸຍາດໃຫ້ເຊົ່າທີ່ດິນ ແມ່ນໃຫ້ປະຕິບັດຕາມມາດຕາ 17, 21 ແລະ ວັກ 01 ຂໍ້ 02 ມາດຕາ 36 ຂອງດຳລັດສະບັບນີ້.

## ມາດຕາ 35 ທີ່ດິນຂອງລັດທີ່ໃຫ້ເຊົ່າ ແລະ ສຳປະທານໄລຍະຍາວ

ທີ່ດິນ ທີ່ໃຫ້ເຊົ່າ ຫລື ສາປະທານໄລຍະຍາວ ແມ່ນທີ່ດິນ ທີ່ລັດໄດ້ຈັດສັນ, ກຳນົດເຂດ ແລະ ກຳນົດປະເພດໄວ້ແລ້ວ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆໃນການສົ່ງເສີມໃຫ້ມີການລົງ ທຶນພັດທະນາກໍ່ສ້າງພື້ນຖານໂຄງລ່າງ, ອຸດສາຫະກຳ, ປູກໄມ້, ແຮ່ທາດ ແລະ ອື່ນໆກຳນົດ ເວລາເກີນກວ່າ 15 ປີ ຂຶ້ນໄປຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ແລະ ປະຕິບັດຕາມ ວັກ 01 ຂໍ້ 03 ແລະ ວັກ 02 ມາດຕາ 36 ຂອງດຳລັດສະບັບນີ້.

## ມາດຕາ 39 ພັນທະຂອງຜູ້ເຊົ່າ ແລະ ຜູ້ສຳປະທານທີ່ດິນຂອງລັດ

ຜູ້ເຊົ່າ ແລະ ຜູ້ສຳປະທານທີ່ດິນຂອງລັດມີພັນທະດັ່ງນີ້:

- ໃຊ້ທີ່ດິນໂດຍຖືກຕ້ອງຕາມເປົ້າໝາຍ ແລະ ຕ້ອງຮັບປະກັນປະສິດທິຜົນຂອງການດຳເນີນກິດຈະການ;

- ຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນຂອງລັດທີ່ເຊົ່າ ຫລື ສາປະທານ ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມກັບແຕ່ລະປະເພດດິນ ແລະ ບໍ່ເຮັດໃຫ້ເນື້ອທີ່ດິນແຕ່ລະປະເພດຫລຸດລົງໂດຍບໍ່ໄດ້ຮັບອະນຸຍາດ;

- ບໍ່ສ້າງຄວາມເສັຍຫາຍໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫລື ສັງຄົມ;

- ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;

- ປະຕິບັດສະພາວະຄວາມເປັນຈິງຕ້ອງຍອມຮັບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

- ເສັຍຄ່າເຊົ່າທີ່ດິນ, ຄ່າສຳປະທານ, ຄ່າຊັບພະຍາກອນທຳມະຊາດ, ອາກອນ, ພາສີ ແລະ ຄ່າທຳນຽມອື່ນໆ ກ່ຽວກັບທີ່ດິນຢ່າງຄົບຖ້ວນ;

- ຜູ້ເຊົ່າບໍ່ມີສິດຫັນປ່ຽນສະພາບຂອງທີ່ດິນ ແລະ ສິ່ງປຸກສ້າງ ຢູ່ເທິງຫນ້າດິນ ເວັ້ນເສຍກໍລະ ນີຈຳເປັນແຕ່ຕ້ອງມີການຕົກລົງກັນໃນສັນຍາລະຫວ່າງອົງການຄຸ້ມຄອງທີ່ດິນ ແລະ ຜູ້ເຊົ່າ;

- ເມື່ອໝົດກຳນົດໄລຍະການເຊົ່າ ຫລື ສຳປະທານ ຫລື ມີການຍົກເລີກສັນຍາເຊົ່າ ຫລື ສຳປະທານທີ່ດິນຂອງລັດກ່ອນກຳນົດເວລາຜູ້ເຊົ່າ ຫລື ສຳປະທານຕ້ອງໄດ້ປັບແປງ ຫລື ບູລະນະທີ່ດິນ ແລະ ສິ່ງແວດລ້ອມໃຫ້ຢູ່ໃນສະພາບເດີມ ແລະ ໃຫ້ສາມາດນຳໃຊ້ໄດ້ຕາມປົກກະຕິ ຕາມເງື່ອນໄຂຂອງສັນຍາທີ່ໄດ້ຕົກລົງກັນ;

- ປະຕິບັດຕາມລະບຽບການ ແລະ ເງື່ອນໄຂຂອງການເຊົ່າ ຫລື ການສາປະທານຢ່າງຄົບຖ້ວນ.

## ມາດຕາ 43 ການຄິດໄລ່ໃນການທົດແທນທີ່ດິນຂອງປະຊາຊົນ ທີ່ຖືກເຂດເຊົ່າ ແລະ ສໍາປະທານ

ໃນກໍລະນີເຂດເຊົ່າ ແລະ ສໍາປະທານທີ່ດິນຂອງລັດ ຫາກໄປກວມເອົາທີ່ດິນຂອງປະຊາຊົນ ທີ່ໄດ້ຮັບສິດນໍາໃຊ້ທີ່ດິນຖືກຕ້ອງຕາມກົດໝາຍ ແລະ ຕາມດໍາລັດສະບັບເລກທີ 192/ນຍ, ລົງວັນທີ 07 ກໍລະກົດ 2005 ການຄິດໄລ່ການທົດແທນໃຫ້ປະຕິບັດຕາມແຕ່ລະກໍລະນີດັ່ງນີ້:

- ທີ່ດິນກະສິກໍາສໍາລັບປູກເຂົ້າ ຫລື ພືດລົ້ມລຸກ ໃນດ້ານຫລັກການ ແມ່ນຕ້ອງຮັກສາໄວ້ ໃຫ້ຊາວກະສິກອນເປັນຜູ້ນໍາໃຊ້; ເວັ້ນເສຍແຕ່ໃນກໍລະນີຈໍາເປັນ ແມ່ນຕ້ອງໄດ້ທົດແທນໃຫ້ເຂົາ ເຈົ້າໂດຍເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າປະເມີນຂອງຜົນລະປູກໃນປີປົກກະຕິ ຄູນ ສິບ;
- ທີ່ດິນກະສິກໍາສໍາລັບປູກຕົ້ນໄມ້ໃຫ້ໝາກ ແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກ ກັບມູນຄ່າປະເມີນຂອງຜົນລະປູກໃນປີປົກກະຕິຄູນ ສິບ.
- ທີ່ດິນສໍາລັບປູກໄມ້ອຸດສາຫະກໍາ ແລະ ຕົ້ນໄມ້ເປັນຢາ ແມ່ນໃຫ້ເອົາມູນຄ່າປະເມີນ ຂອງທີ່ດິນບວກກັບມູນຄ່າປະເມີນຂອງຕົ້ນໄມ້ທີ່ປູກໄວ້ໃນທີ່ດິນຕອນນັ້ນ.
- ທີ່ດິນກະສິກໍາສໍາລັບລ້ຽງສັດ ແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າ ປະເມີນຂອງຜົນໄດ້ຮັບຈາກການລ້ຽງສັດໃນປີປົກກະຕິຄູນ ສາມ.

ສໍາລັບທີ່ດິນເນື້ອທີ່ດິນນາ ແມ່ນຫ້າມບໍ່ໃຫ້ໃຊ້ເຂົ້າໃນເປົ້າໝາຍອື່ນໆ ໃນກໍລະນີມີຄວາມຈໍາເປັນຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ດິນ ແລະ ຂະແໜງກະສິກໍາ ແລະ ປ່າໄມ້.

ສໍາລັບທີ່ດິນປຸກສ້າງແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າສິ່ງປຸກສ້າງ ແລະ ຜົນລະປູກທີ່ໄດ້ປູກໄວ້ໃນທີ່ດິນຕອນນັ້ນ.

ໃນກໍລະນີມີຄວາມຈໍາເປັນຕ້ອງການນໍາໃຊ້ທີ່ດິນ ໃນເຂດທີ່ໄດ້ອະນຸມັດໃຫ້ເຊົ່າ ແລະ ສໍາປະທານໄປແລ້ວນັ້ນ ເພື່ອນໍາໃຊ້ເຂົ້າໃນສາທາລະນະປະໂຫຍດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ລັດຈະທົດແທນຄ່າເສັຍຫາຍຄືນຕໍ່ຊັບສິນທີ່ຕິດພັນກັບທີ່ດິນ ທີ່ໄດ້ເຊົ່າ ຫລື ສໍາປະທານນັ້ນໃຫ້ແກ່ຜູ້ລົງທຶນຕາມຄວາມເໝາະສົມ.

ໃນການປະເມີນມູນຄ່າທົດແທນຕ້ອງມີການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ນາຍບ້ານ ແລະ ປະຊາຊົນທີ່ກ່ຽວຂ້ອງທຸກຄັ້ງ ໂດຍໃຫ້ເຮັດບົດບັນທຶກ ການປະເມີນໄວ້ເປັນລາຍອັກສອນແລ້ວໃຫ້ຜູ້ເຂົ້າຮ່ວມເຊັນທຸກຄັ້ງ.

## ມາດຕາ44 ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນຂອງລັດ

ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບການຈັດສັນແບ່ງເຂດ, ການກໍານົດໄລຍະເວລາ, ການກໍານົດອັດຕາຄ່າເຊົ່າ, ຄ່າສໍາປະທານ, ການປະເມີນການທົດແທນຄືນທີ່ດິນ ຂອງລັດ ແມ່ນມອບໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ສົມທົບກັບອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງ ແລະ ຄູ່

ກໍລະນີໃນພື້ນທີ່ດິນທີ່ເກີດການຂັດແຍ່ງຕັ້ງຢູ່ໄກ່ເກັ່ຍກັນກ່ອນ, ປະນີປະນອມ ຫລື ພິຈາລະນແກ້ໄຂໃຫ້ສອດຄ່ອງກັບລະບຽບກົດໝາຍ.

ສຳລັບຂໍ້ຂັດແຍ່ງກ່ຽວກັບກໍລະນີ ການຈັດຕັ້ງປະຕິບັດສັນຍາສຳປະທານທີ່ດິນຂອງລັດ ນັ້ນມີແຕ່ອົງການຈັດຕັ້ງຂອງລັດ ຫລື ໜ່ວຍງານຂອງລັດ ທີ່ໄດ້ຮັບມອບໝາຍໃຫ້ເປັນຄູ່ສັນຍາ ເທົ່ານັ້ນ ເປັນຜູ້ໄກ່ເກັ່ຍ, ປະນີປະນອມ ແລະ ພິຈາລະນາແກ້ໄຂໃຫ້ເປັນຂັ້ນເດັດຂາດ.

## ມາດຕາ 45 ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະທາງແພ່ງ

ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງກ່ຽວກັບການມອບໂອນ, ການສືບທອດມູນມໍລະດົກ, ສັນຍາເຊົ່າ ຫລື ສັນຍາສຳປະທານທີ່ດິນຂອງລັດ ແມ່ນໃຫ້ອົງການຄຸ້ມຄອງທີ່ດິນ ກັບຄູ່ກໍລະນີໄກ່ເກັ່ຍກັນກ່ອນ. ຖ້າການໄກ່ເກັ່ຍຫາກບໍ່ສາມາດຕົກລົງກັນໄດ້, ຄູ່ກໍລະນີສາມາດ ສະເໜີຫາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນຜູ້ໄກ່ເກັ່ຍ ຫລື ຮ້ອງຟ້ອງຕໍ່ສານ ປະຊາຊົນ ເພື່ອດຳເນີນຄະດີຕາມຂະບວນການຍຸຕິທຳ.

## ມາດຕາ 46 ການແກ້ໄຂຂໍ້ຂັດແຍ່ງທີ່ດິນທີ່ພົວພັນກັບຕ່າງປະເທດ

ການແກ້ໄຂຂໍ້ຂັດແຍ່ງທີ່ດິນທີ່ພົວພັນກັບຕ່າງປະເທດ ກ່ຽວກັບການເຊົ່າທີ່ດິນຂອງລັດ ສຳລັບສຳນັກງານ, ທີ່ຢູ່ອາໄສຂອງສະຖານເອກອັກຄະລັດຖະທູດ, ສະຖານກົງສູນ ຫລື ອົງການ ຈັດຕັ້ງສາກົນໃດໜຶ່ງ ຕ້ອງແກ້ໄຂດ້ວຍວິທີການປຶກສາຫາລືກັນບົນພື້ນຖານສັນຍາເຊົ່າທີ່ດິນຂອງ ລັດ, ສັນຍາແລກປ່ຽນສິດໃຊ້ທີ່ດິນ ໂດຍໃຫ້ສອດຄ່ອງກັບກົດໝາຍພາຍໃນຂອງ ສປປ ລາວ ແລະ ຫລັກການຂອງກົດໝາຍສາກົນ ຫລື ສັນຍາສາກົນທີ່ ສປປ ລາວ ເປັນຄູ່ສັນຍາ ຫລື ເປັນ ພາຄີ.

## 15. ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 389/ລບ, ລົງວັນທີ 20 ຕຸລາ 2022.

### ມາດຕາ 59 ສິດຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ

ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ມີສິດ ດັ່ງນີ້:

1. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບຜົນປະໂຫຍດ, ຜົນກະທົບຕໍ່ສິ່ງແວດລ້ອມ ຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ:

2. ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບ ຕາມກົດໝາຍ, ລະບຽບການ ແລະ ມີຄວາມຍຸຕິທຳ;

3. ໄດ້ຮັບການປົກປ້ອງດ້ານສຸຂະພາບ, ກວດສຸຂະພາບ, ໄດ້ຮັບການປິ່ນປົວ ແລະ ການຟື້ນຟູສຸຂະພາບ ຕາມແຕ່ລະກໍລະນີ;

4. ໄດ້ຮັບການສົ່ງເສີມ ແລະ ປົກປ້ອງທາງດ້ານວັດທະນະທຳ, ສາສະໜາ, ຮີດຄອງປະເພນີ ແລະ ຄວາມເຊື່ອຖື ລວມທັງການສົ່ງເສີມທາງດ້ານບົດບາດຍິງ-ຊາຍ;

5. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນ ຕໍ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

6. ສະເໜີຕໍ່ເຈົ້າຂອງໂຄງການ ຫຼື ກິດຈະການ ຫຼື ຮ້ອງທຸກຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນການແກ້ໄຂ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ເຫັນວ່າ ບໍ່ຖືກຕ້ອງ ແລະ ບໍ່ເປັນທຳ;

7. ນຳໃຊ້ສິດອື່ນຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 60 ພັນທະຂອງ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ

ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ມີພັນທະ ດັ່ງນີ້:

1. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຂະແໜງການທີ່ກ່ຽວຂ້ອງກ່ຽວກັບສະພາບສິ່ງແວດລ້ອມໃນຂອບເຂດໂຄງການລົງທຶນ ຫຼື ກິດຈະການຕ່າງໆ ແລະ ເຂດໃກ້ຄຽງ ພ້ອມທັງຂໍ້ມູນກ່ຽວກັບທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ຊັບສິນ ແລະ ລາຍຮັບຂອງຕົນ;

2. ລາຍງານ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ທີ່ເກີດຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ເປັນລາຍລັກອັກສອນ, ປາກເປົ່າ ຫຼື ຜ່ານສື່ ໃນຮູບແບບຕ່າງໆຕໍ່ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂບັນຫາຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ ຫຼື ກິດຈະການຕ່າງໆ;

3. ປະຕິບັດພັນທະອື່ນຕາມກົດໝາຍ ແລະ ລະບຽບການ.

## ມາດຕາ 61 ສິດ ຂອງເຈົ້າຂອງໂຄງການ ຫຼື ກິດຈະການ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເຈົ້າຂອງໂຄງການ ຫຼື ກິດຈະການ ມີສິດ ດັ່ງນີ້:

1. ຄັດເລືອກ ເອົາຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ເພື່ອດໍາເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ. ສໍາລັບ ການດໍາເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ສະບັບປັບປຸງ ສາມາດດໍາເນີນດ້ວຍຕົນເອງໄດ້ ໃນກໍລະນີມີເງື່ອນໄຂ ແລະ ມີຄວາມຮູ້, ຄວາມສາມາດ;

2. ລົງເກັບກໍາຂໍ້ມູນກ່ຽວກັບສິ່ງແວດລ້ອມທີ່ຕິດພັນກັບໂຄງການລົງທຶນ ຫຼື ກິດຈະການຂອງຕົນ;

3. ປະສານສົມທົບກັບຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

4. ຕິດຕາມ, ທວງຖາມເອກະສານຕ່າງໆ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ນໍາບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

5. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄໍາເຫັນຕໍ່ວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

6. ຮ້ອງທຸກຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດໍາເນີນການແກ້ໄຂບັນຫາທີ່ເຫັນວ່າບໍ່ຖືກຕ້ອງ ແລະບໍ່ເປັນທໍາຕໍ່ຕົນເອງ;

7. ນໍາໃຊ້ສິດອື່ນຕາມກົດໝາຍ ແລະ ລະບຽບການ.

## ມາດຕາ 62 ພັນທະຂອງເຈົ້າຂອງໂຄງການ ຫຼື ກິດຈະການ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເຈົ້າຂອງໂຄງການ ຫຼື ກິດຈະການ ມີພັນທະ ດັ່ງນີ້:

1. ຮັບຜິດຊອບຕໍ່ຂໍ້ມູນທີ່ກໍານົດໄວ້ໃນບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ;

2. ຮັບຜິດຊອບຄ່າໃຊ້ຈ່າຍກ່ຽວກັບ ການລົງກວດກາພາກສະໜາມ, ກອງປະຊຸມແຕ່ລະຂັ້ນ, ວ່າຈ້າງຄະນະທົບທວນ ແລະ ຜູ້ຊ່ຽວຊານສະເພາະດ້ານ ທັງພາຍໃນ ຫຼື ຕ່າງປະເທດ ມາຊ່ວຍ ແລະ ຍັ້ງຢືນ ໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ລວມທັງການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະຕິດຕາມ ກວດກາສິ່ງແວດລ້ອມ;

3. ເສຍຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;

4. ຈ່າຍຄ່າຊົບພະຍາກອນທຳມະຊາດ, ຄ່າບໍລິການລະບົບນິເວດ ແລະ ຄ່າປົກປັກຮັກສາສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;

5. ວາງເງິນຄ້ຳປະກັນດ້ານສິ່ງແວດລ້ອມ ເພື່ອບູລະນະຟື້ນຟູສິ່ງແວດລ້ອມຈາກໂຄງການລົງທຶນ ຫຼື ກິດຈະການ ຕາມກົດໝາຍ ຫຼື ສັນຍາ;

6. ປະກອບທຶນເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມ;

7. ປັບປຸງບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ຕາມຄຳເຫັນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

8. ແຕ່ງຕັ້ງຜູ້ຮັບຜິດຊອບດ້ານສິ່ງແວດລ້ອມ ໃນການຈັດຕັ້ງປະຕິບັດພັນທະດ້ານສິ່ງແວດລ້ອມຂອງໂຄງການລົງທຶນ ຫຼື ກິດຈະການຂອງຕົນ ພາຍຫຼັງໄດ້ຮັບໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສຳລັບໂຄງການລົງທຶນ ຫຼື ກິດຈະການ ທີ່ໄດ້ດຳເນີນການສຶກສາຜົນກະທົບເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ. ສ່ວນໂຄງການລົງທຶນ ຫຼື ກິດຈະການ ທີ່ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ຕ້ອງສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ເພື່ອປະຕິບັດພັນທະດ້ານສິ່ງແວດລ້ອມ;

9. ປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ງົບປະມານ ຕາມແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ, ແຜນການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບ ແລະ ແຜນຄຸ້ມຄອງສະເພາະດ້ານ;

10. ແກ້ໄຂຄຳສະເໜີ ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕົນ;

11. ປັບປຸງ, ແກ້ໄຂ ແລະ ບູລະນະຟື້ນຟູສິ່ງແວດລ້ອມ ທີ່ເກີດຈາກຜົນກະທົບຂອງໂຄງການລົງທຶນ ຫຼື ກິດຈະການຕົນ;

12. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີທີ່ເກີດມີຜົນກະທົບຕໍ່ສິ່ງແວດລ້ອມ ຈາກໂຄງການລົງທຶນ ຫຼື ກິດຈະການຕົນ ທີ່ບໍ່ໄດ້ຄາດຄະເນ ແລະ ກຳນົດໄວ້ ໃນບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ເຈົ້າຂອງໂຄງການ ຫຼື ກິດຈະການຕ້ອງຮັບຜິດຊອບໃນການແກ້ໄຂຜົນກະທົບດັ່ງກ່າວ.

## ມາດຕາ 66 ການສະໜອງຂໍ້ມູນຂ່າວສານດ້ານສິ່ງແວດລ້ອມ

ການສະໜອງຂໍ້ມູນຂ່າວສານ ດ້ານສິ່ງແວດລ້ອມ ແມ່ນ ການໃຫ້ຂໍ້ມູນທາງດ້ານກາຍະພາບ, ຊີວະພາບ ແລະ ເສດຖະກິດ-ສັງຄົມ ແລະ ຂໍ້ມູນອື່ນ ເພື່ອອໍານວຍຄວາມສະດວກໃນການສ້າງ ແລະ ການທົບທວນບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງ ແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ການຕິດຕາມ ກວດກາສິ່ງແວດລ້ອມ ລວມທັງການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ.

ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງສະໜອງຂໍ້ມູນຂ່າວສານ ດັ່ງນີ້:

1. ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນທີ່ກ່ຽວຂ້ອງ ໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນຂ່າວສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການຕົນ ໃຫ້ເຈົ້າຂອງໂຄງການ ຫຼື ກິດຈະການ ເພື່ອໃຊ້ເຂົ້າໃນວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

2. ເຈົ້າຂອງໂຄງການ ຫຼື ກິດຈະການ ສະໜອງຂໍ້ມູນຂ່າວສານ ກ່ຽວກັບໂຄງການລົງທຶນ ຫຼື ກິດຈະການຕ່າງໆ ພ້ອມທັງຂໍ້ມູນຂ່າວສານ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ ຫຼື ກິດຈະການຂອງຕົນ ຢ່າງພຽງພໍໃຫ້ແກ່ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເພື່ອທົບທວນ ແລະ ພິຈາລະນາຮັບຮອງ;

3. ເຈົ້າຂອງໂຄງການ ຫຼື ກິດຈະການ ສ້າງຖານຂໍ້ມູນ ເພື່ອນໍາໃຊ້ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ແລະ ແຜນຄຸ້ມຄອງສະເພາະດ້ານເປັນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ ໃຫ້ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນແຕ່ລະໄລຍະ ເພື່ອຕິດຕາມ ແລະ ປະເມີນຜົນ;

4. ຜູ້ໄດ້ຮັບຜົນກະທົບ ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຂະແໜງການທີ່ກ່ຽວຂ້ອງກ່ຽວກັບສະພາບສິ່ງແວດລ້ອມໃນຂອບເຂດໂຄງການລົງທຶນ ຫຼື ກິດຈະການຕ່າງໆ ແລະ ເຂດໃກ້ຄຽງ ພ້ອມທັງຂໍ້ມູນ ກ່ຽວກັບທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ຊັບສິນ ແລະ ລາຍຮັບຂອງຕົນ.

## ມາດຕາ 67 ການເປີດເຜີຍຂໍ້ມູນຂ່າວສານດ້ານສິ່ງແວດລ້ອມ

ການເປີດເຜີຍຂໍ້ມູນຂ່າວສານດ້ານສິ່ງແວດລ້ອມ ແມ່ນ ການນໍາສະເໜີຂໍ້ມູນຂ່າວສານກ່ຽວກັບບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ລວມທັງຄ່າໃຊ້ຈ່າຍໃນ ການຈັດຕັ້ງປະຕິບັດຕົວຈິງ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ ຮັບຊາບ ເຖິງຜົນກະທົບທີ່ ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ ຕໍ່ສິ່ງແວດລ້ອມທາງກົງ ຫຼື ທາງອ້ອມ ຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ.

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງເປີດເຜີຍຂໍ້ມູນຂ່າວສານ ດັ່ງນີ້:

1. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຈົ້າຂອງໂຄງການ ຫຼື ກິດຈະການຕ້ອງເປີດເຜີຍ ແລະ ອຳນວຍຄວາມສະດວກ ໃນການເຂົ້າເຖິງຂໍ້ມູນຂ່າວສານ ທີ່ຕິດພັນກັບເຈົ້າຂອງໂຄງການ ຫຼື ກິດຈະການ, ຜົນກະທົບຕໍ່ສິ່ງແວດລ້ອມ, ພັນທະ ແລະ ມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ, ບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມລວມທັງຜົນການຕິດຕາມ ກວດກາການຈັດຕັ້ງປະຕິບັດມາດຕະການຕ່າງໆ ແລະ ຂໍ້ມູນອື່ນ;

2. ການເປີດເຜີຍຂໍ້ມູນຂ່າວສານຂອງໂຄງການລົງທຶນ ຫຼື ກິດຈະການ ແຕ່ລະໄລຍະ ຕ້ອງເຮັດເປັນພາສາລາວ ແລະ ພາສາອັງກິດ ສູ່ສາທາລະນະຮັບຊາບ ໂດຍຜ່ານໜັງສືພິມ, ໂທລະພາບ, ໂທລະໂຄ່ງ, ວິທະຍຸ, ເວັບໄຊ, ສື່ອອນລາຍ ແລະ ສື່ສິ່ງພິມອື່ນ;

3. ໃນກໍລະນີທີ່ເຈົ້າຂອງໂຄງການ ຫຼື ກິດຈະການ ບໍ່ຕ້ອງການເປີດເຜີຍຂໍ້ມູນຂ່າວສານໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຂ້າງເທິງນີ້ ຕ້ອງເຮັດຄຳຮ້ອງພ້ອມທັງດັດຕິດຂໍ້ມູນຂ່າວສານດັ່ງກ່າວ ສະເໜີຂະແໜງການຊັບພະ ຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ພາຍໃນກຳນົດເວລາ ຊາວຫ້າ ວັນລັດຖະການ ຂະແໜງການຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາຂໍ້ມູນທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ທີ່ສະເໜີມານັ້ນ ສາ ມາດເປີດເຜີຍ ຫຼື ບໍ່ເປີດເຜີຍ. ຖ້າເປັນຂໍ້ມູນຂ່າວສານທີ່ບໍ່ເປີດເຜີຍ ຕ້ອງໄດ້ເກັບຮັກສາໄວ້ເປັນຄວາມລັບ ຕາມກຳ ນົດເວລາ ທີ່ໄດ້ຕົກລົງເຫັນດີນຳກັນລະຫວ່າງ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກັບ ເຈົ້າຂອງໂຄງການ ຫຼື ກິດຈະການ;

4. ສຳລັບໂຄງການສະຫຼັບຊັບຊ້ອນ ເຈົ້າຂອງໂຄງການ ຫຼື ກິດຈະການ ຕ້ອງສ້າງສູນຂໍ້ມູນຂ່າວສານຢູ່ໃນ ຂອບເຂດໂຄງການລົງທຶນ ຫຼື ກິດຈະການຕ່າງໆ ແລະ ບັນດາ ເມືອງ, ເທດສະບານ, ນະຄອນ ທີ່ກ່ຽວຂ້ອງ.

## ມາດຕາ 68 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

2. ປອມແປງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ຕາປະທັບ, ລາຍເຊັນ ແລະ ເອກະສານຕ່າງໆ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

3. ນຳໃຊ້ ສິດ, ໜ້າທີ່ ເກີນຂອບເຂດ, ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ພະນັກງານຂອງລັດ;

4. ປິດບັງ, ຊຸກເຊື່ອງ, ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

5. ໃຫ້ ຫຼື ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

6. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

7. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ ແລະ ພະນັກງານຂອງລັດ ໂດຍບໍ່ມີມູນຄວາມຈິງ;

8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ມາດຕາ 69 ຂໍ້ຫ້າມ ສໍາລັບເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ

ຫ້າມເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ມີພຶດຕິ ກໍາ ດັ່ງນີ້:

1. ດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ໂດຍເຈົ້າຂອງໂຄງການ ຫຼື ກິດຈະການ ເອງ;

2. ໃຫ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ໂດຍບໍ່ສອດຄ່ອງກັບການອະນຸຍາດ ແລະ ການຢັ້ງຢືນ;

3. ຜູ້ບໍລິການດ້ານວິຊາການກ່ຽວກັບສິ່ງແວດລ້ອມ ນໍາໃຊ້ຕາປະທັບຂອງບໍລິສັດຕົນ ປະທັບໃສ່ບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ທີ່ບໍ່ໄດ້ດໍາເນີນດ້ວຍຕົນເອງ;

4. ຊື້ຈ້າງ, ໃຫ້ສິນບົນແກ່ເຈົ້າໜ້າທີ່, ພະນັກງານ ແລະ ປະຊາຊົນ;

5. ສົມຮູ້ຮ່ວມຄິດ ກັບເຈົ້າໜ້າທີ່, ພະນັກງານ ແລະ ປະຊາຊົນ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ;

6. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ເຈົ້າໜ້າທີ່, ພະນັກງານ ແລະ ປະຊາຊົນ;

7. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ ໂດຍບໍ່ມີມູນຄວາມຈິງ;

8. ປອມແປງເອກະສານ, ລາຍເຊັນ, ຕາປະທັບ ແລະ ໃຫ້ຂໍ້ມູນຂ່າວສານບໍ່ຖືກກັບຄວາມເປັນຈິງ;

9. ລະເມີດພັນທະ ແລະ ເງື່ອນໄຂຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ, ຫຼີກລ້ຽງການເສຍພັນທະດ້ານສິ່ງແວດລ້ອມ, ຄ່າຊົບພະຍາກອນທໍາມະຊາດ, ຄ່າທໍານຽມ, ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;

10. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

11. ເຈົ້າຂອງໂຄງການ ຫຼື ກິດຈະການ ກໍ່ສ້າງ ແລະ ດໍາເນີນໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ນອນໃນບັນຊີການຈັດແບ່ງກຸ່ມໂຄງການລົງທຶນ ຫຼື ກິດຈະການຕ່າງໆໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມໂດຍບໍ່ໄດ້ຮັບໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;

12. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ມາດຕາ 70 ຂໍ້ຫ້າມ ສໍາລັບເຈົ້າໜ້າທີ່ ຫຼື ພະນັກງານ

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ຂະ ແໜງການທີ່ຮັບຜິດຊອບໂຄງການລົງທຶນ ຫຼື ກິດຈະການ ມີພຶດຕິກໍາ ດັ່ງນີ້:

1. ສຶກສາ ແລະ ສ້າງບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ;

2. ເມີນເສີຍ, ເລີນເລີ້ຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງ ການພິຈາລະນາເອກະສານ ກ່ຽວກັບ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ ແລະ ລວມໝູ່:

4. ເປັນນາຍໜ້າ, ທີ່ປຶກສາໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ກ່ຽວກັບການປະເມີນຜົນ ກະທົບຕໍ່ສິ່ງແວດລ້ອມ;

5. ສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່, ຂໍເອົາ, ທວງເອົາ, ຮັບສິນບົນ ຈາກເຈົ້າຂອງໂຄງການ ຫຼື ກິດຈະການ ເພື່ອຫາຜົນປະໂຫຍດສ່ວນຕົວ, ຈຸ້ມເຈື້ອ, ເຊື້ອສາຍ ແລະ ພັກພວກ;

6. ອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

7. ປອມແປງເອກະສານ, ລາຍເຊັນ ແລະ ຕາປະທັບ;

8. ປິດບັງ, ຊຸກເຊື່ອງ, ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

9. ຊ່ວຍ ແລະ ຢັ້ງຢືນໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ລວມທັງການຕິດຕາມ ກວດກາສະເພາະດ້ານ ທີ່ມີສ່ວນກ່ຽວຂ້ອງກັບໂຄງການລົງທຶນ ຫຼື ກິດຈະການນັ້ນ;

10. ເປີດເຜີຍຂໍ້ມູນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;

11. ທຳລາຍຫຼັກຖານ, ເອກະສານກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## 16. ຄຳແນະນຳກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ ເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019

**1.1 ການເຊົ່າທີ່ດິນຈາກພົນລະເມືອງລາວ**

ການເຊົ່າທີ່ດິນຈາກພົນລະເມືອງລາວ ໝາຍເຖິງ ການເຮັດສັນຍາເຊົ່າທີ່ດິນລະຫວ່າງຜູ້ລົງທຶນກັບບຸກຄົນ, ຄອບຄົວ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງຂອງພົນລະເມືອງລາວ ເພື່ອຈຸດປະສົງນຳໃຊ້ທີ່ດິນດັ່ງກ່າວເຂົ້າໃນການປູກພືດກະສິກຳ.(ຄຳແນະນຳ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ ເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019, ຂໍ້ທີ I, ຂໍ້ 3, ຂໍ້ 18)

**1.2 ການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ**

ການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ໝາຍເຖິງການເຮັດສັນຍາເຊົ່າ ຫຼື ສຳປະທານ ທີ່ດິນລັດ ເພື່ອຈຸດປະສົງນຳໃຊ້ທີ່ດິນດັ່ງກ່າວເຂົ້າໃນການປູກພືດກະສິກຳ.(ຄຳແນະນຳ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ ເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019, ຂໍ້ທີ I, ຂໍ້ 3, ຂໍ້ 19)

**1.3 ສິດຂອງນັກລົງທຶນ**

- ຂໍສຳປະທານໂຄງການນຳລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຫຼວງ ຕາມແຕ່ລະກໍລະນີເພື່ອພັດທະນາໂຄງການໃດໜຶ່ງ ສຳລັບການປູກພືດກະສິກຳ;
- ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
- ໄດ້ຮັບການອຳນວຍຄວາມສະດວກດ້ານຕ່າງໆ ກ່ຽວກັບການລົງທຶນຂອງຕົນ;
- ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
- ສຳລັບຜູ້ເຊົ່າ ຫຼື ສຳປະທານທີ່ດິນ ມີສິດໃຊ້ທີ່ດິນຕາມອາຍຸເຊົ່າ ຫຼື ສຳປະທານ, ໃຫ້ສືບທອດສັນຍາເຊົ່າທີ່ດິນ ຕາມອາຍຸຂອງສັນຍາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ເປັນເຈົ້າກຳມະສິດຕໍ່ຊັບສິນ, ລວມທັງຕຶກ, ອາຄານ ຫຼື ສິ່ງປຸກສ້າງຕ່າງໆຂອງຕົນ ໃນທີ່ດິນທີ່ໄດ້ຮັບສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ ແລະ ອາຍຸສັນຍາເຊົ່າ ຫຼື ສຳປະທານທີ່ຍັງເຫຼືອຢູ່. (ຄຳແນະນຳ ກ່ຽວ

ກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສໍາປະທານ ສໍາລັບການປູກພືດກະສິກໍາ ເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019, ຂໍ້ທີ VIII, ຂໍ້ 1)

## 1.4 ໜ້າທີ່ຂອງຜູ້ລົງທຶນ

- ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ຖືບັນຊີຕາມກົດໝາຍວ່າດ້ວຍ ການບັນຊີຂອງລາວ ໃນກໍລະນີທີ່ຈໍາເປັນກໍສາມາດນໍາໃຊ້ລະບົບບັນຊີອື່ນ ທີ່ສາກົນຮັບຮູ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນຂອງ ສປປ ລາວ;
- ໃຫ້ຄວາມຮ່ວມມື ແລະ ປະສານງານ ເປັນຢ່າງດີກັບອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທຸລະກິດ;
- ສົ່ງເສີມການນໍາໃຊ້ແຮງງານລາວ ໂດຍສະເພາະແຮງງານແມ່ຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ;
- ປະກອບສ່ວນທາງດ້ານງົບປະມານໃນວຽກງານ ຕິດຕາມ, ກວດກາໂຄງການລົງທຶນ;
- ສະຫຼຸບ, ລາຍງານ ການດໍາເນີນທຸລະກິດຂອງຕົນປະຈໍາສາມເດືອນ, ຫົກເດືອນ ແລະ ປະຈໍາປີຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;
- ປະກອບສ່ວນທຶນພັດທະນາທ້ອງຖິ່ນ ແລະ ຕິດຕາມໂຄງການ ໂດຍການປຶກສາຫາລືລະຫວ່າງ ຜູ້ລົງທຶນກັບພະແນກການຂອງແຂວງ, ນະຄອນຫຼວງ ທີ່ກໍານົດໄວ້ໃນສັນຍາຄຸ້ມຄອງໂຄງການ;
- ປະຕິບັດລະບອບປະກັນສັງຄົມ ແລະ ປະກັນໄພຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ໃນວິສາຫະກິດຂອງຕົນ ໂດຍສະເພາະແມ່ນອົງການຈັດຕັ້ງກໍາມະບານ;
- ເຄົາລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນາທໍາອັນດີງາມຂອງທ້ອງຖິ່ນ;
- ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກການດໍາເນີນທຸລະກິດຂອງຕົນ;
- ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;
- ປະກອບສ່ວນທາງດ້ານງົບປະມານ ໃນວຽກງານພັດທະນາສັງຄົມ;

- ສ້ອມແປງສິ່ງສາທາລະນຸປະໂພກໃນເຂດໂຄງການ ແລະ ໃກ້ຄຽງໂຄງການ ໃນກໍລະນີເກີດຜົນກະທົບຈາກການດຳເນີນໂຄງການຂອງຕົນເຊັ່ນ: ຄອງເໝືອງ, ທໍ່ນ້ຳ, ສາຍໄຟ, ແລະ ເສັ້ນທາງໃຫ້ຄືນສູ່ສະພາບເດີມ;
- ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືສຳຄັນການປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ, ລະບຽບການ ແລະ ມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ໄດ້ກຳນົດໄວ້;
- ໃນກໍລະນີ ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບດັ່ງກ່າວຢ່າງທັນການ ຕາມກົດໝາຍ, ລະບຽບການ ແລະ ມາດຕະຖານສິ່ງແວດລ້ອມແຫ່ງຊາດທີ່ໄດ້ກຳນົດໄວ້;
- ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມສົນທິສັນຍາ ຫຼື ສັນຍາສາກົນທີ່ ສປປ ລາວເປັນພາຄີ;
- ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ;
- ດຳເນີນໂຄງການປູກພືດດ້ວຍການນຳໃຊ້ວິທີການທີ່ປອດໄພ ເຊັ່ນ: ການນຳໃຊ້ຝຸ່ນ, ປຸ໋ຍ, ຢາປາບສັດຕູພືດຢາຂ້າຫຍ້າ, ການນຳໃຊ້ເຄື່ອງຈັກ, ອຸປະກອນ ແລະ ອື່ນໆ;
- ພາຍຫຼັງສິ້ນສຸດໂຄງການຕ້ອງໄດ້ຟື້ນຟູພື້ນທີ່ເຂດແດນຂອງດິນຄືນຕາມໃບຕາດິນ, ໃບນຳໃຊ້ທີ່ດິນ, ແຜນທີ່ດິນ ກ່ອນສົ່ງຄືນເຈົ້າຂອງເດີມ;
- ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ໃນກໍລະນີພົບເຫັນວ່າຜູ້ລົງທຶນ ມີການລະເມີດເງື່ອນໄຂຂອງສັນຍາສຳປະທານ, ສັນຍາຄຸ້ມຄອງໂຄງການ, ບົດບັນທຶກຄຸ້ມຄອງໂຄງການ ຫຼື ຂໍ້ຫ້າມ ແລະ ລະບຽບການຕ່າງໆ ຂອງລັດ ຈະຖືກກ່າວເຕືອນໃຫ້ປັບປຸງແກ້ໄຂພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ນັບແຕ່ວັນທີອອກໜັງສືແຈ້ງເຕືອນເປັນຕົ້ນໄປ, ແຕ່ຖ້າບໍ່ມີການປັບປຸງແກ້ໄຂຈະອອກໜັງສືແຈ້ງໂຈະການລົງທຶນພາຍໃນກຳນົດເວລາ ສີ່ສິບຫ້າວັນ ແລະ ຫຼັງຈາກນັ້ນ ຫາກຍັງບໍ່ມີການປັບປຸງຕາມກຳນົດເວລາດັ່ງກ່າວ ກໍ່ຈະມີການສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ຫຼື ຂັ້ນແຂວງ ເພື່ອຖອນໃບອະນຸຍາດລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ນິຕິກຳທີ່ກ່ຽວຂ້ອງ. (ຄຳແນະນຳ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານສຳລັບການປູກພືດກະສິກຳ ເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019, ຂໍ້ທີ VIII, ຂໍ້ 2)

# 17. ຄູ່ມືແນະນຳ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບຢູ່ ສປປ ລາວ (ກໍລະນີສຶກສານັກລົງທຶນ ສປປ ຈີນ)

## ພາກທີ III: ຫຼັກການສຳລັບການລົງທຶນແບບມີຄວາມຮັບຜິດຊອບໃນ ສປປ ລາວ

### 1. ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ

ການລົງທຶນດ້ານກະສິກຳ ແລະ ປ່າໄມ້ແບບມີຄວາມຮັບຜິດຊອບໃນ ສປປ ລາວ ຈະຕ້ອງມີການປຶກສາຫາລືຮ່ວມກັບປະຊາຊົນທ້ອງຖິ່ນຕັ້ງແຕ່ເລີ່ມຕົ້ນ ແລະ ຕະຫຼອດໄລຍະຂອງການດຳເນີນການລົງທຶນ ເພື່ອຂໍຄວາມຍິນຍອມ. ການມີສ່ວນຮ່ວມຂອງປະຊາຊົນແມ່ນມີຄວາມຈຳເປັນ ແລະ ສຳຄັນທີ່ສຸດ ເພາະປະຊາຊົນເປັນເຈົ້າຂອງພື້ນທີ່ ແລະ ເປັນຜູ້ທີ່ຈະໄດ້ຮັບຜົນກະທົບທັງດ້ານບວກ ແລະ ດ້ານລົບຈາກໂຄງການລົງທຶນນັ້ນ. ຂັ້ນຕອນໃນການດຳເນີນ ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ (FPIC) ປະກອບມີ:

1) ຈັດກອງປະຊຸມຮ່ວມກັບປະຊາຊົນ ເພື່ອຕົກລົງກ່ຽວກັບຈຸດປະສົງ ແລະ ຂະບວນການເຮັດ FPIC;
2) ສົ່ງເສີມໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບທັງໝົດເຂົ້າຮ່ວມໃນການປຶກສາຫາລື;
3) ສົ່ງເສີມໃຫ້ປະຊາຊົນໄດ້ຮັບຂໍ້ມູນຢ່າງພຽງພໍ ແລະ ຈຳເປັນໃນການຕັດສິນໃຈ;
4) ອຳນວຍຄວາມສະດວກໃຫ້ແກ່ປະຊາຊົນເຂົ້າເຖິງນັກຊ່ຽວຊານ, ນັກກົດໝາຍ ແລະ ວິຊາການທີ່ກ່ຽວຂ້ອງ ເພື່ອໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການທີ່ຈຳເປັນ;
5) ຈັດກອງປະຊຸມເຈລະຈາ ເພື່ອພິຈາລະນາການຮັບເອົາໂຄງການ ໂດຍປາສະຈາກການບັງຄັບ;
6) ໃຫ້ເວລາຢ່າງພຽງພໍແກ່ປະຊາຊົນໄດ້ປຶກສາຫາລືຮ່ວມກັນພາຍໃນບ້ານ ຢ່າງເໝາະສົມ ແລະ ພຽງພໍເພື່ອໃຫ້ສາມາດຕັດສິນໃຈເປັນເອກະພາບ. ການຍິນຍອມທີ່ໄດ້ຈາກ FPIC ອາດເປັນສຽງສ່ວນຫຼາຍ ຫຼື ຄວາມເຫັນດີເຫັນພ້ອມຊຶ່ງຂຶ້ນກັບຊຸມຊົນເປັນຜູ້ກຳນົດ.

ເນື່ອງຈາກວ່າປະຊາຊົນແຕ່ລະຄົນ, ແຕ່ລະກຸ່ມມີຄວາມສົນໃຈ, ຄວາມຕ້ອງການ ແລະ ໄດ້ຮັບຜົນກະທົບທີ່ແຕກຕ່າງກັນ. ດັ່ງນັ້ນ, ພວກເຂົາທັງໝົດຕ້ອງໄດ້ເຂົ້າຮ່ວມ, ບໍ່ແມ່ນພຽງແຕ່ຫົວໜ້າຄອບຄົວ ຫຼື ຄະນະປົກຄອງບ້ານເທົ່ານັ້ນ, ເພື່ອໃຫ້ທຸກຄົນ ເຊິ່ງລວມມີ ແມ່ຍິງ, ຜູ້ຊາຍ, ຊາວໜຸ່ມ, ຜູ້ເຖົ້າ, ຄົນເສຍອົງຄະ, ຊົນເຜົ່າ ແລະ ກຸ່ມຜູ້ອ່ອນແອສ່ຽງໄພອື່ນໆ ໄດ້ມີສິດເທົ່າທຽມກັນ. ການຈັດການປຶກສາຫາລືແຍກສະເພາະແຕ່ລະກຸ່ມທີ່ມີຄວາມສ່ຽງ ດັ່ງກ່າວເຫຼົ່ານີ້ ຈະຊ່ວຍໃຫ້ນັກລົງທຶນເຂົ້າໃຈວ່າ ໂຄງການອາດສົ່ງຜົນກະທົບຕໍ່ພວກເຂົາຕ່າງກັນແນວໃດ ແລະ ຊັບພະຍາກອນຫຍັງທີ່ອາດຈຳເປັນເພື່ອຮັບປະກັນໃຫ້ແຕ່ລະກຸ່ມໄດ້ຮັບຜົນປະໂຫຍດເທົ່າທຽມກັນ(ຂໍ້2).

2. **ການເຜີຍແຜ່ຂໍ້ມູນ ແລະ ຄວາມໂປ່ງໃສ**

ອີງຕາມຫຼັກການການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ເຄົາລົບສິດ, ການດຳລົງຊີວິດ ແລະ ຊັບພະຍາກອນທຳມະຊາດ ໃນທົ່ວໂລກ. ການຂາດຄວາມໂປ່ງໃສແມ່ນສາມາດສ້າງຄວາມບໍ່ໄວ້ວາງໃຈໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນ ທີ່ສາມາດແກ້ໄຂບັນຫາເລັກນ້ອຍໄດ້ກ່ອນທີ່ຈະກາຍເປັນບັນຫາໃຫຍ່.

3. **ການເຄົາລົບສິດທິຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນ້ຳ**

ການລົງທຶນທີ່ມີຄວາມຮັບຜິດຊອບ ຕ້ອງເຄົາລົບສິດທິຂອງປະຊາຊົນທ້ອງຖິ່ນໃນການຄອບຄອງນຳໃຊ້ທີ່ດິນ, ການປະມົງ, ການນຳໃຊ້ປ່າໄມ້ ແລະ ແຫຼ່ງນ້ຳທີ່ຊອບທຳ ລວມທັງສິດຕາມປະເພນີຂອງປະຊາຊົນທ້ອງຖິ່ນ. ນັກລົງທຶນຍັງຕ້ອງຮັບຮູ້ສິດທິຂອງປະຊາຊົນທ້ອງຖິ່ນໃນການຍິນຍອມແບບອິດສະຫຼະ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ (FPIC) ຕໍ່ການລົງທຶນໃດໆໃນພື້ນທີ່ດິນ ແລະ ປ່າໄມ້ທີ່ພວກເຂົານຳໃຊ້ຕາມປະເພນີ.

4. **ການປະກອບສ່ວນເຂົ້າໃນການພັດທະນາສັງຄົມ**

ທຸກໂຄງການລົງທຶນທີ່ມີຄວາມຮັບຜິດຊອບ ຕ້ອງໄດ້ປະກອບສ່ວນເຂົ້າໃນການພັດທະນາສັງຄົມແບບມີຄວາມສະເໝີພາບ, ຍືນຍົງ, ທົ່ວເຖິງ, ເໝາະສົມກັບທ້ອງຖິ່ນ ແລະ ລົບລ້າງຄວາມທຸກຍາກ ເພື່ອຮັບປະກັນວ່າໂຄງການລົງທຶນດັ່ງກ່າວ ສາມາດສ້າງຜົນປະໂຫຍດແບບເປັນທຳໃຫ້ປະຊາຊົນທ້ອງຖິ່ນ ແລະ ຊ່ວຍພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

5. **ການນຳໃຊ້ແຮງງານທ້ອງຖິ່ນ ແລະ ຄວາມປອດໄພດ້ານແຮງງານ**

ການລົງທຶນທີ່ມີຄວາມຮັບຜິດຊອບຕ້ອງໃຫ້ຄວາມສຳຄັນແກ່ການຈ້າງແຮງງານທ້ອງຖິ່ນ ໂດຍສະເພາະແມ່ນແມ່ຍິງ ແລະ ຊົນເຜົ່າ ແລະ ຄວາມປອດໄພຂອງແຮງງານທີ່ຈ້າງງານ. ອີງໃສ່ມາດຕະການສາກົນຂອງ ອົງການແຮງງານສາກົນ (ILO) ໂຄງການລົງທຶນ ຫຼື ນັກລົງທຶນຈະຕ້ອງເອົາໃຈໃສ່ມາດຕະຖານຕ່າງໆເຊັ່ນ: ສົ່ງເສີມການເຂົ້າເຖິງການເຮັດວຽກຢ່າງມີຄວາມເທົ່າທຽມ ແລະ ເປັນທຳ ໂດຍບໍ່ມີການແບ່ງແຍກໃດໆ, ມີການພັດທະນາຄວາມຮູ້ຄວາມສາມາດ ແລະ ສືມີແຮງງານຢ່າງຕໍ່ເນື່ອງ, ສະໜອງຄ່າຈ້າງ ແລະ ຜົນປະໂຫຍດທີ່ເປັນທຳ ແລະ ປະກັນສັງຄົມທີ່ຍືນຍົງ, ຮັບປະກັນມາດຕະຖານຄວາມປອດໄພໃນການເຮັດວຽກ ແລະ ສະຖານທີ່ພັກເຊົາຂອງຜູ້ອອກແຮງງານ, ບໍ່ຄວນສະໜັບສະໜູນການນຳໃຊ້ແຮງງານທີ່ຖືກບັງຄັບ, ບໍ່ມີສ່ວນຮ່ວມໃນການຄ້າແຮງງານ, ຫຼີກລ້ຽງການນຳໃຊ້ແຮງງານເດັກ, ຫ້າມທຸກຮູບແບບໃນການສວຍໃຊ້ໂອກາດ ຫຼື ການລ່ວງລະເມີດທາງດ້ານແຮງງານ ເພື່ອຫາປະໂຫຍດໃນທາງທີ່ບໍ່ເປັນທຳ ແລະ ຂັດກັບລະບຽບກົດໝາຍ.

6. **ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ**

ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນ ຕິດພັນກັບສຸຂະພາບຂອງຄົນເຮົາ ດັ່ງນັ້ນການລົງທຶນທີ່ມີຄວາມຮັບຜິດຊອບ ແລະ ຍືນຍົງ ຕ້ອງຮັບປະກັນໃຫ້ມີຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ.

7. **ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ບົດແນະນຳສາກົນສິນທະນາກ່ຽວກັບການລົງທຶນທີ່ມີຄວາມຮັບຜິດຊອບເຊັ່ນ: ບົດແນະນຳ OECD-FAO ຕ່ອງໂສ້ການສະໜອງກະສິກຳແບບມີຄວາມຮັບຜິດຊອບ, ແມ່ນເນັ້ນໜັກການປົກປັກຮັກສາສິ່ງແວດລ້ອມ ໂດຍເລີ່ມຈາກການຫຼີກລ່ຽງຜົນກະທົບ, ຫຼັງຈາກນັ້ນຖ້າຫຼີກລ່ຽງບໍ່ໄດ້ແມ່ນຫຼຸດຜ່ອນຜົນກະທົບ.

ດຳລັດວ່າດ້ວຍການຄຸ້ມຄອງປ່າສະຫງວນ ແລະ ແຜນຄຸ້ມຄອງເຂດປ່າສະຫງວນໃນແຕ່ລະເຂດ, ລວມເຖິງການວາງແຜນການນຳໃຊ້ທີ່ດິນຮ່ວມກັບຊຸມຊົນທີ່ຢູ່ໃນເຂດປ່າສະຫງວນ. ຜົນກະທົບໃດກໍ່ຕາມທີ່ເກີດຂຶ້ນຈາກການລົງທຶນຢູ່ໃນເຂດປ່າສະຫງວນ ຕ້ອງໄດ້ຮັບການຊົດເຊີຍຕາມລະບຽບຂອງ ສປປ ລາວ ແລະ ເພື່ອສອດຄ່ອງກັບສະພາບການຫຼຸດຜ່ອນດ້ານຜົນກະທົບ. ຄວາມພະຍາຍາມໃນການປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນຕ້ອງດຳເນີນຢ່າງສືບຕໍ່ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ ໂດຍປະຕິບັດຕາມແນວທາງການປູກ, ການຂຸດຄົ້ນແບບຍືນຍົງ, ການຟື້ນຟູພື້ນທີ່ ແລະ ຊີວະນາໆພັນທີ່ຖືກສູນເສຍ ຫຼື ໄດ້ຮັບຜົນກະທົບທາງລົບຈາກການລົງທຶນ.

## ລາຍການເຄື່ອງມືສຳລັບປະກອບຄູ່ມື

1. ເອກະສານສັງລວມມາດຕາກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ສຳລັບການນຳໃຊ້ປື້ມຄູ່ມືຝຶກອົບຮົມການລົງທຶນດ້ານກະສິກຳດ້ວຍຄວາມຮັບຜິດຊອບ ສຳລັບຊາວກະສິກອນ
2. ວິດີໂອ ການເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC)
3. ວິດີໂອ ສິດຂອງຊາວກະສິກອນໃນການເຮັດສັນຍາ
4. ວິດີໂອ ອົງປະກອບຂອງການເຮັດສັນຍາ
5. ວິດີໂອ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ
6. ວິດີໂອ ການເຈລະຈາດ້ວຍຄວາມໄວ້ເນື້ອເຊື່ອໃຈ Good Faith Negotiation
7. ໂປດສະເຕີ ຄິດໃຫ້ດີແລ້ວຈິ່ງເຊັນສັນຍາ ແລະ ຄວາມຮູ້ພື້ນຖານກ່ຽວກັບການເຮັດສັນຍາ;
8. ໂປດສະເຕີຮູບແບບການຜະລິດກະສິກຳເປັນສິນຄ້າແບບມີສັນຍາ;
9. ໂປດສະເຕີການລົງທຶນແບບມີຄວາມຮັບຜິດຊອບ;
10. ໂປດສະເຕີການລົງທຶນແບບມີຄວາມຮັບຜິດຊອບຕໍ່ກັບການເຄົາລົບສິດຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນໍ້າ.( ປະຕິທິນກົດໝາຍປີ2024, ໜ້າທີ່ສອງ ເດືອນມີນາ-ເມສາ https://laolandinfo.org/wp-content/uploads/2024/01/Legal-Calendar-2024.pdf )
11. ໂປດສະເຕີດ້ານບວກ, ດ້ານລົບ ແລະ ສິ່ງທີ່ສິ່ງທີ່ໜ້າສົນໃຈ
12. ໂປດສະເຕີການວາງແຜນແບບ SMART
13. ປຶດແນະນຳຂອງ ອາຊຽນສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບ ໃນດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ 782512_25308b52ce5346008fb633c711de3821.pdf (aseanraiguidelines.org)
14. ຄູ່ມືແນະນຳການລົງທຶນແບບມີຄວາມຮັບຜິດຊອບໃນສປປລາວ ກໍລະນີສຶກສາ ນັກລົງທຶນຈາກ ສປ ຈີນ. (ພາສາລາວ ແລະ ອັງກິດ) ຄູ່ມືແນະນຳການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດ-ຊອບຢູ່ ສປປ ລາວ - ເອກະສານໃນຫໍສະໝຸດ OD Mekong Datahub (opendevelopmentmekong.net)
15. ແບບຟອມປະເມີນຜົນ ກ່ອນ ແລະ ຫຼັງ ຝຶກອົບຮົມ
16. ຮ່າງຟອມສັນຍາ;
17. ຕົວຢ່າງປຶດສະຫຼຸບເກັບກຳຂໍ້ມູນກ່ຽວກັບຂໍ້ຂັດແຍ່ງ

**ປະເມີນຜົນກ່ອນ ການຝຶກອົບຮົມ**

**ຫົວຂໍ້: ການລົງທຶນດ້ານກະສິກຳດ້ວຍຄວາມຮັບຜິດຊອບສຳລັບຊາວກະສິກອນ**

ຈົ່ງໝາຍ (✓) ໃສ່ຄຳຕອບທີ່ຖືກຕ້ອງ (ໃຫ້ເລືອກເອົາຄຳຕອບທີ່ຖືກຕ້ອງພຽງຄຳຕອບດຽວ):

**1. ຫຼັກການສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບດ້ານສະບຽງອາຫານ, ກະສິກຳ ແລະ ປ່າໄມ້ ຂອງອາຊຽນ ມີຈັກຫຼັກການ?**

☐ 4 ຫຼັກການ ☐ 5 ຫຼັກການ ☐ 6 ຫຼັກການ ☐ 10 ຫຼັກການ

**2. ຂໍ້ໃດແມ່ນມີໃນຫຼັກການສຳລັບການລົງທຶນດ້ານກະສິກຳແບບມີຄວາມຮັບຜິດຊອບໃນ ສປປ ລາວ?**

☐ ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ

☐ ການເຄົາລົບສິດທິຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການຫາປາ, ລ້ຽງສັດ, ເກັບເຄື່ອງປ່າຂອງດົງ

☐ ການນຳໃຊ້ແຮງງານໂດຍສະເພາະແມ່ນ ຊ່ຽວຊານມາຈາກຕ່າງປະເທດ

☐ ການພັດທະນາສີຂຽວ ຄຽງຄູ່ ກັບການນຳໃຊ້ຊັບພະຍາກອນທຳມະຊາດ

**3. ທ່ານຄິດວ່າ ການລົງທຶນດ້ານກະສິກຳຢ່າງມີຄວາມຮັບຜິດຊອບມີຫຼັກການສາກົນບໍ່?**

☐ ມີ ☐ ບໍ່ມີ ☐ ບໍ່ຮູ້

**4. ທ່ານຄິດວ່າ ກົດໝາຍ ສປປ ລາວ ມີກົດໝາຍໃດແດ່ທີ່ກ່ຽວຂ້ອງກັບ ການລົງທຶນດ້ານກະສິກາແບບມີ ຄວາມຮັບຜິດຊອບ?**

☐ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ

☐ ກົດໝາຍວ່າດ້ວຍ ແຮງງານ

☐ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ

☐ ບໍ່ກ່ຽວຂ້ອງຈັກຂໍ້

☐ ກ່ຽວຂ້ອງທຸກຂໍ້

**5. ທ່ານຄິດວ່າ ພັນທະຂອງຜູ້ລົງທຶນ ມີຫຍັງແດ່?**

☐ ພັນທະໃນການເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ

☐ ພັນທະໃນການປະກອບສ່ວນພັດທະນາທ້ອງຖິ່ນ ແລະ ສັງຄົມ, ພັນທະດ້ານສິ່ງແວດລ້ອມ

☐ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ສົ່ງເສີມທຸລະກິດພາຍໃນ

☐ ພັນທະໃນການປະກອບສ່ວນປົກປັກຮັກສາຄວາມສະຫງົບ

**6. ການເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ (FPIC-Free Prior and** Informed Consent) ໝາຍວ່າ ແນວໃດ?

☐ ການປຶກສາຫາລືກັບຊຸມຊົນ ໂດຍທີ່ຊຸມຊົນສາມາດອອກຄຳຄິດເຫັນ ແລະ ເຂົ້າໃຈ

☐ ການເຂົ້າເຖິງຂໍ້ມູນ-ຂ່າວສານ ກ່ຽວກັບໂຄງການລົງທຶນ

☐ ການປຶກສາຫາລື, ໃຫ້ຂໍ້ມູນ ແລະ ອະທິບາຍ ໃຫ້ຊູມຊົນເຂົ້າໃຈ ແລະ ເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ ກ່ອນຈະດຳເນີນໂຄງການ.

**7. ຮູບການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການການລົງທຶນ ສາມາດດຳເນີນດ້ວຍຈັກຮູບການ?**

☐ 2 ຮູບການ ☐ 3 ຮູບການ ☐ 4 ຮູບການ ☐ 5 ຮູບການ

**ປະເມີນຜົນ ຫຼັງການຝຶກອົບຮົມ**

**ຫົວຂໍ້: ການລົງທຶນດ້ານກະສິກໍາດ້ວຍຄວາມຮັບຜິດຊອບສໍາລັບຊາວກະສິກອນ**

ຈົ່ງໝາຍ (✓) ໃສ່ຄໍາຕອບທີ່ຖືກຕ້ອງ (ໃຫ້ເລືອກເອົາຄໍາຕອບທີ່ຖືກຕ້ອງພຽງຄໍາຕອບດຽວ):

**1. ຫຼັກການສໍາລັບການລົງທຶນຢ່າງມີຄວາມຮັບຜິດຊອບດ້ານສະບຽງອາຫານ, ກະສິກໍາ ແລະ ປ່າໄມ້ ຂອງ ອາຊຽນ ມີຈັກຫຼັກການ?**

☐ 4 ຫຼັກການ ☐ 5 ຫຼັກການ ☐ 6 ຫຼັກການ ☐ 10 ຫຼັກການ

**2. ຂໍ້ໃດແມ່ນມີໃນຫຼັກການສໍາລັບການລົງທຶນດ້ານກະສິກໍາແບບມີຄວາມຮັບຜິດຊອບໃນ ສປປ ລາວ?**

☐ ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ

☐ ການເຄົາລົບສິດທິຂອງປະຊາຊົນໃນການນໍາໃຊ້ທີ່ດິນ, ການຫາປາ, ລ້ຽງສັດ, ເກັບເຄື່ອງປ່າຂອງດົງ

☐ ການນໍາໃຊ້ແຮງງານໂດຍສະເພາະແມ່ນ ຊ່ຽວຊານມາຈາກຕ່າງປະເທດ

☐ ການພັດທະນາສີຂຽວ ຄຽງຄູ່ ກັບການນໍາໃຊ້ຊັບພະຍາກອນທໍາມະຊາດ

**3. ທ່ານຄິດວ່າ ການລົງທຶນດ້ານກະສິກໍາດ້ວຍຄວາມຮັບຜິດຊອບມີຫຼັກການສາກົນບໍ່?**

☐ ມີ ☐ ບໍ່ມີ ☐ ບໍ່ຮູ້

**4. ທ່ານຄິດວ່າ ມີກົດໝາຍໃດແດ່ ທີ່ກ່ຽວຂ້ອງກັບ ການລົງທຶນດ້ານກະສິກາແບບມີ ຄວາມຮັບຜິດຊອບ?**

☐ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ

☐ ກົດໝາຍວ່າດ້ວຍ ແຮງງານ

☐ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ

☐ ບໍ່ກ່ຽວຂ້ອງຈັກຂໍ້

☐ ກ່ຽວຂ້ອງທຸກຂໍ້

**5. ທ່ານຄິດວ່າ ພັນທະຂອງຜູ້ລົງທຶນ ມີຫຍັງແດ່?**

☐ ພັນທະໃນການເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ

☐ ພັນທະໃນການປະກອບສ່ວນພັດທະນາທ້ອງຖິ່ນ ແລະ ສັງຄົມ, ພັນທະດ້ານສິ່ງແວດລ້ອມ

☐ ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ສົ່ງເສີມທຸລະກິດພາຍໃນ

☐ ພັນທະໃນການປະກອບສ່ວນປົກປັກຮັກສາຄວາມສະຫງົບ

**6. ການເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ (FPIC-Free Prior and** Informed Consent) ໝາຍວ່າ ແນວໃດ?

☐ ການປຶກສາຫາລືກັບຊຸມຊົນ ໂດຍທີ່ຊຸມຊົນສາມາດອອກຄຳຄິດເຫັນ ແລະ ເຂົ້າໃຈ

☐ ການເຂົ້າເຖິງຂໍ້ມູນ-ຂ່າວສານ ກ່ຽວກັບໂຄງການລົງທຶນ

☐ ການປຶກສາຫາລື, ໃຫ້ຂໍ້ມູນ ແລະ ອະທິບາຍ ໃຫ້ຊຸມຊົນເຂົ້າໃຈ ແລະ ເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈ ກ່ອນຈະດຳເນີນໂຄງການ.

**7. ຮູບການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການການລົງທຶນ ສາມາດດຳເນີນດ້ວຍຈັກຮູບການ?**

☐ 2 ຮູບການ ☐ 3 ຮູບການ ☐ 4 ຮູບການ ☐ 5 ຮູບການ

# (ແບບຢ່າງ) ບົດສະຫຼຸບເກັບກຳຂໍ້ມູນ

**ຮຽນ:**…………………………………………………………………………………………
…

**ເລື່ອງ:**…………………………………………………………………………………………
.

ອີງ

ຕາມ:…………………………………………………………………………………………

**ການເຂົ້າເຖິງຫລືຜູ້ແນະນຳມາ:**

**I. ພາກສະເໜີ**

**ເລື່ອງ:** ..........................

**ລະຫວ່າງ:**

ທ້າວ/ນາງ…………………………………………..……, ອາຍຸ………., ອາຊີບ……….……, ສັນຊາດ………………ປັດຈຸບັນຢູ່ບ້ານ …………………, ເມືອງ……………………, ແຂວງ………………………..ເບີໂທຕິດຕໍ່………………………… (ຜູ້ມາຂໍຄຳປຶກສາ ຫລື ຄວາມຊ່ວຍເຫຼືອ)

**ແລະ**

ທ້າວ/ນາງ…………………………………………..……, ອາຍຸ………., ອາຊີບ……….……, ສັນຊາດ………………ປັດຈຸບັນຢູ່ບ້ານ …………………, ເມືອງ……………………, ແຂວງ………………………..ເບີໂທຕິດຕໍ່………………………… (ຄູ່ກໍລະນີ)

**II. ລຳດັບເຫດການຄວາມເປັນມາ**

…………………………………………………………………………………………
……

…………………………………………………………………………………………
……

…………………………………………………………………………………………
……

…………………………………………………………………………………………
……

…………………………………………………………………………………………
……

……………………………………………………………………………………………
……

……………………………………………………………………………………………
……

1. ຮູບການຕົກລົງ (ໄດ້ ຫຼື ບໍ່ໄດ້) ແລະ ຄວາມພະຍາຍາມແກ້ໄຂໃນໄລຍະຜ່ານມາ

……………………………………………………………………………………………
……

……………………………………………………………………………………………
……

……………………………………………………………………………………………
……………………………………………………………………………………………
…………

……………………………………………………………………………………………
……

……………………………………………………………………………………………
……

2. ສະພາບການໃນປັດຈຸບັນ:

……………………………………………………………………………………………
……

……………………………………………………………………………………………
……………………………………………………………………………………………
…………

## III. ສະຫຼຸບ

- ວິເຄາະພາບລວມໂດຍຫຍໍ້ຂອງຜູ້ຄົ້ນຄວ້າກ່ຽວກັບເຫດການ:

……………………………………………………………………………………………
……

……………………………………………………………………………………………
……………………………………………………………………………………………
…………

- ເຫດຜົນທາງດ້ານກົດໝາຍ
- ຄວາມຮຽກຮ້ອງຕ້ອງການຂອງຜູ້ມາຂໍຄວາມຊ່ວຍເຫຼືອ:

1. ……………………………………………………………………………………
…...
2. ……………………………………………………………………………………
…...

- ຄວາມຄິດເຫັນ ແລະ ຂໍ້ສະເໜີຂອງຜູ້ຄົ້ນຄວ້າ:

**1.** …………………………………………………………………………………
…...

**2.** …………………………………………………………………………………
…...

**3.** …………………………………………………………………………………
…...

ສະນັ້ນ, ຂ້າພະເຈົ້າຈຶ່ງໄດ້ສະຫຼຸບໄວ້ເປັນຂໍ້ມູນ ເພື່ອພິຈາລະນາດຳເນີນການຕໍ່ໄປ.

ທີ່……………………, ວັນທີ………/………/………

**ລົງລາຍເຊັນ ຜູ້ຄົ້ນຄວ້າ ແລະ ສະຫຼຸບ**

ຂໍ້ມູນອ້າງອີງທີ່ໄດ້ຮັບຈາກຜູ້ມາຂໍຄຳປຶກສາ (ເອກະສານ, ຮູບ, ຄລິບ.....):

1..................

2..................

# (ຕົວຢ່າງຮ່າງສັນຍາ)

**ເມືອງ ...........** **ເລກທີ: ............**

**ບ້ານ ............** **ລົງວັນທີ: ..........**

## ສັນຍາວ່າດ້ວຍການ............ (ລະບຸຊື່ຂອງສັນຍາ)

- **ບ່ອນອີງທາງດ້ານກົດໝາຍ: (ກົດໝາຍຫັຍງ? ມາດຕາໃດ?).................**

## ຂໍ້ມູນທົ່ວໄປຂອງຄູ່ສັນຍາ

ສັນຍາວ່າດ້ວຍ………… ສະບັບນີ້ ໄດ້ເຮັດຂຶ້ນ ທີ່ແຂວງ/(ນະຄອນຫລວງວຽງຈັນ),................ ວັນທີ..............., ເວລາ..................

**ລະຫວ່າງ:**

ບໍລິສັດ.............., ທະບຽນວິສະຫະກິດເລກທີ:................ມີສໍານັກງານຕັ້ງຢູ່ ບ້ານ………………, ເມືອງ …………...........…, ແຂວງ................... ເບີໂທຕິດຕໍ່ ແລະ ແຟກ: ………………, ຕໍ່ໄປນີ້ເອີ້ນວ່າ ຄູ່ຮ່ວມສັນຍາ "ຝ່າຍ ກ"

**ແລະ**

ທ້າວ/ນາງ……………........……, ທີ່ຢູ່ປັດຈຸບັນ ບ້ານ…………, ເມືອງ……………,ແຂວງ........... ເບີໂທຕິດຕໍ່ ແລະ ແຟກ:.................................... , ຕໍ່ໄປນີ້ເອີ້ນວ່າ ຄູ່ຮ່ວມສັນຍາ ຝ່າຍ ຂ;

ກ. "ຝ່າຍ ກ" ມີເຈດຈໍານົງ .(ລະບຸຈຸດປະສົງຂອງ "ຝ່າຍ ກ" ໃນການເຮັດສັນຍາ)................. ……………………………………………………………………………………… ……………………………………………………………………………….......

ຂ. "ຝ່າຍ ຂ" ມີເຈດຈໍານົງ.. (ລະບຸຈຸດປະສົງຂອງ ຝ່າຍ ຂ ໃນການປະຕິບັດພັນທະໃນສັນຍາ) ........................................................................................................... ..........................................................................................................

**"ຝ່າຍ ກ" ແລະ "ຝ່າຍ ຂ" ໄດ້ຕົກລົງເຊັນສັນຍາວ່າດ້ວຍການ...................................... ໂດຍມີລາຍລະອຽດຕໍ່ໄປນີ້:**

1. "ຝ່າຍ ກ" ແລະ "ຝ່າຍ ຂ" ມີເຈດຈຳນົງຮ່ວມກັນໃນການເຮັດສັນຍາກ່ຽວກັບ........................ ...................................... ..................................................................................

2. **ຕະຫລອດໄລຍະຂອງສັນຍາສະບັບນີ້** "ຝ່າຍ ກ" ຈະຮັບຜິດຊອບໃນການສະໜອງ ...................................................................................................... ......................................................................................................................

3. **ຕະຫລອດໄລຍະຂອງສັນຍາສະບັບນີ້** "ຝ່າຍ ຂ" ຈະຮັບຜິດຊອບໃນການປະຕິບັດພັນທະຕ່າງໆ ທີ່ກຳນົດໄວ້ໃນສັນຍາ..................................... ...................................................................................................... ......................................................................................................................

4. ທັງ "ຝ່າຍ ກ" ແລະ "ຝ່າຍ ຂ" ມີຖານະເປັນຄູ່ຮ່ວມສັນຍາ ຖືກຄຸ້ມຄອງ **ພາຍໃຕ້ກົດໝາຍຂອງ ສປປລາວ**

5. ຄູ່ຮ່ວມສັນຍາ ທັງ "ຝ່າຍ ກ" ແລະ "ຝ່າຍ ຂ" ບໍ່ມີສິດ ປ່ຽນແປງເງື່ອນໄຂ ແລະ ຂໍ້ກ□ານົດຕ່າງໆ ໃນສັນຍາ ແຕ່ຝ່າຍດຽວ. ທຸກການປ່ຽນແປງໃນສັນຍາຕ້ອງໄດ້ຮັບການເຫັນດີ ແລະ ບໍ່ຂັດກັບຜົນປະໂຫຍດຂອງ ຫລື ສ້າງ ຄວາມເສັຍຫາຍໃຫ້ແກ່ ຝ່າຍໃດຝ່າຍນຶ່ງ

6. "ຝ່າຍ ຂ" ຈະໄດ້ຮັບ ຜົນປະໂຫຍດຈາກການປະຕິບັດພັນທະໃນສັນຍາດັ່ງນີ້:............

   6.1 ...............................................................................................
   ................................................................ ......................................

   6.2 ...............................................................................................
   ....................................................................................................

7. ມາຕະຖານຂອງສິນຄ້າ ຫຼື ຜົນຜະລິດ ແລະ ລາຄາເກັບຊື້ຕະຫຼອດໄລຍະເວລາຂອງສັນຍາ
…………………………………………………………………………………………
…………………………………………………………………………………………
…………………………………………………………………………………………
………………………………..

1) ມາດຕະຖານຂອງສິນຄ້າ ຫຼື ຜົນຜະລິດ
……………………………………………………………………………………
……………………………………………………………………………………
…………….

2) ລາຄາເກັບຊື້ຜົນຜະລິດຕະຫຼອດໄລຍະເວລາຂອງສັນຍາສະບັບນີ້
……………………………………………………………………………………
……………………………………………………………………………………
……………………………………………………………………………………
….

8. "ສັນຍາ" ສະບັບນີ້ມີກຳນົດ ເວລາ …………ປີ/ເດືອນ… ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ ຕາມະການຕົກລົງຂອງສອງຝ່າຍ

9. ການປ່ຽນແປງ ຫລື ດັດແກ້ "ສັນຍາ" ສະບັບນີ້ (ເຊັ່ນ: ການປ່ຽນແປງເລື່ອງລາຄາ, ການປັບປ່ຽນຂອງອັດຕາແລກປ່ຽນດ້ານສະກຸນເງິນ)…….ສາມາດດັດແກ້ໄດ້ຕາມການຕົກລົງຂອງທັງສອງຝ່າຍ ໂດຍເຮັດເປັນລາຍລັກອັກສອນ ຮ່ວມລົງລາຍເຊັນຮັບຮອງໂດຍທັງສອງຝ່າຍ ແລະ ຢັ້ງຢືນກ່ຽວກັບການປ່ຽນແປງຂອງສັນຍາໂດຍເຈົ້າໜ້າທີ່ທະບຽນສານ .

10. ການຮັກສາຄວາມລັບ ຊຶ່ງ "ຝ່າຍ ກ" ແລະ "ຝ່າຍ ຂ" ຕົກລົງຈະຮັກສາຄວາມລັບກ່ຽວກັບສັນຍາສະບັບນີ້ ແລະ ຈະບໍ່ເປີດເຜີຍໃຫ້ ບຸກຄົນໃດ ຫຼື ພາກສ່ວນໃດເດັດຂາດ ຍົກເວັ້ນກໍລະນີຕ້ອງເປີດເຜີຍຕາມການກຳນົດຂອງກົດໝາຍ.

11. ໄພທຳມະຊາດເຊັ່ນ: ນ້ຳຖ້ວມ, ແຜ່ນດິນໄຫວ, ໄຟໄໝ້ທີ່ເກີດຈາກໄຟປ່າ ຫຼື ເຫດທີ່ບໍ່ໄດ້ເກີດຈາກການກະທຳຂອງຝ່າຍໃດຝ່າຍໜຶ່ງທີ່ພາໃຫ້ເກີດຄວາມເສັຍຫາຍຕໍ່ກິດຈະການ/ ຜົນຜະລິດ , ຈົນບໍ່ສາມາດສະກັດກັ້ນໄດ້ ແມ່ນຈະບໍ່ນອນໃນຄວາມຮັບຜິດຊອບຂອງຝ່າຍໃດຝ່າຍໜຶ່ງ ແຕ່ຈະຕ້ອງຫາທາງອອກຮ່ວມກັນໂດຍບໍ່ຖິ້ມຄວາມຮັບຜິດຊອບໃຫ້ຝ່າຍໃດຝ່າຍໜຶ່ງ

12. ໃນກໍລະນີທີ່ການດຳເນີນກິດຈະການນັ້ນມີການໃຊ້ສານເຄມີ, ປຸ໋ຍທີ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ ແລະ ກໍ່ຄວາມເສັຍຫາຍໃຫ້ແກ່… ແມ່ນຈະຕ້ອງໄດ້ມີການຫາ

ທາງແກ້ໄຂ ແລະ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຊາບເພື່ອທາງທາງປ້ອງກັນ ແລະ ວິທີແກ້ໄຂລ່ວງໜ້າ.

13. **ການແກ້ໄຂຂໍ້ຂັດແຍ່ງ ຊຶ່ງ**ທັງສອງຝ່າຍຕົກລົງກັນວ່າ ຂໍ້ຂັດແຍ່ງໃດກໍຕາມ ທີ່ເກີດຂຶ້ນຕໍ່ກັບ ຫຼື ກ່ຽວຂ້ອງກັບ ຫຼື ມີສ່ວນຮ່ວມກັບ "ສັນຍາ" ສະບັບນີ້ ຈະໄດ້ຮັບການແກ້ໄຂໂດຍຜ່ານການເຈລະຈາ ແບບປານີປານອມ. ທັງສອງຝ່າຍ ຈະໃຊ້ຄວາມພະຍາຍາມຢ່າງເຕັມທີ່ ເພື່ອເຈລະ-ຈາຮ່ວມກັນໃຫ້ໄດ້ຮັບການແກ້ໄຂຢ່າງຍຸຕິທຳ ແລະ ເປັນທີ່ເພິງພໍໃຈໂດຍທັງສອງຝ່າຍ ແລະຜ່ານການໄອ້ລົມຖ້າຫາກເຫັນວ່າບໍ່ສາມາດຫາຂໍ້ຢຸດຕິໄດ້ ທັງສອງຝ່າຍແມ່ນສາມາດສະເໜີຫາພາກສ່ວນທີ່ກ່ຽວເພື່ອໃຫ້ຊ່ວຍເຂົ້າມາແກ້ຫຼື ຕັດສິນຕາມລະບົບກົດໝາຍຂອງ ສປປລາວ

14. "ສັນຍາ" ສະບັບນີ້ ຈະມີຜົນສັກສິດນັບແຕ່ມື້ລົງລາຍເຊັນຂອງຄູ່ສັນຍາທັງສອງຝ່າຍ ແລະເຈົ້າໜ້າທີ່ທະບຽນສານເຊັນຢັ້ງຢືນເປັນຕົ້ນໄປ.

15. "ສັນຍາ" ສະບັບນີ້ ປ່ຽນແທນ ສັນຍາ ຫຼື ເອກະສານ ຫຼື ການຕົກລົງທາງປາກເປົ່າ ທັງໝົດທີ່ໄດ້ເຮັດ ຮ່ວມກັນຜ່ານມາກ່ອນວັນທີຂອງ "ບົດບັນທຶກ" ສະບັບນີ້ ເຊິ່ງມີ ວັດຖຸປະສົງ ອັນດຽວກັນກັບ ວັດຖຸປະສົງ ຂອງ "ບົດບັນທຶກ" ສະບັບນີ້.

16. "ສັນຍາ" ສະບັບນີ້ ໄດ້ເຮັດເປັນ ພາສາລາວ ຈຳນວນ 02 (ສອງ) ສະບັບ ເຊິ່ງແຕ່ລະສະບັບລ້ວນມີຄຸນຄ່າທາງດ້ານກົດໝາຍເທົ່າທຽມກັນ, ແຕ່ລະຝ່າຍ ຈະເກັບມ້ຽນ ຝ່າຍລະ 01 (ໜຶ່ງ) ສະບັບ ແລະ ສຳເນົາໄວ້ທີ່ອົງການທະບຽນສານ 1 ສະບັບ, ສຳເນົາໃຫ້ພະຍານຄົນລະ 1 ສະບັບ.

| | |
|---|---|
| ຝ່າຍ ກ | ຝ່າຍ ຂ |
| ຊື່ ແລະ ນາມສະກຸນ | ຊື່ ແລະ ນາມສະກຸນ |

ພະຍານ

1. ………………………………
2. ………………………………
3. ...........................................

ອົງການທະບຽນສານ

# ເຄື່ອງມືສຳລັບການຝຶກອົບຮົມ
# ການລົງທຶນດ້ານກະສິກຳດ້ວຍຄວາມຮັບຜິດຊອບ

# ໂປດສະເຕີ


ຄິດໃຫ້ດີແລ້ວຈຶ່ງເຊັນສັນຍາ


ອົງປະກອບຂອງການເຮັດສັນຍາ
ກ່ອນເຊັນສັນຍາ ແມ່ນໃຫ້ເອົາໃຈໃສ່ດັ່ງນີ້
ລາຄາ, ກຳນົດເວລາປະຕິບັດສັນຍາ ແລະ ການສົ່ງສິນຄ້າ
ປະລິມານສິນຄ້າ, ຄຸນນະພາບ
ສະຖານທີ່ປະຕິບັດສັນຍາ
ການແກ້ໄຂຂໍ້ຂັດແຍ່ງ
ສັນຍາປະກອບດ້ວຍເນື້ອໃນຕົ້ນຕໍດັ່ງນີ້:
1. ວັນ, ເວລາ, ສະຖານທີ່ເຮັດສັນຍາ;
2. ຊື່, ນາມສະກຸນ ແລະ ບ່ອນຢູ່ຂອງຄູ່ສັນຍາ;
3. ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ, ການນຳສົ່ງ;
4. ຂອບເຂດ, ປະລິມານ ແລະ ຄຸນນະພາບຂອງເປົ້າໝາຍ;
5. ສະຖານທີ່ປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ແກ່ກັນຊາບ;
6. ຜົນສະທ້ອນຂອງການລະເມີດສັນຍາ;
7. ຂະບວນການ ແລະ ອົງການແກ້ໄຂຂໍ້ຂັດແຍ່ງ;
8. ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ.
(ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018, ມາດຕາ 370)
VILLAGE FOCUS INTERNATIONAL
LIFE
LIWG
Brot für die Welt

# ໂປດສະເຕີ



ສັນຍາແມ່ນຫຍັງ?
ສັນຍາແມ່ນ ການຕົກລົງ ລະຫວ່າງ ຄູ່ສັນຍາ ຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ (ມາດຕາ 364 ວັກທີ 1 ຂອງປະມວນກົດໝາຍແພ່ງ, ສະບັບເລກທີ 109/ສພຊ, ລົງວັນທີ 06 ທັນວາ 2018)
ສັນຍາ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້ (ມາດຕາ 370 ຂອງປະມວນກົດໝາຍແພ່ງ, ສະບັບເລກທີ 109/ສພຊ, ລົງວັນທີ 06 ທັນວາ 2018):
1. ມີການລະບຸວັນ, ເວລາ, ສະຖານທີ່ເຮັດສັນຍາ
2. ຊື່ ແລະ ນາມສະກຸນ ແລະ ບ່ອນຢູ່ຂອງຄູ່ສັນຍາໃຫ້ລະອຽດ
3. ວັດຖຸປະສົງເຊັ່ນ: ດິນ, ແຮງງານ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ, ການນຳສົ່ງ
4. ຂອບເຂດ, ປະລິມານ ແລະ ຄຸນນະພາບທີ່ຕ້ອງການ
5. ສະຖານທີ່ປະຕິບັດສັນຍາ ແລະ ພັນທະໃນການສະໜອງຂໍ້ມູນໃຫ້ຊຶ່ງກັນ ແລະ ກັນ
6. ມາດຕະການລົງໂທດຕໍ່ຜູ້ລະເມີດສັນຍາ
7. ຮູບການ ແລະ ວິທີການແກ້ໄຂຂໍ້ຂັດແຍ່ງ
8. ເງື່ອນໄຂຂອງການປ່ຽນແປງສັນຍາ
ຕົ້ນສະບັບໜັງສືພາບໂດຍ/Developed by
Implemented by
giz
VILLAGE FOCUS INTERNATIONAL
ປະກອບສ່ວນເພີ່ມເຕີມໂດຍ/Further contributions by
Government of Japan
JSDF
THE WORLD BANK
HELVETAS LAOS
ກຸ່ມແລກປ່ຽນຂໍ້ມູນເນື້ອທີ່ດິນ LIWG




ເງື່ອນໄຂຂອງການເຮັດສັນຍາ
ວັດຖຸປະສົງຂອງສັນຍາ
ຄວາມສະໝັກໃຈ
ຄວາມສາມາດທາງດ້ານການປະພຶດ
ຮູບການຂອງສັນຍາ
ສັນຍາທີ່ຖືກຕ້ອງຕາມກົດໝາຍ ແມ່ນ ສັນຍາທີ່ເຮັດໂດຍສອດຄ່ອງ ແລະ ປະຕິບັດຕາມເງື່ອນໄຂຂອງການເຮັດສັນຍາຂ້າງເທິງນີ້.
(ມາດຕາ 17 ຂອງປະມວນກົດໝາຍແພ່ງ, ສະບັບເລກທີ 109/ສພຊ, ລົງວັນທີ 06 ທັນວາ 2018)
ສັນຍາໃດໆ ກໍຕາມຫາກບໍ່ປະຕິບັດຕາມເງື່ອນໄຂໃດໜຶ່ງ ຫຼືທັງໝົດນີ້ ອາດຈະເຮັດໃຫ້ສັນຍາດັ່ງກ່າວເປັນສັນຍາທີ່ບໍ່ສາມາດໃຊ້ການໄດ້ ຫຼື ເອີ້ນວ່າເປັນໂມຄະ
ຕົ້ນສະບັບໜັງສືພາບໂດຍ/Developed by
Implemented by
giz
VILLAGE FOCUS INTERNATIONAL
ປະກອບສ່ວນເພີ່ມເຕີມໂດຍ/Further contributions by
Government of Japan
JSDF
THE WORLD BANK
HELVETAS LAOS
ກຸ່ມແລກປ່ຽນຂໍ້ມູນເນື້ອທີ່ດິນ LIWG

# ໂປດສະເຕີ


ຮູບແບບການຜະລິດກະສິກຳເປັນສິນຄ້າແບບມີສັນຍາ
ຮູບແບບ 2+3
ຮູບແບບ 3+2
ຮູບແບບ 4+1


ການລົງທຶນແບບມີຄວາມຮັບຜິດຊອບ

# ວິດີໂອ

- ອົງປະກອບຂອງສັນຍາ [redacted]
- ສິດຂອງຊາວກະສິກອນ [redacted]
- ການເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC) [redacted]
- ການເຈລະຈາດ້ວຍຄວາມໄວ້ເນື້ອເຊື່ອໃຈ Good Faith Negotiation [redacted]
- ການແກ້ໄຂຂໍ້ຂັດແຍ່ງກຽວກັບກະສິກຳແບບມີສັນຍາ [redacted]

ລິເລີ່ມຕົ້ນສະບັບ ແລະ ພັດທະນາໂດຍ/originally and developed by

VILLAGE FOCUS INTERNATIONAL

ໂຄງການສົ່ງເສີມ ການຮຽນຮູ້ກ່ຽວກັບທີ່ດິນ LIFE

ປັບແກ້ ແລະ ປັບປຸງໂດຍ/ Revised and updated by:

HELVETAS LAOS

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

ໃຫ້ທຶນສະໜັບສະໜູນໂດຍ/ Funded by:

Government of Japan

JSDF Japan Social Development Fund

THE WORLD BANK IBRD • IDA | WORLD BANK GROUP

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC